ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ (ກຍທຂ)
ກົມຂົວທາງ (ກຂທ) ແລະ
ສະຖາບັນ ຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ (ສຄຍຂ)

# ກອບນະໂຍບາຍການຈັດສັນຍົກຍ້າຍ (RPF)

## ງົບປະມານເພີ່ມເຕີມ, ໂຄງການຂະແໜງຂົວທາງ ໄລຍະ II (LRSP2-AF)

**ເລກທີໂຄງການ: (P170951)**

**ວຽງຈັນ, 12 ເດືອນ ກັນຍາ 2019**

# ຄວາມໝາຍຕົວອັກສອນຫຍໍ້

| ຄຳຫຍໍ້ | ເນື້ອໃນພາສາອັງກິດ | ຄວາມໝາຍ |
|---|---|---|
| ARAP | Abbreviated Resettlement Action Plan | ແຜນປະຕິບັດການຍົກຍ້າຍຈັດສັນແບບຫຍໍ້ |
| AF | Additional Financing | ງົບປະມານເພີ່ມເຕີມ |
| AP | Affected Persons | ຜູ້ໄດ້ຮັບຜົນກະທົບ |
| DMS | Detail Measurement Survey | ການສຳຫຼວດວັດແທກ ລະອຽດ |
| DoR | Department of Road | ກົມຂົວທາງ |
| DONRE | District Office of Natural Resources and Environment | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ |
| DRC | District Resettlement Committee | ຄະນະກຳມະການການຍົກຍ້າຍຈັດສັນຂັ້ນເມືອງ |
| DRM | Diassaster Risk Management | ການຄຸ້ມຄອງຄວາມສ່ຽງ ຈາກໄພພິບັດ |
| DPWT | Provincial Department of Public Works and Transport | ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ |
| EIA | Environmental Impact Assessment | ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ |
| EG | Ethnic Groups | ກຸ່ມຊົນເຜົ່າ / ປະຊາຊົນ ບັນດາເຜົ່າ |
| EGEF | Ethnic Groups Engagement Framework | ກອບການມີສ່ວນຮ່ວມຂອງ ຊົນເຜົ່າ |
| EGEP | Ethnic Groups Engagement Plan | ແຜນການມີສ່ວນຮ່ວມຂອງ ຊົນເຜົ່າ |
| EDPD/PTRI | Environmental and Disaster Protection Division/ Public Works and Transport Reshearch Institute | ພະແນກສິ່ງແວດລ້ອມ ແລະ ສັງຄົມ/ສະຖາບັນ ໂຍທາທິການ ແລະ ຂົນສົ່ງ |
| ESMF | Environmental and Social Management Framework | ກອບວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ |
| ESOM | Environmental and Social Operations Manual | ຄູ່ມືການຈັດຕັ້ງປະຕິບັດ ສິ່ງແວດລ້ອມແລສັງຄົມ |
| ESMP | Environmental and Social Management Plan | ແຜນ ການຄຸ້ມຄອງ ສິ່ງແວດລ້ອມແລະສັງຄົມ |
| ESU | Environmental and Social Unit | ໜ່ວຍງານ ສິ່ງແວດລ້ອມ ແລະ ສັງຄົມ |
| FMC | Feedback and Mediation Committee | ຄະນະກຳມະການ ໄກ່ເກ່ຍ ແລະ ຮັບຄຳເຫັນ |
| GoL | Government of Laos | ລັດຖະບານ ລາວ |
| GFDRR | Global Fund for Disater Risk Reduction | ກອງທຶນໂລກເພື່ອການຫຼຸດຜ່ອນໄພພິບັດ |
| GRC | Grievance Redress Committee | ຄະນະກຳມະການແກ້ໄຂການຮ້ອງທຸກ |
| GRM | Grievance Redress Mechanism | ຂະບວນການແກ້ໄຂຄຳຮ້ອງທຸກ |
| GRMS | Grievance Redress Mechanism Services | ການບໍລິການແກ້ໄຂຄຳຮ້ອງທຸກ |
| IEE | Initial Environmental Examination | ການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ |
| Lao PDR | Lao People's Democratic Republic | ສປປ ລາວ |
| LAR | Land acquisition and resettlement | ການຍົກຍ້າຍຈັດສັນ ແລະ ການເວນຄືນທີ່ດິນ |

| ຄຳຫຍໍ້ | ເນື້ອໃນພາສາອັງກິດ | ຄວາມໝາຍ |
|---|---|---|
| LACR | Land acquisition and compensation report | ບົດລາຍງານການເວນຄືນທີ່ດິນ ແລະ ການທົດແທນຄ່າເສຍຫາຍ |
| LRSP-2 | Lao Road Sector Project-2 | ໂຄງການຂະແໜງຂົວທາງຢູ່ ສປປລາວ ໄລຍະ2 |
| LRSP | Lao Road Sector Project | ໂຄງການຂະແໜງຂົວທາງຢູ່ ສປປລາວ |
| LFNC | Lao Front for National Construction | ແນວລາວສ້າງຊາດ |
| LWU | Lao Women Union | ສະຫະພັນແມ່ຍິງລາວ |
| MONRE | Ministry of Natural Resources and Environment | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MPWT | Ministry of Public Works and Transport | ກະຊວງໂຍທາທິການ ແລະ ຂົນສົ່ງ |
| NDMC | National Disaster Management Committee | ຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ |
| NGOs | None Government Organizations | ອົງການທີ່ບໍ່ຂຶ້ນກັບລັດຖະບານ |
| NPA | National Protected Area | ພື້ນທີ່ປ່າປົກປ້ອງແຫ່ງຊາດ |
| NPFA | National Prtected Forest Area | ພື້ນທີ່ປ່າປົກປ້ອງແຫ່ງຊາດ |
| NRMP | National Road Mianternance Project | ໂຄງການບູລະນະຮັກສາທາງຫຼວງແຫ່ງຊາດ |
| OP/BP | Operation Policy/Bank Procedure | ນະໂຍບາຍດຳເນີນງານ/ລະບຽບການຂອງທະນາຄານໂລກ |
| PAPs | Project Affected Persons | ຜູ້ໄດ້ຮັບຜົນກະທົບຈາກໂຄງການ |
| PONRE | Provincial Office of Natural Resources and Environment | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ |
| PRO | Project Resettlement Office | ຫ້ອງການຍົກຍ້າຍຈັດສັນຂອງໂຄງການ |
| PRC | Provincial Resettlement Committee | ຄະນະກຳມະການໂຍກຍ້າຍຈັດສັນຂັ້ນແຂວງ |
| PTRI | Public Works and Transport Research Institute | ສະຖາບັນ ຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ |
| RAP | Resettlement Action Plan | ແຜນຈັດຕັ້ງປະຕິບັດ ການຍົກຍ້າຍຈັດສັນ |
| RMF | Road Maintenance Fund | ກອງທຶນບູລະນະຮັກສາທາງ |
| RDM | Road Maintenance Division | ພະແນກບູລະນະຮັກສາທາງ |
| RoW | Right of ways | ເຂດສະຫງວນແລວທາງ |
| RPF | Resettlement Policy Framework | ກອບນະໂຍບາຍການຍົກຍ້າຍຈັດສັນ |
| SA | Social Assessment | ການປະເມີນທາງສັງຄົມ |
| SIA | Social Impacts Assessment | ການປະເມີນຜົນກະທົບທາງສັງຄົມ |
| TD/DoR | Technical Division/Department od Road | ພະແນກເຕັກນິກ ຂອງ ກົມຂົວທາງ |
| TA | Technicl Asistent | ການຊ່ວຍເຫຼືອທາງດ້ານວິຊາການ |
| ToR | Term of Reference | ບົດກຳນົດໜ້າວຽກ |
| VRC | Village Resettlement Committee | ຄະນະກຳມະການ ຍົກຍ້າຍຈັດສັນຂັ້ນບ້ານ |
| WB | World Bank | ທະນາຄານໂລກ |

## ນິຍາມ ແລະ ຄວາມໝາຍຄຳສັບ

- **ຜູ້ທີ່ໄດ້ຮັບຜົນປະໂຫຍດ**: ແມ່ນທຸກຄົນ ແລະ ຄົວເຮືອນ ຈາກບ້ານຕ່າງໆ ທີ່ສະໝັກໃຈ ຮັບເອົາຜົນປະໂຫຍດ ຂອງໂຄງການ ແລະ ເປັນສ່ວນໜຶ່ງຂອງໂຄງການ
- **ການທົດແທນຄ່າເສຍຫາຍ:** ການຈ່າຍ ເປັນເງິນສົດ ຫຼື ຮູບແບບ ຂອງມູນຄ່າປ່ຽນແທນ ຕໍ່ຊັບສິນທີ່ຖືກເວນຄືນ
- **ວັນທີເລີ່ມຕົ້ນໂຄງການ**: ແມ່ນນັບຈາກວັນ ທີ່ເຈົ້າຂອງ ຫຼື ຜູ້ນຳໃຊ້ຖືກກຳນົດເປັນຜູ້ຖືກຍົກຍ້າຍ ສຳລັບການທົດແທນຄ່າເສຍຫາຍ ຫຼື ການຊ່ວຍເຫລືອອື່ນໆ. ວັນທີເລີ່ມຕົ້ນໂຄງການ ໄດ້ຖືກກຳນົດຢູ່ໃນ ແຜນການຍົກຍ້າຍຈັດສັນ ໂດຍປົກກະຕິເລີ່ມຕົ້ນໃນວັນທີ່ຕົກລົງເຫັນດີ ຂອງຜູ້ທີ່ໄດ້ຮັບຜົນກະທົບ, ຫຼື ວັນ ທີມີການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ວຽກງານກໍ່ສ້າງສະເພາະ ທີ່ອາດເປັນສາເຫດ ການຍົກຍ້າຍຈັດສັນ. ບຸກຄົນໃດ ທີ່ເຂົ້າມາຢູ່ໃນພື້ນທີ່ໂຄງການ ຫລັງຈາກ ວັນທີເລີ່ມຕົ້ນໂຄງການ ແມ່ນບໍ່ມີສິດໄດ້ຮັບການທົດແທນຄ່າເສຍຫາຍ ຫຼື ການຊ່ວຍເຫລືອ ອື່ນໆ.
- **ຜູ້ທີ່ຖືກຍົກຍ້າຍ:** ໝາຍເຖິງ ປະຊາຊົນ ທັງໝົດທີ່ (1) ມາດຕະຖານການດຳລົງຊີວິດ ຂອງເຂົາເຈົ້າ ອາດໄດ້ຮັບຜົນກະທົບດ້ານລົບ; ຫຼື (2) ກຳມະສິດ, ການຄອບຄອງ, ຜົນປະໂຫຍດ, ຕໍ່ເຮືອນ, ທີ່ດິນ ໃດໜຶ່ງ (ລວມທັງ ສິ່ງປຸກສ້າງ, ທີ່ດິນກະສິກຳ ແລະ ທົ່ງຫຍ້າລ້ຽງສັດ) ຫຼື ຊັບສິນຄົງທີ່ ຫຼື ສາມາດເຄື່ອນຍ້າຍໄດ້ ທີ່ຖືກເວນຄືນ ຫຼື ຊັບສິນ ທີ່ຄອບຄອງຊົ່ວຄາວ ຫຼື ຖາວອນ; (3) ການເຂົ້າເຖິງ ພື້ນທີ່ການຜະລິດ ທີ່ຖືກຜົນກະທົບດ້ານລົບ ແບບຊົ່ວຄາວ ຫຼື ຖາວອນ; ຫຼື (4) ທຸລະກິດ, ອາຊີບ, ວຽກເຮັດ ຫຼື ບ່ອນຢູ່ອາໄສ ທີ່ຖືກຜົນກະທົບດ້ານລົບ
- **ສິດທິ ທີ່ໄດ້ຮັບ**: ປະກອບມີມາດຕະການ ທົດແທນຄ່າເສຍຫາຍ, ການຟື້ນຟູລາຍຮັບ, ການຊ່ວຍເຫຼືອໃນໄລຍະຂ້າມຜ່ານ, ການທົດແທນລາຍຮັບ ແລະ ການຫຍັບຍ້າຍ ສຳລັບຜູ້ທີ່ໄດ້ຮັບຜົນກະທົບ ໂດຍຂຶ້ນກັບລັກສະນະຂອງການສູນເສຍ, ການຟື້ນຟູພື້ນຖານທາງດ້ານ ເສດຖະກິດ ແລະ ສັງຄົມຂອງເຂົາເຈົ້າ.
- **ຄົວເຮືອນ**: ໝາຍເຖິງໝົດທຸກຄົນທີ່ອາໃສຢູ່ ແລະ ກິນອາຫານຮ່ວມກັນໃນຖານະເປັນຫົວໜ່ວຍທາງສັງຄົມໜ່ວຍໜຶ່ງ. ການສຳຫຼວດພົນລະເມືອງນຳໃຊ້ຄຳນິຍາມນີ້ ແລະ ຂໍ້ມູນທີ່ໄດ້ມາຈາກການສະຫຼວດພົນລະເມືອງໃຫ້ພື້ນຖານໃນການກຳນົດຄົວເຮືອນ
- **ການຟື້ນຟູລາຍຮັບ**: ໝາຍຄວາມວ່າການສ້າງໃຫ້ໃໝ່ແຫຼ່ງລາຍຮັບ ແລະ ວິຖີຊີວິດຂອງ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຢ່າງໜ້ອຍຢູ່ໃນລະດັບກ່ອນໂຄງການເຂົ້າມາ
- **ການປັບປຸງ**: ໂຄງລ່າງພື້ນຖານໄດ້ຮັບການກໍ່ສ້າງ (ທີ່ພັກອາໃສ, ຮົ້ວ, ສາລາພັກຣົມ, ຄອກໝູ, ສິ່ງອຳນວຍຄວາມສະດວກ, ສິ່ງປຸກສ້າງຂອງຊຸມຊົນ, ຫ້າງຮ້ານ, ສາງເຄື່ອງ ແລະ ອື່ນໆ) ແລະ ພຶດພັນ/ຕົ້ນໄມ້ໄດ້ຮັບການປູກທົດແທນ ໂດຍບຸກຄົນ, ຄົວເຮືອນ, ສະຖາບັນ ຫຼື ອົງການຈັດຕັ້ງ
- **ການເວນຄືນທີ່ດິນ:** ເປັນຂະບວນການທີ່ລັດຖະບານ ບັງຄັບໃຫ້ບຸກຄົນ ມອບດິນທັງໝົດຫຼືບາງສ່ວນທີ່ຜູ້ກ່ຽວເປັນເຈົ້າຂອງຄອບຄອງ ເພື່ອເອົາມາເປັນກຳມະສິດ ຫຼື ການຄອບຄອງຂອງລັດ ເພື່ອຜົນປະໂຫຍດສ່ວນລວມ ເພື່ອໄດ້ຮັບການພິຈາລະນາ
- **ຜູ້ທີ່ໄດ້ຮັບຜົນປະທົບຈາກໂຄງການ**: ອາດຈະເປັນບຸກຄົນ ຫຼື ນິຕິບຸກຄົນ ຫຼື ອົງການຈັດຕັ້ງໄດ້ຮັບຜົນກະທົບໂດຍໂຄງການ ຖ້າໃນກໍລະນີກາໄດ້ມາເຊິ່ງຊັບສິນແບບບໍ່ຍິນຍອມ ໃນການຈັດຕັ້ງປະຕິບັດໂຄງການ, (ກ) ໄດ້ຮັບຜົນກະທົບລົບຕໍ່ມາດຖານການດຳລົງຊີວິດ, (ຂ) ສິດທິ, ກຳມະສິດ, ຫຼື ຜົນປະໂຫຍດທັງໝົດ ຫຼື ສ່ວນໜຶ່ງຂອງເຮືອນ ແລະ ອາຄານ, ທີ່ດິນ (ລວມທັງ ດິນປຸກສ້າງ, ດິນເພື່ອການຄ້າ, ພື້ນທີ່ກະສິກຳ, ການປູກຝັງ, ປ່າໄມ້ ແລະ ດິນລ້ຽງສັດ) ຊັບພະຍາກອນນ້ຳ, ໜອງປາ, ໜອງປາລວມຊຸມຊົນ, ພືດລົ້ມລຸກ, ແລະ ຕົ້ນໄມ້ ຫຼື ຊັບສິນທີ່ເຄື່ອນຍ້າຍໄດ້ ແລະ ເຄື່ອນຍ້າຍບໍ່ໄດ້ ທີ່ໂຄງການໄດ້ມາ ຫຼືເອົາມາຄອບຄອງ ທັງໝົດ ຫຼື ບາງສ່ວນ ຊົ່ວຄາວຫຼືຖາວອນ ແລະ (ຄ) ທຸລະກິດ, ການປະກອບອາຊີບ, ວຽກງານ, ຫຼື ແຫຼ່ງລາຍຮັບ ແລະ ວິຖີຊີວິດສູນເສຍບາງສ່ວນຫຼືທັງໝົດ ຊົ່ວຄາວຫຼືຖາວອນ.

- **ການຟື້ນຟູຄືນ**: ເປັນຄຳທີ່ໃຊ້ເພື່ອບົ່ງຊີ້ຈຳນວນເງິນທີ່ພຽງພໍເພື່ອປ່ຽນແທນຊັບສິນທີ່ເສຍໄປ ລວມທັງຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນການດຳເນີນການດັ່ງກ່າວ.ເມື່ອກົດໝາຍພາຍໃນບໍ່ໄດ້ຕາມມາດຕະຖານຂອງການທົດແທນຄ່າເສຍຫາຍ ທັງໝົດການທົດແທນຄືນຕາມກົດໝາຍພາຍໃນຕ້ອງໄດ້ຮັບມາດຕະການເສີມຕື່ມເພື່ອໃຫ້ໄດ້ມາດຕະຖານການທົດແທນຄືນທັງໝົດ.
- **ການໂຍກຍ້າຍຈັດສັນ**: ແມ່ນຄຳທີ່ໃຊ້ທົ່ວໄປທີ່ກ່ຽວກັບການໄດ້ມາເຊິ່ງທີ່ດິນ ແລະ ການທົດແທນ ມູນຄ່າຊັບສິນທີ່ເສຍໄປ ເຊິ່ງອາດຈະເປັນການທີ່ຕ້ອງໄດ້ຍ້າຍສະຖານທີ່ຢູ່ອາໃສແທ້ໆ, ການສູນເສຍທີ່ດິນ, ທີ່ພັກອາໃສ, ຊັບສິນ ຫຼື ພາຣະນະທຳການຜະລິດອື່ນໆ.
- **ກຸ່ມສ່ຽງ**: ແມ່ນກຸ່ມສະເພາະທີ່ອາດຈະໄດ້ຮັບຜົນກະທົບແບບທີ່ບໍ່ສາມາດວັດແທກໄດ້ຕາມປົກະຕິ ຫຼື ອາດຈະປະເຊີນກັບຄວາມສ່ຽງທີ່ຖືກເສຍປຽບໃນຕໍ່ໜ້າຍ້ອນການຍົກຍ້າຍໂດຍສະເພາະແມ່ນ (ກ) ຄອບຄົວທີ່ມີແມ່ຍິງ, ຜູ້ເຖົ້າ ຫຼື ຄົນພິການ ເປັນຫົວໜ້າຄອບຄົວ, (ຂ) ຄົວເຮືອນທີ່ຍັງຕຳ່ກວ່າລະດັບຄວາມທຸກຍຸກ, (ຄ) ຜູ້ທີ່ບໍ່ມີທີ່ດິນ ຫຼື ຊົນເຜົ່າ.

# ສາລະບານ


ຄວາມໝາຍຕົວອັກສອນຫຍໍ້ ..... i
ນິຍາມ ແລະ ຄວາມໝາຍຄຳສັບ ..... iii
**1 ພາກສະເໜີ ..... 1**
**2 ອົງປະກອບຂອງໂຄງການ ..... 2**
2.1 ຄວາມຈຳເປັນຂອງ RPF ..... 6
2.2 ຄຳອະທິບາຍໂຄງການກ່ຽວກັບ OP/BP 4.12 ..... 6
**3 ນະໂຍບາຍ, ກົດໝາຍ, ການຈັດຕັ້ງ ..... 7**
3.1 ກອບກົດໝາຍ ແລະ ຂໍ້ກຳນົດ ແຫ່ງຊາດ ..... 7
3.2 ນະໂຍບາຍຂອງທະນາຄານໂລກກ່ຽວກັບການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ (OP/BP 4.12) ..... 13
3.2.1 ຄວາມແຕກຕ່າງລະຫວ່າງກົດໝາຍ ສປປ ລາວ ແລະ ນະໂຍບາຍຂອງທະນາຄານໂລກ ..... 13
**4 ຜົນກະທົບທີ່ອາດຈະເກີດຂຶ້ນ ..... 18**
4.1 ຂໍ້ມູນພື້ນຖານທາງດ້ານສັງຄົມ ..... 18
4.2 ບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດໂຄງການຂະແໜງຂົວທາງ ສປປ ລາວ ..... 22
4.3 ຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນ ..... 23
**5 ຍຸດທະສາດການທົດແທນຄ່າເສຍຫາຍ ແລະ ການຫຼຸດຜ່ອນຜົນກະທົບຂອງໂຄງການ ..... 23**
5.1 ຈຸດປະສົງ ຂອງນະໂຍບາຍ ..... 24
5.2 ຫຼັກການພື້ນຖານ ຂອງກອບວຽກ ນະໂຍບາຍ ການຍົກຍ້າຍຈັດສັນ ..... 24
5.3 ການສ້າງ ແລະ ການຮັບຮອງ ແຜນການປະຕິບັດ ການຍົກຍ້າຍຈັດສັນ ..... 26
5.4 ນະໂຍບາຍ ກ່ຽວກັບ ສິດທິທີ່ໄດ້ຮັບ ..... 28
5.5 ມາດຕະການຟື້ນຟູ ..... 30
5.6 ການປຶກສາຫາລື ແລະ ການເຜີຍແຜ່ ຂໍ້ມູນຂ່າວສານ ..... 30
**6 ຂອບເຂດ ການຈັດຕັ້ງປະຕິບັດ ..... 30**
6.1 ອົງການຈັດຕັ້ງ ທີ່ຮັບຜິດຊອບ ..... 31
6.2 ມູນຄ່າ ແລະ ງົບປະມານ ..... 33
6.3 ການຕິດຕາມກວດກາ ແລະ ການປະເມີນ ..... 33
6.4 ກົນໄກການແກ້ໄຂ ຄຳຮ້ອງທຸກ ..... 35
6.5 ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ ກ່ຽວກັບ ກອບນະໂຍບາຍ ການຍົກຍ້າຍຈັດສັນ ..... 37
**7 ເອກະສານຊ້ອນທ້າຍ 1: ຕາຕະລາງສິດທິ ທີ່ໄດ້ຮັບ ..... 42**
**8 ເອກກະສານຄັດຕິດ 2: ຕົວຢ່າງ ແບບຟອມສະເໜີແນະ ແລະ ແບບຟອມເຫັນດີ ..... 47**
**9 ເອກະສານຄັດຕິດ 3: ຕາຕະລາງສັງລວມຂໍ້ມູນກ່ຽວກັບ ໂຄງລ່າງພື້ນຖານ ແລະ ທີ່ດິນທີ່ໄດ້ຮັບຜົນກະທົບ ..... 50**
**10 ເອກະສານຄັດຕິດ 4: ເນື້ອໃນຂອງບົດລາຍງານການໄດ້ຮັບສິດທິໃນການນຳໃຊ້ ແລະ ການຊົດເຊີຍທີ່ດິນ; ແລະ ແຜນຈັດຕັ້ງປະຕິບັດການຕັ້ງຖິ່ນຖານໃໝ່ ..... 51**
**11 ເອກະສານຄັດຕິດ 5 ໂຄງຮ່າງການຈັດຕັ້ງ ສຳລັບ ຄະນະກຳມະການ ຍົກຍ້າຍຈັດສັນ ແລະ ທົດແທນ ສຳລັບວຽກງານຂົວທາງ 54**
**12 ເອກະສານຄັດຕິດ 6: ວິທີການ ແລະ ຂັ້ນຕອນການປະກອບສ່ວນທີດິນ ດ້ວຍຄວາມສະໝັກໃຈ ..... 55**
**13 ເອກະສານຄັດຕິດ 7: ແບບຟອມຕົວຢ່າງ ຂອງການຕິດຕາມ ກົນໄກ ການແກ້ໄຂຄຳຮ້ອງທຸກ ..... 58**

# 1 ພາກສະເໜີ

1. ເອກະສານສະບັບນີ້ ແມ່ນກອບນະໂຍບາຍການຍົກຍ້າຍຈັດສັນ (RPF) ສໍາລັບໂຄງການຂະແໜງຂົວທາງໄລຍະ 2 ຢູ່ ສປປ ລາວ, ການໃຫ້ທຶນເພີ່ມຕື່ມ (LRSP2-AF, AF ຫຼື ໂຄງການ) ແລະ ກໍາລັງສະເໜີ ຂໍທຶນສະໜັບສະໜູນ ຈາກ ທະນາຄານໂລກ. ໂຄງການ LRSP2-AF ຖືເປັນຜົນສໍາເລັດພື້ນຖານ ຂອງໂຄງການຂະແໜງຂົວທາງໄລຍະ 2 ຢູ່ ສປປ ລາວ ແລະ ພວມໄດ້ຮັບການພັດທະນາຂຶ້ນມາ ເພື່ອສະໜັບສະໜູນລັດຖະບານ ສປປ ລາວ ໃນການຄຸ້ມຄອງຕາໜ່າງ ເສັ້ນທາງ. ໂຄງການດັ່ງກ່າວ ຈະສະໜອງງົບປະມານສໍາລັບວຽກງານການບູລະນະຮັກສາ ເປັນປົກກະຕິ ແລະ ເປັນແຕ່ ລະໄລຍະ ລວມທັງການປັບປຸງເປັນບາງຈຸດ ເພື່ອສ້າງເສັ້ນທາງໃຫ້ມີຄວາມໝັ້ນຄົງ ສາມາດຕ້ານທານກັບສະພາບການ ປ່ຽນແປງດິນຟ້າອາກາດ. ໂຄງການດັ່ງກ່າວ ຈະດໍາເນີນວຽກງານໂດຍອີງຕາມແຜນງານ ເພື່ອສະໜັບສະໜູນການລົງທຶນ ຂະແໜງຂົວທາງ ພ້ອມທັງຮ່ວມມືກັບຄູ່ຮ່ວມງານເພື່ອກໍານົດ ຜູ້ຈັດຕັ້ງປະຕິບັດໂຄງການ ໂດຍການນໍາໃຊ້ມາດຖານດ້ານ ວິຊາການ ແລະ ສັງຄົມ. ໂຄງການອາດຍັງມີງົບປະມານ ຄຽງຄູ່ກັນ ແລະ ເພີ່ມເຕີມ ສໍາລັບວຽກງານຂົວທາງ ທີ່ສະໜັບ ສະໜູນໂດຍ ທະນາຄານການລົງທຶນເອີລົບ (EIB) ແລະ ສະຫະພາບເອີລົບ (EU). ໂຄງການຍັງຈະດໍາເນີນກິດຈະກໍາ ຊ່ວຍເຫລືອດ້ານວິຊາການ ລວມທັງການສ້າງຄວາມເຂັ້ມແຂງ ດ້ານຄວາມອາດສາມາດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໃນການກະກຽມ ແລະ ປະຕິບັດ ການຮ່ວມມືລະຫວ່າງ ພາກລັດ-ເອກະຊົນ[1] ໂດຍການສຸມໃສ່ສະເພາະການແກ້ ໄຂຕໍ່ສິ່ງທ້າທາຍ ການປ່ຽນແປງດິນຟ້າອາກາດ ຊຶ່ງຕາໜ່າງຂົວທາງ ພວມປະເຊີນຢູ່. ຈຸດປະສົງການພັດທະນາ ໂຄງການ ແມ່ນເພື່ອສ້າງຄວາມເຂັ້ມແຂງ ໃຫ້ລະບົບການບູລະນະຮັກສາຂົວທາງ ແນໃສ່ປັບປຸງການເຊື່ອມຕໍ່ເສັ້ນທາງ ໃນສປປ ລາວ ແລະ ໃນກໍລະນີເກີດວິກິດການ ຫຼື ເຫດການສຸກເສີນ ກໍ່ສາມາດຕອບໂຕ້ໄດ້ ຢ່າງມີປະສິດທິຜົນ ແລະ ທັນການ ຕໍ່ວິກິດການ ຫຼື ເຫດການສຸກເສີນ ດັ່ງກ່າວ.

2. ໂຄງການດັ່ງກ່າວໄດ້ຖືກຄາດຄະເນວ່າ ອາດເປັນຂະແໜງທີ່ໃຫຍ່ ທີ່ມີການລົງທຶນສະເພາະ ສໍາລັບການບູລະນະຮັກສາ ຂົວທາງ ຕາມປົກກະຕິ ເຊິ່ງຈະຖືກຂະຫຍາຍອອກໄປທົ່ວ ສປປ ລາວ ໃນອະນາຄົດ. ເອກະສານຊ້ອນທ້າຍ A ສະແດງ ກ່ຽວກັບແຜນທີ່ສະຖານທີ່ຕັ້ງ ແລະ ລັກສະນະພູມສັນຖານ ຂອງ ສປປ ລາວ ແລະ ແຜນທີ່ຕາໜ່າງຂົວທາງ. ໃນ ລະຫວ່າງໂຄງການ ໄລຍະທີໜຶ່ງ ຫົກແຂວງ ໄດ້ຖືກກໍານົດໃຫ້ເປັນຜູ້ຈັດຕັ້ງປະຕິບັດໂຄງການທົດລອງຕົວແບບຄື: ແຂວງ ຜົ້ງສາລີ, ແຂວງ ອຸດົມໄຊ, ແຂວງ ໄຊຍະບູລີ, ແຂວງ ຫົວພັນ, ແຂວງ ຊຽງຂວາງ, ແຂວງ ບໍລິຄໍາໄຊ ແລະ ແຂວງ ອັດຕະປື. ໃນປີ 2019, ກະຊວງ ໂຍທາທິການ ແລະ ຂົນສົ່ງໄດ້ສະເໜີ ຂໍທຶນເພີ່ຕື່ມ ເພື່ອເສີມສ້າງຂີດຄວາມສາມາດທົນ ທານຕໍ່ການປ່ຽນແປງດິນຟ້າອາກາດ ຕາມເສັ້ນທາງເລກທີ 13 ໃຕ້ (NR13S) ລະຫວ່າງ ແຂວງ ບໍລິຄໍາໄຊ ຫາແຂວງ ຄໍາ ມ່ວນ ໂດຍການເຮັດສັນຍາສ້ອມແປງເສັ້ນທາງ ອີງຕາມຄວາມສໍາເລັດຂອງໜ້າວຽກ (OPBRC) ແລະ ບັນຫາດັ່ງກ່າວ ເປັນເຫດຜົນສໍາຄັນ ສໍາລັບການປັບປຸງ ກອບນະໂຍບາຍ ການຍົກຍ້າຍຈັດສັນ ສະບັບນີ້.

[1]ໂດຍສອດຄ່ອງກັບ “ຄໍາແນະນໍາ ໃນການນໍາໃຊ້ນະໂຍບາຍປົກປ້ອງ ໃນການຊ່ວຍເຫຼືອທາງດ້ານວິຊາການ (TA) ໃນໂຄງການທີ່ໄດ້ຮັບທຶນສະໜັບສະໜູນຈາກ ທະນາຄານ ແລະ ກອງທຶນ Trust Funds ທີ່ຄຸ້ມຄອງໂດຍທະນາຄານໂລກ” ໂຄງການ ຖືກໃຈ້ແຍກເປັນປະເພດ A ສໍາລັບສິ່ງແວດລ້ອມ ແລະ ການປົກປ້ອງ ເນື່ອງ ຈາກວ່າ ໜ້າວຽກຕ່າງໆ ທີ່ກ່ຽວຂ້ອງກັບ PPP ທີ່ເກີດຂື້ນຈາກການສະໜັບສະໜູນທາງດ້ານວິຊາການໃນອະນາຄົດ ອາດເຮັດໃຫ້ມີຜົນກະທົບຕໍສິ່ງແວດລ້ອມ ແລະ / ຫຼື ສັງຄົມ ໃນເຂດລຸ່ມ ເມື່ອກິດຈະກໍາເຫຼົ່ານີ້ ຖືກຈັດຕັ້ງປະຕິບັດ. ໂຄງການລົງທຶນໃນຂະແໜງຂົວທາງ ໃນຮູບແບບ PPP ແມ່ນຢູ່ນອກຂອບເຂດຂອງໂຄງການ. ນອກຈາກນີ້, ການກະກຽມ ບົດສຶກສາຄວາມເປັນໄປໄດ້ ແລະ ເຄື່ອງມືໃນການປົກປ້ອງ ທີ່ຕອບສະໜອງຕາມເງື່ອນໄຂໂຄງການປະເພດ A ສໍາລັບເສັ້ນທາງເລກທີ 13 ໃຕ້ແມ່ນກໍາລັງກະກຽມ ໃຕ້ພາຍໃຕ້ໂຄງການຂະແໜງຂົວທາງ ຢູ່ໃນ ສປປ ລາວ ທີ່ກໍາລັງດໍາເນີນຢູ່.

## 2 ອົງປະກອບຂອງໂຄງການ

ອົງປະກອບຕ່າງໆຂອງໂຄງການ ແມ່ນຈະຍັງຄົງຄ້າຍຄືກັບໂຄງການແມ່ ໂດຍມີຂອບເຂດເພີ່ມຕື່ມ ພາຍໃຕ້ອົງປະກອບ 1 ແລະ 2 ທີ່ກວມເອົາໂຄງການຍ່ອຍ ຂອງເສັ້ນທາງເລກທີ 13 ໃຕ້ ແລະ ການຊ່ວຍເຫຼືອດ້ານວິຊາການເພີ່ມຕື່ມ. ອົງປະກອບດັ່ງກ່າວ ສາມາດສະຫຼຸບໄດ້ດັ່ງນີ້:

| LRSP2 (P158504)<br>ໂຄງການປະຈຸບັນ | LRSP2- AF (P170951)<br>ການປ່ຽນແປງ ທີ່ສະເໜີ |
|---|---|
| **ອົງປະກອບ 1: ການສ້ອມແປງເສັ້ນທາງໃຫ້ສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດ** | **ອົງປະກອບ 1: ການສ້ອມແປງເສັ້ນທາງໃຫ້ສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດ** |
| *ອົງປະກອບຍ່ອຍ 1.1: ການສ້ອມແປງເປັນໄລຍະ ແລະ ການປັບປຸງເປັນຈຸດ* | *ອົງປະກອບຍ່ອຍ 1.1: ການສ້ອມແປງເປັນໄລຍະ ແລະ ການປັບປຸງເປັນຈຸດ* |
| ດໍາເນີນການສ້ອມແປງເປັນແຕ່ລະໄລຍະ ແລະ ການປັບປຸງເປັນຈຸດ ເພື່ອໃຫ້ສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຕາມເສັ້ນທາງຂັ້ນແຂວງ ແລະ ເມືອງເປົ້າໝາຍ. | ບໍ່ມີການປ່ຽນແປງ. |
| *ອົງປະກອບ 1.2 ການສ້ອມແປງເປັນປະຈໍາ* | *ອົງປະກອບ 1.2: ການສ້ອມແປງເປັນປະຈໍາ* |
| ດໍາເນີນການສ້ອມແປງເປັນປະຈໍາ ຕາມເສັ້ນທາງຂອງແຂວງ ແລະ ເມືອງຢູ່ໃນແຂວງທີ່ມີໂຄງການ. | ອົງປະກອບຍ່ອຍນີ້ຍັງຈະຖືກປັບປຸງຄືນເພື່ອຍົກເລີກຕົວຊີ້ວັດການເຊື່ອມໂຍງຄືນ (Disbursement Link Indicator (DLI), ເຊິ່ງໄດ້ຖືກອອກແບບສໍາລັບໂຄງການສ້ອມແປງຂົວທາງແບບປົກກະຕິພາຍໃຕ້ໂຄງກາຍແມ່. ສັນຍາໂດຍອີງໃສ່ຜົນສໍາເລັດຂອງໜ້າວຽກຈະຖືກນໍາໃຊ້ສໍາລັບອົງປະກອບນີ້. ເນື່ອງຈາກວ່າສະພາບປະຈຸບັນຂອງເສັ້ນທາງຂັ້ນແຂວງແລະຂັ້ນເມືອງແມ່ນບໍ່ຄືກັນກັບການບາງຈຸດທີ່ຕ້ອງໄດ້ປັບປຸງກ່ອນທີ່ມັນຈະມີປະໂຫຍດຈາກການສ້ອມແປງປົກກະຕິ, ເຊິ່ງເປັນເງື່ອນໄຂໜຶ່ງສໍາລັບ **DLI**, ເຊິ່ງເຮັດໃຫ້ການຈັດຕັ້ງປະຕິບັດ**BPC** ມີຄວາມສະຫລັບຊັບຊ້ອນ. ເນື່ອງຈາກວ່າການຍົກເລີກຕົວຊີ້ວັດນີ້ຈະບໍ່ກະທົບຕໍ່ຈຸດປະສົງການພັດທະນາໂຄງການແລະຈະຊ່ວຍການຈັດຕັ້ງປະຕິບັດ **PBC**, ຄາດວ່າຈະຍົກເລີກ **DLI.** |
| *ອົງປະກອບ 1.3 ການອອກແບບ ແລະ ການກວດກາການກໍ່ສ້າງ* | *ອົງປະກອບຍ່ອຍ 1.3: ການອອກແບບ ແລະ ການຄວບຄຸມວຽກກໍ່ສ້າງ* |
| ໃຫ້ການຊ່ວຍເຫຼືອດ້ານວິຊາການສໍາລັບການອອກແບບ ແລະ ການກວດກາ, ການຈັດຊື້ຈັດຈ້າງ ການຮັບປະກັນຄຸນນະພາບດ ການຄຸ້ມຄອງສັນຍາດ ແລະ ການຄຸ້ມຄອງວຽກເຕັກນິກ ທີ່ດໍາເນີນພາຍໃຕ້ ອົງປະກອບ 1.1 ແລະ 1.2 ຂອງໂຄງການ. | ພາຍໃຕ້ໂຄງການແມ່ ໂດຍການສະໜອງທຶນຈາກ **NDF** ແມ່ນຖືກນໍາໃຊ້ເພື່ອກວດກາການສ້ອມແປງປົກກະຕິ ແລະ ການສ້ອມແປງ ໃນແຕ່ລະໄລຍະ. ອົງປະກອບນີ້ ຈະປັບປຸງຕື່ມ ເພື່ອເພີ່ມທຶນຈາກ **NDF** ໃຫ້ແກ່ ກຍທຂ ເພື່ອອອກແບບ ແລະ ກວດກາ ການປັບປຸງ ແລະ ສ້ອມແປງເສັ້ນທາງເລກທີ 13 ໃຕ້ ໂດຍການສະໜອງທຶນໃຫ້ແກ່ທີ່ປຶກສາ ເພື່ອກວດກາວຽກສ້ອມແປງຂົວທາງ ໃນໄລຍະກໍ່ສ້າງ, ລວມທັງ ການກວດກາ ພາຍຫຼັງການກໍ່ສ້າງສໍາເລັດເບື້ອງຕົ້ນ ແລະ ຈົນກວ່າປິດໂຄງການ. ສ່ວນໜຶ່ງຂອງກິດຈະກໍານີ້ ແມ່ນລວມຢູ່ໃນອົງປະກອບຍ່ອຍນີ້, ທີ່ປຶກສາ ກວດກາວຽກກໍ່ສ້າງ ຈະສ້າງກົນໄກຮັບປະກັນຄຸນນະພາບ, ລວມທັງ ການແນະນໍາໃນໜ້າວຽກຕົວຈິງ ແລະ ການເຝິກອົບຮົມດ້ານວິຊາການ ໃຫ້ແກ່ ກຍທຂ ແລະ ພຍທຂ ເພື່ອຄຸ້ມຄອງສັນຍາ ແລະ ການຄວບຄຸມຄຸນນະພາບ ທີ່ກ່ຽວຂ້ອງກັບ ການປັບປຸງ ແລະ ການສ້ອມແປງເສັ້ນທາງເລກທີ 13 ໃຕ້. |
| *ອົງປະກອົບ 1.4: ການສ້ອມແປງ ແລະ ການຊ່ວຍເຫຼືອສຸກເສີນ ຈາກພາຍຸເຂດຮ້ອນ Son-Tinh:* | *ອົງປະກອົບ 1.4: ການສ້ອມແປງ ແລະ ການຊ່ວຍເຫຼືອສຸກເສີນ ຈາກພາຍຸເຂດຮ້ອນ Son-Tinh:* |
| ອົງປະກອບຍ່ອຍນີ້ ໄດ້ຖືກເພີ່ມເຂົ້າ ພາຍໃຕ້ໂຄງການທໍາອິດ ທີ່ໄດ້ປັບປຸງໂຄງສ້າງຄືນໃໝ່ ແລະ ມີຜົນສັກສິດ ໃນວັນທີ 2 ພະຈິກ 2018. ຄາດວ່າບໍ່ | ບໍ່ມີການປ່ຽນແປງ. |

| LRSP2 (P158504)<br>ໂຄງການປະຈຸບັນ | LRSP2- AF (P170951)<br>ການປ່ຽນແປງ ທີ່ສະເໜີ |
|---|---|
| ມີການປ່ຽນແປງຕໍ່ອົງປະກອບຍ່ອຍນີ້ ພາຍໃຕ້ໂຄງການ AF. | |
| | *ອົງປະກອບ 1.5: ການປັບປຸງ ແລະ ການສ້ອມແປງເສັ້ນທາງເລກທີ 13 ໃຕ້* |
| | ເຊິ່ງເປັນການລົງທຶນພາກຂະຫຍາຍຂອງໂຄງການLRSP2, ອົງປະກອບນີ້ຈະໃຫ້ທຶນສະໜັບສະໜູນການປັບປຸງ, ການສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດແລະການສ້ອມແປງບາງຈຸດຂອງເສັ້ນທາງເລກທີ 13ໃຕ້ລະຫວ່າງແຂວງບໍລິຄໍາໄຊ ແລະ ແຂວງຄໍາມ່ວນໂດຍມີຄວາມຍາວທັງໝົດປະມານ 58 Km. ໜ້າວຽກຕ່າງໆແມ່ນຈະຖືກດາເນີນຢູ່ຕາມທາງເກົ່າ ແລະ ຈະປະຕິບັດຕາມແລວທາງທີ່ມີຢູ່ແລ້ວ ໂດຍອາດຈະມີການປ່ຽນແລວເລັກໜ້ອຍຢູ່ຕາມຈຸດໂຄ້ງອັນຕະລາຍເພື່ອປັບປຸງບັນຫາຄວາມປອດໄພ. ນອກຈາກນີ້, ໜ້າວຽກຕ່າງໆຍັງຈະລວມມີການປັບປຸງບັນຫາຄວາມປອດໄພຢູ່ສະຖານີລົດເມແລະລົດບັນທຸກລວມທັງບ່ອນຈຸດລົດຂ້າງທາງຕາມຈຸດຕ່າງໆເພື່ອຈອດລົດເມແລະຈອດລົດອື່ນໆຊົ່ວຄາວ. ສັນຍາສ້ອມແປງທາງໂດຍອີງໃສ່ຜົນສໍາເລັດຂອງໜ້າວຽກ (OPBRC)ຈະຖືກນໍາໃຊ້ສໍາລັບການປັບປຸງແລະການສ້ອມແປງເສັ້ນທາງນີ້. |
| **ອົງປະກອບ 2: ການສ້າງຂີດຄວາມສາມາດຂອງອົງການຈັດຕັ້ງລັດ** | **ອົງປະກອບ 2: ການສ້າງຂີດຄວາມສາມາດຂອງອົງການຈັດຕັ້ງລັດ** |
| *ອົງປະກອບຍ່ອຍ 2.1. ການວາງແຜນຍຸດທະສາດ ແລະ ການສະໜອງທຶນ ຂະແໜງການ* | *ອົງປະກອບຍ່ອຍ 2.1. ການວາງແຜນຍຸດທະສາດ ແລະ ການສະໜອງທຶນ ຂະແໜງການ* |
| ດໍາເນີນແຜນງານຕ່າງໆເພື່ອ:(a) ເສີມສ້າງຂີດຄວາມສາມາດ ເພື່ອຍົກລະດັບແລະໃຫ້ສາມາດປະຕິບັດຍຸດທະສາດແລະແຜນດໍາເນີນງານດ້ານຂະແໜງການຂອງກະຊວງໂຍທາທິການແລະຂົນສົ່ງ; (b) ເສີມສ້າງຂີດຄວາມສາມາດເພື່ອປັບປຸງນະໂຍບາຍການຂົນສົ່ງແລະກອບການໃຫ້ທຶນ; ແລະ(c)ເສີມສ້າງຂີດຄວາມສາມາດເພື່ອຄຸ້ມຄອງຍຸດທະສາດທັງຂັ້ນກະຊວງຍທຂແລະພະແນກຍທຂແຂວງ. | ອົງປະກອບນີ້ຈະຖືກປັບປຸງແກ້ໄຂ ເພື່ອເພີ່ມຕື່ມທຶນຊ່ວຍເຫລືອ ຍທຂ ໃນການພັດທະນາ ແລະ ຜັນຂະຫຍາຍ ການວາງແຜນຍຸດທະສາດ ລົງສູ່ລະດັບແຂວງ. |
| *ອົງປະກອບ 2.2 ການຄຸ້ມຄອງຂະແໜງການ* | *ອົງປະກອບ 2.2 ການຄຸ້ມຄອງຂະແໜງການ* |
| ດໍາເນີນກິດຈະກໍາຕ່າງໆຂອງແຜນງານເພື່ອ (a)ປັບປຸງຖານຂໍ້ມູນຂ່າວສານເຕັກໂນໂລຢີ (IRAM) ເພື່ອ (i)ສະໜັບສະໜູນການຈັດຊື້ຈັດຈ້າງ, ການຄຸ້ມຄອງ, ການຕິດຕາມກວດກາ, ແລະການເຜີຍແຜ່ຂໍ້ມູນຂ່າວສານແລະເພື່ອການເກັບຂໍ້ມູນແບບອີເລັກໂຕຼນິກ, (ii)ປົກຄຸມເສັ້ນທາງທ້ອງຖິ່ນ, ແລະ (iii)ສະໜັບສະໜູນການຂະຫຍາຍຖານຂໍ້ມູນຂ່າວສານເຕັກໂນໂລຢີໄປສູ່ພະແນກຍທຂແຂວງ; (b)ຍົກລະດັບກອງທຶນບູລະນະຂົວ-ທາງແລະລະບົບບັນຊີຂອງພະແນກຍທຂແຂວງແລະການພັດທະນາເຄື່ອງມືຕິດຕາມລາຍຈ່າຍ; ແລະ (c)ເສີມສ້າງຄວາມເຂັ້ມແຂງໃນການຄວບຄຸມຂະຫຍາຍການນໍາໃຊ້ມາດຕະຖານການກວດກາດ້ານເຕັກນິກຂອງຂະແໜງຂົວ-ທາງໃຫ້ຂັ້ນແຂວງ;ແລະ(e)ເສີມສ້າງຂີດຄວາມສາມາດໃນການຄວບຄຸມນໍ້າໜັກໂດຍຜ່ານການກໍ່ສ້າງສະຖານີຊັ່ງນໍ້າໜັກຕາມເສັ້ນທາງເລກທີ 13 ໃຕ້ຢູ່ແຂວງບໍລິຄໍາໄຊ. | ອົງປະກອບນີ້ຈະຖືກປັບປຸງແກ້ໄຂ ເພື່ອເພີ່ມຕື່ມທຶນໃນການຊ່ວຍເຫລືອການຄວບຄຸມພາຍໃນ ແລະ ການຄຸ້ມຄອງການເງິນຂອງ ຍທຂ ແລະ ຜັນຂະຫຍາຍລົງສູ່ລະດັບແຂວງ. |
| *ອົງປະກອບ 2.3 ການຄຸ້ມຄອງລະບົບຂົວທາງທີ່ສາມາດທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ* | *ອົງປະກອບ 2.3: ການຄຸ້ມຄອງລະບົບຂົວທາງທີ່ສາມາດທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ* |
| ດໍາເນີນແຜນກິດຈະກໍາຕ່າງໆເພື່ອ:(a)ສໍາລັບການສະໜອງທຶນຈາກNDF ເພື່ອ(i) ສ້າງແຜນດໍາເນີນງານການປ່ຽນແປງດິນຟ້າອາກາດຂອງກະຊວງຍທຂ; (ii)ນໍາໃຊ້ແຜນທີ່ເຂດໄພອັນຕະລາຍເຂົ້າໃນແຜນທີ່ຄວາມ | ອົງປະກອບນີ້ຈະຖືກປັບປຸງແກ້ໄຂ ເພື່ອເພີ່ມຕື່ມທຶນຊ່ວຍເຫລືອ ຍທຂ ໃນການເກັບກໍາຂໍ້ມູນ ແລະ ຄວບຄຸມດູແລວຽກງານຂະແໜງທາງ ຢູ່ໃນແຂວງໂຄງການ ແລະ ການປັບປຸງ ແລະ ຊ້ອມແປງທາງຫລວງເລກທີ |

| LRSP2 (P158504)<br>**ໂຄງການປະຈຸບັນ** | LRSP2- AF (P170951)<br>**ການປ່ຽນແປງ ທີ່ສະເໜີ** |
|---|---|
| ສ່ຽງສໍາລັບການວາງແຜນການສ້ອມແປງແລະລົງທຶນກໍ່ສ້າງເສັ້ນທາງ; (iii)ທົບທວນແລະປັບປຸງເຄື່ອງມືຕ່າງໆທີ່ມີໃນປະຈຸບັນເພື່ອຄຸ້ມຄອງແລະການວາງແຜນສ້ອມແປງເສັ້ນທາງ; (iv) ກະກຽມແຜນການປົກປັກຮັກສາເສັ້ນທາງຫຼວງແຫ່ງຊາດເພື່ອໃຫ້ສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດໃນໄລຍະກາງ-ໄລຍະຍາວ; (v) ທົບທວນແລະປັບປຸງການອອກແບບ,ມາດຕະຖານແລະຄໍາແນະນໍາຂອງຂະແໜງຂົວທາງເພື່ອໃຫ້ລວມເອົາຄວາມສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດ;ແລະ (vi)ກົນໄກການອອກແບບເພື່ອເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການສ້ອມແປງເສັ້ນທາງສຸກເສີນ; ແລະ(b) ສໍາລັບການໃຫ້ທຶນຈາກIDA ເພື່ອດໍາເນີນການສໍາຫຼວດພາກສະໜາມໃນແຕ່ລະປີເພື່ອລວມເອົາຂໍ້ມູນສໍາຄັນຕ່າງໆເຂົ້າໃນລະບົບຄຸ້ມຄອງຂໍ້ມູນຂ່າວສານຂອງຂະແໜງຂົວທາງສໍາລັບການວາງແຜນໂດຍອີງໃສ່ຄວາມສ່ຽງ. | 13 ໃຕ້. ອົງປະກອບຍ່ອຍນີ້ຍັງຈະສະໜອງເຮືອໃຫ້ຊາວບ້ານທີ່ອາໃສຢູ່ໃນພື້ນທີ່ນໍ້າຖ້ວມ ສໍາລັບນໍາໃຊ້ໃນກໍລະນີສຸກເສີນໃນເວລານໍ້າຖ້ວມ. |
| *ອົງປະກອບຍ່ອຍ 2.4: ການສ້າງຂີດຄວາມສາມາດຂອງຂະແໜງການ* | *ອົງປະກອບຍ່ອຍ 2.4: ການສ້າງຂີດຄວາມສາມາດຂອງຂະແໜງການ* |
| ດໍາເນີນກິດຈະກໍາຕ່າງໆຂອງແຜນງານເພື່ອ:(a)ເສີມຂສ້າງຂີດຄວາມສາມາດການດໍາເນີນງານ, ການສ້າງຄວາມເຊື່ອໝັ້ນແລະການຄຸ້ມຄອງບຸກຄະລາກອນຂອງກະຊວງໂຍທາທິການແລະຂົນສົ່ງແລະໜ່ວຍງານອື່ນໆຂອງລັດເພື່ອປະເມີນແລະຄຸ້ມຄອງບັນຫາທາງດ້ານເຕັກນິກ, ສິ່ງແວດລ້ອມແລະສັງຄົມໃນການຈັດຕັ້ງປະຕິບັດສັນຍາOPBRC;(c) ການຕິດຕາມກວດກາດ້ານສິ່ງແວດລ້ອມແລະສັງຄົມແລະກິດຈະກໍາອື່ນໆທີ່ກ່ຽວຂ້ອງ (ເບິ່ງຂ້າງລຸ່ມ); ແລະ (d)ສ້າງແລະຈັດຕັ້ງປະຕິບັດແຜນດໍາເນີນງານຄວາມປອດໄພຕາມເສັ້ນທາງ, ການກວດກາຄວາມປອດໄພຂອງເສັ້ນທາງ, ແຜນງານການເຝິກອົບຮົມແລະການສ້າງຈິດສໍານຶກ. | ອົງປະກອບຍ່ອຍນີ້ ຈະຖືກປັບປຸງຄືນ ເພື່ອໃຫ້ມີງົບປະມານຫຼາຍກວ່ານີ້ ເພື່ອດໍາເນີນກິດຈະກໍາ ການສ້າງຂີດຄວາມສາມາດ ແນໃສ່ເພື່ອ: (a) ເສີມສ້າງຂີດຄວາມສາມາດ ການດໍາເນີນງານ, ການສ້າງຄວາມເຊື່ອໝັ້ນ ແລະ ການຄຸ້ມຄອງບຸກຄະລາກອນຂອງ ຍທຂ ແລະ ອົງການຈັດຕັ້ງຂະແໜງການທາງຢູ່ໃນລະດັບແຂວງ ແລະ ເມືອງ; **(b)** ເສີມສ້າງຄວາມອາດສາມາດ ຂອງ ຍທຂ ແລະ ໜ່ວຍງານອື່ນໆຂອງລັດ ເພື່ອປະເມີນ ແລະ ຄຸ້ມຄອງ ບັນຫາທາງດ້ານເຕັກນິກ, ສິ່ງແວດລ້ອມ ແລະ ສັງຄົມໃນການຈັດຕັ້ງປະຕິບັດສັນຍາ **OPBRC**; **(c)** ປັບປຸງການຕິດຕາມກວດກາດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ກິດຈະກໍາອື່ນໆ ທີ່ກ່ຽວຂ້ອງ. |
| **ອົງປະກອບທີ 3: ການຄຸ້ມຄອງໂຄງການ** | **ອົງປະກອບທີ 3: ການຄຸ້ມຄອງໂຄງການ** |
| ການຊ່ວຍເຫຼືອທາງດ້ານເຕັກນິກແລະດ້ານວິຊາການເພື່ອຄຸ້ມຄອງໂຄງການໃນແຕ່ລະວັນ (ລວມທັງການຄຸ້ມຄອງການເງິນ, ການຈັດຊື້ຈັດຈ້າງແລະການເຝິກອົບຮົມການປົກປ້ອງແລະການສະໜັບສະໜູນການໃຫ້ຄໍາແນະນໍາອື່ນໆ), ຕິດຕາມກວດກາແລະປະເມີນຜົນກິດຈະກໍາຕ່າງໆແລະດໍາເນີນການກວດກາທາງດ້ານເຕັກນິກແລະການເງິນ. | ອົງປະກອບນີ້ຍັງຈະຖືກປັບປຸງຄືນເພື່ອເພີ່ມງົບປະມານຕື່ມສໍາລັບການຊ່ວຍເຫຼືອທາງດ້ານເຕັກນິກແລະດ້ານວິຊາການເພື່ອຄຸ້ມຄອງໂຄງການໃນແຕ່ລະວັນ (ລວມທັງການຄຸ້ມຄອງການເງິນ, ການຈັດຊື້ຈັດຈ້າງແລະການເຝິກອົບຮົມການປົກປ້ອງແລະການສະໜັບສະໜູນການໃຫ້ຄໍາແນະນໍາອື່ນໆ), ຕິດຕາມກວດກາແລະປະເມີນຜົນກິດຈະກໍາຕ່າງໆແລະດໍາເນີນການກວດກາທາງດ້ານເຕັກນິກແລະການເງິນ. ເງິນແຮສຸກເສີນແມ່ນໄດ້ຈັດສັນໄວ້ພາຍໃຕ້ອົງປະກອບນີ້. |
| **ອົງປະກອບ 4: ການຕອບໂຕ້ ເຫດການສຸກເສີນ** | **ອົງປະກອບ 4: ການຕອບໂຕ້ ເຫດການສຸກເສີນ** |
| **CERC** ໂດຍການຈັດສັນງົບປະມານ 0 ໂດລາສະຫະລັດແມ່ນລວມຢູ່ພາຍໃຕ້ໂຄງການໂດຍອີງຕາມນະໂຍບາຍ OP10.00, ວັກ 12 ແລະ 13, ສໍາລັບໂຄງການທີ່ມີສະພາບຄວາມຕ້ອງການການຊ່ວຍເຫຼືອສຸກເສີນຫຼືມີຄວາມຫຍຸ້ງຍາກທາງດ້ານຂີດຄວາມສາມາດ. ການຈັດສັນດັ່ງກ່າວເຮັດໃຫ້ສາມາດຈັດສັນງົບປະມານໄດ້ຢ່າງຮີບດ່ວນສໍາລັບໂຄງການເພື່ອດໍາເນີນງານໃນເວລາທີ່ລັດຖະບານແຈ້ງວ່າມີວິກິດການຫຼືເຫດສຸກເສີນເກີດຂຶ້ນແລະທະນາຄານໂລກເຫັນດີຕາມທີ່ໄດ້ກໍານົດໄວ້. ອົງປະກອບນີ້ອາດຈະໃຫ້ທຶນແກ່ພາກລັດແລະເອກະຊົນຕາມບັນຊີສິນຄ້າທີ່ເປັນບວກແລະ/ຫຼືວຽກສະເພາະ,ສິນຄ້າ, ການບໍລິການແລະມູນຄ່າດໍາເນີນງານເພື່ອກູ້ໄພສຸກເສີນ. ຄູ່ມືດໍາເນີນງານຕອບໂຕ້ສຸກເສີນຈະນໍາໃຊ້ໃນອົງປະກອບນີ້, ໂດຍ | ບໍ່ມີການປ່ຽນແປງ. |

| LRSP2 (P158504)<br>**ໂຄງການປະຈຸບັນ** | LRSP2- AF (P170951)<br>**ການປ່ຽນແປງ ທີ່ສະເໜີ** |
|---|---|
| ມີລາຍລະອຍດໃນການຄຸ້ມຄອງງົບປະມານ,ການຈັດຊື້ຈັດຈ້າງ,ການປົກປ້ອງແລະລະບົບຂໍ້ມູນອື່ນໆທີ່ຈຳເປັນ. | |

3. ໂຄງການຈະໄດ້ຮັບການຈັດຕັ້ງປະຕິບັດພາຍໃຕ້ລະບົບລັດຖະບານ. ກະຊວງໂຍທາທິການແລະຂົນສົ່ງ MPWT ເປັນອົງການຈັດຕັ້ງປະຕິບັດ. ກົມແຜນການແລະ ການຮ່ວມມື (DPC) ຈະເປັນຜູ້ຮັບຜິດຊອບປະສານງານ ແລະ ຄຸ້ມຄອງໂຄງການທັງໝົດ. ກົມທາງຫຼວງ (DoR) ເປັນຜູ້ຈັດຕັ້ງປະຕິບັດກິດຈະກຳກ່ຽວກັບທາງທັງໝົດພາຍໃຕ້ ອົງປະກອບ 1, 2, ແລະ 3 ໃນຂະນະທີ່ ກົມຂົນສົ່ງ ເປັນຜູ້ຮັບຜິດຊອບເລືອງຄວາມປອດໄພໃນການສັນຈອນ ອົງປະກອບທີ 2.ພະແນກໂຍທາທິການແລະຂົນສົ່ງແຂວງ (DPWT) ທີ່ມີໂຄງການຮັບຜິດຊອບວາງແຜນ ແລະ ຈັດຕັ້ງປະຕິບັດວຽກບູລະນະສ້ອມແປງທາງຢູ່ເຂດແຂວງ ແລະ ເມືອງຂອງຕົນພາຍໃຕ້ອົງປະກອບປະກອບ 1 ແລະ 3 ໃນຖານະເປັນເຈົ້ຂອງໂຄງການຍ່ອຍ. ພະແນກສິ່ງແວດລ້ອມ ແລະ ສັງຄົມ ຂອງ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ (ESD/PTRI) ເປັນຜູ້ຊີ້ນຳ ແລະ ຕິຕາມ ຄວາມປອດໄພທາງສິ່ງແວດລ້ອມ ແລະສັງຄົມ ລວມທັງການຝຶກອົບຮົມ ແລະ ການລາຍງານ. ກົມອື່ນໆພາຍໃນກະຊວງ ກຍທສ ກໍ່ມີສ່ວນຮ່ວມໃນການຈັດຕັງປະຕິບັດໂຄງການ.

4. ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ການປ້ອງກັນໄພພິບັດ (EDPD) ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ (PTRI) ຫຼື EDPD/ PTRI ຈະເປັນອົງການຈັດຕັ້ງຫຼັກ ທີ່ຈັດຕັ້ງປະຕິບັດ ກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ. EDPD/ PTRI ຍັງຈະເປັນເຈົ້າການ ຄວບຄຸມດູແລ ແລະ ຕິດຕາມກວດກາ ການປົກປ້ອງຢູ່ໃນລະດັບໂຄງການ ປະຈຳທຸກເດືອນ ແລະ ປະຈຳປີ ລວມທັງການສ້າງບົດລາຍງານການຕິດຕາມກວດກາ ການປົກປ້ອງ ປະຈຳທຸກເດືອນ ແລະ ປະຈຳປີ. EDPD/ PTRI ຈະມີຄວາມຮັບຜິດຊອບ ຈັດຝຶກອົບຮົມ ກ່ຽວກັບ ການປົກປ້ອງ, ຮັບປະກັນຂໍ້ກຳນົດການປົກປ້ອງ ທີ່ມີປະສິດທິຜົນ ໄດ້ຖືກລະບຸເຂົ້າໃນວົງຈອນການພັດທະນາໂຄງການຂົວທາງ, ແລະ ດຳເນີນກິດຈະກຳ ການຄົ້ນຄວ້າ ລວມທັງປັບປຸງຄູ່ມືການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ (ESOM) ໂດຍການປຶກສາຫາລືຮ່ວມກັບ ກຊສ ແລະ ຂະແໜງການອື່ນໆ ແລະ ທະນາຄານໂລກ. ກົມຂົວທາງ ຈະຮັບຜິດຊອບ ເພື່ອຮັບປະກັນວ່າ ຂໍ້ກຳນົດການປົກປ້ອງ ໄດ້ຖືກລະບຸເຂົ້າຢູ່ໃນການວາງແຜນ, ການອອກແບບ ແລະ ກ່ອນວຽກງານການກໍ່ສ້າງ ການບູລະນະຮັກສາຂົວທາງ ລວມທັງຂະບວນການປະມູນ ແລະ ສ້າງສັນຍາ. ຢູ່ໃນລະດັບໂຄງການຍ່ອຍ, ພະແນກໂຍທາທິການ ແລະ ຂົນສົ່ງ ແມ່ນຮັບຜິດຊອບ ການຈັດຕັ້ງປະຕິບັດ ກິດຈະກຳ ການປົກປ້ອງ ລວມທັງການດຳເນີນ ການຕິດຕາມກວດກາ ປົກກະຕິ ສຳລັບມາດຕະການ ການປົກປ້ອງ ເຊິ່ງຈັດຕັ້ງປະຕິບັດ ໂດຍຜູ້ຮັບເໝົາ. ພະແນກ ຍທຂ ແຂວງ ທີ່ຈັດຕັ້ງປະຕິບັດໂຄງການ ຈະສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ສັງຄົມ (ESU) ສະເພາະຂະແໜງຂົວທາງ ເພື່ອຮັບຜິດຊອບ ການປົກປ້ອງ. ໜ່ວຍງານສິ່ງແວດລ້ອມ ແລະ ສັງຄົມ/ພະແນກໂຍທາທິການ ແລະ ຂົນສົ່ງ ຈະຮັບຜິດຊອບ ດຳເນີນການຕິດຕາມກວດກາ ວຽກງານຂອງຜູ້ຮັບ ເໝົາ ເປັນປະຈຳເດືອນ ແລະ ການຈັດຕັ້ງປະຕິບັດມາດຕະການປົກປ້ອງອື່ນໆ ລວມທັງການກະກຽມ ບົດລາຍງານການຕິດຕາມກວດກາ ການປົກປ້ອງ ປະຈຳເດືອນ ພ້ອມທັງນຳສົ່ງບົດລາຍງານດັ່ງກ່າວ ໃຫ້ EDPD/ PTRI. EDPD/ PTRI ແລະ ໜ່ວຍງານສິ່ງແວດລ້ອມ ແລະ ສັງຄົມ/ພະແນກໂຍທາທິການ ແລະ ຂົນສົ່ງ ຈະຮັບຜິດຊອບ ສັງລວມບັນດາເອກະສານ ເພື່ອໃຫ້ທະນາຄານໂລກ ໄດ້ທົບທວນ. ກົມຂົນສົ່ງ ຈະຮັບຜິດຊອບການຈັດຕັ້ງປະຕິບັດ ແຜນງານຄວາມປອດໄພຕາມເສັ້ນທາງເຊິ່ງຈັດຕັ້ງປະຕິບັດ ພາຍໃຕ້ໂຄງການ ດັ່ງກ່າວ. ລາຍລະອຽດ ດ້ານບົດບາດ ແລະ ຄວາມຮັບຜິດຊອບ ກ່ຽວກັບ ການປົກປ້ອງ ໄດ້ກຳນົດຢູ່ໃນກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF).

## 2.1 ຄວາມຈຳເປັນຂອງ RPF

5. ອີງຕາມກິດຈະກຳທີ່ໄດ້ສະເໜີໄປ, ໂຄງການຈະບໍ່ມີການຈັດສັນຍົກຍ້າຍ ສິ່ງປຸກສ້າງທີ່ຖາວອນ / ບໍມີການຍົກຍ້າຍຈັດສັນການຕັ້ງຖິ່ນຖານໃຫຍ່ໂຕຂອງປະຊາຊົນ. ກິດຈະກຳກໍ່ສ້າງ ຈະສຸມໃສ່ການບູລະນະຮັກສາທາງປະຈຳວັນ ແລະ ເປັນແຕ່ໄລຍະ ສຳລັບເສັ້ນທາງຢູ່ແຂວງ ແລະ ເມືອງ ລວມທັງການປັບປຸງເປັນບາງຈຸດ ເພື່ອຍົກລະດັບຕາໜ່າງເສັ້ນທາງຢູ່ແຂວງ ແລະ ເມືອງ ໃຫ້ສາມາດຕ້ານທານກັບສະພາບາກາດ ແລະ ຄວາມປອດໄພຕາມເສັ້ນທາງ. ໄດ້ມີການຄາດຄະເນໄວ້ວ່າ ກິດຈະກຳທັງໝົດ ຈະຖືກດຳເນີນໄປຕາມແລວທາງເດີມ ພາຍໃນເຂດສະຫງວນເສັ້ນທາງປະຈຸບັນ. ແຕ່ເຖິງຢ່າງໃດກໍ່ຕາມ, ອາດມີຄວາມເປັນໄປໄດ້ ທີ່ຕ້ອງປັບແລວທາງຄືນເລັກນ້ອຍ ເພື່ອປັບປຸງ ທາງດ້ານຄວາມປອດໄພຕາມເສັ້ນທາງ ໃຫ້ມີຄວາມໝັ້ນຄົງ ສາມາດຕ້ານທານກັບສະພາບການປ່ຽນແປງດິນຟ້າອາກາດ. ກິດຈະກຳ ການລົງທຶນອາດລວມເອົາການຍົກລະດັບເສັ້ນທາງບາງສ່ວນທີ່ຖືກນ້ຳຖ້ວມຂັງ, ການປູຢາງເສັ້ນທາງບາງສ່ວນທີ່ມີຄວາມຄ້ອຍຊັນສູງ ແລະ ບາງສ່ວນທີ່ຜ່ານເຂດຊຸມຊົນໜາແໜ້ນ, ກໍ່ສ້າງ/ປັບປຸງ ຮ່ອງລະບາຍນ້ຳ, ປັບປຸງ/ສ້າງໃຫ້ມີຄວາມໝັ້ນຄົງເຂດທີ່ມີຄວາມຄ້ອຍຊັນ ແລະອື່ນໆ..., ຜົນກະທົບທີ່ອາດຈະເກີດຂຶ້ນ ຈາກກິດຈະກຳເຫຼົ່ານີ້ ແມ່ນຈະມີໜ້ອຍ, ເກີດຂຶ້ນສະເພາະເຂດ, ມີຈຳກັດ, ເກີດຂຶ້ນຊົ່ວຄາວ ແລະ ສາມາດຫລຸດຜ່ອນໄດ້. ຜົນກະທົບທີ່ອາດຈະເກີດຂຶ້ນປະກອບມີລະອອງຝຸ່ນ, ສຽງ, ການກີດຂວາງການສັນຈອນ, ແລະ ການເຂົ້າເຖິງ, ການກໍ່ສ້າງ ແລະ ຄວາມປອດໄພຕາມທ້ອງຖະໜົນ, ອື່ນໆ.

6. ນະໂຍບາຍມີຄວາມຈຳເປັນຍ້ອນມີການໄດ້ມາເຊິ່ງທີ່ດິນປະຊາຊົນ ເມື່ອມີການສ້ອມແປງທາງຢູ່ບາງຈຸດເຊິ່ງມີຄວາມຈຳເປັນຕ້ອງໄດ້ປ່ຽນແລວທາງເລັກໜ້ອຍ ແລະ ຊົ່ວຄາວ ເພື່ອຮັບປະກັນວ່າເສັ້ນທາງມີສະຖຽນລະພາບ ແລະ ຄວາມປອດໄພ. ກິດຈະກຳສ່ວນໃຫຍ່ແມ່ນເຮັດໄປຕາມເສັ້ນທາງເກົ່າ ແລະ ຈະບໍມີການຂະຫຍາຍທາງຢ່າງກວ້າງຂວາງທີ່ຈະໄປກະທົບຕົ້ນໄມ້ ຫຼື ສິ່ງປຸກສ້າງອື່ນໆ ຫຼື ທີ່ດິນຕາມແຄມທາງ. ຢ່າງໃດກໍ່ຕາມມັນກໍ່ອາດຈະມີຜົນກະທົບຈຳນວນນຶ່ງທີ່ມີລັກສະນະຊົ່ວຄາວ ລວມເຖິງການນຳໃຊ້ທີ່ກິນຂອງປະຊາຊົນ, ເສັ້ນທາງເຂົ້າອອກເຂດທີ່ຢູ່ອາໃສ. ເນື່ອງຈາກວ່າລາຍຊື່ໂຄງການຍ່ອຍຍັງບໍໄດ້ໄດ້ຮັບການກຳນົດ ມັນຈຶ່ງຈຳເປັນຕ້ອງໄດ້ມີການກະກຽມ ກອບນະໂຍບາຍການໂຍກຍ້າຍຈັດສັນ (RPF) ທີ່ສອດຄ່ອງກັບ ນະໂຍບາຍປ້ອງກັນຄວາມປອດໄພໃນການຍົກຍ້າຍຈັດສັນທີ່ບໍສະໝັກໃຈຂອງທະນາຄານໂລກ (OP/BP 4.12). ກອບນະໂຍບາຍການໂຍກຍ້າຍຈັດສັນ ກຳນົດນະໂຍບາຍ ແລະ ຂັ້ນຕອນຕ່າງໆ ເພື່ອຫຼີກລ້ຽງ, ຫຼຸດຜ່ອນ ຫຼື ບັນເທົາຜົນກະທົບດ້ານລົບທີ່ອາດເກີດຂຶ້ນຈາກໂຄງການລົງທຶນ ລວມທັງກຳນົດຂອບເຂດຂອງ ແຜນປະຕິບັດການໂຍກຍ້າຍຈັດສັນ(RAP) ຫຼື ແຜນປະຕິບັດການໂຍກຍ້າຍຈັດສັນແບບຫຍໍ້ (RAP ຫຼື ARAP) ເຊິ່ງຈະມີຄວາມຈຳເປັນຖ້າມີການໄດ້ມາເຊິ່ງທີ່ດິນໂດຍບໍມີການສະໝັກໃຈເກີດຂຶ້ນ. ຄວາມຈຳເປັນຕ້ອງກະກຽມ RAP ຫຼື ARAP ຈະໄດ້ຮັບການກຳນົດຕອນການປ້ອງກັນຄວາມປອດໄພໄດ້ຮັບການກວດສອບເຊິ່ງຈະໄດ້ປະຕິບັດ ໃນນາມເປັນສ່ວນໜຶ່ງຂອງການວາງແຜນການລົງທຶນບູລະນະສ້ອມແປງທາງເຊິ່ງຈະໄດ້ຈັດຂຶ້ນປະຈຳປີ. RAP/ARAP ຕ້ອງໄດ້ຮັບການອະນຸມັດຈາກ ທະນາຄານໂລກ. ຕ້ອງໄດ້ລວມ RPF ເຂົ້າໃນເນື້ອໃນ ຂອງກອບວຽກໃນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ຕິດຂັດເປັນເອກະສານຊ້ອນທ້າຍພ້ອມ. ຜົນກະທົບທີ່ອາດຈະເກີດຂຶ້ນຈາກກິດຈະກຳການຊ່ວຍເຫຼືອດ້ານວິຊາການ ຈະໄດ້ຮັບການແກ້ໄຂ ພາຍໃຕ້ກອບໜ້າວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ.

## 2.2 ຄຳອະທິບາຍໂຄງການກ່ຽວກັບ OP/BP 4.12

7. ພາຍໃຕ້ອົງປະກອບທີ 1,ວຽກບູລະນະສ້ອມແປງທີ່ຈະດຳເນີນການພາຍໃຕ້ອົງປະກອບທີ 1 ລວມມີ ການສ້ອມແປງເປັນໄລຍະ, ການປັບປຸງສະເພາະຈຸດ, ການສ້ອມແປງປົກະຕິ ໂດຍອີງໃສ່ ສັນຍາທີ່ຖືຄຸນນະພາບງານເປັນຫຼັກ. ກິດຈະກຳກໍ່ສ້າງ ຈະສຸມໃສ່ການບູລະນະຮັກສາທາງເປັນປະຈຳ ແລະ ເປັນໄລຍະ ສຳລັບທາງຫລວງແຫ່ງຊາດ, ທາງຫຼວງແຂວງ ແລະ ທາງຫຼວງເມືອງ ລວມທັງການປັບປຸງເປັນບາງຈຸດ ເພື່ອຍົກລະດັບຕາໜ່າງເສັ້ນທາງຫຼວງແຂວງ ແລະ ທາງຫຼວງ

ເມືອງ ໃຫ້ສາມາດຕ້ານທານກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ມີຄວາມປອດໄພຕາມເສັ້ນທາງ. ໄດ້ມີການຄາດຄະເນໄວ້ວ່າ ກິດຈະກຳທັງໝົດຈະຖືກດຳເນີນໄປຕາມແລວທາງເດີມ ພາຍໃນເຂດສະຫງວນເສັ້ນທາງປະຈຸບັນ. ແຕ່ວ່າ, ອາດມີຄວາມເປັນໄປໄດ້ ທີ່ຕ້ອງປັບແລວທາງຄືນເລັກນ້ອຍ ເພື່ອປັບປຸງ ທາງດ້ານຄວາມປອດໄພ ແລະ ເສັ້ນທາງໃຫ້ມີຄວາມໝັ້ນຄົງ ສາມາດຕ້ານ ທານກັບສະພາບການປ່ຽນແປງດິນຟ້າອາກາດ. ການປັບປຸງສະເພາະຈຸດທີ່ເນັ້ນໃສ່ເສັ້ນທາງຊ່ວງໃດໜຶ່ງທີ່ອ່ອນໄຫວແມ່ນແນໃສ່ ປັບປຸງຄວາມສາມາດຕ້ານທານຕໍ່ສະພາບອາກາດປ່ຽນແປງ ແລະ ອາດຈະລວມເອົາທັງການຍົກລະດັບເສັ້ນທາງຊ່ວງທີ່ສ່ຽງຕໍ່ໄພນ້ຳຖ້ວມ, ການປູຢາງເສັ້ນທາງສະເພາະຊ່ວງທີ່ຄ້ອຍຊັນ ແລະ ຊ່ວງທີ່ຕັດຜ່ານຊຸມຊົນຂະໜາດໃຫຍ່, ການປັບປຸງ/ກໍ່ສ້າງຮ່ອງລະບາຍນ້ຳ, ແລະ ປັບປຸງ/ສ້າງໃຫ້ມີຄວາມໝັ້ນຄົງ ເຂດທີ່ມີຄວາມຄ້ອຍຊັນ ຍ້ອນເປັນການລົງທຶນຂະໜາດນ້ອຍ ແລະ ການສັນຈອນບໍ່ໜາແໜ້ນປານໃດ, ການສ້ອມແປງສະເພາະຈຸດຈະໄດ້ຮັບການຈັດຕັ້ງປະຕິບັດ ສະເພາະຊ່ວງທີ່ສຳຄັນ ແລະ ທາງຊ່ວງທີ່ຮັບຫຼາຍໃນປະຈຸບັນເທົ່ານັ້ນ, ບໍ່ແມ່ນຕະຫຼອດເສັ້ນທາງ, ໃນຊ່ວງທີ່ປະຈຸບັນຕ້ອງໃຊ້ທາງເວັ້ນ ແລະ ອາດມີການປ່ຽນແລວທາງເລັກໜ້ອຍເພື່ອເພີ່ມຄວາມປອດໄພໃນການໃຊ້ລົດໃຊ້ທະໜົນ ແລະ ປັບປຸງຄວາມສາມາດຕ້ານທານສະພາບອາການປ່ຽນແປງຂອງທາງ. ການສ້ອມແປງເປັນໄລຍະອາດລວມມີການ ປູຫີນຄືນໃໝ່ ຫຼືປູຢາງຄືນໃໝ່ໃສ່ທາງທີ່ມີຢູ່ແລ້ວ, ແລະ ການສ້ອມແປງປົກກະຕິຈະລວມມີການອະນາໄມຮ່ອງລະບາຍນ້ຳ, ຖົມຂຸມ, ຖາງປ່າຂ້າງທາງ, ການປັບລະດັບທາງແບບງ່າຍໆ ແລະ ອື່ນໆ.

# 3 ນະໂຍບາຍ, ກົດໝາຍ, ການຈັດຕັ້ງ

## 3.1 ກອບກົດໝາຍ ແລະ ຂໍ້ກຳນົດ ແຫ່ງຊາດ

8. ກົດຫມາຍ, ດຳລັດ, ແລະ ຄຳແນະນຳຕ່າງໆຂອງລັດຖະບານ: ໃນຊຸມປີທີ່ຜ່ານມາ ບັນດາລະບຽບ-ກົດຫມາຍໃນ ສປປ ລາວ ໄດ້ມີການປ່ຽນແປງຢ່າງໄວວາ ໃນ 5 ປີ ທີ່ຜ່ານມາ. ຫຼັກການການທົດແທນຄ່າເສຍຫາຍ ແລະ ກອບນະໂຍບາຍສຳລັບການເວນຄືນທີ່ດິນ ແລະ ການຈັດສັນຍົກຍ້າຍ ແມ່ນຄຸ້ມຄອງດ້ວຍກົດຫມາຍ, ລັດຖະດຳລັດ ແລະ ລະບຽບການຫຼາຍສະບັບ ທີ່ກ່ຽວຂ້ອງຈຳນວນຫນຶ່ງດັ່ງຕໍ່ໄປນີ້: (ກ) ລັດຖະທຳມະນູນ (1991, ປັບປຸງປີ 2015), (ຂ) ກົດຫມາຍວ່າດ້ວຍທີ່ດິນ (2003, ປັບປຸງ), (ຄ) ກົດຫມາຍວ່າດ້ວຍທາງຫຼວງ ( 1990, ປັບປຸງປີ 2012), (ງ) ກົດໝາຍວ່າດວ້ຍການປົກປັກຮັກສາສິ່ງແວດລ້ອມ (1999) ແລະ ໄດ້ຮັບການປັບປຸງໃນປີ 2012, ແລະ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ (CR ດຳລັດ 192 /ນຍ, ລົງວັນທີ 7 ກໍລະກົດ 2005) ແລະ ໄດ້ຮັບການປັບປຸງ ແລະ ອະນຸມັດໃນຕົ້ນປີ 2016 (ດຳລັດເລກທີ 84, ລົງວັນທີ 5 ພຶດສະພາ 2016), ໃນຂະນະທີ່ ຂໍ້ກຳນົດຕ່າງໆ ກ່ຽວກັບຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA) ແລະ ການປະເມີນເບື້ອງຕົ້ນຕໍ່ຜົນກະທົບສິ່ງແວດລ້ອມ (IEE) ແມ່ນໄດ້ຮັບການປັບປຸງໃນປີ 2013. ໃນປີ 2018, ລັດຖະບານ ສປປ ລາວ ໄດ້ປະກາດນຳໃຊ້ກົດໝາຍສະບັບໃໝ່ ວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ ໂດຍທີ່ຂໍ້ກຳນົດລະອຽດໃນການຈັດຕັ້ງປະຕິບັດ ແມ່ນກຳລັງໄດ້ຮັບການພັດທະນາ. ຄາດວ່າ ອາດຈະມີການປັບປຸງດຳລັດເລກທີ 84 ເລັດໜ້ອຍ ເພື່ອຕອບສະໜອງຕໍ່ກັບຄຳເຫັນຈາກທະນາຄານໂລກ ໂດຍສ່ວນໃຫຍ່ ແມ່ນກ່ຽວກັບຄວາມຈຳເປັນ ໃນການຊີ້ແຈງ ກ່ຽວກັບການຄິດໄລ່ມູນຄ່າຕາມຕະຫຼາດ ແລະ ບົດແນະນຳດ້ານວິຊາການ ສຳລັບການຈັດຕັ້ງປະຕິບັດ ດຳລັດ 84 ຍັງຈະພິຈາລະນາເຖິງກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ. ການອະນຸມັດລັດຖະດຳລັດໃໝ່ກ່ຽວກັບ ການປະເມີນຜົນກະທົບສິ່ງແວດລ້ອມ (EIA) ໃນຕົ້ນປີ 2019, ໄດ້ເປັນພື້ນຖານທາງດ້ານກົດຫມາຍທີ່ເຂັ້ມແຂງໃຫ້ແກ່ໂຄງການພັດທະນາໃນການດຳເນີນການປະເມີນຜົນກະທົບທາງສັງຄົມ ແລະ ວາງແຜນການປະຕິບັດມາດຕະການການຫຼຸດຜ່ອນຕາມຄວາມເໝາະສົມ. ຄຳແນະນຳດ້ານວິຊາການຈຳນວນໜຶ່ງ ລວມທັງ ຄຳແນະນຳກ່ຽວການມີສ່ວນຮ່ວມຂອງປະຊາຊົນ (PI) ໄດ້ຮັບອະນຸມັດໃນປີ 2012 ແລະ ຖືກນຳໃຊ້ແຕ່ເຖິງຢ່າງໃດກໍ່ຕາມ, ມັນກຳລັງມີການພິຈາລະນາວ່າຄຳແນະນຳດັ່ງກ່າວ ຈຳເປັນທີ່ຈະປັບປຸງໃໝ່ຫຼືບໍ່. ດ້ານການຈັດຕັ້ງ, ການສ້າງຕັ້ງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໃນສົກປີ 2011-2012 ແລະ ນະໂຍບາຍລັດຖະບານກ່ຽວກັບການການກະຈາຍອຳນາດລົງສູ່

ທ້ອງຖິ່ນ (ນະໂຍບາຍ ສາມສ້າງ), ຍັງໄດ້ມີການປະຕິຮູບອົງການຈັດຕັ້ງຄືນໃໝ່ ໃນລະຫວ່າງປີ 2016-2017 ເມື່ອ ກົມກອງ ຈໍານວນໜຶ່ງຂອງ ກຊສ ໄດ້ຖືກຍ້າຍໄປສັງກັດນໍາກະຊວງອື່ນໆ ໃນຂະນະທີ່ອົງການຈັດຕັ້ງພາຍໃນ ສຊສ ເອງກໍ່ມີການປັບປ່ຽນເຊັ່ນກັນ. ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໄດ້ຖືກແຍກອອກເປັນສອງກົມຄື: ກົມນະໂຍບາຍຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ກອງຕິດຕາມຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນທ້າຍປີ 2017. ປະຈຸບັນ ກົມນະໂຍບາຍຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີຄວາມຮັບຜິດຊອບ ສໍາລັບຂະແໜງນະໂຍບາຍຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເຊິ່ງລວມທັງ ການທົບທວນ ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ (ບປຜສ) ແລະ ບົດລາຍງານດ້ານສັງຄົມອື່ນໆ, ໃນຂະນະທີ່ກອງຕິດຕາມກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແມ່ນມີຄວາມຮັບຜິດຊອບ ສໍາລັບການກວດກາດ້ານວິຊາການຂອງຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ລວມທັງ ຄວາມສອດຄ່ອງກັບໃບຢັ້ງຢືນສິ່ງແວດລ້ອມຕ່າງໆ. ການປັບປຸງ ກົດຫມາຍ ວ່າດ້ວຍທີ່ດິນ ແມ່ນຢູ່ໃນຂັ້ນຕອນສຸດທ້າຍ ແລະ ຄາດວ່າຈະມີຜົນສັກສິດໃນທ້າຍປີ 2019.

9. ລຸ່ມນີ້ແມ່ນບົດບັນຍັດຈໍານວນໜຶ່ງ ຂອງກົດໝາຍວ່າດ້ວນທີ່ດິນ ແລະ ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ ປະຊາຊົນຈາກໂຄງການພັດທະນາ ເລກທີ່ 84/ນຍ ເຊິ່ງເປັນບ່ອນອີງສໍາຄັນໃນການ ການທົດແທນຄ່າເສຍຫາຍທີ່ດິນ ແລະ ການຍົກຍ້າຍຈັດສັນ

- ລັດຖະທໍາມະນູນ: ມາດຕາ 14 ຂອງລັດຖະທໍາມະນູນກໍານົດວ່າ ລັດປົກປ້ອງ ແລະ ສົ່ງເສີມ ທຸກຮູບແບບກໍາມະສິດລັດ, ລວມໝູ່ ແລະ ບຸກຄົນ. ມາດຕາ 15 ກໍານົດວ່າທີ່ດິນພາຍໃນ ສປປ ລາວ ແມ່ນກໍາມະສິດຂອງວົງຄະນະຍາດແຫ່ງຊາດ ແລະ ລັດຮັບປະກັນສິດຂອງພົນລະເມືອງໃນການນໍາໃຊ້, ໂອນ ແລະ ສິດສືບທອດ ທີ່ດິນຕາມທີ່ກໍານົດໄວ້ໃນກົດໝາຍ. ມາດຕາ 8, ກໍານົດສິດທິຂອງທຸກຊົນເຜົ່າໃນການອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທໍາແລະ ຮີດຄອງປະເພນີອັນດີງາມຂອງຕົນ. ຫ້າມທຸກຮູບການແບ່ງແຍກ ແລະ ໝິ່ນປະໝາດລະຫວ່າງຊົນເຜົ່າ.
- ກົດໝາຍທີ່ດິນ, ຮັບຮອບໂດຍສະພາແຫ່ງຊາດ ໃນປີ 2003, ເປັນນິຕິກໍາພື້ນຖານເຊິ່ງລັດຖືເອົາເປັນບ່ອນອີງໃນການປະຕິບັດຄວາມຮັບຜິດຊອບທາງດ້ານລັດຖະທໍາມະນູນ ຕໍ່ການຄອບຄອງ, ເຂົ້າເຖິງ, ຄຸ້ມຄອງນໍາໃຊ້ ແລະ ອະນຸລັກທີ່ດິນ. ມາດຕາຕ່າງໆທີ່ມີຄວາມສໍາຄັນຕໍ່ການຍົກຍ້າຍຈັດສັນມີດັ່ງລຸ່ມນີ້: ມາດຕາ 3 ກໍານົດໄວ້ຢ່າງໜັກແໜ້ນວ່າທີ່ດິນທັງໝົດພາຍໃນປະເທດເປັນຊັບສົມບັດຂອງວົງຄະນະຍາດແຫ່ງຊາດ (ດັ່ງທີ່ໄດ້ກໍານົດ ໄວ້ໃນລັດຖະທໍາມະນູນ. ມາດຕາ 15) ເຊິ່ງລັດເປັນຕົວແທນບໍລິຫານລວມສູນເປັນເອກະພາບທົ່ວປະເທດ ແລະ ບຸກຄົນແມ່ນອະນຸຍາດໃຫ້ຊົມໃຊ້ທີ່ດິນ (ພຽງທີ່ດິນທີ່ບໍ່ແມ່ນປ່າໄມ້ທີ່ເປັນສິດທິສ່ວນບຸກຄົນ ຫຼື ທີ່ດິນທີ່ໄດ້ສໍາປະທານໄລຍະຍາວເທົ່ານັ້ນທີ່ສາມາດໂອນໄດ້). ມາດຕາ 5 ປົກປ້ອງສິດແລະ ຜົນປະໂຫຍດອັນຊອບດ້ວຍກົດໝາຍຂ້ອງທີມີສິດນໍາໃຊ້ທີ່ດິນລວມທັງສິດໃນການໂອນທີ່ດິນ. ມາດຕາ 11 ແບ່ງທີ່ດິນອອກເປັນ 8 ປະເພດ ແລະ ກົດໝາຍໝວດຕ່າງໆທີ່ຕາມມາແມ່ນເວົ້າເຖິງການຄຸ້ມຄອງທີ່ດິນແຕ່ລະປະເພດ. 8 ປະເພດທີ່ໄດ້ກໍານົດໄວ້ມີ: ທີ່ດິນກະສິກໍາ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນໍ້າ, ທີ່ດິນອຸດສາຫະກໍາ, ທີ່ດິນຄົມມະນາຄົມ, ທີ່ດິນວັດທະນະທໍາ, ທີ່ດິນປ້ອງກັນປະເທດ, ທີ່ດິນປ້ອງກັນຄວາມສະຫງົບ ແລະ ທີ່ດິນກໍ່ສ້າງ. ມາດຕາ43, ກ່າວເຖິງການຮັບຮອງສິດທິໃນການນໍາໃຊ້ທີ່ດິນທີ່ຖືກຕ້ອງຕາມກົດຫມາຍຂອງບຸກຄົນຫຼືນິຕິບຸກຄົນ. ການລົງທະບຽນທີ່ດິນມີສອງວິທີການ (ມາດຕາ44) ໂດຍທີ່ບຸກຄົນສາມາດລົງທະບຽນທີ່ດິນທີ່ເຂົາເຈົ້າກໍາລັງນໍາໃຊ້ໃຫ້ຖືກຕ້ອງຕາມກົດຫມາຍ. ວິທີທີໜຶ່ງແມ່ນການຈົດທະບຽນທີ່ດິນຕາມລະບົບປົກກະຕິ, ຊຶ່ງຈະໄດ້ຮັບການດໍາເນີນການໃນທົ່ວພື້ນທີ່ກໍານົດສະເພາະ ອາດເປັນພື້ນທີ່ທີ່ໄດ້ຮັບການຈັດສັນທີ່ດິນ, ການແບ່ງເຂດ, ຫຼື ມີຄວາມຕ້ອງການຈັດປະເພດ. ການລົງທະບຽນແບບເປັນລະບົບດັ່ງກ່າວຈະອອກໃນຕາດິນຖາວອນໃຫ້ເຈົ້າຂອງທີ່ດິນ. ວິທີການທີສອງ, ບຸກຄົນຫຼືນິຕິບຸກຄົນສາມາດ ຍື່ນໃບຄໍາຮ້ອງສະຫມັກເພື່ອຂໍໃບຢັ້ງຢືນສິດທິໃນການນໍາໃຊ້ທີ່ດິນສະເພາະໃດຫນຶ່ງ. ພາຍໃຕ້

ມາດຕາ48, ໃບຢັ້ງຢືນທີ່ດິນແມ່ນອອກໃຫ້ເພື່ອຮັບຮອງສິດໃນການນຳໃຊ້ຊົ່ວຄາວ ສະເພາະດິນກະສິກຳ ຫຼື ປ່າໄມ້ ຊຶ່ງອອກໃຫ້ໂດຍອຳນາດການປົກຄອງຂັ້ນເມືອງ. ໃບຢັ້ງຢືນທີ່ດິນເຫຼົ່ານີ້ສາມາດໃຊ້ໃນການສືບທອດ, ແຕ່ບໍ່ສາມາດໂອນ ຫຼື ນຳໃຊ້ເປັນຫຼັກຊັບຄ້ຳປະກັນໄດ້.

- ມາດຕາ 53 ລະບຸວ່າບຸກຄົນຜູ້ທີ່ໄດ້ຮັບສິດທິໃນການນຳໃຊ້ທີ່ດິນມີສິດດັ່ງຕໍ່ໄປນີ້: ປົກປັກຮັກສາທີ່ດິນເພື່ອນຳໃຊ້ສະເພາະຈຸດປະສົງໃດໜຶ່ງ, ນຳໃຊ້ທີ່ດິນເພື່ອຈຸດປະສົງສະເພາະໃດໜຶ່ງໂດຍສອດຄ່ອງກັບແຜນການຈັດສັນຂອງລັດ, ໄດ້ສິດຊົມໃຊ້ ແລະ ສິດໄດ້ຮັບໝາກຜົນ, ການໂອນກຳມະສິດໃນການນຳໃຊ້ທີ່ດິນ, ແລະ ການໂອນສິດນຳໃຊ້ທີ່ດິນ. ມາດຕາ 63 ກ່າວວ່າສິດນຳໃຊ້ທີ່ດິນ ຈະສິ້ນສຸດ ຖ້າວ່າມີການເສຍສະຫຼະແບບສະໝັກໃຈຫຼືຖ້າຫາກວ່າລັດທວງທີ່ດິນຄືນເພື່ອຈຸດປະສົງສ່ວນລວມ. ຢ່າງໃດກໍຕາມ, ຜູ້ທີ່ຄອບຄອງທີ່ດິນມີສິດໄດ້ຮັບການທົດແທນຄ່າເສຍຫາຍ ຈາກການເວນຄືນທີ່ດິນຂອງລັດ (ມາດຕາ 70). ການທົດແທນຄ່າເສຍຫາຍໄດ້ກ່າວໄວ້ໃນມາດຕາ 68 ຫາ 72 ຂອງກົດຫມາຍວ່າດ້ວຍທີ່ດິນ. ມາດຕາ 70 ລະບຸວ່າບຸກຄົນ ຫຼື ນິຕິບຸກຄົນຕ້ອງການທາງເອົ້ນ ເຊິ່ງກໍ່ມີຄວາມເສຍຫາຍ ແກ່ພືດ ຫຼື ອາຄານບ້ານເຮືອນ ຕ້ອງທົດແທນຄ່າເສຍຫາຍຢ່າງ ເໝາະສົມ. ມາດຕາ 71 ລະບຸວ່າເມື່ອການນຳໃຊ້ທີ່ດິນຂອງບຸກຄົນຫຼືອົງການຈັດຕັ້ງອື່ນໆຫາກມີຄວາມຈຳເປັນ ເພື່ອຜົນປະໂຫຍດສ່ວນລວມ, ລັດຈະທົດແທນຄ່າເສຍຫາຍທີ່ເກີດຂຶ້ນ ໃຫ້ແກ່ຜູ້ທີ່ຄອບຄອງທີ່ດິນຖືກຕ້ອງຕາມກົດໝາຍ ຕາມຄວາມເໝາະສົມ. ຍິ່ງໄປກວ່ານັ້ນ, ກົດຫມາຍຮຽກຮ້ອງໃຫ້ແຕ່ລະບ້ານ, ເມືອງ, ແຂວງ, ເທດສະບານ, ຫຼື ເຂດພິເສດ ສະຫງວນ ເນື້ອທີ່ດິນ 5 % ຂອງທີ່ດິນທັງໝົດຂອງຕົນເອງ ເພື່ອຮັບປະກັນການທົດແທນທີ່ດິນທີ່ໄດ້ເວນຄືນຈາກປະຊາຊົນ. ການປະເມີນຜົນເສຍຫາຍແມ່ນໄດ້ກຳນົດໄວ້ໃນມາດຕາ 72, ເຊິ່ງລະບຸວ່າຄວາມເສຍຫາຍຕ້ອງໄດ້ຮັບການປະເມີນໂດຍຄະນະກຳມະການທີ່ປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງຕ່າງໆ. ກົດຫມາຍທີ່ດິນບໍ່ໄດ້ກວມເອົາການຄຸ້ມຄອງທີ່ດິນຂອງຜູ້ຊົມໃຊ້ທີ່ດິນທີ່ບໍ່ໄດ້ຈົດທະບຽນ. ຢ່າງໃດກໍຕາມ, ກົດໝາຍທີ່ດິນໄດ້ກ່າວເຖິງການຈົດທະບຽນ ແລະ ການຮັບຮອງສິດດັ່ງທີ່ໄດ້ກ່າວມາຂ້າງເທິງ ເຊິ່ງບຸກຄົນສາມາດລົງທະບຽນທີ່ດິນທີ່ເຂົາເຈົ້ານຳໃຊ້ຖືກຕ້ອງຕາມກົດຫມາຍ. ມາດຕາ 82 ລະບຸຕໍ່ໄປວ່າ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຮັກສາ, ນຳໃຊ້, ແລະ ພັດທະນາທີ່ດິນຢ່າງມີປະສິດທິພາບສູງຈະໄດ້ຮັບການມອບສິດນຳໃຊ້ທີ່ດິນຕອນດັ່ງກ່າວ, ແຕ່ຕ້ອງມີເງື່ອນໄຂຄົບຖ້ວນ.
- ກົດໝາຍວ່າດ້ວຍ ທີ່ດິນ ກຳນົດວ່າ ໃນກໍລະນີທີ່ໂຄງການພັດທະນາໂຄງລ່າງພື້ນຖານ ກໍ່ໃຫ້ເກີດມີຜົນກະທົບຕໍ່ຕົ້ນໄມ້, ຜົນລະປູກ ຫຼື ສິ່ງປຸກສ້າງຕ່າງໆ ຂອງນິຕິບຸກຄົນ, ເຈົ້າຂອງທີ່ດິນ ມີສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ. ຊຸມຊົນທີ່ເປັນຊົນເຜົ່າ ມີສິດຄອບຄອງການນຳໃຊ້ທີ່ດິນ ເທົ່າທຽບກັບປະຊາຊົນລາວ ບັນດາເຜົ່າອື່ນໆ ໂດຍມີການກຳນົດສະເພາະ ແລະ ມັກທີ່ຈະມີສິດນຳໃຊ້ທີ່ດິນແບບປະເພນີ ໃນເຂດປ່າບາງປະເພດ (ກົດໝາຍວ່າດ້ວຍປ່າໄມ້, ມາດຕາ 30; ຂໍ້ກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 535; ຄຳສັ່ງຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 54 ແລະ 377). ສິດນຳໃຊ້ທີ່ດິນແບບປະເພນີ ຂອງບັນດາຊົນເຜົ່າ ແມ່ນໄດ້ຮັບສືບທອດໃນແຕ່ລະຣຸ່ນຄົນ. ໂດຍປະເພນີແລ້ວ, ການນຳໃຊ້ທີ່ດິນປະເພດນີ້ ແມ່ນບໍ່ກ່ຽວຂ້ອງກັບໃບຕາດິນ ແລະ ບໍ່ມີການໝາຍຂອບເຂດຢ່າງເປັນທາງການ. ໃນເຂດຊົນນະບົດ, ສິດນຳໃຊ້ທີ່ດິນແບບປະເພນີດັ່ງກ່າວ ຍັງຖືກປະຕິບັດຢູ່ ໂດຍການຍອມຮັບຈາກອົງການປົກຄອງທ້ອງຖິ່ນ ໂດຍທົ່ວໄປ. ຫຼາຍຊົນເຜົ່າ ຮັບຮູ້ປ່າໄມ້ບາງເຂດທີ່ເປັນບ່ອນສັກສິດ ຕາມປະເພນີ. ນອກຈາກນີ້, ໃນບັນດາຊົນເຜົ່າ, ນິຕິບຸກຄົນ ຫຼື ຄົວເຮືອນ ຍັງຖືກພິຈາລະນາວ່າເປັນເຈົ້າຂອງ ຕົ້ນໄມ້ສະເພາະຈຳນວນໜຶ່ງ ເຊັ່ນ: ໄມ້ທີ່ໃຊ້ເກັບຄັ່ງ/ຢ່ານ ຫຼື ມີຄວາມສຳ

ຄັນທາງດ້ານຈິດວິນຍານຂອງບັນພະບູລຸດຂອງພວກເຂົາ. ສິ່ງດັ່ງກ່າວນີ້ ເປັນບັນຫາສຳຄັນ ຂອງ ວັດທະນະທຳຂອງບ້ານ ແລະ ເສດຖະກິດຂອງທ້ອງຖິ່ນ ທີ່ຕ້ອງໄດ້ສຶກສາລະອຽດ ແລະ ໃຫ້ຄວາມ ເຄົາລົບນັບຖື ຢ່າງເຄັ່ງຄັດ.

- ດຳລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ເລກທີ 84: ດຳລັດສະບັບນີ້ໄດ້ກຳນົດ ຫຼັກການ, ລະບຽບການແລະມາດຕະການເພື່ອຫຼຸດຜ່ອນຜົນກະທົບດ້ານລົບທາງສັງຄົມແລະການຊົດເຊີຍຄວາມ ເສຍຫາຍທີ່ເກີດຈາກ ການເວນຫຼື ການໂອນກຳມະສິດຄຸ້ມຄອງ, ນຳໃຊ້ທີ່ດິນ ແລະ ຊັບສິນຄົງທີ່ຫຼືສາມາດເຄື່ອນ ຍ້າຍ, ລວມທັງການປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນ, ການຈຳກັດຄວາມສາມາດຂອງຊຸມຊົນໃນການເຂົ້າໄປນຳ ໃຊ້ຊັບພະຍາກອນທຳມະຊາດ ເຊິ່ງມີຜົນກະທົບຕໍ່ການດຳລົງຊີວິດ ແລະ ແຫຼ່ງລາຍຮັບຂອງຊຸມຊົນ. ດຳລັດ ສະບັບນີ້ດປະສົງເພື່ອຮັບປະກັນວ່າຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮັບການທົດແທນຄ່າເສຍຫາຍ, ການ ຊ່ວຍເຫຼືອເພື່ອປັບປຸງ ຫຼື ຮັກສາລະດັບລາຍຮັບ ແລະ ມາດຕະຖານການດຳລົງຊີວິດ ໃຫ້ດີກວ່າ ຫຼື ເທົ່າເດີມ ຫຼື ຢ່າງໜ້ອຍບໍ່ໃຫ້ລຸດໄລຍະກ່ອນໂຄງການເຂົ້າ. ບົດບັນຍັດຕ່າງໆຈະໄດ້ຮັບການນຳໃຊ້ເຂົ້າໃນໄລຍະການກະກຽມ ແລະ ການປະຕິບັດການປະເມີນຜົນກະທົບທາງສັງຄົມ (SIA), ການຫຼຸດຜ່ອນຜົນກະທົບທາງສັງຄົມ ແລະ ຕິດຕາມກວດກາແຜນການ, ແລະແຜນປະຕິບັດ ການຍົກຍ້າຍຈັດສັນ (RAP). ຄຳແນະນຳດ້ານວິຊາການ ຂອງດຳລັດດັ່ງກ່າວນີ້ ກຳລັງຖືກກະກຽມ ແລະ ຄາດວ່າຈະຖືກຮັບຮອງ ແລະ ປະກາດໃຊ້ໃນທ້າຍປີ 2019. ໃນ ຂະນະທີ່ກົມນະໂຍບາຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ຮັບຜິດຊອບໃນການກວດກາ ແລະອະນຸມັດການປະເມີນຜົນກະທົບທາງສັງຄົມ SIA ດ້ວຍຜ່ານການເຫັນດີຈາກອຳນາດການປົກຕອງແຂວງ, ແຂວງເອງພາຍໃຕ້ການຊີ້ນຳຂອງຄະນະກຳມະການຍົກຍ້າຍຈັດສັນແຂວງ (PRC) ມີຄວາມຮັບຜິດຊອບໃນການ ຕິດຕາມການຈັດຕັ້ງປະຕິບັດດຳລັດເຊິ່ງເປັນໜ້າທີ່ຂອງເຈົ້າຂອງໂຄງການ. ປະຈຸບັນ ກຳລັງມີການປຶກສາຫາລືວ່າ ດຳລັດສະບັບນີ້ ຈະຖືກປ່ຽນແທນດ້ວຍກົດໝາຍ ວ່າດ້ວການຈັດສັນພູມລຳເນົາ ແລະ ອາຊີບ ສະບັບໃໝ່ຫຼືບໍ່ ເຊິ່ງຫາກໍ່ຖືກປະກາດໃຊ້ໃນເດືອນ ສິງຫາ 2018 ທີ່ຜ່ານມາ ຫຼື ຈະເປັນກົດໝາຍສະບັບໃໝ່, ເຊິ່ງໄດ້ອະທິບາຍຢູ່ ຂ້າງລຸ່ມ.
- ມາດຕາຕ່າງໆທີ່ພົວພັນກັບການຍົກຍ້າຍຈັດສັນຂອງໂຄງການມີດັ່ງນີ້: ມາດຕາ6 - ຫຼັກການພື້ນຖານໃນການທົດ ແທນຄ່າເສຍຫາຍ,ຄະນະກຳມະການຮ່ວມຈະໄດ້ຮັບການສ້າງຕັ້ງຂຶ້ນເພື່ອປະເມີນມູນຄ່າຄວາມເສຍຫາຍ ທີ່ເກີດ ຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ (PAPs). ຜູ້ໄດ້ຮັບຜົນກະທົບຈາກໂຄງການ (PAPs) ມີສິດໄດ້ຮັບການ ທົດແທນຄ່າເສຍຫາຍຕໍ່ສິ່ງປຸກສ້າງໃນມູນຄ່າຂອງການທົດແທນສິ່ງປຸກສ້າງທີ່ສູນເສຍດັ່ງກ່າວ. ການທົດແທນຄ່າ ເສຍຫາຍແມ່ນການຈ່າຍເງິນເພື່ອຊົດເຊີຍການສູນເສຍລາຍໄດ້ອັນເນື່ອງມາຈາກໂຄງການ, ແລະຜູ້ທີ່ບໍ່ມີເອກະ ສານຢັ້ງຢືນກຳມະສິດທີ່ດິນກໍ່ຈະໄດ້ຮັບການທົດແທນຄ່າເສຍຫາຍຕໍ່ສິ່ງປຸກສ້າງແລະຍັງຈະໄດ້ຮັບການສະໜັບສະ ໜູນອື່ນໆເພື່ອບໍ່ໃຫ້ໄດ້ຮັບຜົນກະທົບທາງລົບຈາກໂຄງການ. ມາດຕາ 6 - ວັກທີ 6 ລະບຸວ່າຜູ້ທີ່ໄດ້ຮັບຜົນ ກະທົບທີ່ອາໃສຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກຜູ້ທີ່ບໍ່ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຕາມກົດໝາຍຫຼືເອ ກະສານສະແດງສິດນຳໃຊ້ທີ່ດິນ ຫຼື ຊັບສິນອື່ນໆ ທີ່ເປັນທີ່ຍອມຮັບໃນພື້ນທີ່ທີ່ໄດ້ຮັບຜົນກະທົບຈາກໂຄງການ ກໍ່ຈະໄດ້ຮັບການທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກການສູນເສຍສິດນຳໃຊ້ທີ່ດິນ ແລະ ຊັບສິນດັ່ງກ່າວຂອງ ເຂົາເຈົ້າໃນມູນຄ່າເທົ່າກັບການປ່ຽນແທນທີ່ດິນ ຫຼື ຊັບສິນທີ່ສູນເສຍດັ່ງກ່າວ ແລະ ຈະໄດ້ຮັບການ ຊ່ວຍເຫຼືອອື່ນໆເພື່ອບໍ່ໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າ ລຳບາກວ່າຊ່ວງເວລາກ່ອນໂຄງການເຂົ້າມາ. ສຳລັບຜູ້ໄດ້ ຮັບຜົນກະທົບໃນເຂດຕົວເມືອງ, ຜູ້ທີ່ບໍ່ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຕາມກົດໝາຍ ຫຼື ເອກະສານສະແດງສິດ ນຳໃຊ້ທີ່ດິນ ຫຼື ຊັບສິນອື່ນໆແລະຜູ້ທີ່ບໍ່ມີທີ່ດິນອື່ນເລີຍກໍ່ຈະໄດ້ຮັບການທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກ ການສູນເສຍສິດນຳໃຊ້ທີ່ດິນແລະຊັບສິນດັ່ງກ່າວຂອງເຂົາເຈົ້າໃນມູນຄ່າເທົ່າກັບການປ່ຽນແທນທີ່ດິນ ຫຼື ຊັບສິນ ທີ່ສູນເສຍດັ່ງກ່າວ ແລະ ຈະໄດ້ຮັບການຊ່ວຍເຫຼືອອື່ນໆ ເພື່ອບໍ່ໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າ ລຳບາກກວ່າ

ຊ່ວງເວລາກ່ອນໂຄງການເຂົ້າມາ. ມາດຕາ8 - ສິດທິໄດ້ຮັບຕະການການຟື້ນຟູທາງເສດຖະກິດຖ້າຫາກວ່າໂອກາດໃນການສ້າງລາຍຮັບຫາກສູນເສຍຫຼາຍກ່ວາ20% ຍ້ອນຜົນກະທົບຈາກໂຄງການ. ມາດຕາ 11 - ການບໍລິຈາກທີ່ດິນແລະຊັບສິນອື່ນໆດ້ວຍຄວາມສະໝັກໃຈຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຈະຖືວ່າເປັນທີ່ຍອມຮັບ ຖ້າວ່າຜົນກະທົບຕໍ່ການສ້າງລາຍຮັບຂອງເຂົາເຈົ້າບໍ່ສູງ (ລາຍຮ◌ັບຫຼຸດລົງຕໍ່າກວ່າ20%), ບໍ່ມີການຍົກຍ້າຍທາງດ້ານວັດຖຸເກີດຂຶ້ນ, ແລະຜູ້ໄດ້ຮັບຜົນກະທົບApsເຂົ້າໃຈຢ່າງແຈ່ມແຈ້ງກ່ຽວກັບສິດທິຂອງເຂົາເຈົ້າແຕ່ຍັງເສຍສະລະຊັບສິນດັ່ງກ່າວຢູ່. ມາດຕາ11 - ເຈົ້າຂອງໂຄງການຈະໄດ້ກໍານົດມາດຕະການຫຼຸດຜ່ອນ ແລະ ຜົນປະໂຫຍດທາງເສດຖະກິດເພື່ອປັບປຸງສະຖານະພາບຂອງຊຸມຊົນຊາດຊົນເຜົ່າເຊິ່ງຈະໄດ້ຮັບການພັດທະນາຂຶ້ນມາຜ່ານປຶກສາຫາລືກັບຊຸມຊົນແລະປະສົມປະສານກັບຄ່ານິຍົມທາງວັດທະນະທໍາຂອງເຂົາເຈົ້າ. ມາດຕາ 17 ຂອງດໍາລັດສະບັບນີ້ ໄດ້ຮຽກຮ້ອງໃຫ້ມີພາກສະເພາະຕ່າງຫາກກ່ຽວກັບບັນຫາປະຊາຊົນຊົນເຜົ່າພື້ນເມືອງ ແລະ ມາດຕະການຫຼຸດຜ່ອນຜົນກະທົບຕໍ່ເຂົາເຈົ້າເວລາວາງແຜນປະຕິບັດການຍົກຍ້າຍຈັດສັນ. ຢູ່ບ່ອນທີ່ຜົນກະທົບຕໍ່ປະຊາຊົນຊົນຊາດຊົນເຜົ່າຫາມີຄວາມຮູນແຮງແຜນພັດທະນາປະຊາຊົນ ບັນດາເຜົ່າ (EGDP) ຕ້ອງໄດ້ຮັບການກະກຽມ. ດໍາລັດ ແລະ ຄໍາແນະນໍາຕ່າງໆຂອງມັນແກ້ໄຂຫຼາຍບັນຫາທີ່ກ່ຽວພັນຂອງກົດຫມາຍວ່າດ້ວຍທີ່ດິນທີ່ຈະປ້ອງກັນບໍ່ໃຫ້ຜູ້ຊົມໃຊ້ທີ່ດິນທີ່ບໍ່ເປັນທາງການໄດ້ຮັບສິດທິໃນການໄດ້ຮັບການທົດແທນ, ແລະ ຍັງໄດ້ກໍານົດຄໍານິຍາມທີ່ຈະແຈ້ງກ່ຽວກັບຄໍາວ່າ "ການທົດແທນຄ່າເສຍຫາຍສົມເຫດສົມຜົນ" ທີ່ໄດ້ກ່າວໄວ້ໃນກົດຫມາຍວ່າດ້ວຍທີ່ດິນ ແລະ ກໍານົດຈະແຈ້ງວ່າປະຊາຊົນເຫຼົ່ານີ້ກໍ່ຈະໄດ້ຮັບການທົດແທນ.

- *ກົດໝາຍວ່າດ້ວຍການຈັດສັນພູມລໍາ ແລະ ອາຊີບ (2018)* ຖືກສ້າງຂຶ້ນ ໂດຍອີງໃສ່ ດໍາລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84 (2016). ກົດໝາຍສະບັບນີ້, ເຊິ່ງນໍາໃຊ້ທັງໂຄງການຂອງລັດ ແລະ ພາກເອກະຊົນ, ແນໃສ່ເພື່ອກໍານົດ, ວາງລະບຽບການ, ຄຸ້ມຄອງ ແລະ ຕິດຕາມກວດກາວຽກງານຈັດສັນພູມລໍາເນົາ ແລະ ອາຊີບ ສໍາລັບປະຊາຊົນທຸກຊົນເຜົ່າ ເພື່ອຮັບປະກັນວ່າ ຜູ້ທີ່ອາໃສຢູ່ໃນເຂດທີ່ຖືກຈັດສັນພູມລໍາເນົາ ແລະ ອາຊີບ ໄດ້ມີທີ່ຢູ່ອາໃສທີ່ໝັ້ນຄົງ ແລະ ມີທີ່ດິນເໝາະສົມເພື່ອທໍາການຜະລິດ ແລະ ມີອາຊີບຄົງທີ່ ໂດຍທີ່ເປົ້າໝາຍສູງສຸດ ແມ່ນເພື່ອແກ້ໄຂບັນຫາການເຄື່ອນຍ້າຍແບບບໍ່ຖືກຕ້ອງ, ການລຶບລ້າງຄວາມທຸກຍາກ, ການປັບປຸງຊີວິດການເປັນຢູ່, ຄວາມໝັ້ນຄົງ ແລະ ການຮັກສາຄວາມສະຫງົບທາງດ້ານສັງຄົມ, ສ້າງບ້ານນ້ອຍໃຫ້ກາຍເປັນຕົວເມືອງນ້ອຍໃນເຂດຊົນນະບົດ ເພື່ອເປັນການປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ມາດຕາ 22.1 ຍັງໄດ້ກໍານົດວ່າ ຜູ້ທີ່ໄດ້ຮັບຜົນກະທົບ ຈາກແຜນງານການຈັດສັນພູມລໍາເນົາ ແລະ ອາຊີບ (ພາຍໃຕ້ກົດໝາຍສະບັບນີ້) ຈະໄດ້ຮັບການທົດແທນຄ່າເສຍຫາຍ ສໍາລັບການສູນເສຍທີ່ດິນ ແລະ ຊັບສິນ ໃນມູນຄ່າປ່ຽນແທນ, ຖ້າຫາກວ່າບຸກຄົນດັ່ງກ່າວມີເອກະສານທີ່ດິນຢ່າງເປັນທາງການ (ໃບນໍາໃຊ້ ຫຼື ໃບຕາດິນຖາວອນ). ມາດຕາ 22.4 ຮັບຮູ້ ການນໍາໃຊ້ທີ່ດິນແບບປະເພນີວ່າ ຖ້າຫາກໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ, ຜູ້ທີ່ໄດ້ຮັບຜົນກະທົບ ແມ່ນມີສິດທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ຕາມທີ່ກໍານົດໄວ້ໃນມາດຕາຂ້າງເທິງ. ມາດຕາ 22.5 ອະທິບາຍວ່າ ຖ້າຫາກບຸກຄົນໃດໜຶ່ງໄດ້ຮັບຜົນກະທົບຈາກແຜນງານ ການຈັດສັນພູມລໍາເນົາ ແລະ ອາຊີບ ທີ່ບໍ່ມີເອກະສານທີ່ດິນ ຢ່າງເປັນທາງການ (ໃບນໍາໃຊ້ ຫຼື ໃບຕາດິນຖາວອນ), ບຸກຄົນດັ່ງກ່າວ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ສໍາລັບການສູນເສຍທີ່ດິນ (ທີ່ໄດ້ມາ) ແຕ່ວ່າ ຊັບສິນ (ເຊັ່ນ: ໂຄງສ້າງອາຄານ, ຕົ້ນໄມ້ ແລະ ຜົນລະປູກຕ່າງໆ) ທີ່ຕັ້ງຢູ່ພາຍໃນຕອນດິນດັ່ງກ່າວ. ເນື່ອງຈາກມີຄວາມຄ້າຍຄືກັນ ແລະ ຄວາມສອດຄ່ອງກັນຫຼາຍໆມາດຕາ ຢູ່ໃນເງື່ອນໄຂ, ຈຸດປະສົງ ແລະ ຂອບເຂດນໍາໃຊ້ຂອງກົດໝາຍສະບັບນີ້ ແລະ ດໍາລັດເລກທີ 84, ການປຶກສາຫາລື ແມ່ນກໍາລັງດໍາເນີນ ວ່າໃນຕໍ່ໜ້າ ຈະປັບປຸງ ຫຼື ຍົກເລີກດໍາລັດດັ່ງກ່າວ ໂດຍນາຍົກລັດຖະມົນຕີ ຫຼືບໍ່.
- *ກົດໝາຍວ່າດ້ວຍປ່າໄມ້ລະບຸວ່າ* (i) ປ່າໄມ້ແລະທີ່ດິນປ່າໄມ້ສາມາດປ່ຽນແປງເພື່ອນໍາໃຊ້ຕາມຈຸດປະສົງອື່ນໆ ( ເຊັ່ນ:ສໍາລັບແລວທາງຕັ້ງສາຍສົ່ງໄຟຟ້າ) ໃນເວລາທີ່ມີຄວາມຈໍາເປັນ ແລະ ເພື່ອຜົນປະໂຫຍດສ່ວນລວມ (ຕ້ອງ

ໄດ້ຮັບການອະນຸມັດ) ຈາກອຳນາດການປົກຄອງທີ່ຮັບຜິດຊອບ; (ii) ບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບອະນຸຍາດໃຫ້ປ່ຽນພື້ນທີ່ປ່າເພື່ອນຳໃຊ້ເຂົ້າໃນຈຸດປະສົງອື່ນຮັບຜິດຊອບໃນການຈ່າຍເງິນຄ່າການຜັນແປດັ່ງກ່າວ, ການປູກປ່າທົດແທນ ແລະ ການປູກຕົ້ນໄມ້; (iii) ອອກບົດບັນຍັດໃນການອະນຸຍາດກິດຈະກຳປະຕິບັດມາຍາວນານເຊັ່ນ: ການນຳໃຊ້ໄມ້ເພື່ອເຮັດຮົ້ວ ແລະ ເຮັດຟືນ, ການນຳໃຊ້ຜະລິດຕະພັນທີ່ບໍ່ແມ່ນໄມ້ທ່ອນ (ເຄື່ອງປ່າຂອງດົງ), ການລ່າສັດ ແລະ ການຫາປາຊະນິດທີ່ບໍ່ເກືອດຫ້າມເພື່ອບໍລິໂພກໃນຄົວເຮືອນ ແລະ ການນຳໃຊ້ເຂົ້າໃນການປະຕິບັດຮີດຄອງປະເພນີອື່ນໆ. ສຳລັບການນຳໃຊ້ທີ່ດິນປ່າເພື່ອຈຸດປະສົງອື່ນ, ການທົດແທນຄ່າເສຍຫາຍແມ່ນໃຫ້ອີງໃສ່ບໍລິມາດໄມ້ທ່ອນ (m3) ຕາມແຕ່ລະປະເພດໄມ້ທີ່ຈະຖືກຕັດ. ການທົດແທນຄ່າເສຍຫາຍດ້ວຍການຈ່າຍເງິນຈາກການຕັດໄມ້ທ່ອນຈະເກີດຂຶ້ນຖ້າເປັນການຕັດໄມ້ຢູ່ເຂດພື້ນທີ່ຂອງສ່ວນບຸກຄົນເທົ່ານັ້ນ. ຈະບໍ່ມີການທົດແທນຄ່າເສຍຫາຍສຳລັບການຕັດໄມ້ໃນເຂດພື້ນທີ່ສາທາລະນະ ແລະ ຈະບໍ່ມີການຈ່າຍຄ່າທົດແທນຄວາມເສຍຫາຍຂອງເຄື່ອງປ່າຂອງດົງເຊັ່ນໄມ້ປ່ອງ. ຈະບໍ່ມີຄວາມຕ້ອງການທີ່ຈະປູກຕົ້ນໄມ້ຄືນຢູ່ເຂດພື້ນທີ່ດິນເຊື່ອມຕັ້ງຢູ່ຫ່າງຈາກແລວສາຍສົ່ງໄຟຟ້າ, ຖ້າເປັນການຕັດຕົ້ນຕາມແລວທາງສາຍສົ່ງໄຟຟ້າທາງລັດ. ການທົດແທນໃນລັກສະນະນີ້ມີຜົນສະເພາະໂຄງການອະນາໄມເຂດໜ້າເຄື່ອນເທົ່ານັ້ນເຊິ່ງການປູກຕົ້ນໄມ້ມີຄວາມຈຳເປັນເພື່ອຄວາມໝັ້ນຄົງຂອງຕາຝັ່ງຖ້າບໍ່ດັ່ງນັ້ນກໍ່ຈະເກີດການເຊາະເຈື່ອນຍ້ອນການເໜົ່າຕາຍຂອງຕົ້ນໄມ້ທີ່ມີຢູ່ແລ້ວ.

- *ກົດໝາຍວ່າດ້ວຍທາງຫຼວງ* (2016*)* ລະບຸວ່າກະຊວງໂຍທາທິການ ແລະ ຂົນສົ່ງຄຸ້ມຄອງ ແລະ ການນຳໃຊ້ທີ່ດິນເພື່ອສ້າງເສັ້ນທາງສອດຄ່ອງກັບການກຳນົດຂອງກົດໝາຍວ່າດ້ວຍທີ່ດິນ. ຄວາມກ້ວາງຂອງຖະໜົນປະ ກອບດ້ວຍໜ້າທາງ, ບ່າທາງ, ທາງຍ່າງ, ຮ່ອງລະບາຍນ້ຳ, ເປີ້ນພູຂ້າງທາງ ແລະ ພື້ນທີ່ເຂດສະຫງວນແລວທາງ (ROW) (21,22,23,24). ພາຍໃນພື້ນທີ່ສະຫງວນ, ຫ້າມທຸກການກໍ່ສ້າງ ແລະ ກິດຈະກຳອື່ນໆໃນບໍລິເວນດັ່ງກ່າວ. ໃນກໍລະນີທີ່ຈຳເປັນ, ຕ້ອງໄດ້ຮັບການອະນຸຍາດຈາກອົງການຄຸ້ມຄອງເສັ້ນທາງ (ມາດຕາ21). ກົດໝາຍນີ້ກຳລັງໄດ້ຮັບການປັບປຸງ. ໃນຂອບເຂດແລວທາງ, ຕ້ອງໄດ້ຫ້າມທຸກໆການກໍ່ສ້າງ ແລະ ກິດຈະການອື່ນໆໃນຂອບເຂດນີ້. ມາດຕາ 30, 31 ແລະ 32 (ມາດຕາໃໝ່) ກຳນົດວ່າ ການສຶກສາຄວາມເປັນໄປໄດ້ ຂອງການກໍ່ສ້າງ, ການສ້ອມແປງ ແລະ ການຟື້ນຟູເສັ້ນທາງ ຕ້ອງໄດ້ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ. ການທົດແທນຄ່າເສຍຫາຍ ທີ່ເໝາະສົມ ຕ້ອງຖືກຈ່າຍໃຫ້ແກ່ບຸກຄົນ ເຊິ່ງທີ່ດິນຂອງພວກເຂົາຕ້ອງໄດ້ເອົາໃຫ້ລັດເພື່ອກໍ່ສ້າງເສັ້ນທາງ, ການຫຍັບຍ້າຍ, ການປັບປ່ຽນໂຄງສ້າງ, ແລະ ການສູນເສຍຕົ້ນໄມ້ ແລະ ຜົນລະປູກ (ມາດຕາ 38 ແລະ 39); ແລະ ຍັງກຳນົດວ່າ ມັນເປັນສິ່ງທີ່ຫວງຫ້າມ ໃນການກໍ່ສ້າງໃນເຂດສະຫງວນເສັ້ນທາງ (ມາດຕາ 38).
- ນະໂຍບາຍ ກ່ຽວກັບ ກຸ່ມຊົນເຜົ່າ ປີ 1992, ມະຕິຂອງສູນກາງພັກ ກ່ຽວກັບວຽກງານຊົນເຜົ່າ ໃນໄລຍະໃໝ່ແມ່ນສຸມໃສ່ການປັບປຸງສະພາບຊີວິດການເປັນຢູ່ ຂອງກຸ່ມຊົນເຜົ່າ ໃຫ້ດີຂຶ້ນເທື່ອລະກ້າວ ໄປຄຽງຄູ່ກັບການສົ່ງເສີມເອກະລັກຂອງຊົນເຜົ່າ ແລະ ມໍລະດົກດ້ານວັດທະນະທຳ. ນະໂຍບາຍລວມຂອງພັກ ກ່ຽວກັບ ກຸ່ມຊົນເຜົ່າ ປະກອບມີ: ສ້າງແນວຄວາມຄິດຮັກຫອມປະເທດຊາດ (ເອກະລັກຊາດ); ຮັບຮູ້ຄວາມສະເໝີພາບລະຫວ່າງກຸ່ມຊົນເຜົ່າ; ເພີ່ມທະວີຄວາມສາມັກຄີ ລະຫວ່າງຊົນເຜົ່າ ຖືເປັນສະມາຊິກວົງຄະນາຍາດແຫ່ງຊາດລາວ; ແກ້ໄຂບັນຫາແນວຄວາມຄິດທີ່ບໍ່ຖືກກຕ້ອງ ແລະ ເປັນອັກຄະຕິ ລວມທັງຄວາມບໍ່ສະເໝີພາບທາງດ້ານເສດຖະກິດ ແລະ ວັດທະນະທຳ; ປັບປຸງສະພາບຊວິດການເປັນຢູ່ ຂອງກຸ່ມຊົນເຜົ່າ ເທື່ອລະກ້າວ; ເສີມຂະຫຍາຍ ມໍລະດົກອັນດີ ແລະ ສວຍງາມ, ເອກະລັກຊົນເຜົ່າ ຂອງແຕ່ລະກຸ່ມຊົນເຜົ່າ ອອກສູ່ວົງກວ້າງ ເທົ່າທີ່ມີຄວາມເປັນໄປໄດ້ ລວມທັງຄວາມອາດສາມາດ ຂອງພວກເຂົາ ໃນການເຂົ້າຮ່ວມວຽກງານຂອງຊາດ. ໂຄງການອາດພົວພັນເຖິງການເວນຄືນທີ່ດິນບໍ່ຫຼວງຫລາຍ ຫຼື ຊົ່ວຄາວ ເພື່ອຮັບໃຊ້ແກ່ວຽກງານບູລະນະຮັກສາຂົວທາງ ຢູ່ໃນບາງເຂດທີ່ມີກຸ່ມຊົນເຜົ່າ ຫຼື ຊຸມຊົນ ອາໃສຢູ່. ຄາດຄະເນວ່າ ບໍ່ມີການສູນເສຍທີ່ດິນ ຢ່າງຫຼວງຫລາຍ ເນື່ອງຈາກວ່າ ການດຳເນີນວຽກງານ ແມ່ນຢູ່ພາຍໃນແລວເສັ້ນທາງເດີມ ແລະ ອາດພົວພັນເຖິງ ການປັບຄືນແລວທາງໂດຍບໍ່ໄດ້ມີການຂະຫຍາຍເສັ້ນທາງ ເຊິ່ງອາດສົ່ງຜົນກະທົບຕໍ່ຕົ້ນໄມ້ ແລະ ຊັບສິນອື່ນໆຂອງສ່ວນບຸກຄົນ ທີ່ຢູ່

ລຽບຕາມເສັ້ນທາງ. ແຕ່ວ່າ, ກອບນະໂຍບາຍກ່ຽວກັບຊົນເຜົ່າ ໄດ້ອອກແບບມາ ແລະ ນໍາໃຊ້ ສະເພາະພາຍໃຕ້ ໂຄງການຂະແໜງຂົວທາງ ໄລຍະ 2 (LRSP2) ເພື່ອຮັບປະກັນວ່າ ກຸ່ມຊົນເຜົ່າ ບໍ່ໄດ້ຮັບຜົນກະທົບດ້ານລົບ ແລະ ຊີວິດການເປັນຢູ່ຂອງພວກເຂົາ ບໍ່ໃຫ້ຫລຸດລົງກວ່າເກົ່າ ຍ້ອນການຈັດຕັ້ງປະຕິບັດໂຄງການ.

## 3.2 ນະໂຍບາຍຂອງທະນາຄານໂລກກ່ຽວກັບການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ (OP/BP 4.12)

10. ນະໂຍບາຍOP/BP 4.12 ຈະຖືກນໍາມາປະຕິບັດໃນໂຄງການນີ້. ມັນຮຽກຮ້ອງໃຫ້ການລົງທຶນແລະກິດຈະກໍາທັງໝົດທີ່ລົງທຶນພາຍໃຕ້ໂຄງການດັ່ງກ່າວປະຕິບັດຕາມນະໂຍບາຍ OP/BP 4.12ບໍ່ວ່າຈະເປັນການລົງທຶນໂດຍກົງທັງຫມົດຫຼືບາງສ່ວນໂດຍກອງທຶນທະນາຄານໂລກ. ນະໂຍບາຍ OP/BP 4.12 ໃຫ້ຄໍາແນະນໍາທີ່ສໍາຄັນກ່ຽວກັບວັດຖຸປະສົງ ແລະ ຫຼັກການພື້ນຖານທີ່ສາມາດນໍາໃຊ້ໃນໂຄງການເວລາມີຜົນກະທົບຈາກການເວນຄືນທີ່ດິນ, ການຍົກຍ້າຍຈັດສັນ ວັດຖຸປະສົງແລະ ຄໍານິຍາມມີດັ່ງຕໍ່ໄປນີ້:

- ໂຄງການຕ້ອງພະຍາຍາມທຸກຄວາມສາມາດທີ່ສົມເຫດສົມຜົນໃນການຫຼີກເວັ້ນ ຫຼື ຫຼຸດຜ່ອນຄວາມຕ້ອງການໃນການເວນຄືນທີ່ດິນ ແລະ ຫຼຸດຜ່ອນຄວາມຈໍາເປັນທີ່ຕ້ອງມີການຍົກຍ້າຍຈັດສັນ. ຖ້າຫາກວ່າການເວນຄືນທີ່ດິນ ແລະ ຜົນກະທົບດ້ານລົບທີ່ຕາມມາ ຫາກບໍ່ສາມາດຫຼີກເວັ້ນໄດ້, ຈຸດປະສົງຫຼັກຂອງຂອບນະໂຍບາຍການຍົກຍ້າຍຈັດສັນ RPF ແມ່ນເພື່ອຮັບປະກັນວ່າທຸກຄົນທີ່ໄດ້ຮັບຜົນກະທົບ "ຜູ້ຖືກຍົກຍ້າຍ" ໄດ້ຮັບການຕອບແທນຕາມ "ມູນຄ່າທົດແທນ" ຂອງທີ່ດິນທີ່ສູນເສຍໄປ ແລະ ຊັບສິນອື່ນໆທີ່ສູນເສຍໄປ. ຖ້າບໍດັ່ງນັ້ນຕ້ອງໄດ້ສະໜອງມາດຕະການຟື້ນຟູ ຫຼື ຮູບແບບການຊ່ວຍເຫຼືອອື່ນໆ ເພື່ອຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບເພື່ອໃຫ້ພວກເຂົາມີໂອກາດທີ່ຈະປັບປຸງ, ຫຼື ຢ່າງໜ້ອຍຟື້ນຟູ, ລາຍໄດ້ ແລະ ມາດຕະຖານການດໍາລົງຊີວິດຂອງເຂົາເຈົ້າ.
- ຄໍານິຍາມກ່ຽວກັບ ຜູ້ຖືກຍົກຍ້າຍ, ມູນຄ່າທົດແທນ, ການເວນຄືນທີ່ດິນ, ການຟື້ນຟູ, ແລະ ມື້ເລີ້ມຕົ້ນໂຄງການທີ່ລະບຸໄວ້ໃນບົດລາຍງານນີ້ຈະໄດ້ຮັບການນໍາໃຊ້.

11. ນະໂຍບາຍຂອງທະນາຄານໂລກກ່ຽວກັບການປຶກສາຫາລືປະຊາຊົນ ແລະ ເຜີຍແຜ່ຂໍ້ມູນ (OP/BP 17.50), ເຊິ່ງໄດ້ກໍານົດຄວາມຕ້ອງການຂອງທະນາຄານໃນການ ສະໜອງຂໍ້ມູນຂ່າວສານ ແລະ ເອກະສານ ຂອງໂຄງການໃຫ້ສະຫາລະນະໄດ້ເຂົ້າເຖິງຈະໄດ້ຮັບການນໍາໃຊ້.

### 3.2.1 ຄວາມແຕກຕ່າງລະຫວ່າງກົດໝາຍ ສປປ ລາວ ແລະ ນະໂຍບາຍຂອງທະນາຄານໂລກ

12. ການປະກາດໃຊ້ ດໍາລັດວ່າດ້ວຍ ຂອງລັດຖະບານ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ເລກທີ 84/ນຍ ສະແດງໃຫ້ເຫັນເຖິງການປັບປຸງອັນສໍາຄັນກ່ຽວກັບ ສິດທິຂອງພົນລະເມືອງໃນເວລາທີ່ການດໍາລົງຊີວິດຂອງເຂົາເຈົ້າ, ຊັບສິນບັດໃນຄອບຄອງ ແລະ ສັງຄົມ ໄດ້ຮັບຜົນກະທົບຈາກໂຄງການພັດທະນາ. ທັງດໍາລັດກ່ຽວກັບການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນແລະນະໂຍບາຍຂອງທະນາຄານໂລກກ່ຽວກັບການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ ຢັ້ງຢືນສິດທິຂອງຜູ້ໄດ້ຮັບຜົນກະທົບ (ຄົນທີ່ໄດ້ຮັບຜົນກະທົບ) ໃນການໄດ້ຮັບການທົດແທນຄ່າເສຍຫາຍ ທີ່ເປັນທີ່ດິນ ແລະບ ຊັບສິນທີ່ບໍ່ແມ່ນທີ່ດິນໃນມູນຄ່າທົດແທນຄືນດິນ ຫຼື ຊັບສິນທີ່ເສຍໄປ. ຢ່າງໃດກໍຕາມ, ຍັງມີຄວາມແຕກຕ່າງລະຫວ່າງນະໂຍບາຍຂອງທະນາຄານໂລກ (OP/BP 4.12) ແລະ ດໍາລັດ 84/ນຍ (ເບິ່ງຕາຕະລາງຂ້າງລຸ່ມນີ້). ຄວາມແຕກຕ່າງອັນທໍາອິດແມ່ນກ່ຽວກັບຄໍານິຍາມຂອງຜູ້ທີ່ໄດ້ຮັບຜົນກະທົບຮ້າຍແຮງ PAPs ເຊິ່ງ ນະໂຍບາຍທະນາຄານໂລກ OP/BP 4.12 ກໍານົດຢູ່ໃນລະດັບ10% ຂອງມູນຄ່າທີ່ໄດ້ຮັບຄວາມເສຍຫາຍ ໃນຂະນະທີ່ດໍາລັດ 84/ ນຍໄດ້ກໍານົດຢູ່ໃນລະດັບ20% ຂອງມູນຄ່າທີ່ໄດ້ຮັບຄວາມເສຍຫາຍ. ຄວາມແຕກຕ່າງອັນທີສອງແມ່ນກ່ຽວກັບສິດໄດ້ຮັບການທົດແທນສໍາລັບຜູ້ທີ່ໄດ້ຮັບຜົນກະທົບທີ່ບໍ່ມີເອກະສານ

13. ເຊິ່ງດໍາລັດ 84/ ນຍ ໄດ້ອະທິບາຍລະອຽດກ່ວາ. ຄວາມແຕກຕ່າງອື່ນໆໄດ້ແກ່ດໍາລັດ 84/ນຍ ໄດ້ສົ່ງເສີມຜູ້ໄດ້ຮັບຜົນກະທົບໃຫ້ມີການບໍລິຈາກທີ່ດິນ ໃນຂະນະທີ່ນະໂຍບາຍ ທະນາຄານໂລກ OP/BP 4.12 ບໍ່ສົ່ງເສີມການບໍລິຈາກທີ່ດິນ ໃນຂະນະທີ່ການກະກຽມແຜນການຍົກຍ້າຍຈັດສັນມີຊື່ເອີ້ນທີ່ແຕກຕ່າງກັນ ເວລາມີການເວນຄືນທີ່ຈໍານວນໜ້ອຍທີ່ຕ້ອງດໍາເນີນການ.

ຕາຕະລາງ 3.1: ຄວາມແຕກຕ່າງລະຫວ່າງນະໂຍບາຍການປົກປ້ອງສັງຄົມຂອງ ສປປ ລາວ ແລະ ທະນາຄານໂລກ

| *ຫົວຂໍ້* | OP 4.12 | *ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84/ລບ (2016)* | ຊ່ອງວ່າງ/ມາດຕະການຂອງໂຄງການ |
|---|---|---|---|
| 1. ຊັບສິນທາງທີ່ດິນ | | | |
| *1.1. ຈຸດປະສົງຂອງນະໂຍບາຍ* | *PAPs (ຜູ້ທີ່ໄດ້ຮັບຜົນກະທົບ) ຄວນໄດ້ຮັບການຊ່ວຍເຫຼືອ ໃນຄວາມພະຍາຍາມຂອງພວກເຂົາ ເພື່ອປັບປຸງຊີວິດການເປັນຢູ່ ແລະ ມາດຕະຖານ ການດໍາລົງຊີວິດຂອງພວກເຂົາ ຫຼື ຢ່າງໜ້ອຍ ແມ່ນໃຫ້ຟື້ນຟູພວກເຂົາໃຫ້ກັບຄືນສູ່ສະພາບກ່ອນການປ່ຽນແທນ ຫຼື ລະດັບທີ່ດີກວ່າ ກ່ອນເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ, ອັນໃດກໍ່ໄດ້ ທີ່ສູງກວ່າ.* | PAP *ໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອ ເພື່ອປັບປຸງ ຫຼື ຮັກສາລາຍຮັບ ແລະ ມາດຕະຖານການດໍາລົງຊີວິດຂອງພວກເຂົາ ກ່ອນມີໂຄງການ, ແລະ ບໍ່ອັບປະໂຫຍດ ກ່ອນເກົ່າ ຕອນທີ່ຍັງບໍ່ມີໂຄງການ.* | OP 4.12 ຂັ້ນຕອນຂອງນະໂຍບາຍ ຈະຖືກນໍາໃຊ້ - ການທົດແທນຄ່າເສຍຫາຍດ້ວຍເງິນສົດ ດ້ວຍມູນຄ່າປ່ຽນແທນ ສໍາລັບທີ່ດິນ ແລະ ໂຄງສ້າງຕ່າງໆ ຈະຖືກເບີກຈ່າຍໃຫ້ ໂດຍບໍ່ມີການຫັກຄ່າສິ້ນເປືອງໃດໆ ສໍາລັບການຫຼຸດລົງຂອງຄ່າເງິນ ຫຼື ວັດຖຸທີ່ສາມາດນໍາໃຊ້ຄືນໄດ້. ນອກຈາກນີ້, ຍັງຈະມີການເບີກຈ່າຍເງິນລາຍຮັບເພີ່ມຕື່ມ ເພື່ອຟື້ນຟູລາຍຮັບ, ຜົນລະປູກ, ຕົ້ນໄມ້ ພ້ອມທັງຄ່າໃຊ້ຈ່າຍ ໃນການຍົກຍ້າຍຕ່າງໆ. |
| *1.2. ໃຫ້ການສະໜັບສະໜູນແກ່ຄົວເຮືອນທີ່ໄດ້ຮັບຜົນກະທົບ ເຊິ່ງເປັນຜູ້ທີ່ບໍ່ມີສິດທີ່ຖືກຮັບຮູ້ທາງດ້ານກົດໝາຍ ຫຼື ການອ້າງສິດ ຕໍ່ທີ່ດິນ ທີ່ພວກເຂົາກໍາລັງຄອບຄອງຢູ່* | *ການຊ່ວຍເຫຼືອທາງດ້ານການເງິນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການທຸກໆຄົນ ເພື່ອບັນລຸຕາມຈຸດປະສົງຂອງນະໂຍບາຍ (ເພື່ອປັບປຸງຊີວິດການເປັນຢູ່ ແລະ ມາດຕະຖານການດໍາລົງຊີວິດຂອງພວກເຂົາ ຫຼື ຢ່າງໜ້ອຍ ແມ່ນໃຫ້ຟື້ນຟູພວກເຂົາໃຫ້ກັບຄືນສູ່ສະພາບກ່ອນການປ່ຽນແທນ ຫຼື ລະດັບທີ່ດີກວ່າ ກ່ອນເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ, ອັນໃດກໍ່ໄດ້ທີ່ສູງກວ່າ).* | ຜູ້ໄດ້ຮັບຜົນກະທົບ ທີ່ບໍ່ມີໃບຕາດິນ ທີ່ຖືກຕ້ອງຕາມກົດໝາຍ, ໃບນໍາໃຊ້ທີ່ດິນ ຫຼື ເອກະສານອື່ນໆ ທີ່ຍອມຮັບໄດ້ ແລະ ໄດ້ຊີ້ແຈງເຖິງສິດນໍາໃຊ້ທີ່ດິນຂອງພວກເຂົາ, ລວມທັງ ສິດນໍາໃຊ້ທີ່ດິນແບບປະເພນີ ແລະ ແບບດັ້ງເດີມ, ຈະໄດ້ຮັບສິດ ເພື່ອຂໍເອົາການທົດແທນຄ່າເສຍຫາຍ ສໍາລັບການສູນເສຍຊັບສິນຂອງພວກເຂົາ ເຊັ່ນ: ເຮືອນ / ໂຄງສ້າງຕ່າງໆ, ຕົ້ນໄມ້ ແລະ / ຫຼື ຜົນລະປູກ, ແຕ່ບໍ່ແມ່ນສໍາລັບທີ່ດິນ. | ໄດ້ຮັບຜົນກະທົບ ທີ່ບໍ່ມີໃບຕາດິນ ທີ່ຖືກຕ້ອງຕາມກົດໝາຍ, ໃບນໍາໃຊ້ທີ່ດິນ ຫຼື ເອກະສານອື່ນໆ ທີ່ຍອມຮັບໄດ້ ແລະ ໄດ້ຊີ້ແຈງເຖິງສິດນໍາໃຊ້ທີ່ດິນຂອງພວກເຂົາ ຍັງຈະມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ເພື່ອບັນລຸຈຸດປະສົງຂອງນະໂຍບາຍ ການຈັດສັນຍົກຍາ້ຍແບບບໍ່ສະໝັກໃຈ (ເພື່ອປັບປຸງ ຊີວິດການເປັນຢູ່ ແລະ ມາດຕະຖານການດໍາລົງຊີວິດຂອງພວກເຂົາ ຫຼື ຢ່າງໜ້ອຍ ເພື່ອຟື້ນຟູພວກເຂົາ, ໃນສະພາບຕົວຈິງ, ໃຫ້ຢູ່ໃນລະດັບກ່ອນມີການສັບປ່ຽນ ຫຼື ລະດັບທົ່ວໄປ ກ່ອນເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ, ແມ່ນຫຍັງກໍ່ໄດ້ ທີ່ສູງກວ່າ).<br><br>ຜູ້ໄດ້ຮັບຜົນກະທົບ ທີ່ເປັນກຸ່ມຄົນດ້ອຍໂອກາດ ຈະໄດ້ຮັບການຊ່ວຍເຫຼືອພິເສດ.<br><br>ຂັ້ນຕອນຂອງນະໂຍບາຍ OP 4.12 |

| *ຫົວຂໍ້* | OP 4.12 | *ດໍາລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84/ລບ (2016)* | ຊ່ອງວ່າງ/ມາດຕະການຂອງໂຄງການ |
|---|---|---|---|
| | | | ຈະຖືກນໍາໃຊ້. |
| *1.3. ການທົດແທນຄ່າເສຍຫາຍ ສໍາລັບໂຄງສ້າງ ທີ່ບໍ່ຖືກຕ້ອງຕາມກົດໝາຍ* | *ການທົດແທນຄ່າເສຍຫາຍດ້ວຍມູນຄ່າທັງໝົດ ສໍາລັບໂຄງສ້າງຕ່າງໆ ໂດຍບໍ່ຄໍານຶງເຖິງ ສະຖານະພາບ ທາງດ້ານກົດໝາຍ ຂອງທີ່ດິນ ແລະ ໂຄງສ້າງ ຂອງຜູ້ທີ່ໄດ້ຮັບຜົນກະທົບ.* | ຜູ້ໄດ້ຮັບຜົນກະທົບ ທີ່ບໍ່ມີໃບຕາດິນ ທີ່ຖືກຕ້ອງຕາມກົດໝາຍ, ໃບນໍາໃຊ້ທີ່ດິນ ຫຼື ເອກະສານອື່ນໆ ທີ່ຍອມຮັບໄດ້ ແລະ ໄດ້ຊີ້ແຈງເຖິງສິດນໍາໃຊ້ທີ່ດິນຂອງພວກເຂົາ, ລວມທັງ ສິດນໍາໃຊ້ທີ່ດິນແບບປະເພນີ ແລະ ແບບດັ້ງເດີມ, ຈະໄດ້ຮັບສິດ ເພື່ອຂໍເອົາການທົດແທນຄ່າເສຍຫາຍ ສໍາລັບການສູນເສຍຊັບສິນຂອງພວກເຂົາ ເຊັ່ນ: ເຮືອນ / ໂຄງສ້າງຕ່າງໆ, ຕົ້ນໄມ້ ແລະ / ຫຼື ພືນລະປູກ, ແຕ່ບໍ່ແມ່ນສໍາລັບທີ່ດິນ. | ການທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນທັງໝົດ ຈະໄດ້ມອບໃຫ້ ສໍາລັບໂຄງສ້າງທຸກຢ່າງ ທີ່ໄດ້ຮັບຜົນກະທົບ ໂດຍບໍ່ຄໍານຶງເຖິງ ສະຖານະພາບທາງດ້ານກົດໝາຍ ຂອງທີ່ດິນ ແລະ ໂຄງສ້າງດັ່ງກ່າວ.<br><br>ຕອບສະໜອງຄ່າໃຊ້ຈ່າຍໃນການຍົກຍ້າຍ ອີງຕາມປະເພດຂອງໂຄງສ້າງ.<br><br>ຂັ້ນຕອນຂອງນະໂຍບາຍ OP 4.12 ຈະຖືກນໍາໃຊ້. |
| ***2. ການທົດແທນຄ່າເສຍຫາຍ*** | | | |
| *2.1. ວິທີການ ກໍານົດ ອັດຕາທົດແທນຄ່າເສຍຫາຍ* | *ການທົດແທນຄ່າເສຍຫາຍ ສໍາລັບການສູນເສຍທີ່ດິນ ແລະ ຊັບສິນອື່ນໆ ຄວນຈະຈ່າຍໃຫ້ທັງໝົດ ດ້ວຍມູນຄ່າປ່ຽນແທນ.* | ມາດຕາ 2:<br>▪ ການທົດແທນຄ່າເສຍຫາຍ ຕ້ອງເປັນໃນຮູບແບບຂອງທີ່ດິນ, ວັດຖຸ ຫຼື ເງິນສົດ ສໍາລັບທີ່ດິນ, ຜົນຜະລິດດ້ານກະສິກໍາ, ສັດລ້ຽງ ແລະ ລາຍຮັບ ທີ່ຖືກກະທົບໂດຍໂຄງການພັດທະນາ ອີງໃສ່ ມູນຄ່າທົດແທນ.<br>ມາດຕາ 4<br>6. ມູນຄ່າທົດແທນຄ່າເສຍຫາຍ ໝາຍເຖິງ ມູນຄ່າທີ່ຖືກຄິດໄລ່ໃນຮູບແບບວັດຖຸ, ເງິນສົດ ຫຼື ທີ່ດິນ, ສິ່ງອໍານວຍຄວາມສະດວກທາງດ້ານໂຄງສ້າງ, ຜະລິດຕະພັນກະສິກໍາ, ສັດລ້ຽງ, ລາຍຮັບ ທີ່ຖືກກະທົບ ຈາກໂຄງການພັດທະນາຕ່າງໆ.<br>ມາດຕາ 9<br>▪ ເຈົ້າຂອງໂຄງການຕ້ອງໄດ້ປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈໍາທ້ອງຖິ່ນທີ່ກ່ຽວຂ້ອງ, ເຊິ່ງຕ້ອງໄດ້ປະເມີນມູນຄ່າທົດແທນສໍາລັບທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ແລະ ຈັດກອງປະຊຸມປຶກສາຫາລືກັບປະຊາຊົນທີ່ໄດ້ຮັບຜົນກະທົບ ໂດຍ | ຜູ້ປະເມີນອິດສະຫຼະ ຈະດໍາເນີນການສຶກສາມູນຄ່າປ່ຽນແທນ ສໍາລັບທຸກໆປະເພດຊັບສິນ ທີ່ຖືກກະທົບ ເພື່ອສ້າງແຜນທົດແທນຄ່າເສຍຫາຍ ທີ່ໄດ້ຖືກປະເມີນໄວ້ ໂດຍ IRC/GDR ເພື່ອຮັບປະກັນໃຫ້ມີມູນຄ່າປ່ຽນແທນທັງໝົດ.<br><br>ຂັ້ນຕອນຂອງນະໂຍບາຍ OP 4.12 ຈະຖືກນໍາໃຊ້. |

| *ຫົວຂໍ້* | OP 4.12 | *ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84/ລບ (2016)* | ຊ່ອງວ່າງ/ມາດຕະການຂອງໂຄງການ |
|---|---|---|---|
| | | ການຄັດເລືອກເອົາວິທີການທີ່ຖືກຕ້ອງ ແລະ ເໝາະສົມ ໂດຍອີງໃສ່ລາຄາ ທີ່ນຳໃຊ້ໂດຍພາກລັດ, ລາຄາຕະຫຼາດ ຫຼື ລາຄາສະເລ່ຍ ທີ່ນຳໃຊ້ສຳລັບ ໄລຍະທີ່ມີການທົດແທນຄ່າເສຍຫາຍ ແລະ ອີງໃສ່ປະເພດຂອງຊັບສິນ ແລະ ທີ່ຕັ້ງ.<br>▪ ລາຄາທີ່ນຳໃຊ້ໂດຍລັດຖະບານ (ລາຄາກາງ) ແມ່ນລາຄາທີ່ກຳນົດ ສະເພາະ ໃນຂໍ້ກຳນົດຕ່າງຫາກ ເຊິ່ງ ຈະຖືກລະບຸ ແລະ ອອກໂດຍກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ | |
| *2.2. ການທົດແທນຄ່າເສຍຫາຍສຳລັບການສູນເສຍແຫຼ່ງລາຍຮັບ ຫຼື ວິທີການດຳລົງຊີວິດ* | *ການສູນເສຍແຫຼ່ງລາຍຮັບ ຄວນຖືກຊົດເຊີຍ (ບໍ່ວ່າຜູ້ໄດ້ຮັບຜົນກະທົບ ຕ້ອງໄດ້ຍົກຍ້າຍໄປຢູ່ບ່ອນອື່ນ ຫຼື ບໍ່ ກໍ່ຕາມ)* | ມາດຕາ 9<br>▪ ການຕອບສະໜອງທີ່ດິນກະສິກຳ ໃນຮູບແບບທີ່ເໝາະສົມ ເຊິ່ງລວມທັງ ການສ້າງວິທີການດຳລົງຊີວິດໃໝ່ ແລະ ການສົ່ງເສີມກິດຈະກຳການສ້າງລາຍຮັບຕົ້ນຕໍ ໂດຍອີງໃສ່ທັດສະ / ອຸດສາຫະກຳຂອງທ້ອງຖິ່ນ ນອກຈາກການຜະລິດກະສິກຳ ໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ. | ຂັ້ນຕອນຂອງນະໂຍບາຍ OP 4.12 ຈະຖືກນຳໃຊ້ – ການສູນເສຍລາຍຮັບຈະໄດ້ຮັບການຟື້ນຟູຄືນ ໃນອັດຕາກ່ອນຈະມີການປ່ຽນແທນ ໂດຍບໍ່ຄຳນຶງເຖິງສະຖານະພາບທາງດ້ານກົດໝາຍຂອງຜູ້ທີ່ໄດ້ຮັບຜົນກະທົບ. |
| *2.3. ການຟື້ນຟູ ແລະ ການຊ່ວຍເຫຼືອ ຊີວິດການເປັນຢູ່* | *ການຕອບສະໜອງ ການຟື້ນຟູ ແລະ ການຊ່ວຍເຫຼືອ ຊີວິດການເປັນຢູ່ ເພື່ອໃຫ້ບັນລຸຈຸດປະສົງຂອງນະໂຍບາຍ.* | ມາດຕາ 13:<br>▪ ຄຽງຄູ່ກັບການສ້າງແຜນຈັດສັນຍົກຍ້າຍ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 10 ຂອງດຳລັດ, ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍຢູ່ຂັ້ນທ້ອງຖິ່ນ ເພື່ອເກັບກຳຂໍ້ມູນກ່ຽວກັບຊີວິດການເປັນຢູ່ ແລະ ການສ້າງລາຍຮັບ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ເປັນລາຍລະອຽດ ເພື່ອສ້າງແຜນຟື້ນຟູຊີວິດການເປັນຢູ່ ເພື່ອປະກອບສ່ວນຕໍ່ການຄຸ້ມຄອງ ແລະ ການຕິດຕາມກວດກາຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ໃນຂອບເຂດພັດທະນາໂຄງການ. | ເນື່ອງຈາກວ່າ ຜົນກະທົບ ແມ່ນຄາດວ່າຈະມີໜ້ອຍ, ການຟື້ນຟູລາຍຮັບ ຈະຖືກແກ້ໄຂ ໂດຍອີງຕາມແຕ່ລະກໍລະນີ, ໂດຍທີ່ກຳລັງມີການເບີກຈ່າຍເງິນເພີ່ມຕື່ມ ເພື່ອຟື້ນຟູຊີວິດການເປັນຢູ່ ໃນອັດຕາ ກ່ອນການປ່ຽນແທນ. |
| *2.4. ການປຶກສາຫາລື ແລະ ການ* | *ການເຂົ້າຮ່ວມໃນການວາງແຜນ ແລະ ການຈັດຕັ້ງປະຕິບັດ,* | ມາດຕາ 5:<br>ການທົດແທນຄ່າເສຍຫາຍ ແລະ ການຈັດ | ມີການປຶກສາຫາລື ແລະ ການເຂົ້າຮ່ວມຢ່າງຫຼວງຫຼາຍ ໃນແຕ່ລະຂັ້ນຂອງການ |

| *ຫົວຂໍ້* | OP 4.12 | *ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84/ລບ (2016)* | ຊ່ອງວ່າງ/ມາດຕະການຂອງໂຄງການ |
|---|---|---|---|
| *ເປີດເຜີຍຂໍ້ມູນ* | *ການຍັ້ງຢືນທາງດ້ານສັງຄົມຕໍ່ເງື່ອນໄຂການມີສິດໄດ້ຮັບການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫຼືອ, ແລະ ເຂົ້າເຖິງກົນໄກ ການແກ້ໄຂຄຳຮ້ອງທຸກ.* | ສັນຍົກຍ້າຍ ຕ້ອງຖືກດຳເນີນ ໃຫ້ສອດຄ່ອງກັບຫຼັກການດັ່ງນີ້:<br>1. ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບ;<br>2. ຮັບປະກັນຄວາມເທົ່າທຽມ, ຄວາມຖືກຕ້ອງ, ຄວາມໂປ່ງໃສ, ການເປີດເຜີຍ ແລະ ຄວາມເປັນທຳ;<br>3. ຮັບປະກັນໃຫ້ມີການປະສານງານ, ການປຶກສາຫາລື ແລະ ການເຂົ້າຮ່ວມລະຫວ່າງເຈົ້າຂອງໂຄງການ, ປະຊາຊົນທີ່ໄດ້ຮັບຜົນກະທົບ, ໜ່ວຍງານລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ. | ວາງແຜນ ແລະ ການຈັດຕັ້ງປະຕິບັດ RAP.<br><br>ຂັ້ນຕອນຂອງນະໂຍບາຍ OP 4.12 ຈະຖືກນຳໃຊ້. |
| ***3. ກົນໄກ ການແກ້ໄຂຄຳຮ້ອງທຸກ*** | | | |
| *ຂັ້ນຕອນ ເພື່ອບັນທຶກ ແລະ ດຳເນີນການແກ້ໄຂຄຳຮ້ອງທຸກ* | *ກົນໄກ ການແກ້ໄຂຄຳຮ້ອງທຸກຄວນເປັນຄວາມຮັບຜິດຊອບຂອງລັດຖະບານ ເພື່ອຈັດການກັບຄຳຮ້ອງທຸກຕ່າງໆ ກໂດຍມີຂັ້ນຕອນທີ່ຈະແຈ້ງ ເພື່ອບັນທຶກ ແລະ ແກ້ໄຂ.* | ມາດຕາ 23:<br>ໃນກໍລະນີທີ່ ຜູ້ໄດ້ຮັບຜົນກະທົບເຫັນວ່າ ເຈົ້າຂອງໂຄງການ ປະຕິບັດບໍ່ສອດຄ່ອງກັບແຜນ ສຳລັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການທົດແທນຄ່າເສຍຫາຍ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍອີງຕາມດຳລັດ ຫຼື ແຜນອື່ນທ ທີ່ກ່ຽວຂ້ອງ ທີ່ກະທົບຕໍ່ຜົນປະໂຫຍດຂອງພວກເຂົາ, ພວກເຂົາມີສິດທີ່ຈະຮ້ອງຂໍ ຕໍ່ອຳນາດການປົກຄອງລັດ ເພື່ອແກ້ໄຂຄຳຮ້ອງຂໍ ໂດຍອີງຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ ໃນ ວັກ 1, ມາດຕາ 24 ຂອງດຳລັດ. | ຄຳຮ້ອງທຸກຈາກປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ຄົວເຮືອນທີ່ໄດ້ຮັບຜົນກະທົບ ຕໍ່ກັບການຈັດຕັ້ງປະຕິບັດແຜນການຈັດສັນຍົກຍ້າຍ ຈະຖືກຈັດການໂດຍຜ່ານການເຈລະຈາ ໂດຍແນໃສ່ເພື່ອໃຫ້ບັນລຸຂໍ້ຕົກລົງກັນໄດ້. ການຕັດສິນ ຈະຖືກດຳເນີນຜ່ານ 3 ຂັ້ນຕອນ ກ່ອນທີ່ຈະຖືກນຳສົ່ງໄປເຖິງຂັ້ນສານ ເຊິ່ງເປັນສ່ວນໜຶ່ງຂອງວິທີການແກ້ໄຂຂັ້ນສຸດທ້າຍ. |
| ***4. ການຕິດຕາມກວດກາ ແລະ ການປະເມີນຜົນ*** | | | |
| | *ການຕິດຕາມກວດກາພາຍໃນ ແລະ ພາຍນອກ ແລະ ຈາກພາກສ່ວນອິດສະຫຼະ ແມ່ນມີຄວາມຈຳເປັນ* | ມາດຕາ 27:<br>▪ ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງໜ່ວຍງານ ຄຸ້ມຄອງ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ເພື່ອເຮັດໜ້າທີ່ໃນການຕິດຕາມ ແລະ ກວດກາດ້ວຍຕົນເອງ ແທນທີ່ຈະເປັນພາກສ່ວນອື່ນ. ໜ່ວຍງານດັ່ງກ່າວ ມີພັນທະ ໃນການລາຍງານໃຫ້ແກ່ອົງການກວດກາແຫ່ງລັດ ກ່ຽວກັບການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດແຜນການທົດ | ໜ່ວຍງານຄຸ້ມຄອງຂັ້ນແຂວງ ໂດຍການປະສານສົມທົບຢ່າງໃກ້ຊິດກັບ GDR-IRC ຈະດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດ ວຽກງານຈັດສັນຍົກຍ້າຍ. ການຕິດຕາມກວດກາຈະລວມມີ ບົດລາຍງານຄວາມຄືບໜ້າ, ສະຖານະພາບຂອງການຈັດຕັ້ງປະຕິບັດແຜນຈັດສັນຍົກຍ້າຍ, ຂໍ້ມູນກ່ຽວກັບທີ່ຕັ້ງ ແລະ ຈຳນວນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ, ຈຳນວນຄ່າທົດແທນ ທີ່ໄດ້ເບີກຈ່າຍແລ້ວສຳລັບແຕ່ລະລາຍການ |

| *ຫົວຂໍ້* | OP 4.12 | *ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ, ສະບັບເລກທີ 84/ລບ (2016)* | *ຊ່ອງວ່າງ/ມາດຕະການຂອງໂຄງການ* |
|---|---|---|---|
| | | ແທນຄ່າເສຍຫາຍດ ການຈັດສັນ ແລະ ການຫຍັບຍ້າຍ, ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຈາກໂຄງການພັດທະນາ ຕາມທີ່ໄດ້ກຳນົດໄວ້ໃນແຜນລວມ, ໃນແຕ່ລະໄລຍະ. | , ແລະ ການຊ່ວຍເຫຼືອອື່ນໆ ທີ່ໄດ້ມອບໃຫ້ແກ່ຄົວເຮືອນທີ່ໄດ້ຮັບຜົນກະທົບ. ບົດລາຍງານ ຜົນການຕິດຕາມກວດກາ ຈະຖືກກະກຽມໂດຍ MRD ແລະ ນຳສົ່ງໃຫ້ແກ່ IRC ແລະ ທະນາຄານໂລກ ເປັນປະຈຳທຸກໆໄຕມາດ. |

14. ໂຄງການ ຈະປະຕິບັດຕາມ ນະໂຍບາຍຂອງທະນາຄານໂລກ OP/BP 4.12 ໃນບ່ອນທີ່ມີຄວາມແຕກຕ່າງກັນ ຕາມທີ່ໄດ້ລະບຸ ຜົນກະທົບທີ່ອາດເກີດຂຶ້ນຈາກ ໂຄງການ

# 4 ຜົນກະທົບທີ່ອາດຈະເກີດຂຶ້ນ

## 4.1 ຂໍ້ມູນພື້ນຖານທາງດ້ານສັງຄົມ

15. ພາຍໃຕ້ໂຄງການ LRSP2, ແຂວງຂອງໂຄງການ ຈະກວມເອົາ 6 ແຂວງຄື: ແຂວງ ບໍລິຄໍາໄຊ, ແຂວງ ຊຽງຂວາງ, ແຂວງ ຫົວພັນ, ແຂວງ ໄຊຍະບູລີ, ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ ໃນຂະນະທີ່ ແຂວງ ອັດຕະປື ແມ່ນໄດ້ເພີ່ມເຂົ້າຕື່ມ ໃນປີ 2018. ພາຍໃຕ້ໂຄງການ (LRSP1-AF) ເສັ້ນທາງເລກທີ 13 ໃຕ້ ຈາກແຂວງ ບໍລິຄໍາໄຊ ຫາ ແຂວງ ຄໍາມ່ວນ ຈະໄດ້ຮັບການສ້ອມແປງ ແລະ ປັບປຸງ ເປັນແຕ່ລະໄລຍະ ເພື່ອໃຫ້ສາມາດທົນທານຕໍ່ການປ່ຽນແປງດິນຟ້າອາກາດ. ຄວາມສໍາຄັນທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງແຂວງໂຄງການຕົວຢ່າງມີດັ່ງຕໍ່ໄປນີ້:

- **ແຂວງບໍລິຄໍາໄຊ (BKX):** ແຂວງບໍລິຄໍາໄຊ (14,863ກມ$^2$) ຕັ້ງຢູ່ໃນພາກກາງຂອງປະເທດ ແລະ ແຂວງທາງຜ່ານເຊື່ອມຕໍ່ນະຄອນຫຼວງ ແລະ ບັນດາແຂວງພາກໃຕ້ (NR13) ເປັນພື້ນທີ່ຂັ້ນກາງລະຫວ່າງປະເທດໄທ ແລະ ຫວຽດນາມ (NR8). ພື້ນທີ່ແຂວງເປັນພູດອຍຕາມຊາຍແດນຫວຽດນາມທາງພາກຕາເວັນອອກ ໃນຂະນະທີ່ທົ່ງຮາບຕັ້ງຢູ່ຕາມແມ່ນໍ້າແມ່ນໍ້າຂອງທາງພາກຕາເວັນຕົກ. ບໍລິຄໍາໄຊ BKX ແມ່ນອຸດົມສົມບູນໃນວັດທະນະທໍາ, ຊັບພະຍາກອນນໍ້າ, ປ່າໄມ້, ຊີວະນາໆພັນ, ແລະ ຊັບພະຍາກອນທໍາມະຊາດອື່ນໆ. ຢ່າງໃດກໍຕາມ, ຊັບພະຍາກອນປ່າໄມ້ຫຼຸດລົງຢ່າງໄວຍ້ອນການຕັດໄມ້ (ຖືກກົດຫມາຍ ແລະ ຜິດກົດຫມາຍ) ແລະ ການພັດທະນາຢ່າງວ່ອງໄວ. ແຂວງບໍລິຄໍາໄຊ ປະກອບມີ 7 ເມືອງ (ເມືອງປາກຊັນ, ທ່າພະບາດ, ປາກກະດິງ, ບໍລິຄັນ, ຄໍາເກີດ, ວຽງທອງ, ແລະ ໄຊຈໍາພອນ), 28 ກຸ່ມບ້ານ, 411 ບ້ານ, 46,304 ຄົວເຮືອນ (HH) ມີປະຊາກອນທັງຫມົດ (ປີ 2013) 271,656 ຄົນ ເກືອບ 50% ແມ່ນແມ່ຍິງ. ສ່ວນໃຫຍ່ (80%) ຂອງປະຊາຊົນຖືອາຊີບກະສິກໍາ. ອັດຕາການຂະຫຍາຍຕົວສະເລ່ຍປະມານ 2,4% ແລະ ຄວາມໜາແໜ້ນສະເລ່ຍແມ່ນ 15ຄົນຕໍ່ຕາລາງກິໂລແມັດ (km2), ລາຍຮັບສະເລ່ຍປະມານ 8 ລ້ານກີບຕໍ່ຄົນຕໍ່ປີ (ໃນປີ2010). ບໍລິຄໍາໄຊ BKX ມີ22ຊົນເຜົ່າ ລວມທັງຊົນເຜົ່າລາວ ທີ່ເປັນຊົນເຜົ່າສ່ວນໃຫຍ່ປະມານ 60% ຂອງປະຊາກອນທັງໝົດຂອງແຂວງ. ປະຊາຊົນຊົນເຜົ່າປະກອບດ້ວຍຊົນເຜົ່າ ລາວສູງ, ຂະມຸ, ຟົງ, ຕູມ, ກະຕາງ, ມາຄອງ ແລະ ອື່ນໆ. ນອກນັ້ນ ແຂວງບໍລິຄໍາໄຊກໍຍັງມີສະຖານທີ່ວັດທະນະທໍາ/ສະຖານທີ່ສໍາຄັນຫຼາຍແຫ່ງ ແລະ ສະຖານທີ່ທີ່ເໝາະແກ່ການທ່ອງທ່ຽວ ເຊີງວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ. ກິດຈະກໍາການພັດທະນາໃນ ແຂວງບໍລິຄໍາໄຊ BKX, ໂດຍສະເພາະແມ່ນໃນເມືອງປາກຊັນໄດ້ຮັບການພັດທະນາຢ່າງວ່ອງໄວ ແລະຄາດວ່າຈະສືບຕໍ່ພັດທະນາໃນອັດຕາໄວກວ່າເກົ່າໃນໄລຍະ 5 ປີ ຂ້າງຫນ້າ. ມີ 40 ບ້ານ ຢູ່ພາຍໃນແຂວງ ບໍລິຄໍາໄຊ (22 ບ້ານ ພາຍໃນເຂດເມືອງ ປາກ

ຊົນ, 12 ບ້ານພາຍໃນເຂດເມືອງ ທ່າພະບາດ ແລະ 16 ບ້ານພາຍໃນເມືອງ ປາກກະດິງ), ແລະ 35 ບ້ານ ໃນແຂວງ ຄໍາມ່ວນ (17 ບ້ານໃນເມືອງ ທ່າແຂກ ແລະ 10 ບ້ານພາຍໃນເມືອງ ຫີນບູນ) ທີ່ຕັ້ງຢູ່ລຽບຕາມເສັ້ນທາງເລກທີ 13 ໃຕ້ ລະຫວ່າງແຂວງ ບໍລິຄໍາໄຊ ຫາແຂວງ ຄໍາມ່ວນ ໂດຍລວມມີ 9 ບ້ານທີ່ເປັນຊົນເຜົ່າ.

- **ແຂວງຊຽງຂວາງ (XK):** ມີເນື້ອທີ່ 15,880 ກມ$^2$ ຕັ້ງຢູ່ໃນພາກຕາເວັນອອກສ່ຽງເຫນືອຂອງປະເທດແລະ ຕັ້ງຢູ່ເທິງພູພຽງຊຽງຂວາງເຊິ່ງເປັນເຂດຮາບພຽງຂະໜາດໃຫຍ່ຂອງປະເທດ. ແຂວງຊຽງຂວາງ ເປັນເຂດພູດອຍ ແລະ ມີຊາຍແດນຕິດກັບ ແຂວງບໍລິຄໍາໄຊ, ແຂວງວຽງຈັນ, ແຂວງຫຼວງພະບາງ, ແຂວງຫົວພັນ, ແຂວງ ໄຊສົມບູນ ແລະ ປະເທດຫວຽດນາມ. ເຂດພື້ນທີ່ເປັນລັກສະນະເຂດເນີນພູສະຫຼັບສັບຊ້ອນ ແລະ ທົ່ງຫຍ້າຢູ່ໃນລະດັບສູງສະເລ່ຍ 1,300 ແມັດ ລວມທັງ ແລະ ທົ່ງໄຫຫີນ (ຕັ້ງຢູ່ໃຈກາງຂອງພູພຽງ). ນໍ້າແອດ-ພູເລີຍເປັນເຂດສະຫງວນແຫ່ງຊາດທີ່ສໍາຄັນ. ແຂວງຊຽງຂວາງມີ 07ເມືອງ (ເມືອງແປກ, ເມືອງຄໍາ, ເມືອງໜອງແຮດ, ເມືອງຄູນ, ເມືອງມອກ, ເມືອງພູກູດ, ແລະ ເມືອງຜາໄຊ) ມີປະຊາກອນທັງຫມົດ (ໃນປີ 2014) 231,254 ຄົນ, ຍິງ113,809 ຄົນ. ແຂວງຊຽງຂວາງມີ3ຊຸມຊົນຊົນເຜົ່າຫຼັກ ລາວລຸ່ມ (ເຜົ່າໄຕດໍາ, ໄຕແດງ, ໄຕພວນ), ເຜົ່າຂະມຸແລະຊົນເຜົ່າລາວສູງ. ເຜົ່າໄຕດໍາ, ໄຕແດງ, ແລະໄທພວນ ເປັນກຸ່ມຊົນເຜົ່າທີ່ໃຊ້ພາສາ ລາວ-ໄຕ (ເຜົ່າລາວຊົນເຜົ່າສ່ວນໃຫຍ່), ປະກອບດ້ວຍຫຼາຍກວ່າ50%ຂອງປະຊາກອນທັງໝົດຂອງແຂວງ.

- **ແຂວງຫົວພັນ (HP):** ເປັນແຂວງພູດອຍ ມີເນື້ອທີ່ 17,363 ກມ$^2$, ລະດັບສະເລ່ຍຈາກລະດັບນໍ້າທະເລ 700–1,800 m, ຕັ້ງຢູ່ພາກຕະເວັນອອກຊ່ຽງເໜືອຂອງປະເທດ ຮ່າງຈາກນະຄອນຫລວງວຽງຈັນ ປະມານ 650 ກມ. ແຂວງຫົວພັນ ມີຊາຍແດນຕິດກັບປະເທດຫວຽດນາມ, ຊຽງຂວາງ ແລະ ຫລວງພະບາງ. ພູມສັນຖານສ່ວນໃຫຍ່ ໂດຍສະເພາະທາງພາກຕະເວັນຕົກ ແມ່ນເປັນພູເຂົາສະຫຼັບສັບຊ້ອນ ເຊິ່ງມີພື້ນທີ່ຮາບພຽງເລັກນ້ອຍ (6% ຂອງເນື້ອທີ່ທັງໝົດ). ແຂວງຫົວພັນ ປະກອບມີ 8 ເມືອງ (ເໜືອ, ຊຽງຄໍ້, ວຽງທອງ, ວຽງໄຊ, ຫົວເມືອງ, ຊໍາໃຕ້, ສົບເບົາ, ແອດ, ກ້ອນ ແລະ ຊ່ອນ), ເທດສະບານເມືອງ ແມ່ນເມືອງຊໍາເໜືອ ແລະ ປະກອບມີ 717 ບ້ານ, 47,310 ຄອບຄົວ, ມີພົນລະເມືອງທັງໝົດ 291,473 ຄົນ ເປັນຍິງ 142,737 ຄົນ. ປະກອບມີ 9 ຊົນເຜົ່າ ຄື: ລາວ ຫຼື ລາວໄຕ, ມົ້ງ, ຂະມຸ, ລາວຟອງ, ຊິມູນ, ລູມຽນ ຫຼື ຢ້າວ, ມອຍ ຫຼື ເມືອງ ແລະ ຈີນ ຫຼື ຫໍ້. ຊົນເຜົ່າທັງໝົດເຫຼົ່ານີ້ ຍົກເວັ້ນຊົນເຜົ່າຢູ່ໃນຕະກູນພາສາປາກເວົ້າລາວໄຕ ໄດ້ຖືກກໍານົດເປັນ ຊົນເຜົ່າ ພາຍໃຕ້ OP/BP 4.10. ແຂວງຫົວພັນ ແມ່ນເປັນໜຶ່ງໃນແຂວງທີ່ທຸກຍາກທີ່ສຸດ ຂອງສປປ ລາວ. ແຕ່ວ່າ, ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແມ່ນໄດ້ຮັບການປັບປຸງເປັນກ້າວໆ. ທາງຫຼວງແຫ່ງຊາດ ເລກທີ 6 ແມ່ນເປັນເສັ້ນທາງຫຼັກຜ່ານແຂວງ. ແຂວງດັ່ງກ່າວ ແມ່ນມີຊື່ສຽງ ທາງດ້ານການທ່ອງທ່ຽວ ໂດຍສະເພາະພູມສັນຖານທີ່ເປັນພູເຂົາ ພ້ອມທັງມີຖໍ້າເປັນຈໍານວນຫຼວງຫລາຍ ເຊິ່ງເປັນສະຖານທີ່ພັກ ຂອງຜູ້ນໍາການປະຕິວັດ ໃນລະຫວ່າງສົງຄາມອິນດູຈີນ

- **ແຂວງໄຊຍະບູລີ** (XBL): ແຂວງໄຊຍະບູລີ ມີເນື້ອທີ່ 16,389 km2, ຕັ້ງຢູ່ທາງພາກຕະເວັນຕົກສຽງເໜືອຂອງປະເທດລາວ ແລະ ເປັນແຂວງທີ່ຕັ້ງຢູ່ທາງພາກຕາເວັນຕົກຂອງແມ່ນໍ້າຂອງ ແລະ ຕິດກັບ 5 ແຂວງ ຂອງປະເທດໄທ. ນອກນັ້ນ, ແຂວງໄຊຍະບູລີ ແມ່ນມີຊາຍແດນຕິດກັບແຂວງບໍ່ແກ້ວ, ອຸດົມໄຊ, ຫລວງພະບາງ ແລະ ວຽງຈັນ. ພູມສັນຖານແຂວງໄຊຍະບູລີ ແມ່ນເປັນພູເຂົາ ແລະ ຊ້າງຖືເປັນສັນຍາລັກປະຈໍາແຂວງ. ມີປ່າປ້ອງກັນແຫ່ງຊາດນໍ້າພຸຍ ມີເນື້ອທີ່ 1,912 km2. ແຂວງໄຊຍະບູລີ ປະກອບມີ 10 ເມືອງ (ໄຊຍະບູລີ, ຂອບ, ຫົງສາ, ເງິນ, ຊຽງຮອນ, ພຽງ, ປາກລາຍ, ແກ່ນທ້າວ, ບໍ່ແຕນ ແລະ ທົ່ງມີໄຊ) ເຊິ່ງຕົວເມືອງໄຊຍະບູລີ ແມ່ນເປັນເທດສະບານແຂວງ. ປະຊາຊົນພາຍໃນແຂວງ ແມ່ນມີພາສາປາກເວົ້າທີ່ເອກະລັກທາງພາກເໜືອຂອງລາວ. ປະຊາຊົນທ້ອງຖິ່ນຂອງເມືອງຫົງສາ (ປະຊາກອນ 6,000 ຄົນ) ສ່ວນໃຫຍ່ແມ່ນໄທລື້. ກຸ່ມຊົນເຜົ່າອື່ນໆ ປະກອບມີຂະມຸ, ໄຕດໍາ, ຕິນ, ໄພ, ກຣີ, ອາຄ່າ, ແລະ ມາລາບຣີ ແມ່ນເປັນຄົນກຸ່ມສຸດທ້າຍ ທີ່ອາໄສຢູ່ໃນປ່າ (ຄົນໃບຕອງເຫຼືອງ) ໃນອາຊີຕາເວັນອອກສຽງໃຕ້ ເຊິ່ງເປັນກຸ່ມທີ່ອາໄສຢູ່ໃນປ່າ ທາງພາກຕາເວັນຕົກຂອງແຂວງໄຊຍະບູລີ ແລະ ເປັນຜູ້ທີ່ຖືກ

ກຳນົດໃຫ້ເປັນ IPs ໂດຍນະໂຍບາຍຂອງທະນາຄານໂລກ. ຢູ່ໃນແຂວງໄຊຍະບູລີ ການນຳໃຊ້ເສັ້ນທາງສຳລັບພາຫະນະຕ່າງໆແມ່ນຈຳກັດ ຍົກເວັ້ນເສັ້ນທາງແຕ່ເໜືອ-ໃຕ້ ຈາກເທດສະບານແຂວງ ໄປຫາຊາຍແດນປະເທດໄທ. ໄຊຍະບູລີເປັນແຂວງທີ່ມີຄວາມອຸດົມສົມບູນໄປດ້ວຍຕົ້ນໄມ້ໃຫຍ່ ແລະ ຖ່ານຫີນລິກໄນ ແລະ ໄດ້ຮັບການຂະໜານນາມວ່າເປັນອູ່ເຂົ້າຂອງພາກເໜືອ ສປປ ລາວ. ພືນລະປູກທີ່ສຳຄັນອື່ນໆ ປະກອບດ້ວຍ ໝາກສາລີ, ໝາກກ້ຽງ, ຝ້າຍ, ຖົ່ວດິນ, ໝາກງາ, ອ້ອຍ ແລະ ຜັກ ເຊັ່ນ: ໝາກແຕງ, ກະລໍ່າປີ ແລະ ໝາກຖົ່ວ.

- **ແຂວງອຸດົມໄຊ** (ODX): ແຂວງອຸດົມໄຊ ມີເນື້ອທີ່ 15,370 km2, ມີຊາຍແດນຕິດກັບ ປະເທດຈີນ ແລະ ຕິດກັບ 5 ແຂວງຂອງລາວ (ຜົ້ງສາລີ, ຫລວງພະບາງ, ໄຊຍະບູລີ, ບໍ່ແກ້ວ ແລະ ຫລວງນ້ຳທາ). ພູມສັນຖານຂອງແຂວງ ແມ່ນເປັນພູເຂົາ ເຊິ່ງມີຄວາມສູງຈາກລະດັບນ້ຳທະເລປະມານ 300–1,800 ແມັດ, ແລະ ແຂວງອຸດົມໄຊຍັງເປັນເຂດແມ່ນ້ຳຂອງຕອນເທິງຂອງລາວ ເຊິ່ງໄດ້ຖືກກຳນົດເປັນເຂດການອະນຸລັກປະຊາກອນ (IBA) ມີເນື້ອທີ່ 10,980 ຮຕ ເຊິ່ງເປັນເຂດປ້ອງກັນທີ່ສຳຄັນ. ແຂວງອຸດົມໄຊ ປະກອບມີ 7 ເມືອງ (ເມືອງໄຊ, ເມືອງຫລາ, ເມືອງນາໝໍ້, ເມືອງງາ, ເມືອງປາກແບ່ງ, ເມືອງຮຸນ ແລະ ເມືອງແບ່ງ) ແລະ ມີປະຊາກອນປະມານ 265,128 ຄົນ (ປີ2005). ປະກອບມີປະມານ 14 ຊົນເຜົ່າ ຄື: ຂະມຸ (60%),), ກຸ່ມພາສາລາວໄຕ (25%), ແລະ ມົ້ງ (15%). ຊົນເຜົ່າອື່ນໆ ປະກອບມີ ອາຂ່າ, ພູໄທ, ຜູ່ນ້ອຍ, ລາວຫ້ວຍ, ພອນ, ລື, ຢາງ, ອີກໍ້ ແລະ ຫໍ້. ນອກຈາກກຸ່ມຊົນເຜົ່າລາວໄຕແລ້ວ, ຊົນເຜົ່າເຫຼົ່ານີ້ ໄດ້ຖືກກຳນົດເປັນ IPs ຕາມນະໂຍບາຍຂອງທະນາຄານໂລກ. ພື້ນທີ່ຢູ່ໃນເຂດພູເຂົາທັງໝົດ ແມ່ນມີຂໍ້ຈຳກັດທາງດ້ານການເຂົ້າເຖິງເສັ້ນທາງ ແລະ ການພັດທະນາເສດຖະກິດ. ທີ່ດິນປະມານ 40,000 ແມ່ນເປັນດິນປູກຝັງ ແລະ ເຂົ້າແມ່ນເປັນພືນລະປູກຕົ້ນຕໍ(ພືນລະປູກອື່ນໆ ໄດ້ແກ່ ສາລີ, ຖົ່ວເຫລືອງ, ໝາກໄມ້, ຜັກ, ມັນຕົ້ນ, ອ້ອຍ, ຢາສູບ, ຝ້າຍ, ຊາ ແລະ ຖົ່ວດິນ). ການດຳລົງຊີວິດຂອງປະຊາຊົນສ່ວນໃຫຍ່ ແມ່ນອີງໃສ່ການກະສິກຳ ເຊິ່ງສ່ວນໃຫຍ່ແມ່ນການຖາງປ່າເຮັດໄຮ່(ຕິດພັນກັບການປູກເຂົ້າຢູ່ເທິງພູ) ພ້ອມດຽວກັນນັ້ນ ພື້ນທີ່ປູກຝັງຢູ່ໃນເຂດພື້ນທີ່ຕໍ່າ ຍັງຂຶ້ນກັບນ້ຳຝົນທຳມະຊາດ. ສາລີ, ຫອມບົ່ວ, ແຕງໂມ ແລະ ຢາສູບ ແມ່ນເປັນສິນຄ້າສົ່ງອອກ. ທີ່ດິນປະມານ 40,000 ຮຕ ແມ່ນເປັນດິນກະສິກຳ ຫຼື ໃຊ້ເປັນທົ່ງຫຍ້າລ້ຽງສັດ. ອີງຕາມການປະເມີນ ຂອງ IUCN, ປະມານ 12% ຂອງປ່າໄມ້ໃນແຂວງອຸດົມໄຊແມ່ນເປັນປ່າໄມ້ຢູ່ໃນສະພາບດັ້ງເດີມ ແລະ 48% ແມ່ນປ່າໄມ້ທີ່ມີການຟື້ນຟູຕາມທຳມະຊາດ. ປ່າໄມ້ບໍ່ພຽງແຕ່ເປັນແຫຼ່ງໄມ້ສຳລັບປະຊາຊົນ, ແຕ່ຍັງເປັນແຫຼ່ງລາຍຮັບຄອບຄົວເຊິ່ງຕອບສະໜອງອາຫານ ແລະ ສະໝູນໄພ. ໂດຍເປັນທີ່ຮັບຮູ້ກັນແລ້ວວ່າຄົນຈີນໄດ້ມາເຊົ່າທີ່ດິນກະສິກຳ ແລະ ຕໍ່ມາທີ່ດິນດັ່ງກ່າວຈະກາຍເປັນກຳມະສິດຂອງແຮງງານອົບພະຍົບຊາວຈີນ.

- **ແຂວງຜົ້ງສາລີ** (PSL): ຜົ້ງສາລີ ມີເນື້ອທີ່ 16,270 km2, ຕັ້ງຢູ່ເໜືອສຸດ ຂອງສປປ ລາວ. ພູມສັນຖານຂອງແຂວງຜົ້ງສາລີ ແມ່ນເປັນພູເຂົາ ສູງປະມານ 700–1,800 ແມັດ ຈາກລະດັບນ້ຳທະເລ. ແຂວງຜົ້ງສາລີມີຊາຍແດນຕິດກັບປະເທດຈີນ ແລະ ຫວຽດນາມ ແລະ ສອງແຂວງຂອງລາວ(ຫລວງພະບາງ ແລະ ອຸດົມໄຊ). ເນື້ອທີ່ດິນປະມານ 77% ຖືກປົກຫຸ້ມດ້ວຍປ່າໄມ້ ແລະ ມີປ່າສະຫງວນທີ່ສຳຄັນ ເປັນຕົ້ນ (Phou Dene Dinand Nam Lan). ແຂວງຜົ້ງສາລີ *ປະກອບມີ* 7 ເມືອງ (ຜົ້ງສາລີ, ໃໝ່, ຂົວ, ສຳພັນ, ບຸນເໜືອ, ຍອດອູ ແລະ ບຸນໃຕ້) ເຊິ່ງມີປະຊາກອນທັງໝົດປະມານ 291,473 ຄົນ, ເປັນຍິງ 142,737 ຄົນ (ປີ 2014). ເມືອງຍອດອູແມ່ນຢູ່ທາງເໜືອສຸດຂອງແຂວງ (ມີປະຊາກອນປະມານ 25,000 ຄົນ) ແລະ ປະກອບມີ 11 ກຸ່ມຊົນເຜົ່າ ທີ່ອາໄສຢູ່ໃນ 98 ບ້ານ. ຕິດກັບຊາຍແດນຈີນ (ດ່ານ ລານຕຸຍ) ປະກອບມີ 13 ຊົນເຜົ່າ ທີ່ມີພາສາ ແລະ ເອກະລັກດ້ານວັດທະນະທຳ ທີ່ເປັນເອກະລາດ (ຂະມຸ, ລາວໄຕກຸ່ມ: ໄທດຳ ແລະ ໄທແດງ; ຢ້າວ, ເລີ, ຫໍ້, ມົ້ງ, ອາຂ່າ, ຢາງ, ບິດ, ໂລໂລ ແລະ ອື່ນໆ). ແຕ່ລະກຸ່ມ ແມ່ນມີວັດທະນະທຳເປັນຂອງຕົນເອງ ໂດຍສະເພາະປະເພນີການແຕ່ງດອງ ລວມທັງເຄື່ອງຫັດຖະກຳ, ເຄື່ອງເງິນ ແລະ ເຄື່ອງປະດັບ. ກະສິກຳ ແມ່ນເປັນແຫຼ່ງລາຍຮັບຕົ້ນຕໍ ຂອງປະຊາຊົນແຂວງຜົ້ງສາລີ. ແຂວງຜົ້ງສາລີແມ່ນເປັນປະຕູທາງຜ່ານການຄ້າ ລະຫວ່າງລາວ ແລະ ຈີນ ໂດຍສິນຄ້າສົ່ງ

ອອກແມ່ນໄມ້ທ່ອນ ແລະ ໄມ້ສຳເລັດຮູບ ແລະ ສິນຄ້ານຳເຂົ້າໄດ້ແກ່ສິນຄ້າປະເພດເຄື່ອງອຸປະໂພກ ແລະ ບໍລິໂພກ. ພາຍໃນແຂວງ ຍັງມີຫລາຍບໍລິສັດຂອງນັກລົງທຶນຈີນ ລວມທັງການລົງທຶນຕ່າງປະເທດເປັນຕົ້ນແມ່ນ ຂະແໜງພະລັງງານ (ໂຄງການເຂື່ອນໄຟຟ້ານໍ້າປອດ ຢູ່ໃນ 24 ບ້ານ). ເຖິງແມ່ນວ່າລັດຖະບານໄດ້ຫ້າມບໍ່ໃຫ້ມີການປູກຝິ່ນ, ແຕ່ວ່າແຂວງຜົ້ງສາລີ ເປັນໜຶ່ງໃນແຂວງທີ່ມີການປູກຝິ່ນຫຼາຍ ແລະ ມີຈຳນວນເມືອງທີ່ທຸກຍາກສູງສຸດ ຢູ່ໃນປະເທດ. ຜົ້ງສາລີມີຫລາຍສະຖານທີ່ ແລະ ແຫຼ່ງທ່ອງທ່ຽວ ສຳຄັນ.

- **ແຂວງ ອັດຕະປື (ATP).** ແຂວງອັດຕະປື (ມີເນື້ອທີ່ 10,320 Km2) ເປັນແຂວງທີ່ຕັ້ງຢູ່ໃນເຂດພາກໃຕ້ສຸດຂອງປະເທດ ແລະ ມີຊາຍແດນຕິດກັບແຂວງ ເຊກອງ ໃນທິດເໜືອ, ແຂວງ ຈຳປາສັດ ໃນທິດຕາເວັນຕົກ, ປະເທດຫວຽດນາມ ໃນທິດຕາເວັນອອກ ແລະ ປະເທດ ກຳປູເຈຍ ໃນທິດໃຕ້ ໂດຍມີເມືອງ ສາມັກຄີໄຊ, ເມືອງ ໄຊເຊດຖາ, ເມືອງ ຊານໄຊ ແລະ ເມືອງ ພູວົງ ໂດຍມີປະຊາກອນທັງໝົດ 127,285 ຄົນ (2010). ເທດສະບານແຂວງແມ່ນເມືອງ ສາມັກຄີໄຊ ທີ່ຕັ້ງຢູ່ໃນເຂດຮ່ອມພູທີ່ສວຍງາມ ເປັນບໍລິເວນກ້ວາງ ແລະ ອ້ອມຮອບດ້ວຍພູ ແລະ ແມ່ນໍ້າໃນເຂດເທິງ. ປະຊາກອນສ່ວນໃຫຍ່ ຢູ່ແຂວງອັດຕະປື ແມ່ນກຸ່ມຊົນເຜົ່າ. ມີທັງໝົດ 15 ຊົນເຜົ່າ ພາຍໃນແຂວງ, ລວມມີ ເຜົ່າລາວ, ເຜົ່າອາລັກ, ເຜົ່າກະຕ່າງ, ເຜົ່າກະລຶມ, ເຜົ່າກະຕູ, ເຜົ່າສ່ວຍ, ເຜົ່າໂອ້ຍ, ເຜົ່າຕະໂອ້ຍ, ເຜົ່າສະດາງ, ເຜົ່າແຍະ, ເຜົ່າລະແວ, ເຜົ່າລະເວນ, ເຜົ່າເຈິ່ງ, ເຜົ່າຕະຣຽງ, ແລະ ເຜົ່າຍະເຫີນ. ພູພຽງບໍລະເວນ ແມ່ນຕັ້ງຢູ່ໃນແຂວງ ຈຳປາສັກ ແລະ ມີເສັ້ນທາງທີ່ສະດວກ ຈາກເມືອງປາກເຊ. ມີປ່າສະຫງວນແຫ່ງຊາດ 2 ແຫ່ງຄື: ປ່າສະຫງວນແຫ່ງຊາດ ດົງອຳພຳ (ເນື້ອທີ່ 200,000 ha) ແລະ ປ່າສະຫງວນແຫ່ງຊາດ ເຊປຽນ, ເຊິ່ງມີພື້ນທີ່ສ່ວນໜຶ່ງທີ່ນອນຢູ່ໃນເຂດແຂວງ ຈຳປາສັກ (ເນື້ອທີ່ 240,000 ha). ມີຊະນິດພັນພືດ ແລະ ສັດປ່າຫຼາຍຊະນິດ ທີ່ອາໃສຢູ່ໃນເຂດນີ້. ປ່າດົງດິບ, ຫ້ວຍນໍ້າ ແລະ ເຂດທົ່ງພຽງ ຖືກອ້ອມຮອບດ້ວຍພູເຂົາ ເຊິ່ງກາຍເປັນຄຸນລັກສະນະທາງພູມມິທັດຂອງເຂດນີ້. ໃນພາກທິດຕາເວັນອອກ, ພູສະພົງ ສາມາດເບິ່ງເຫັນໄດ້ ໃນຂະນະທີ່ ສາຍພູຫຼວງ ທາງທິດຕາເວັນຕົກ ກໍ່ສາມາດເຫັນໄດ້ເຊັ່ນກັນ. ເສດຖະກິດຂອງແຂວງ ອັດຕະປື ໂດຍສ່ວນໃຫຍ່ ແມ່ນຂຶ້ນກັບຂະແໜງກະສິກຳ. ຢູ່ພາຍໃນແຂວງ, ການຄ້າຂາຍສັດປ່າ ແມ່ນຍັງມີຫຼາຍ (ເຖິງແມ່ນວ່າມັນຈະຖືກປະເມີນໃນລະດັບຕໍ່າ ໂດຍພາກລັດ), ດັ່ງນັ້ນ, ການອະນຸລັກ ຈຶ່ງມີຄວາມສຳຄັນ. ເນື່ອງຈາກວ່າ ແຂວງອັດຕະປື ເປັນແຂວງ ທີ່ມີຄວາມຫຼາກຫຼາຍຂອງຊົນເຜົ່າ, ມັນຈຶ່ງຄຸ້ມຄ່າ ທີ່ຈະໄປຢ້ຽມຢາມ. ຕະຫຼາດຕອນເຊົ້າ ເປັນສະຖານທີ່ໜຶ່ງທີ່ສຳຄັນ ທີ່ຈະໄປເບິ່ງ ບັນດາຊົນເຜົ່າຕ່າງໆ ທີ່ມາຂາຍຜະລິດຕະຜົນຂອງພວກເຂົາ. ແຂວງ ອັດຕະປື ເປັນແຂວງໜຶ່ງ ທີ່ມີເອກະລັກສະເພາະ, ມີຄວາມໂດດເດັ່ນ ແລະ ມີທິວທັດສວຍງາມ. ເສັ້ນທາງໂຮຈິມິນຫຼາຍຈຸດ ສາມາດພົບເຫັນໃນແຂວງອັດຕະປື, ເຖິງແມ່ນວ່າຕ້ອງໄດ້ໃຊ້ຜູ້ນຳທາງທ້ອງຖິ່ນເພື່ອຊີ້ບອກ. ໃນເວລາຕອນເຊົ້າ ທ່ານສາມາດຢ້ຽມຢາມຕະຫຼາດພື້ນເມືອງ, ບ່ອນທີ່ກຸ່ມຊົນເຜົ່າຕ່າງໆ ໄປຊື້ ແລະ ຂາຍຜົນຜະລິດຂອງພວກເຂົາ.

- ເສັ້ນທາງຫຼວງແຫ່ງຊາດເລກ 18A ແມ່ນຕັ້ງຢູ່ທາງພາກໃຕ້ຂອງ ສປປ ລາວ. ປະຈຸບັນເສັ້ນທາງສາຍນີ້ ແມ່ນໄດ້ປູຢາງຮຽບຮ້ອຍແລ້ວ (ກວ້າງ 6 m ແລະ ຍາວ 152 km) ເຊື່ອມຕໍ່ລະຫວ່າງ ແຂວງ ອັດຕະປື ແລະ ແຂວງ ຈຳປາສັກ. ເນື່ອງຈາກວ່າ ມີຝົນຕົກໜັກໃນປີ 2018, ເສັ້ນທາງ ແລະ ຂົວຫຼາຍແຫ່ງ ໄດ້ຮັບຄວາມເສຍຫາຍຢ່າງຮຸນແຮງ ແລະ ຕ້ອງໄດ້ຮັບການສ້ອມແປງຢ່າງຮີບດ່ວນ (ການສ້ອມແປງຕາມແຕ່ລະໄລຍະ) ເພື່ອຮັບປະກັນໃຫ້ສະພາບເສັ້ນທາງສາມາດທຽວໄດ້ ສຳລັບລະດູຝົນໃນປີ 2019. ໂຄງການຍ່ອຍ ສຳລັບເສັ້ນທາງເລກທີ 18A (58.50 km) ຈາກບ້ານ ປິ່ນດົງ, ເມືອງ ສາມັກຄີໄຊ (KM 58.5) ແຂວງ ອັດຕະປື ເຖິງບ້ານ ຫຼັກ 48, ເມືອງ ປະທຸມພອນ (0 km) ແຂວງ ຈຳປາສັກ. ໃນສະພາບເຊັ່ນນັ້ນ, ເພື່ອຮັບປະກັນວ່າ ຜົນກະທົບ ແລະ ມາດຕະຖານຫຼຸດຜ່ອນ ແມ່ນສອດຄ່ອງກັບກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ຂອງໂຄງການ

LRSP2, ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ (EDPD) ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ (PTRI) ແລະ ຊ່ຽວຊານດ້ານສິ່ງແວດລ້ອມຂອງ ທະນາຄານໂລກ (WB) ໄດ້ລົງຢ້ຽມຢາມພື້ນທີ່ ໃນ ເດືອນມີນາ 2019 ເພື່ອດໍາເນີນການກັ່ນຕອງ ການປົກປ້ອງ ແລະ ລະບຸ ບັນຫາຕ່າງໆ ທີ່ອາດຈະມີ ແລະ ມາດຕະການຫຼຸດຜ່ອນ ທີ່ຈະຖືກນໍາໃຊ້ ສໍາລັບໂຄງການຍ່ອຍ. ການລົງຢ້ຽມຢາມໃນຄັ້ງນັ້ນ ໄດ້ມີຜູ້ຕາງໜ້າຈາກພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ອັດຕະປື ແລະ ແຂວງ ຈໍາປາສັກ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ ອັດຕະປື ແລະ ແຂວງ ຈໍາປາສັກ, ແລະ ພະແນກກະສິກໍາ ແລະ ປ່າໄມ້ ຂອງທັງສອງ ແຂວງ ກໍ່ໄດ້ເຂົ້າຮ່ວມ. ຜົນຈາກການລົງຢ້ຽມຢາມຄັ້ງນັ້ນ ຢັ້ງຢືນວ່າ ໂຄງການຍ່ອຍ ຈໍາເປັນຕ້ອງໄດ້ຮັບການສ້ອມແປງ ແລະ ບໍາລຸງຮັກສາ ຢ່າງຮີບດ່ວນ ແລະ ຜົນກະທົບດ້ານລົບ ແມ່ນຈະມີຈໍາກັດພື້ນທີ່ໃນວົງແຄບ, ຊົ່ວຄາວ, ແລະ ສາມາດເຮັດໃຫ້ຫຼຸດຜ່ອນລົງໄດ້ ໂດຍການຄຸ້ມຄອງຜູ້ຮັບເໝົາກໍ່ສ້າງ ຢ່າງມີປະສິດຕິພາບ. ໜ້າວຽກຂອງໂຄງການຍ່ອຍດັ່ງກ່າວ (ມີຄວາມຍາວ 58.50 km) (ການບໍາລຸງຮັກສາ ເປັນໄລຍະ) ຈະຖືກດໍາເນີນໃນຂອບເຂດເສັ້ນທາງທີ່ມີຢູ່ແລ້ວ (6.0m) ແລະ ກິດຈະກໍາຕ່າງໆ ຍັງຈະລວມມີ ການປັບປຸງຮ່ອງລະບາຍນໍ້າ, ທໍ່ລອດທາງ, ການສ້ອມແປງ / ການປ່ຽນ ຂົວ, ແລະ ການປ້ອງກັນຕາຝັ່ງນໍ້າ. ຄວາມໄວຂອງເສັ້ນທາງ ທີ່ໄດ້ອອກແບບ ຈະຢູ່ທີ່ລະຫວ່າງ 20 ເຖິງ 60 km/hr ຂຶ້ນກັບແຕ່ລະພື້ນທີ່.

## 4.2 ບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດໂຄງການຂະແໜງຂົວທາງ ສປປ ລາວ

16. ການປະເມີນ ມາດຕະການປົກປ້ອງ ແລະ ຄວາມສ່ຽງ. ພາຍໃຕ້ໂຄງການ (LRSP2) ໄລຍະເບື້ອງຕົ້ນ ທີ່ກໍາລັງສືບຕໍ່, ຄວາມສອດຄ່ອງຂອງນະໂຍບາຍການປົກປ້ອງ ແມ່ນມີຄວາມເພິ່ງພໍໃຈ ໂດຍບໍ່ມີບັນຫາໃຫຍ່ ແລະ ຄໍາຮ້ອງທຸກ ທີ່ສະເໜີ ໃນໄລຍະປີທໍາອິດຂອງໂຄງການຍ່ອຍໃນ 6 ແຂວງເປົ້າໝາຍ. ໄດ້ມີຄວາມເອົາໃຈໃສ່ ແລະ ຄວາມພະຍາຍາມ ໃນການກັ່ນຕອງ ການປົກປ້ອງ ແລະ ຂໍ້ກໍານົດ ການປົກປ້ອງ ລວມທັງການສ້າງ ເຄື່ອງມືການປົກປ້ອງ, ການຝຶກອົບຮົມ ແລະ ການຕິດຕາມກວດກາ. ໄດ້ມີການຈັດຕັ້ງປະຕິບັດ ການກັ່ນຕອງ ການປົກປ້ອງ ແລະ ແຜນການຍົກຍ້າຍຈັດສັນແບບຫຍໍ້ ໄດ້ຖືກສ້າງຂຶ້ນ ແລະ ໄດ້ມີການຈັດຕັ້ງປະຕິບັດ ຕາມຄວາມຈໍາເປັນ. ໂດຍລວມແລ້ວ ຄວາມສ່ຽງສໍາລັບການປົກປ້ອງ ພາຍໃຕ້ໂຄງການ LRSP2 ແມ່ນມີຕໍ່າ ເນື່ອງຈາກວ່າວຽກງານການກໍ່ສ້າງ ດໍາເນີນໄປຕາມແລວທາງເດີມ ແລະ ການອອກແບບ ແມ່ນແນ່ໃສ່ເພື່ອຫຼຸດຜ່ອນຜົນກະທົບ ຕໍ່ເຮືອນ ທີ່ຕັ້ງຢູ່ລຽບຕາມສອງຝາກທາງ.

17. ການເວນຄືນທີ່ດິນ ແລະ ການຍົກຍ້າຍຈັດສັນ. ບໍ່ມີບັນຫາສໍາຄັນ ທີ່ກ່ຽວຂ້ອງກັບການເວນຄືນທີ່ດິນ ຫຼື ຜົນກະທົບດ້ານລົບຕໍ່ສັງຄົມ ທີ່ເກີດຂຶ້ນ ແລະ ໄດ້ຮັບການລາຍງານ ພາຍໃຕ້ການປະຕິບັດໂຄງການ. ມີພຽງຜົນກະທົບຕໍ່ການເຂົ້າເຖິງຊົ່ວຄາວ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ, ເຮືອນ, ຮ້ານຄ້າ ແລະ ເລົ້າເຂົ້າ ທີ່ຢູ່ລຽບຕາມສອງຝາກທາງ ໃນໄລຍະປະຕິບັດວຽກງານກໍ່ສ້າງ. ມີປະມານ 2 ກໍລະນີ ທີ່ມີຮົ້ວຊົ່ວຄາວ ທີ່ສ້າງດ້ວຍໄມ້ ແລະ ໄມ້ໄຜ່ ຍື່ນອອກມາໃສ່ຂອບທາງ ຢູ່ແຂວງ ຊຽງຂວາງ. ຄົວເຮືອນທີ່ໄດ້ຮັບຜົນກະທົບ ເຫັນດີ ທີ່ຈະຫຍັບຍ້າຍ ຮົ້ວດັ່ງກ່າວເຂົ້າໃນຄືນ ໂດຍການສະໜັບສະໜູນຂອງພະນັກງານຈາກ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ຜູ້ຮັບເໝົາກໍ່ສ້າງ. ສິ່ງອໍານວຍຄວາມສະດວກຕ່າງໆ ໄດ້ຮັບການຕອບສະໜອງ ໂດຍຜູ້ຮັບເໝົາ ເພື່ອຮັບປະກັນໃຫ້ໄດ້ສາມາດສືບຕໍ່ນໍາໃຊ້ໄດ້. ຕົ້ນໄມ້ນ້ອຍບາງຊະນິດທີ່ເກີດຕາມທໍາມະຊາດ ແລະ ຊັບສິນຕ່າງໆ ໄດ້ຖືກເຄື່ອນຍ້າຍ, ຕັດສາງອອກ ແລະ ຍັບຍ້າຍເຂົ້າດ້ານໃນ ໂດຍການຊ່ວຍເຫຼືອຈາກກໍາມະກອນ ຂອງຜູ້ຮັບເໝົາ(ໂດຍສະເພາະແມ່ນ ສິ່ງປຸກສ້າງທີ່ມີຂະໜາດໃຫຍ່ ແລະ ໜັກ). ຄອບຄົວທີ່ໄດ້ຮັບຜົນກະທົບ (PAHs) ໄດ້ຮັບແຈ້ງຢ່າງຖືກຕ້ອງ ຜ່ານຂະບວນການ ການປຶກສາຫາລື ພ້ອມທັງໄດ້ກຽມພ້ອມເພື່ອຮັບມື ຕໍ່ຜົນກະທົບໄລຍະສັ້ນທີ່ຄາດຄະເນວ່າຈະເກີດຂຶ້ນ. ບໍ່ໄດ້ມີການສະເໜີ ຫຼື ຮັບແຈ້ງ ກ່ຽວກັບຮ້ອງທຸກ ຍົກເວັ້ນຂີ້ຝຸ່ນ ແລະ ມີການປະຖິ້ມສິ່ງເສດເຫຼືອຈາກການກໍ່ສ້າງໄວ້ ແຕ່ບັນຫາດັ່ງກ່າວກໍ່ໄດ້ຮັບການແກ້ໄຂ ຕາມແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ECOP ທີ່ລວມຢູ່ໃນ ສັນຍາກໍ່ສ້າງ.

### 4.3 ຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນ

18. ໂຄງການ LRSP2-AF ຈະບໍ່ມີການຍົກຍ້າຍດ້ານດ້ານວັດຖຸທີ່ສຳຄັນເຊັ່ນ: ສິ່ງປຸກສ້າງທີ່ຖາວອນ ຫຼື ການຍົກຍ້າຍຈັດສັນເປັນຈຳນວນຫຼວງຫຼາຍ ແລະ ມັນກໍ່ໄດ້ຮັບການພິຈາລະນາຢ່າງຊັດເຈນໃນບັນຊີລາຍຊື່ຂອງກິດຈະກຳບໍ່ເຫມາະສົມ (ເບິ່ງ ບັນຊີລາຍການທີ່ບໍ່ອະນຸຍາດ ໃນ ESMF). ນະໂຍບາຍແມ່ນໄດ້ນຳມາປະຕິບັດເນື່ອງຈາກວ່າໂຄງການອາດຈະມີການເວນຄືນທີ່ດິນເລັກໜ້ອຍ ສຳລັບການບຳລຸງຮັກສາເສັ້ນທາງໃນບາງພື້ນທີ່ ເຊິ່ງຄວາມປອດໄພເສັ້ນທາງ ແລະສະຖຽນລະພາບຂອງເສັ້ນທາງເປັນສິ່ງຈຳເປັນ ໂດຍສະເພາະໃນເວລາມີປັບປຸງຄວາມຢືດຢຸ່ນຂອງເສັ້ນທາງ ຕໍ່ສະພາບອາກາດໄດ້ຮັບການພິຈາລະນາ. ວຽກສ່ວນໃຫຍ່ເປັນວຽກທີ່ດຳເນີນໄປໃນເສັ້ນທາງທີ່ມີຢູ່ແລ້ວ ແລະ ອາດຈະມີການປ່ຽນແປງແລວທາງເລັກໜ້ອຍ ໂດຍບໍ່ມີການຂະຫຍາຍທາງ ແລະ ຈະມີຜົນກະທົບຕໍ່ຕົ້ນໄມ້ ແລະ ຊັບສິນສ່ວນບຸກຄົນຕາມແຄມທາງອື່ນໆ, ແຕ່ຈະບໍ່ມີການເສຍຫາຍຊັບສິນສ່ວນບຸກຄົນລວມທັງທີ່ດິນ ທີ່ຄາດວ່າຈະມີ. ປະສົບການໃນການຈັດຕັ້ງປະຕິບັດໂຄງການ LRSP2 ຊີ້ໃຫ້ເຫັນວ່າ ສຳລັບການບຳລຸງຮັກສາເສັ້ນທາງ ແລະ ການສ້ອມແປງສຸກເສີນ ຍັງບໍ່ທັນມີຄວາມຈຳເປັນຕ້ອງປະຕິບັດການເວນຄືນທີ່ດິນ, ການຍົກຍ້າຍທາງດ້ານວັດຖຸ,ການຍົກຍ້າຍຈັດສັນປະຊາຊົນບໍ່ມີການຮ້ອງທຸກ ທີ່ໄດ້ບັນທຶກໄວ້ ແລະ ທີ່ສັງເກດເຫັນໃນລະຫວ່າງການລົງຊີ້ນຳຂອງທະນາຄານໂລກ. ພາຍໃຕ້ໂຄງການ LRSP2, ຍັງບໍ່ທັນມີຄວາມຈຳເປັນ ສຳລັບການເອົາທີ່ດິນ ແລະ ການທົດແທນຄ່າເສຍຫາຍ ແລະ ສິ່ງດັ່ງກ່າວ ຍັງຈະຖືກຫຼີກເວັ້ນ ໃນໄລຍະການອອກແບບ ເສັ້ນທາງເລກທີ 13 ໃຕ້. ເນື່ອງຈາກວ່າໂຄງການລົງທຶນແມ່ນຄ້າຍຄືກັນແລະຂະໜາດຂອງວຽກງານບຳລຸງຮັກສາເສັ້ນທາງເທົ່າໆກັນ, ສະນັ້ນຄວາມສ່ຽງທີ່ກ່ຽວຂ້ອງກັບການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ ແລະ ການເວນຄືນທີ່ດິນສາມາດພິຈາລະນາໃນຂັ້ນ "ຕ່ຳ". ຫຼັກການສຳຄັນແລະຂະບວນການແມ່ນນຳສະເໜີໃນພາກທີ V ຂ້າງລຸ່ມນີ້.

# 5 ຍຸດທະສາດການທົດແທນຄ່າເສຍຫາຍ ແລະ ການຫຼຸດຜ່ອນຜົນກະທົບຂອງໂຄງການ

19. ເຖິງແມ່ນວ່າຄວາມຕ້ອງການການທົດແທນຄ່າເສຍຫາຍຄາດວ່າຈະມີໜ້ອຍແລະ ສ່ວນຫຼາຍແມ່ນ ແມ່ນຄວາມຕ້ອງໃນການແກ້ໄຂຜົນກະທົບຊົ່ວຄາວ, ພາກນີ້ຈຳໄດ້ໃຫ້ລາຍລະອຽດທົ່ວໄປກ່ຽວກັບວັດຖຸປະສົງຂອງຂອບນະໂຍບາຍການຍົກຍ້າຍຈັດສັນ RPF ແລະ ຫຼັກການພື້ນຖານທີ່ສຳຄັນທີ່ຈະໄດ້ຮັບການປະຕິບັດໃນໂຄງການ. ເພື່ອຮັບປະກັນວ່າການສູນເສຍຊັບສິນສ່ວນບຸກຄົນ ລວມທັງ, ແຕ່ບໍ່ສະເພາະ, ທີ່ດິນສ່ວນບຸກຄົນຈະໄດ້ຮັບການຫຼີກເວັ້ນ, ຫຼຸດຜ່ອນ ຫຼື ບັນເທົາຢ່າງເຕັມສ່ວນ, ຂອບນະໂຍບາຍRPF ອະທິບາຍຈຸດປະສົງ ແລະ ຫຼັກການພື້ນຖານສຳຄັນຄຽງຄູ່ກັບ ນະໂຍບາຍ OP/BP 4.12 ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ192/ນຍ. ຂອບນະໂຍບາຍ RPF ອະທິບາຍຂະບວນການປຶກສາຫາລືກັບຊຸມຊົນ, ແລະ ເຂົ້າມາມີສ່ວນຮ່ວມຂອງຊຸມຊົນ, ໃນກິດຈະກຳການວາງແຜນ ແລະ ການຕັດສິນໃຈເວລາມີການເວນຄືນທີ່ດິນ ຫຼື ການຍົກຍ້າຍຈັດສັນຊັບສິນຫາມີຄວາມຈຳເປັນ. ບັນຫາທີ່ມີແນວໂນ້ມທີ່ຈະໄດ້ຮັບການປຶກສາຫາລືປະກອບມີການສູນເສຍທີ່ດິນ, ຊັບສິນ,ລາຍຮັບ ອັນເນື່ອງມາຈາກການປ່ຽນແປງແລວທາງເລັກນ້ອຍ ເພື່ອປັບປຸງຄວາມປອດໄພຂອງເສັ້ນທາງ ແລະ ສະຖຽນລະພາບຂອງທາງ. ການກະກຽມແຜນຍົກຍ້າຍຈັດສັນແມ່ນມີຄວາມຈຳເປັນ.

20. ແຜນປະຕິບັດການຍົກຍ້າຍຈັດສັນ RAP/ARAP ຮັບປະກັນວ່າຜົນກະທົບທີ່ອາດເກີດຂຶ້ນໄດ້ຖືກຫຼຸດຜ່ອນ, ແລະ ບຸກຄົນທີ່ອາກໄດ້ຮັບຜົນກະທົບ ໄດ້ຮັບການສະຫນອງໂອກາດຢ່າງຫຼວງຫຼາຍ, ຜ່ານການສະຫນອງການທົດແທນຄ່າເສຍຫາຍ ຫຼື ຮູບແບບອື່ນໆຂອງການຊ່ວຍເຫຼືອ, ການປັບປຸງ ຫຼື ຢ່າງໜ້ອຍຟື້ນຟູລາຍຮັບ ແລະ ມາດຕະຖານດຳລົງຊີວິດຂອງເຂົາເຈົ້າ.

## 5.1 ຈຸດປະສົງ ຂອງນະໂຍບາຍ

21. ຈຸດປະສົງຕົ້ນຕໍຂອງຂອບນະໂຍບາຍການຍົກຍ້າຍຈັດສັນ RPF ແມ່ນເພື່ອຮັບປະກັນວ່າທຸກຄົນທີ່ໄດ້ຮັບຜົນກະທົບ (ບຸກຄົນຍົກຍ້າຍ ຫຼື ຜູ້ຖືກກະທົບຈາກໂຄງການ) ໄດ້ຮັບການທົດແທນໃນມູນຄ່າທົດແທນຕາມມູນຄ່າຕະຫຼາດ ສໍາລັບທີ່ດິນສູນເສຍໄປ ແລະ ຊັບສິນອື່ນໆ ຖ້າບໍ່ດັ່ງນັ້ນ ກໍ່ຕ້ອງໄດ້ຮັບການສະໜອງມາດຕະການຟື້ນຟູ ຫຼື ການຊ່ວຍເຫຼືອຮູບແບບອື່ນໆທີ່ຈໍາເປັນເພື່ອໃຫ້ພວກເຂົາມີໂອກາດພຽງພໍທີ່ຈະປັບປຸງ, ຫຼື ຢ່າງໜ້ອຍຟື້ນຟູ, ລາຍໄດ້ ແລະມາດຕະຖານການດໍາລົງຊີວິດຂອງເຂົາເຈົ້າ. ເນື່ອງຈາກວ່າລັກສະນະຂອງກິດຈະກໍາຂອງໂຄງການທີ່ມີແຕ່ບໍາລຸງຮັກສາເສັ້ນທາງ ແລະການເວນຄືນທີ່ດິນໃນເຂດໃດໜຶ່ງສະເພາະເທົ່ານັ້ນ ການເວນຄືນທີ່ດິນ ແລະ ທົດແທນຄ່າເສຍຫາຍ ແລະ ນະໂຍບາຍການຍົກຍ້າຍຈັດສັນ ຈະໄດ້ເນັ້ນໃສ່ການແກ້ໄຂຜົນກະທົບຊົ່ວຄາວ ແລະ ແຜນປະຕິບັດການຍົກຍ້າຍຈັດສັນຫຼື ແຜນຫຍໍ້ ຕ້ອງໄດ້ການກະກຽມ. ຖ້າຫາກວ່າມີຄວາມບໍ່ສອດຄ່ອງລະຫວ່າງກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ໃຫ້ລະການປະຕິບັດລະບຽບການ ເທົ່າທີ່ມີຄວາມຈໍາເປັນ ເພື່ອບັນລຸໄດ້ຕາມຂອບນະໂຍບາຍການຍົກຍ້າຍຈັດສັນ RPF ແລະ ການປະຕິບັດດັ່ງກ່າວແມ່ນໃຫ້ປະກອບໃນເອກະສານນິຕິກໍາຂອງໂຄງການ.

## 5.2 ຫຼັກການພື້ນຖານ ຂອງກອບວຽກ ນະໂຍບາຍ ການຍົກຍ້າຍຈັດສັນ

22. ຫຼັກການພື້ນຖານ: ຈະໄດ້ນໍາໃຊ້ ທັງຂະບວນການ ແລະ ຫຼັກການ ຂອງ ດໍາລັດ ເລກທີ 192 ແລະ ຂໍ້ກໍານົດ ການຈັດຕັ້ງປະຕິບັດ ດໍາລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍ ຈັດສັນປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາ(2005) ແລະ ນະໂຍບາຍ ດໍາເນີນງານ ຂອງທະນາຄານໂລກ ວ່າດ້ວຍ ການຍົກຍ້າຍຈັດສັນ ດ້ວຍຄວາມບໍ່ສະໝັກໃຈ(OP/BP 4.12)

- ຈະຕ້ອງໄດ້ຫຼຸດຜ່ອນ ການເວນຄືນທີ່ດິນ ແລະ ຊັບສິນ ອື່ນໆ ໃຫ້ຫລາຍເທົ່າທີ່ຈະເປັນໄປໄດ້, ການຍົກຍ້າຍຈັດສັນ ປະຊາຊົນ ແລະ ການຮື້ຖອນ ໂຄງສ້າງ ເຮືອນ ແລະ ທຸລະກິດ ຈະບໍ່ໄດ້ຮັບອະນຸຍາດ ເວັ້ນເສຍແຕ່ ໄດ້ຮັບການພິຈາລະນາ ຮັບຮອງ ຈາກທະນາຄານໂລກ
- ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ແມ່ນຄົວເຮືອນ ທີ່ຖືກກໍານົດ ຢູ່ໃນພື້ນທີ່ ໄດ້ຮັບຜົນກະທົບ ຈາກໂຄງການໃນວັນທີ ການສໍາຫຼວດ ວັດແທກລະອຽດ(DMS). ຜູ້ທີ່ໄດ້ຮັບສິດ ໄດ້ຮັບການຕອບສະໜອງ ມາດຕະການຟື້ນຟູ ຢ່າງພຽງພໍ ເພື່ອຊ່ວຍເຫຼືອເຂົາເຈົ້າ ໃນການປັບປຸງ ຫຼື ຮັກສາ ມາດຕະຖານ ການດໍາລົງຊີວິດ, ຄວາມອາດສາມາດ ໃນການສ້າງລາຍຮັບ ແລະ ການຜະລິດ ຂອງເຂົາເຈົ້າ ຢ່າງນ້ອຍສຸດໃຫ້ເທົ່າລະດັບ ກ່ອນບໍ່ທັນມີໂຄງການ. ການຂາດ ກໍາມະສິດທີ່ຖືກຕ້ອງຕາມກົດໝາຍ ຕໍ່ຊັບສິນ ທີ່ສູນເສຍຈະບໍ່ເປັນການຂັດຂວາງ ຜູ້ທີ່ໄດ້ຮັບຜົນກະທົບ ຈາກສິດທີທີ່ໄດ້ຮັບການທົດແທນຄ່າເສຍຫາຍ ຕໍ່ມາດຕະການຟື້ນຟູ ດັ່ງກ່າວ
- ມາດຕະການຟື້ນຟູທີ່ໄດ້ກໍານົດໄວ້ ແມ່ນ (i) ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນ ໂດຍບໍ່ມີການຄິດໄລ່ ຄ່າຫຼຸ້ຍຫ້ຽນ ຫຼື ວັດສະດຸ ເຮືອນ ແລະ ສິ່ງປຸກສ້າງ ອື່ນໆ ທີ່ເອົາມານໍາໃຊ້ຄືນໃໝ່; (ii) ທີ່ດິນກະສິກໍາປ່ຽນແທນ ຕ້ອງມີສະມັດຕະພາບຜົນຜະລິດ ເທົ່າກັນ ທີ່ຜູ້ໄດ້ຮັບຜົນກະທົບຮັບຮອງເອົາ; (iii) ການປ່ຽນແທນທີ່ດິນປຸກສ້າງ ແລະ ການຄ້າ ຕ້ອງມີຂະໜາດ ເທົ່າກັນ ໂດຍການຍອມຮັບ ຈາກຜູ້ທີ່ໄດ້ຮັບຜົນກະທົບ; (iv) ຈ່າຍຄ່າ ຍົກຍ້າຍ ແລະ ການດໍາລົງຊີວິດ
- ການປ່ຽນແທນ ດິນກະສິກໍາ ແລະ ດິນປຸກສ້າງ ຈະຕ້ອງໃຫ້ຢູ່ໃກ້ ກັບດິນທີ່ຖືກສູນເສຍ ແລະ ໄດ້ຮັບການຍອມຮັບ ຈາກຜູ້ທີ່ໄດ້ຮັບຜົນກະທົບ. ແຜນການ ສໍາລັບການເວນຄືນທີ່ດິນ ແລະ ຊັບສິນ ອື່ນໆ ແລະ ການຕອບສະໜອງມາດຕະການຟື້ນຟູ ດໍາເນີນຜ່ານການປຶກສາຫາລື ກັບຜູ້ທີ່ໄດ້ຮັບຜົນກະທົບ ເພື່ອຮັບປະກັນ ໃຫ້ຂໍ້ຂັດແຍ່ງຫຼຸດຜ່ອນລົງ.

- ແຫຼ່ງງົບປະມານ ສຳລັບການທົດແທນຄ່າເສຍຫາຍ ແລະ ການຟື້ນຟູ ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ຮັບງົບປະມານ ດັ່ງຕໍ່ໄປນີ້: ການທົດແທນຄ່າເສຍຫາຍ ສຳລັບຜົນຜະລິດ, ທີ່ດິນປຸກສ້າງ ຫຼື ທີ່ດິນການຄ້າ ຈະມາຈາກທີ່ດິນບ້ານ ແລະ ການເຈລະຈາ ບ້ານ ຜ່ານການຮັບຮອງ ຂອງອົງການຈັດຕັ້ງລັດຖະບານ; ແລະ ການຈ່າຍ ເປັນເງິນສົດ ເພື່ອ ການທົດແທນຄ່າເສຍຫາຍ ສິ່ງປຸກສ້າງ, ຕົ້ນໄມ້, ຜົນລະປູກ, ການສູນເສຍລາຍຮັບ ແລະ ການຊ່ວຍເຫລືອ ເພື່ອ ຟື້ນຟູຈາກຄູ່ຮ່ວມມືດ້ານງົບປະມານແຂວງ ຂອງໂຄງການ.

23. ການປະກອບສ່ວນ ດ້ວຍຄວາມສະໝັກໃຈ: ນະໂຍບາຍດຳເນີນງານ/ຂັ້ນຕອນຂອງທະນາຄານ ບໍ່ຊຸກຍູ້ ໃຫ້ມີການຊັບສິນໃຫ້ ດ້ວຍຄວາມສະໝັກໃຈ. ແຕ່ວ່າ ສະມາຊິກຊຸມຊົນ ມີສິດ ປະກອບສ່ວນ ດິນ ແລະ ຊັບສິນ ອື່ນໆ ຂອງເຂົາເຈົ້າ ໂດຍບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ຕາມທີ່ກຳນົດໄວ້ ຢູ່ໃນ ດຳລັດ ເລກທີ 192 /ນຍ. ໂຄງການນີ້ ສາມາດເປັນໄປໄດ້ ຍ້ອນວ່າໂຄງການຍ່ອຍ ການບຳລຸງຮັກສາ ເສັ້ນທາງ ແລະ ການປັບຕົວ ເຂົ້າກັບດິນຟ້າອາກາດ ສາມາດປັບປຸງ ຄວາມປອດໄພ ເສັ້ນທາງ ລວມທັງ ເພີ່ມມູນຄ່າ ຊັບສິນ ຫຼື ຕອບສະໜອງ ຜົນປະໂຫຍດ ໂດຍກົງ ໃຫ້ແກ່ ຜູ້ທີ່ໄດ້ຮັບຜົນກະທົບ. ການປະກອບສ່ວນ ດ້ວຍຄວາມສະໝັກໃຈ ແມ່ນເປັນການກະທຳໜຶ່ງ ຂອງການເຫັນດີເຫັນພ້ອມຮ່ວມກັນ. ໂຄງການ ຕ້ອງຮັບປະກັນວ່າ ການປະກອບສ່ວນດ້ວຍຄວາມສະໝັກໃຈ ໄດ້ດຳເນີນ ດ້ວຍຄວາມຮັບຮູ້ກ່ອນ ເປັນສ່ວນໜຶ່ງຂອງບຸກຄົນ ຜູ້ທີ່ຈະປະກອບສ່ວນ ຊັບສິນ ເຊິ່ງມີບັນດາທາງເລືອກອື່ນໆ ແລະ ໄດ້ຮັບ ໂດຍປາສະຈາກ ການບັງຄັບ ແລະ ນາບຂູ່.

24. ພາຍໃຕ້ ໂຄງການນີ້, ການປະກອບ ສ່ວນດ້ວຍ ຄວາມສະໝັກໃຈ ຈະບໍ່ຖືກນຳໃຊ້ ເວັ້ນເສຍແຕ່ ການສູນເສຍຊັບສິນໜ້ອຍທີ່ສຸດ. ສຳລັບເນື້ອທີ່ດິນຈຳນວນໜ້ອຍ, ເງື່ອນໄຂຕໍ່ໄປນີ້ ຖືກປະຕິບັດຕາມ ຢ່າງເຂັ້ມງວດ: ເນື້ອທີ່ດິນທັງໝົດຂອງຜູ້ທີ່ໄດ້ຮັບຜົນກະທົບ ບໍ່ນ້ອຍກວ່າ 300 ມ2; ໃນກໍລະນີ ເນື້ອທີ່ດິນທັງໝົດ ຂອງຜູ້ທີ່ໄດ້ຮັບຜົນກະທົບ ທີ່ຫຼາຍກວ່າ 300 ມ2, ເນື້ອທີ່ດິນຈຳນວນໜ້ອຍ ທີ່ສາມາດ ປະກອບສ່ວນ ຕ້ອງບໍ່ຫລາຍກວ່າ 5 % ຂອງເນື້ອທີ່ດິນທັງໝົດ; ບໍ່ມີເຮືອນ, ສິ່ງປຸກສ້າງ ຫຼື ຊັບສິນຄົງທີ່ອື່ນໆ ຢູ່ໃນດິນສ່ວນໃດໜຶ່ງທີ່ຖືກຜົນກະທົບ.

25. ໃນກໍລະນີ ການປະກອບສ່ວນ ດ້ວຍຄວາມສະໝັກໃຈ ໄດ້ຖືກນຳໃຊ້, ເອກະສານ ເຊິ່ງສະແດງ (i) ວ່າ ຜູ້ທີ່ໄດ້ຮັບຜົນກະທົບ ຮັບຮູ້ ວ່າເຂົາເຈົ້າ ໄດ້ຮັບສິດ ການທົດແທນຄ່າເສຍຫາຍ ແລະ (ii) ສອດຄ່ອງກັບ ການນຳໃຊ້ເງື່ອນໄຂທັງໝົດທີ່ກ່າວມາຂ້າງເທິງ, ແລະ ເຊິ່ງໄດ້ເຊັນ ໂດຍທັງຜົວ ແລະ ເມຍ ຂອງຄອບຄົວຜູ້ທີ່ຖືກຜົນກະທົບ, ເອກະສານ ດັ່ງກ່າວຕ້ອງໄດ້ເກັບຮັກສາໄວ້ ຕະຫຼອດອາຍຸໂຄງການ. ພ້ອມນັ້ນ, ໃນກໍລະນີ ການປະກອບດ້ວຍຄວາມສະໝັກໃຈ ໄດ້ຖືກນຳໃຊ້, ຂະບວນການ ຕໍ່ໄປນີ້ ແລະ ຂໍ້ກຳນົດ ຕ້ອງຖືກປະຕິບັດຕາມ:

- ເອກະສານ ສະແດງການເຫັນດີເຫັນພ້ອມຮ່ວມກັນ ສຳລັບການປະກອບສ່ວນ ຊັບສິນ(ເຊັນ ໂດຍທັງຄູ່ຜົວ ແລະ ເມຍ) ຕ້ອງໄດ້ຮັບການກະກຽມ ໃນຮູບແບບ ທີ່ຖືກຕ້ອງຕາມກົດໝາຍ ພາຍໃຕ້ ລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ;
- ການເຜີຍແຜ່ ກອບວຽກ ນະໂຍບາຍ ການຍົກຍ້າຍຈັດສັນ ແລະ ການປຶກສາຫາລື ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຕ້ອງໄດ້ດຳເນີນ ກ່ອນການເຊັນ ເອກະສານທີ່ກ່າວມາຂ້າງເທິງ ໂດຍຜູ້ທີ່ໄດ້ຮັບຜົນກະທົບ ເພື່ອຈະສາມາດ ຮັບປະກັນວ່າ ພວກເຂົາໄດ້ມີຄວາມເຂົ້າໃຈ ກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອຢ່າງຈະແຈ້ງ ທີ່ພວກເຂົາ ໄດ້ຮັບສິດທິ ກ່ຽວກັບ ກອບນະໂຍບາຍ ການຍົກຍ້າຍຈັດສັນ ຂອງໂຄງການ;
- ຕ້ອງນຳໃຊ້ ກົນໄກການຮັບຄຳເຫັນ ແລະ ກົນໄກ ການໄກ່ເກ່ຍ ຂອງໂຄງການ;
- ຊັບສິນ ຂອງຄອບຄົວ ຜູ້ທຸກຍາກ ແລະ ຜູ້ທີ່ດ້ອຍໂອກາດ ຕ້ອງບໍ່ເວນຄືນ ແບບການປະກອບສ່ວນດ້ວຍຄວາມສະໝັກໃຈ.
- *ຂັ້ນຕອນການປະກອບສ່ວນທີ່ດິນ ດ້ວາຍຄວາມສະໝັກໃຈ ໄດ້ສະເໜີໄວ້ຢູ່ໃນເອກະສານຊ້ອນທ້າຍ 6.*

26. ມາດຕະການ ທົດແທນຄ່າເສຍຫາຍ ແລະ ການຟື້ນຟູ ພາຍໃຕ້ ໂຄງການ: ຜູ້ທີ່ໄດ້ຮັບຜົນກະທົບ ພາຍໃຕ້ໂຄງການ ແມ່ນມີສິດທິ ຕາມລາຍການ ມາດຕະການທົດແທນຄ່າເສຍຫາຍ ຫຼື ການຟື້ນຟູ ດັ່ງຕໍ່ໄປນີ້:

- ການປ່ຽນແທນທີ່ດິນ ທີ່ຕອນດິນມີສະມັດຕະພາບເທົ່າທຽມກັນ ຫຼື ຊັບສິນອື່ນໆ ທີ່ມີສະມັດຕະພາບ ເທົ່າທຽມກັນ; ຫຼື
- ການປ່ຽນແທນ ເປັນເງິນສົດ ໂດຍອີງຕາມມູນຄ່າການປ່ຽນແທນ;
- ວັດສະດຸ ແລະ ການຊ່ວຍເຫລືອ ເພື່ອປ່ຽນແທນຢ່າງເຕັມສ່ວນ ຕໍ່ສິ່ງປຸກສ້າງທີ່ຈະຖືກຮື້ຖອນ;
- ການປ່ຽແທນ ຜົນລະປູກ ທີ່ຖືກສູນເສຍ ຕາມມູນຄ່າ ທ້ອງຕະຫລາດ;
- ການຊ່ວຍເຫລືອ ຫຼື ການເບິ່ງແຍງແບບພິເສດ ສໍາລັບຄອບຄົວທຸກຍາກ/ອ່ອນແອ ທີ່ຖືກຜົນກະທົບ;
- ການທົດແທນຄ່າເສຍຫາຍ ຮູບແບບ ອື່ນໆ ທີ່ໄດ້ຮັບຮອງ.

27. ການຍັບຍ້າຍ ແລະ ການຟື້ນຟູ ລາຍຮັບ: ການຍັບຍ້າຍ ເຮືອນ ແບບຖາວອນ ຫຼື ປະຊາຊົນ ທີ່ຈະຖືກຫຼີກລ່ຽງ. ໃນກໍລະນີທີ່ການຫຍັບຍ້າຍ ບໍ່ສາມາດຫຼີກລ້ຽງໄດ້, ຄອບຄົວໄດ້ຮັບຜົນກະທົບ ທີ່ຕ້ອງໄດ້ຫຍັບຍ້າຍ ຈະເຂົ້າຮ່ວມ ໃນການກໍານົດ ແລະ ຄັດເລືອກ ບັນດາທາງເລືອກ ເພື່ອຫຍັບຍ້າຍຢູ່ພາຍໃນຕອນດິນເຂົາເຈົ້າປັດຈຸບັນ ຫຼື ຫຍັບຍ້າຍ ໄປຢູ່ຕອນດິນ ທີ່ຕອບສະໜອງ ໂດຍເມືອງ ຫຼື ໄດ້ຮັບ ການທົດແທນຄ່າເສຍຫາຍ ເປັນເງິນສົດ ແລະ ການກະກຽມການຫຍັບຍ້າຍ ໂດຍເຂົາເຈົ້າ. ໃນກໍລະນີ ທຸລະກິດ ໃດໜຶ່ງ ຕ້ອງໄດ້ຫຍັບຍ້າຍ, ເຂົາເຈົ້າ ຈະໄດ້ຮັບການຊ່ວຍເຫລືອ ເພື່ອຊອກຫາສະຖານແຫ່ງໃໝ່ ທີ່ເໝາະສົມ. ຄົວເຮືອນ ທີ່ໄດ້ຮັບຜົນກະທົບຮ້າຍແຮງ ຜ່ານການສູນເສຍສະມັດຕະພາບ ຊັບສິນ 10% ຫຼື ຫຼາຍກວ່າ ຈະໄດ້ຮັບການຕອບສະໜອງ ໂດຍການປ່ຽນແທນທີ່ດິນ ຫຼື ການຊ່ວຍເຫລືອ ໃນການຊື້ ທີ່ດິນປ່ຽນແທນ. ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ຍັງຈະໄດ້ຮັບການຕອບສະໜອງ ເຕັກນິກການປູກຝັງ ເພື່ອເພີ່ມຜົນຜະລິດ ໃນທີ່ດິນທີ່ຍັງຄົງເຫລືອ ຈາກການສູນເສຍ ແລະ/ຫຼື ທີ່ດິນປ່ຽນແທນ. ພິຈາລະນາ ເຖິງຮູບແບບ ຂອງວຽກຂະໜາດນ້ອຍ, ແຜນການຟື້ນຟູຊີວິດການເປັນຢູ່ ແມ່ນບໍ່ໄດ້ຄາດຄະເນໄວ້. ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ ຈະບໍ່ໄດ້ຍົກຍ້າຍ ຈົນກວ່າ ບ້ານ ໄດ້ຈັດສັນ ທີ່ດິນ ຢູ່ພາຍໃນບ້ານເດີມ ຫຼື ບ້ານໄກ້ຄຽງ.

28. ຜູ້ທີ່ດ້ອຍໂອກາດ, ເພດ ແລະ ຊົນເຜົ່າ: ກອບນະໂຍບາຍ ການຍົກຍ້າຍຈັດສັນ ໄດ້ຮັບຮູ້ວ່າ ກຸ່ມຄົນໃນສັງຄົມ ອາດມີຄວາມສາມາດບໍ່ພຽງພໍ ເພື່ອຟື້ນຟູສະພາບການດໍາລົງຊີວິດ, ຊີວິດການເປັນຢູ່ ແລະ ລະດັບລາຍຮັບ; ແລະ ສະນັ້ນ ຈຶ່ງມີຄວາມສ່ຽງສູງ ທີເຂົາເຈົ້າຈະທຸກຍາກລົງ ໃນກໍລະນີ ດິນ ແລະ ຊັບສິນ ອື່ນໆ ຂອງເຂົາເຈົ້າ ໄດ້ຮັບຜົນກະທົບ. ໂຄງການ ກໍານົດ ຄວາມຕ້ອງການສະເພາະ ໃດໜຶ່ງ ຫຼື ຂໍ້ຂ້ອງໃຈ ທີ່ຕ້ອງໃດ້ພິຈາລະນາ ສໍາລັບກຸ່ມຊົນເຜົ່າ ແລະ ກຸ່ມຜູ້ດ້ອຍໂອກາດ ອື່ນໆ ເຊັ່ນ: ທີ່ດິນມີຂະໜາດນ້ອຍ, ຄວາມທຸກຍາກ ແລະ ຫົວໜ້າຄອບຄົວ ເປັນຜູ້ຍິງ, ຜູ້ພິການ, ຜູ້ເຖົ້າ, ຫຼື ເດັກນ້ອຍ ທີ່ບໍ່ມີແຫຼ່ງລາຍຮັບ. ການປະຕິບັດ ກັບກຸ່ມຊົນເຜົ່າ ເປັນພິເສດ ຕາມຄວາມຈໍາເປັນ ໂດຍສອດຄ່ອງກັບກອບວຽກ ການມີສ່ວນຮ່ວມຂອງຊົນເຜົ່າ (EGEF) ຈະລວມເອົາແຜນການປະຕິບັດ ການຍົກຍ້າຍຈັດສັນ. ການມີສ່ວນຮ່ວມຂອງເພດ ຈະຖືກພິຈາລະນາ ໃນລະຫວ່າງການວາງແຜນ ແລະ ການຈັດຕັ້ງປະຕິບັດ ກອບວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, ກອບນະໂຍບາຍ ການຍົກຍ້າຍຈັດສັນ ແລະ ຂະບວນການ ກອບວຽກສໍາລັບແຜນການມີສ່ວນຮ່ວມຂອງຊົນເຜົ່າ.

## 5.3 ການສ້າງ ແລະ ການຮັບຮອງ ແຜນການປະຕິບັດ ການຍົກຍ້າຍຈັດສັນ

29. ພາຍຫຼັງໄດ້ກໍານົດວ່າ ການເວນຄືນທີ່ດິນ ຫຼື ຜົນກະທົບທີ່ກ່ຽວຂ້ອງ ໃດໜຶ່ງ ແມ່ນມີຄວາມສໍາຄັນ ເພື່ອສໍາເລັດ ກິດຈະກໍາ ໃດໜຶ່ງ ຂອງໂຄງການຍ່ອຍ, ແລະ ພາຍຫຼັງໄດ້ກໍານົດ ເງື່ອນໄຂເນື້ອທີ່ດິນ ທີ່ຖືກເວນຄືນ, ແຜນການຍົກຍ້າຍຈັດສັນຕ້ອງໄດ້ເລີ່ມຕົ້ນ. ເຈົ້າຂອງໂຄງການ(ພຍທຂ) ຈະດໍາເນີນ, ຫຼື ຈະເປັນສາເຫດ ໃຫ້ມີການດໍາເນີນ ການສໍາຫຼວດພົນລະເມືອງ ເພື່ອກໍານົດ ແລະ ຄິດໄລ່ ຜູ້ທີ່ຖືກຍົກຍ້າຍ ທັງໝົດ, ແລະ ການສໍາລວດ ເສດຖະກິດ-ສັງຄົມ ເພື່ອກໍານົດ

ຂະໜາດ ແລະ ຂອບເຂດ ຂອງຜົນກະທົບດ້ານລົບ ຢູ່ໃນພື້ນທີ່ຖືກຜົນກະທົບ. ການສໍາລວດພົນລະເມືອງ ຕ້ອງກວມເອົາ 100% ຂອງຄົນ ທີ່ຖືກຍົກຍ້າຍ; ການສໍາຫຼວດເສດຖະກິດ-ສັງຄົມ ອາດຖືກດໍາເນີນການ ເປັນຕົວຢ່າງພື້ນຖານ. ການສໍາຫຼວດ ເຊິ່ງອາດຖືກດໍາເນີນ ແຍກຕ່າງຫາກ ຫຼື ໄປພ້ອມໆກັນ ໃນການກໍານົດ ວ່າ ແຜນການປະຕິບັດ ການຍົກຍ້າຍຈັດສັນ ຫຼື ແຜນການປະຕິບັດ ການຍົກຍ້າຍຈັດສັນແບບສັງລວມຫຍໍ້ ມີຄວາມຈໍາເປັນ ຫຼື ບໍ. ໃນກໍລະນີ ຈໍານວນ ຜູ້ທີ່ໄດ້ຮັບຜົນກະທົບເກີນ 200 ຄົນ, ແຜນການປະຕິບັດການຍົກຍ້າຍຈັດສັນ ແບບຄົບຊຸດ ແມ່ນມີຄວາມຈໍາເປັນ. ໃນກໍລະນີ ຜົນກະທົບ ຕໍ່ຜູ້ທີ່ຖືກຍົກຍ້າຍ ມີໜ້ອຍ, ຫຼື ໜ້ອຍກວ່າ 200 ຄົນ ທີ່ຖືກຜົນກະທົບ, ອາດໄດ້ສ້າງແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້. ຜົນກະທົບ ອາດຖືກພິຈາລະນາ ມີໜ້ອຍ ໃນກໍລະນີ ຜູ້ທີ່ໄດ້ຮັບຜົນກະທົບ ບໍໄດ້ຖືກຍົກຍ້າຍທີ່ຢູ່ອາໄສ ແລະ ຊັບສິນ ຂອງເຂົາເຈົ້າ ໄດ້ຖືກສູນເສຍນ້ອຍກວ່າ 10%.

30. ໃນກໍລະນີ ແຜນການປະຕິບັດ ການຍົກຍ້າຍຈັດສັນ ມີຄວາມຈໍາເປັນ, ຈະຕ້ອງໄດ້ສ້າງແຜນການປະຕິບັດ ການຍົກຍ້າຍຈັດສັນ ໂດຍສອດຄ່ອງກັບຫຼັກການ ນະໂຍບາຍການວາງແຜນ ແລະ ການປະຕິບັດ ການກະກຽມ ຕາມທີ່ກໍານົດໄວ້ ຢູ່ໃນກອບນະໂຍບາຍ ການຍົກຍ້າຍຈັດສັນ. ແຜນການປະຕິບັດ ການຍົກຍ້າຍຈັດສັນ ແມ່ນອີງຕາມການສໍາຫຼວດຂໍ້ມູນພື້ນຖານພົນລະເມືອງ ທີ່ຖືກຕ້ອງ ແລະ ການສໍາຫຼວດ ຂໍ້ມູນດ້ານເສດຖະກິດ-ສັງຄົມ, ແລະ ກໍານົດ ມາດຕະການຫຼຸດຜ່ອນ ອັນເໝາະສົມ(ຕົວຢ່າງ: ການທົດແທນຄ່າເສຍຫາຍ ຕໍ່ຊັບສິນ, ການຊ່ວຍເຫຼືອ ໃນໄລຍະຂ້າມຜ່ານ, ແລະ ການຊ່ວຍເຫຼືອ ເພື່ອຟື້ນຟູ ເສດຖະກິດ) ຕາມຄວາມເໝາະສົມ ສໍາລັບປະເພດ ຂອງຜົນກະທົບດ້ານລົບ ທັງໝົດ. ໂດຍອີງຕາມປະເພດ ຂອງຜົນກະທົບ, ແຜນການປະຕິບັດ ການຍົກຍ້າຍຈັດສັນ ຕ້ອງປະກອບມີ ດັ່ງນີ້:

- ລາຍລະອຽດ ຂອງກິດຈະກໍາ ທີ່ເປັນສາເຫດ ໃຫ້ມີການເວນຄືນທີ່ດິນ;
- ຂະໜາດ ແລະ ຂອບເຂດ ຂອງຜົນກະທົບດ້ານລົບ ທີ່ອາດຈະເກີດຂຶ້ນ;
- ການສໍາລວດ ເສດຖະກິດ-ສັງຄົມ ແລະ ຂໍ້ມູນພື້ນຖານ ການສໍາລວດ ພົນລະເມືອງ ລວມທັງຜົນກະທົບຕໍ່ຊີວິດການເປັນຢູ່;
- ການທົບທວນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ທີ່ຕິດພັນກັບການເວນຄືນທີ່ດິນ ແລະ ການຍົກຍ້າຍຈັດສັນ;
- ອັດຕາການທົດແທນຄ່າເສຍຫາຍ ສະເພາະ(ຫຼື ມາດຕະການ ທາງເລືອກ) ສໍາລັບປະເພດທັງໝົດ ຂອງຊັບສິນທີ່ຖືກຜົນກະທົບ;
- ມາດຕະການ ອື່ນໆ, ໃນກໍລະນີ ທີ່ມີຄວາມຈໍາເປັນ ເພື່ອຕອບສະໜອງ ໂອກາດ ສໍາລັບການຟື້ນຟູ ເສດຖະກິດຂອງຜູ້ທີ່ຖືກຍົກຍ້າຍ;
- ເງື່ອນໄຂ ສິດທີ່ໄດ້ຮັບ ການທົດແທນຄ່າເສຍຫາຍ ແລະ ຮູບແບບການຊ່ວຍເຫຼືອ ອື່ນໆ;
- ການກະກຽມ ການຫຍັບຍ້າຍ, ໃນກໍລະນີທີ່ຈໍາເປັນ, ລວມທັງການສະໜັບສະໜູນ ໃນໄລຍະຂ້າມຜ່ານ;
- ການຟື້ນຟູ ຫຼື ການປ່ຽນແທນ ພື້ນຖານໂຄງລ່າງ ແລະ ການບໍລິການ ຂອງຊຸມຊົນ;
- ໂຄງປະກອບ ອົງການຈັດຕັ້ງ ທີ່ຈັດຕັ້ງປະຕິບັດ;
- ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ;
- ແຜນເວລາ ການຈັດຕັ້ງປະຕິບັດ ການຍົກຍ້າຍຈັດສັນ
- ມູນຄ່າ ແລະ ງົບປະມານ;
- ການຕິດຕາມກວດກາ;
- ຂັ້ນຕອນການຮ້ອງທຸກ;
- ຕາຕະລາງສະຫຼຸບ ສິດທິທີໄດ້ຮັບ.

31. ໃນກໍລະນີ ຕ້ອງໄດ້ສ້າງ ແຜນການປະຕິບັດ ການຍົກຍ້າຍຈັດສັນ ແບບສັງລວມຫຍໍ້, ແມ່ນອີງຕາມ ຫຼັກການ ແຜນການ ແລະ ການຈັດຕັ້ງປະຕິບັດ ຕາມທີ່ກຳນົດໄວ້ຢູ່ໃນ ກອບນະໂຍບາຍ ການຍົກຍ້າຍຈັດສັນ. ແຜນການປະຕິບັດ ການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ໂດຍທົ່ວໄປແລ້ວ ປະກອບມີ ດັ່ງນີ້:

- ການສຳຫຼວດ ພົນລະເມືອງ ຂອງຜູ້ທີ່ຖືກຍົກຍ້າຍ, ມູນຄ່າ ຂອງຊັບສິນ ລວມທັງຜົນກະທົບຕໍ່ຊີວິດການເປັນຢູ່;
- ລາຍລະອຽດ ຂອງການທົດແທນຄ່າເສຍຫາຍ ແລະ ການຕອບສະໜອງ ການຊ່ວຍເຫລືອ ການຍົກຍ້າຍຈັດສັນ ອື່ນໆ;
- ເງື່ອນໄຂ ສິດທີ່ໄດ້ຮັບ;
- ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ;
- ໂຄງປະກອບອົງການຈັດຕັ້ງ ທີ່ຈັດຕັ້ງປະຕິບັດ;
- ຕາຕະລາງເວລາ ແລະ ງົບປະມານ;
- ການຕິດຕາມກວດກາ;
- ຂັ້ນຕອນ ການຮ້ອງທຸກ.

32. ການສ້າງແຜນການປະຕິບັດການຍົກຍ້າຍຈັດສັນ ໃດໜຶ່ງ ໂດຍສອດຄ່ອງກັບ ກອບນະໂຍບາຍ ການຍົກຍ້າຍຈັດສັນ ຕ້ອງໄດ້ຮັບການທົບທວນ ໂດຍທະນາຄານ ກ່ອນເຮັດສັນຍາ ສຳລັບວຽກງານກໍ່ສ້າງ ທີ່ເປັນສາເຫດ ຂອງການຍົກຍ້າຍ. ການເກັບກຳຂໍ້ມູນ ຂອງໂຄງການຍ່ອຍ ໃນປີທຳອິດ ຢູ່ແຂວງບໍລິຄຳໄຊ ແລະ ໄຊຍະບູລີ ໄດ້ສະແດງໃຫ້ເຫັນວ່າ ແຜນການປະຕິບັດ ການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຈະໄດ້ຮັບການກະກຽມ ສຳລັບແຕ່ລະ ໂຄງການຍ່ອຍ. ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຈະຖືກນຳສະເໜີ ໃຫ້ທະນາຄານໂລກ ເພື່ອພິຈາລະນາ ຮັບຮອງ.

## 5.4 ນະໂຍບາຍ ກ່ຽວກັບ ສິດທິທີ່ໄດ້ຮັບ

33. ຜູ້ທີ່ຖືກຍົກຍ້າຍທັງໝົດ ແມ່ນໄດ້ຮັບການທົດແທນຄ່າເສຍຫາຍ ຫຼື ຮູບແບບການຊ່ວຍເຫລືອ ອື່ນໆ ທີ່ກ່ຽວຂ້ອງກັບ ລັກສະນະ ຂອງຜົນກະທົບ ທີ່ເກີດຂຶ້ນ ກັບເຂົາເຈົ້າ(ເບິ່ງ ລາຍລະອຽດ ໃນເອກະສານຊ້ອນທ້າຍ 1). ໂດຍທົ່ວໄປ ປະຊາຊົນ ທີ່ໄດ້ຮັບສິດ ສຳລັບການທົດແທນຄ່າເສຍຫາຍ ອາດລວມມີ ຜົນກະທົບ ໃນລັກສະນະ ດັ່ງຕໍ່ໄປນີ້:

- ທີ່ດິນຖືກເວນຄືນ ສຳລັບໂຄງການ ແບບຖາວອນ: ນີ້ອາດລວມມີ ກ) ເຈົ້າຂອງ ທີ່ມີໃບຕາດິນ ແບບຖືກຕ້ອງ ຕາມກົດໝາຍ, ຂ) ຜູ້ນຳໃຊ້ທີ່ດິນ ທີ່ມີສິດສ ໍາລັບໃບຕາດິນ ທີ່ຖືກຕ້ອງຕາມກົດໝາຍ ຢ່າງເປັນທາງການພາຍໃຕ້ ກົດໝາຍ ສປປ ລາວ ແລະ ຄ) ທີ່ຢູ່ອາໄສ ຢູ່ໃນ ຫຼື ການນຳໃຊ້ ດິນລັດ ກ່ອນການກຳນົດ ວັນທີ ເລີ່ມຕົ້ນ ໂຄງການ, ໂດຍທົ່ວໄປແລ້ວ ວັນທີ ການແຈ້ງການ ກ່ຽວກັບ ກິດຈະກຳ ວຽກງານກໍ່ສ້າງ ສະເພາະ ທີ່ອາດຈະສົ່ງຜົນ ໃຫ້ມີການຍົກຍ້າຍ. ຜູ້ທີ່ຖືກຍົກຍ້າຍ ປະເພດ ກ) ແລະ ປະເພດ ຂ) ແມ່ນໄດ້ຮັບສິດ ໃນການທົດແທນຄ່າເສຍຫາຍ ໃນມູນຄ່າປ່ຽນແທນ. ການປ່ຽນແທນ ການທົດແທນຄ່າເສຍຫາຍ ຢ່າງເປັນທາງການ, ຜູ້ທີ່ຖືກຍົກຍ້າຍ ໃນປະເພດ ຄ) ໄດ້ຮັບການຕອບສະໜອງ ໃນຮູບແບບທາງເລືອກ ການຊ່ວຍເຫລືອ ອື່ນໆ ໃນມູນຄ່າທີ່ເທົ່າທຽມກັນ ກັບມູນຄ່າປ່ຽນແທນ.
- ການສູນເສຍ ເຮືອນ, ສິ່ງປຸກສ້າງອື່ນ ແລະ ຊັບສິນຄົງທີ່ ລວມທັງຕົ້ນໄມ້ ແລະ ພືນລະປູກ ຢືນຕົ້ນ: ເຈົ້າຂອງ ເຮືອນ ແລະ ຊັບສິນ ອື່ນໆ(ເຖິງແມ່ນວ່າ ພວກເຂົາ ຄອບຄອງໃບຕາດິນ ຫຼື ໃບອະນຸຍາດ ການປຸກສ້າງ ກ່ອນວັນທີ ເລີ່ມຕົ້ນໂຄງການ ຫລືບໍ່)
- ການສູນເສຍ ທີ່ກ່ຽວຂ້ອງກັບຜົນກະທົບ ແບບຊົ່ວຄາວ: ນີ້ອາດລວມມີ ການສູນເສຍ ທີ່ດິນ ຊົ່ວຄາວ, ແລະ ມູນຄ່າ ໃນໄລຍະຂ້າມຜ່ານ ທີ່ຕິດພັນກັບການຍົກຍ້າຍ ຫຼື ການລົບກວນ ທຸລະກິດ ລະຫວ່າງການກໍ່ສ້າງ.

34. ຜູ້ທີ່ຖືກຍົກຍ້າຍ ຈະໄດ້ຮັບສິດ ຮູບແບບ ມາດຕະການ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ ດັ່ງຕໍ່ໄປນີ້:

*(1) ຜູ້ທີ່ຖືກຍົກຍ້າຍ ທີ່ສູນເສຍ ດິນກະສິກຳ:*

a) ກົນໄກທີ່ຄັດເລືອກ ການທົດແທນຄ່າເສຍຫາຍ ສຳລັບທີ່ດິນກະສິກຳ ທີ່ຖືກສູນເສຍ ຈະຖືກຕອບສະໜອງ ຜ່ານດິນປ່ຽນແທນ ທີ່ມີສະມັດຕະພາບເທົ່າທຽມກັນ ແລະ ໄດ້ຮັບການຍອມຮັບ ຈາກຜູ້ທີ່ຖືກຍົກຍ້າຍ. ໃນກໍລະນີ ບໍ່ສາມາດຊອກຫາ ທີ່ດິນປ່ຽນແທນ ອັນເໝາະສົມ, ການທົດແທນຄ່າເສຍຫາຍ ໃນມູນຄ່າປ່ຽນແທນ ອາດຖືກຕອບສະໜອງ.

b) ຜູ້ທີ່ຖືກຍົກຍ້າຍ ຈະໄດ້ຮັບການທົດແທນຄ່າເສຍຫາຍ ສຳລັບການສູນເສຍ ຜົນລະປູກ ຕາມທ້ອງຕະຫລາດ, ຕົ້ນໄມ້ເສດຖະກິດ ຕາມມູນຄ່າປະຈຸບັນ, ແລະ ຊັບສິນຄົງທີ່ ອື່ນໆ(ອີງປະກອບສິ່ງປຸກສ້າງ, ນ້ຳສ້າງ, ຮົ້ວ, ການປັບປຸງ ຊົນລະປະທານ) ຕາມມູນຄ່າປ່ຽນແທນ.

c) ການນຳໃຊ້ທີ່ດິນ ຊົ່ວຄາວ ຈະໄດ້ຮັບການຈ່າຍເງິນ ທົດແທນຄ່າເສຍຫາຍ ຕາມອັດຕາ ໄລຍະເວລາ ທີ່ນຳໃຊ້, ແລະ ທີ່ດິນ ແລະ ຊັບສິນ ອື່ນໆ ຈະໄດ້ຮັບການຟື້ນຟູ ໃຫ້ກັບຄືນສູ່ສະພາບກ່ອນການນຳໃຊ້ ໂດຍທີ່ ເຈົ້າຂອງ ຫຼື ຜູ້ນຳໃຊ້ ບໍ່ມີຄ່າໃຊ້ຈ່າຍ.

*(2)* ຜູ້ທີ່ຖືກຍົກຍ້າຍທີ່ສູນເສຍ ທີ່ດິນປຸກສ້າງ ແລະ ສິ່ງປຸກສ້າງ

a) ການສູນເສຍ ທີ່ດິນປຸກສ້າງ ແລະ ສິ່ງປຸກສ້າງ ຈະໄດ້ຮັບການທົດແທນຄ່າເສຍຫາຍ ທັງໃນຮູບແບບ(ຜ່ານທາງ ການປ່ຽນແທນເຮືອນ ແລະ ເນື້ອທີ່ສວນ ທີ່ມີຂະໜາດເທົ່າທຽມກັນ, ເປັນທີ່ພໍໃຈ ໂດຍຜູ້ທີ່ຖືກຍົກຍ້າຍ, ຫຼື ການທົດແທນ ເປັນເງິນສົດ ຕາມມູນຄ່າປ່ຽນແທນ)

b) ກໍລະນີ ການເວນຄືນ ທີ່ດິນສ່ວນໃດໜຶ່ງ, ສ່ວນທີ່ດິນປຸກສ້າງ ຍັງເຫຼືອ ແມ່ນບໍພຽງພໍ ຕໍ່ການສ້າງຄືນ ຫຼື ການຟື້ນຟູສິ່ງປຸກສ້າງອື່ນໆຕາມຂະໜາດ ຫຼື ມູນຄ່າທີ່ເທົ່າທຽມກັນ, ໂດຍອີງຕາມການຮ້ອງຂໍ ຂອງຜູ້ທີ່ຖືກຍົກຍ້າຍ ທີ່ດິນປຸກສ້າງ ແລະ ສິ່ງປຸກສ້າງ ທັງໝົດ ຈະຖືກເວນຄືນຕາມມູນຄ່າປ່ຽນແທນ.

c) ການທົດແທນຄ່າເສຍຫາຍ ຈະໄດ້ຈ່າຍ ຕາມມູນຄ່າການປ່ຽນແທນ ຊັບສິນຄົງທີ່.

d) ຜູ້ເຊົ່າ ທີ່ໄດ້ເຊົ່າ ເຮືອນ ເພື່ອຈຸດປະສົງຢູ່ອາໄສ ຈະໄດ້ຮັບການຕອບສະໜອງ ເປັນເງິນສົດ ເທົ່າກັບຄ່າເຊົ່າສາມເດືອນ ຕາມອັດຕາລາຄາ ຢູ່ທ້ອງຕະຫລາດໃນພື້ນທີ່ ແລະ ຈະໄດ້ຮັບການຊ່ວຍເຫຼືອ ໃນການຊອກຫາບ່ອນຢູ່ອາໄສ.

*(3) ຜູ້ທີ່ຖືກຍົກຍ້າຍ ທີ່ສູນເສຍທຸລະກິດ*

a) ການທົກແທນຄາເສຍຫາຍສຳລັບການສູນເສຍ ທຸລະກິດ ຈະກ່ຽວຂ້ອງ: (i) ການຕອບສະໜອງທາງເລືອກສະຖານທີ່ ທຸລະກິດ ຕາມຂະໜາດ ທີ່ເທົ່າທຽມກັນ ແລະ ການເຂົ້າເຖິງ ຂອງລູກຄ້າ, ເປັນທີ່ພໍໃຈ ໂດຍຜູ້ດຳເນີນທຸລະກິດ ທີຖືກຍົກຍ້າຍ, (ii) ການທົດແທນຄ່າເສຍຫາຍ ເປັນເງິນສົດ ສຳລັບການສູນເສຍ ໂຄງສ້າງທຸລະກິດ; ແລະ (iii) ການສະໜັບສະໜູນ ໃນໄລຍະຂ້າມຜ່ານ ຕໍ່ການສູນເສຍລາຍຮັບ(ລວມທັງ ລາຍຮັບຂອງລູກຈ້າງ) ໃນລະຫວ່າງໄລຍະເວລາຂ້າມຜ່ານ.

*(4) ພື້ນຖານໂຄງລ່າງ ແລະ ການເຂົ້າເຖິງ ການບໍລິການ*

- ພື້ນຖານໂຄງລ່າງ(ເຊັ່ນ: ແຫຼ່ງນໍ້າ, ເສັ້ນທາງ, ລະບົບຮ່ອງລະບາຍນໍ້າເສຍ ແລະ ໄຟຟ້າ)ການບໍລິການ ຊຸມຊົນ(ເຊັ່ນ ໂຮງຮຽນ, ຫ້ອງກວດພະຍາດ ຫຼື ສູນ ຊຸມຊົນ) ຈະຖືກຟື້ນຟູ ຫຼື ປ່ຽນແທນ ໂດຍບໍ່ມີຄ່າໃຊ້ຈ່າຍ ສໍາລັບຊຸມຊົນ ທີ່ຖືກຜົນກະທົບ. ໃນກໍລະນີ ເຂດຍົກຍ້າຍຈັດສັນໃໝ່ ໄດ້ຮັບການສ້າງຕັ້ງ, ພື້ນຖານໂຄງລ່າງ ແລະ ການບໍລິການ ທີ່ກ່ຽວຂ້ອງກັບ ມາດຕະຖານທ້ອງຖິ່ນ ຈະໄດ້ຮັບການຕອບສະໜອງ ໂດຍບໍ່ມີຄ່າໃຊ້ຈ່າຍ ສໍາລັບຜູ້ທີ່ຖືກຍົບ ຍ້າຍ.

### 5.5 ມາດຕະການຟື້ນຟູ

35. ການທົດແທນຄ່າເສຍຫາຍ ອາດພຽງພໍ ເພື່ອໃຫ້ ຜູ້ທີ່ຖືກຍົກຍ້າຍ ໄດ້ຟື້ນຟູ ລາຍຮັບ ໃນກໍລະນີ ການຈ່າຍ ເປັນມູນຄ່າ ປ່ຽນແທນ, ຄາດຄະເນວ່າ ມີຊັບສິນປ່ຽນແທນ. ເຖິງຢ່າງໃດກໍ່ຕາມ ການຍົກຍ້າຍຈັດສັນ ອາດຕ້ອງການ ໃຫ້ຜູ້ທີ່ຖືກ ຍົກຍ້າຍ ໄດ້ຮັບທັກສະໃໝ່ ທີ່ຕ້ອງການ ເພື່ອເລີ່ມຕົ້ນການຜະລິດ ໃນສະພາບແວດລ້ອມໃໝ່, ຫຼື ສ້າງແຫຼ່ງລາຍຮັບໃ ໝ່. ແຜນການປະຕິບັດການຍົກຍ້າຍຈັດສັນ/ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຕ້ອງປະເມີນ ຄວາມສໍາຄັນ ຂອງຜົນກະທົບ ທີ່ຖືກກະທົບ ຕໍ່ຜູ້ທີ່ຖືກຍົກຍ້າຍ, ແລະ ຕອບສະໜອງມາດຕະການ ເພື່ອຊ່ວຍເຫລືອ ຜູ້ ທີ່ໄດ້ຮັບຜົນກະທົບ ທີ່ຫຼວງຫລາຍ ໃນການປັບຕົວເຂົ້າກັບສິ່ງທ້າທາຍ ສໍາລັບຊີວິດການເປັນຢູ່ ໃໝ່. ຂອບເຂດການມີ ສ່ວນຮ່ວມ ສໍາລັບມາດຕະການ ດັ່ງກ່າວ, ລວມທັງການຝຶກອົບຮົມ, ການຂະຫຍາຍ ການບໍລິການ ຫຼື ການວ່າຈ້າງງານ ໄປຄຽງຄູ່ກັບ ຄວາມຮັບຜິດຊອບ ໃນການຕອບສະໜອງ ໃຫ້ເຂົາເຈົ້າ ຕ້ອງຖືກກໍານົດໄວ້ໃນ ແຜນການປະຕິບັດ ການ ຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້.

### 5.6 ການປຶກສາຫາລື ແລະ ການເຜີຍແຜ່ ຂໍ້ມູນຂ່າວສານ

36. ພາຍຫລັງ ວຽກງານການກໍ່ສ້າງ ໂຄງການຍ່ອຍ ໄດ້ຮັບການກໍານົດ, ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ຮັບການປຶກສາຫາລື ກ່ຽວກັບ ໂຄງການ ແລະ ໄດ້ຮັບການຊຸກຍູ້ ເພື່ອເຂົ້າຮ່ວມ ໃນກອງປະຊຸມປຶກສາຫາລື ເພື່ອຈະສາມາດ ຮັບປະກັນ ພວກເຂົາ ມີຄວາມເຂົ້າໃຈ ກ່ຽວກັບ ໂຄງການ ແລະ ນະໂຍບາຍ ການທົດແທນຄ່າເສຍຫາຍ ຂອງໂຄງການ ຢ່າງຈະແຈ້ງ ແລະ ເພື່ອຫຼຸດຜ່ອນ ການຮ້ອງທຸກ. ເຖິງຢ່າງໃດກໍ່ຕາມ, ໃນລະຫວ່າງ ການປະຕິບັດວຽກງານຕົວຈິງ, ບາງບັນຫາ ອາດ ເກີດຂຶ້ນ.

37. ເພື່ອສົ່ງເສີມ ການເຂົ້າຮ່ວມ ໃນໂຄງການ ຢ່າງຕັ້ງຫນ້າ ແລະ ການປັບຕົວ ເຂົ້າກັບສະພາບການດໍາລົງຊີວິດ ທີ່ຖືກ ປ່ຽນແປງ, ຜູ້ທີ່ຖືກຍົກຍ້າຍ ຕ້ອງໄດ້ຮັບການຕອບສະຫນອງ ໂອກາດ ເພື່ອເຂົ້າຮ່ວມ ໃນການວາງແຜນ ແລະ ຈັດຕັ້ງ ປະຕິບັດ. ຢ່າງນ້ອຍສຸດ ຜູ້ທີ່ຖືກຍົກຍ້າຍ ຕ້ອງໄດ້ຮັບການປຶກສາຫາລື ກ່ຽວກັບ ຄວາມຕ້ອງການ ແລະ ຂໍ້ຂ້ອງໃຈ ໃນ ລະຫວ່າງຂະບວນການວາງແຜນ ການຍົກຍ້າຍຈັດສັນ. ຜູ້ທີ່ຖືກຍົກຍ້າຍທັງໝົດໄດ້ຮັບການແຈ້ງ ກ່ຽວກັບຜົນກະທົບ ທີ່ອາດຈະເກີດຂຶ້ນ ແລະ ນໍາສະເໜີ ມາດຕະການຫຼຸດຜ່ອນ ລວມທັງອັດຕາການທົດແທນຄ່າເສຍຫາຍ. ໄດ້ນໍາໃຊ້ທຸກ ຄວາມພະຍາຍາມ ເພື່ອຮັບປະກັນວ່າຜູ້ຍົກຍ້າຍທັງໝົດ ທີ່ຢູ່ໃນສະພາບບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ລວມທັງຜູ້ຍິງ ທີ່ເປັນຫົວໜ້າຄອບຄົວ ແລະ ຜູ້ບໍ່ສາມາດຊ່ວຍເຫລືອຕົນເອງໄດ້ ສາມາດເຂົ້າເຖິງຂໍ້ມູນຂ່າວສານ. ເພື່ອໃຫ້ສອດຄ່ອງ ກັບ OP/BP 4.12, ແຜນການ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຈະຖືກ ເປີດເຜີຍ ໃນຮູບແບບ ທີ່ເຂົ້າເຖິງໄດ້ ຂອງຜູ້ທີ່ຖືກຍົກຍ້າຍ ຫລື ໄດ້ຮັບຜົນກະທົບ.

## 6 ຂອບເຂດ ການຈັດຕັ້ງປະຕິບັດ

38. ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ທົບທວນ ໂຄງ ປະກອບ ອົງການຈັດຕັ້ງ ເພື່ອຮັບປະກັນວ່າ ຂັ້ນຕອນ ການຈັດຕັ້ງປະຕິບັດ ມີຄວາມຈະແຈ້ງ, ຄວາມຮັບຜິດຊອບ ໄດ້

ກໍານົດອອກ ຈະແຈ້ງ ເພື່ອຕອບສະໜອງ ທຸກຮູບແບບການຊ່ວຍເຫລືອ, ແລະ ຮັບປະກັນ ການປະສານງານ ທີ່ພຽງພໍ ລະຫວ່າງ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການ ປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້. ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການ ຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຕ້ອງລວມເອົາ ຕາຕະລາງເວລາ ການຈັດຕັ້ງປະຕິບັດ ລະອຽດ, ເຊື່ອມຕໍ່ ຕາຕະລາງ ເວລາ ການກໍ່ສ້າງໂຄງການ ກັບກິດຈະກໍາ ການຍົກຍ້າຍຈັດສັນທີ່ກ່ຽວຂ້ອງ. ການຈັດຕັ້ງປະຕິບັດ ຕາຕະລາງເວລາ ຕ້ອງ ກໍານົດວ່າ ການທົດແທນຄ່າເສຍຫາຍ(ເປັນເງິນສົດ ຫຼື ຮູບແບບໃດໜຶ່ງ) ຕ້ອງສໍາເລັດ ຢ່າງນ້ອຍສຸດ ໜຶ່ງເດືອນ ກ່ອນ ການເລີ່ມຕົ້ນວຽກງານກໍ່ສ້າງ, ແລະ ຢ່າງນ້ອຍສຸດ ສາມເດືອນ ກ່ອນການຮື້ຖອນ ສິ່ງປຸກສ້າງ. ໃນພາກນີ້ ໄດ້ສະເໜີ ອົງການຮັບຜິດຊອບ, ງົບປະມານ, ການຕິດຕາມກວດກາ ແລະ ການປະເມີນ, ແລະ ກົນໄກ ການແກ້ໄຂຄໍາຮ້ອງທຸກ.

## 6.1 ອົງການຈັດຕັ້ງ ທີ່ຮັບຜິດຊອບ

39. ໂຄງການຍ່ອຍ ການບໍາລຸງຮັກສາ ເສັ້ນທາງ ແລະ ການປັບຕົວເຂົ້າ ກັບດິນຟ້າອາກາດ ຖືກຈັດຕັ້ງປະຕິບັດ ພາຍໃຕ້ ອົງ ປະກອບທີ 1 ຂອງໂຄງການ ທີ່ໄດ້ຮັບການກະກຽມ ແລະ ຈັດຕັ້ງປະຕິບັດ ໂດຍ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ (ພຍທຂ) ໂດຍການປຶກສາຫາລື ຢ່າງໃກ້ຊິດ ກັບກົມຂົວທາງ ແລະ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງ ກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ. ໜ່ວຍງານ ສິ່ງແວດລ້ອມ ແລະ ສັງຄົມ ຂອງ ພຍທຂ ຈະ ຮັບຜິດຊອບ ການກະກຽມ ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບ ສັງລວມຫຍໍ້ ໂດຍການປຶກສາຫາລື ຮ່ວມກັບ ກົມຂົວທາງແລະ ພະແນກສິ່ງແວດລ້ອມ ແລະ ສັງຄົມ ຂອງສະຖາບັນ ໂຍທາທິການ ແລະ ຂົນສົ່ງ. ຄະນະກໍາມະການ ຍົກຍ້າຍຈັດສັນ ຂັ້ນແຂວງ ຈະໄດ້ຮັບການສ້າງຕັ້ງຂຶ້ນ ໃນກໍລະນີ ໂຄງການຍ່ອຍ ພົວພັນ ການເວນຄືນທີ່ດິນ ຫຼື ການທົດແທນຄ່າເສຍຫາຍ. ໂຄງຮ່າງການຈັດຕັ້ງ ຂະບວນການ ທົດ ແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ ສໍາລັບຂົວທາງ ໄດ້ສະແດງໄວ້ໃນ ເອກະສານຊ້ອນທ້າຍ 5.

40. ກົມຂົວທາງ ແລະ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ ຈະຖືກຮັບຜິດຊອບ ການຕິດຕາມກວດກາ ແລະ ການລາຍງານ ການຈັດຕັ້ງປະຕິບັດ ທຸກໆ 6 ເດືອນ ແລະ ກະກຽມ ບົດລາຍງານ ການຕິດຕາມກວດກາ ນະໂຍບາຍການປົກປ້ອງ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນການປະຕິບັດ ການ ຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ປະຈໍາ 6 ເດືອນ ແລະ ປະຈໍາປີ. ກົມຂົວ ທາງ ແລະ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ ຈະຕອບ ສະໜອງ ການຝຶກອົບຮົມ ໃຫ້ ພຍທຂ ແລະ ແຂວງ ຕາມຄວາມຈໍາເປັນ.

41. ໃນກໍລະນີ ມີຄວາມຕ້ອງການ ແຜນການປະຕິບັດ ການຍົກຍ້າຍຈັດສັນ, ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ແຜນການປະຕິບັດ ການຍົກຍ້າຍຈັດສັນ, ໃນລະດັບ ໂຄງການຍ່ອຍ ພຍທຂ ຈະສ້າງຕັ້ງ ຫ້ອງການ ຍົກຍ້າຍຈັດສັນ ໂຄງການ ເພື່ອຮັບຜິດຊອບ ການວາງແຜນ ແລະ ການຈັດຕັ້ງປະຕິບັດ ເປັນປະຈໍາວັນ ລວມທັງເຮັດໜ້າທີ່ ເປັນກອງ ເລຂາ ຄະນະກໍາທະການຍົກຍ້າຍຈັດສັນ ຂັ້ນແຂວງ ທີ່ຖືກສ້າງຕັ້ງ ໃນແຂວງ ຂອງໂຄງການຍ່ອຍ. ຄະນະກໍາທະການ ຍົກຍ້າຍຈັດສັນ ຂັ້ນແຂວງ ແລະ ຫ້ອງການ ຍົກຍ້າຍຈັດສັນ ໂຄງການ ຈະໄດ້ຮັບການຊ່ວຍເຫລືອ ໂດຍຄະນະກໍາມະ ການ ຍົກຍ້າຍຈັດສັນ ຂັ້ນເມືອງ ແລະ ຂັ້ນບ້ານ, ແລະ ພະແນກການ ທີ່ກ່ຽວຂ້ອງ ຕາມຄວາມຈໍາເປັນ. ບົດບາດຫຼັກ ຂອງຄະນະກໍາມະການ ເຫຼົ່ານີ້ ໄດ້ລະບຸໄວ້ ລຸ່ມນີ້. ແຕ່ວ່າ ປະສົບການ ໃນການຈັດຕັ້ງປະຕິບັດ ໄດ້ສະແດງໃຫ້ເຫັນວ່າ ແຜນການປະຕິບັດ ການຍົກຍ້າຍຈັດສັນ/ແຜນການປະຕິບັດ ການຍົກຍ້າຍຈັດສັນ ສັງລວມຫຍໍ້ ຂະໜາດນ້ອຍ ທີ່ຕິດ ພັນ ກັບພະແນກການ ຕ່າງໆ ສາມາດດໍາເນີນຮ່ວມກັນ ຜ່ານຫ້ອງວ່າການປົກຄອງ ແຂວງ ແລະ ບໍ່ມີຄວາມຈໍາເປັນ ຕ້ອງ ສ້າງຕັ້ງຄະນະກໍາທະການຍົກຍ້າຍຈັດສັນ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

42. ຄະນະກຳມະການຍົກຍ້າຍຈັດສັນ ຂັ້ນແຂວງ: ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ກິດຈະກຳ ການຍົກຍ້າຍຈັດສັນ ຢ່າງສະດວກສະບາຍ, ຄະນະກຳມະການຍົກຍ້າຍຈັດສັນ ຂັ້ນແຂວງ ຈະໄດ້ແຕ່ງຕັ້ງ ຫົວໜ້າ ໂດຍທ່ານຮອງເຈົ້າແຂວງ, ແລະ ເຂົ້າຮ່ວມ ໂດຍພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ໃນນາມເປັນເຈົ້າຂອງໂຄງການຍ່ອຍ. ພ້ອມນັ້ນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມມ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ແລະ ອົງການຈັດຕັ້ງ ຂັ້ນແຂວງ ອື່ນໆ ເຊັ່ນ: ສະຫະພັນແມ່ຍິງ, ພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ຫ້ອງການຄຸ້ມຄອງທີ່ດິນ, ກອງບັນຊາການ ປ້ອງກັນຄວາມສະຫງົບ ແລະ ພະແນກ ທີ່ກ່ຽວຂ້ອງ ຍັງຈະເຂົ້າຮ່ວມ ຢູ່ໃນຄະນະກຳມະການ ການຍົກຍ້າຍຈັດສັນ ຂັ້ນແຂວງ. ຄວາມຮັບຜິດຊອບຫຼັກ ຂອງຄະນະກຳມະການຍົກຍ້າຍຈັດສັນ ຂັ້ນແຂວງ ແມ່ນຊີ້ນຳ ກ່ຽວກັບ ການທົດແທນຄ່າເສຍຫາຍ ທີ່ດິນ ຫຼື ການຍັບຍ້າຍ ຂອງໂຄງການຍ່ອຍ ແລະ ການປະສານງານ ພາຍໃນ ແລະ ພາຍນອກ, ສຳລັບໂຄງການຍ່ອຍ ເພື່ອຮັບປະກັນ ການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ ໂຄງການ ແລະ ການຍົກຍ້າຍຈັດສັນ ສາມາດດຳເນີນໄປ ຢ່າງສະດວກ. ຄະນະກຳມະການຍົກຍ້າຍຈັດສັນ ຂັ້ນແຂວງ ຈະດຳເນີນ ບົດບາດທີ່ມີຄວາມສຳຄັນ ດັ່ງນີ້:

- ຢັ້ງຢືນ ການສູນເສຍ ທີ່ດິນ ແລະ ຊັບສິນອື່ນໆ ທີ່ເກີດຈາກການຈັດຕັ້ງປະຕິບັດ ໂຄງການ;
- ກຳນົດ ອັດຕາ ການທົດແທນຄ່າເສຍຫາຍ (ມູນຄ່າປ່ຽນແທນ) ສຳລັບຊັບສິນ ທີ່ຖືກຜົນກະທົບ
- ຈັດກອງປະຊຸມ ປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນຂ່າວສານ;
- ຕິດຕາມກວດກາ ແລະ ລາຍງານ ກິດຈະກຳ ແຜນການຍົກຍ້າຍຈັດສັນ ທັງໝົດ;
- ປະສານງານ ແລະ ແກ້ໄຂ ຂໍ້ຂັດແຍ່ງ ແລະ ບັນຫາ.

43. ຄະນະກຳມະການຍົກຍ້າຍຈັດສັນ ຂັ້ນເມືອງ: ຄະນະກຳມະການ ຍົກຍ້າຍຈັດສັນ ຂອງເມືອງທີ່ກ່ຽວຂ້ອງ ນຳພາ ໂດຍຮອງເຈົ້າເມືອງ ຂອງເມືອງທີ່ກ່ຽວຂ້ອງ ແລະ ປະກອບມີ ຫ້ອງການທີ່ກ່ຽວຂ້ອງ(ຫຍທຂ, ຫ້ອງການການເງິນ, ຫ້ອງການຄຸ້ມຄອງທີ່ດິນ, ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ). ຄວາມຮັບຜິດຊອບຫລັກ ຂອງຄະນະກຳມະການ ດັ່ງກ່າວ ມີດັ່ງນີ້:

- ເຂົ້າຮ່ວມ ການກວດສອບ ຜົນກະທົບ ໂຄງການ ແລະ ຊ່ວຍເຫຼືອ ການກະກຽມແຜນການຍົກຍ້າຍຈັດສັນ;
- ຈັດຕັ້ງ ການມີສ່ວນຮ່ວມ ຂອງມວນຊົນ ແລະ ເຜີຍແຜ່ ນະໂຍບາຍ ການຍົກຍ້າຍຈັດສັນ;
- ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ບັນທຶກ ກິດຈະກຳ ການຍົກຍ້າຍຈັດສັນ ພາຍໃນເມືອງ;
- ຈ່າຍເງິນ ແລະ ຄຸ້ມຄອງ ງົບປະມານ ການທົດແທນຄ່າເສຍຫາຍ;
- ຄວບຄຸມດູແລ ຂະບວນການ ເວນຄືນທີ່ດິນ;
- ລາຍງານສະພາບ ການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ ແລະ ການຍົກຍ້າຍຈັດສັນ;
- ປະສານງານ ແລະ ແກ້ໄຂ ຂໍ້ຂັດແຍ່ງ ແລະ ບັນຫາ ໃດໜຶ່ງ ໃນລະຫວ່າງຂະບວນການໂຄງການ.

44. ຄະນະກຳມະການຍົກຍ້າຍຈັດສັນ ຂັ້ນບ້ານ: ຄະນະກຳມະການ ຍົກຍ້າຍຈັດສັນ ຂອງບ້ານທີ່ໄດ້ຮັບຜົນກະທົບ ປະກອບມີ ນາຍບ້ານ, ຮອງນາຍບ້ານ, ແນວໂຮມບ້ານ ແລະ ຕາງໜ້າ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການ. ຄວາມຮັບຜິດຊອບ ຂອງຄະນະກຳມະການ ດັ່ງກ່າວ ມີດັ່ງນີ້:

- ເຂົ້າຮ່ວມ ການສຳຫຼວດ ເສດຖະກິດ, ສັງຄົມ ແລະ ຜົນກະທົບ ໂຄງການ;
- ຈັດຕັ້ງ ການມີສ່ວນຮ່ວມ ຂອງມວນຊົນ ແລະເຜີຍແຜ່ ນະໂຍບາຍ ການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ;
- ດຳເນີນການແກ້ໄຂ ແລະ ການຈັດສັນທີ່ດິນ ແລະ ບັນດາກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບການຍົກຍ້າຍຈັດສັນ;
- ລາຍງານ ຄວາມຄິດເຫັນ ແລະ ການແນະນຳ ຂອງຜູ້ທີ່ໄດ້ຮັບຜົນກະທົບ ໃຫ້ອົງການຈັດຕັ້ງ ຂັ້ນເທິງ;
- ປະຕິບັດໜ້າທີ່ ແກ້ໄຂຄຳຮ້ອງທຸກ ຂັ້ນຕອນທຳອິດ ແລະ ຮັບປະກັນວ່າ ຄຳຮ້ອງທຸກ ໄດ້ຮັບການແກ້ໄຂ;

- ລາຍງານ ຄວາມຄືບໜ້າ ຂອງການຍົກຍ້າຍຈັດສັນ;
- ໃຫ້ການຊ່ວຍເຫລືອ ປະຊາຊົນ ຜູ້ທີ່ດ້ອຍໂອກາດ ທີ່ຖືກຜົນກະທົບ ຈາກການເວນຄືນ ທີ່ດິນ.

45. ພະແນກການທີ່ກ່ຽວຂ້ອງ: ພາຍໃຕ້ລະບຽບການ ແຫ່ງຊາດ, ການຍົກຍ້າຍຈັດສັນ ແລະ ການເວນຄືນທີ່ດິນ ແມ່ນເປັນຄວາມຮັບຜິດຊອບ ຂອງເຈົ້າຂອງໂຄງການ(ພຍທຂ). ເຈົ້າຂອງໂຄງການ ຈະມີບົດບາດຫຼັກ ໃນການຕິດຕາມກວດກາ ແລະ ການປະສານງານ ດັ່ງນີ້:

- ຈັດຝຶກອົບຮົມ ການຍົກຍ້າຍຈັດສັນ ໃຫ້ແກ່ພະນັກງານຫຼັກ ຂອງຫ້ອງການຍົກຍ້າຍຈັດສັນ;
- ຈັດຕັ້ງ ແລະ ປະສານງານ ການສ້າງ ແລະ ການຈັດຕັ້ງປະຕິບັດ ແຜນການປະຕິບັດ ການຍົກຍ້າຍຈັດສັນ;
- ແນະນຳ; ປະສານງານ ແລະ ຄວບຄຸມດູແລ ກິດຈະກຳການຍົກຍ້າຍຈັດສັນ ແລະ ແຜນເວລາ ການຍົກຍ້ຍຈັດສັນ;
- ຈັດຕັ້ງ ແລະ ກວດສອບ ກິດຈະກຳ ການຕິດຕາມກວດກາ ພາຍໃນ ແລະ ກະກຽມ ບົດລາຍງານ ຄວາມຄືບໜ້າ ການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ ແລະ ການຍົກຍ້າຍຈັດສັນ;
- ກຳນົດ ອົງການຈັດຕັ້ງ ຕິດຕາມກວດກາພາຍນອກ ແລະ ຊ່ວຍເຫລືອ ກິດຈະກຳ ຕິດຕາມກວດກາ ພາຍນອກ.

## 6.2 ມູນຄ່າ ແລະ ງົບປະມານ

46. ແຕ່ລະແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ຈະລວມມີລາຍລະອຽດ ມູນຄ່າ ຂອງການທົດແທນຄ່າເສຍຫາຍ ແລະ ສິດທິທີ່ໄດ້ຮັບ ການຟື້ນຟູ ອື່ນໆ ແລະ ການຍັບຍ້າຍ ຂອງຜູ້ທີ່ຖືກຍົກຍ້າຍ, ໃນກໍລະນີ ມີການຈຳແນກ ໂດຍດິນກະສິກຳ, ດິນປຸກສ້າງ, ດິນທຸລະກິດ, ເຮືອນ ແລະ ຊັບສິນອື່ນໆ. ການຄາດຄະເນມູນຄ່າ ຈະຕອບສະໜອງ ຢ່າງພຽງພໍ ສຳລັບເຫດການທີ່ບໍ່ໄດ້ຄາດຄິດ. ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ຈະກຳນົດແຈ້ງ ແຫຼ່ງທຶນ ທັງໝົດ ທີ່ຕ້ອງການ ແລະ ຈະຮັບປະກັນວ່າ ການໄຫຼວຽນ ທຶນສອດຄ່ອງກັບ ຕາຕະລາງເວລາ ໃນການຈ່າຍເງິນ ການທົດແທນຄ່າເສຍຫາຍ ແລະ ການຊ່ວຍເຫລືອ ອື່ນໆ.

## 6.3 ການຕິດຕາມກວດກາ ແລະ ການປະເມີນ

47. ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ດຳເນີນຢ່າງສະດວກ ແລະ ຄວາມສຳເລັດ ຈຸດປະສົງ ຂອງການຟື້ນຟູ ຜູ້ທີ່ໄດ້ຮັບຜົນກະທົບ, ເຈົ້າຂອງໂຄງການ ຈະດຳເນີນ ການຕິດຕາມກວດກາ ແລະ ການປະເມີນ ຂະບວນການທັງໝົດ ຂອງການເວນຄືນທີ່ດິນ, ການຮື້ຖອນ ແລະ ການຍົກຍ້າຍຈັດສັນ. ໃນກໍລະນີ ແຜນການປະຕິບັດ ການຍົກຍ້າຍຈັດສັນ /ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ມີຄວາມຕ້ອງການ, ການຕິດຕາມກວດກາ ແລະ ການປະເມີນ ປະກອບມີ ສອງພາກ: ການຕິດຕາມກວດກາ ການຍົກຍ້າຍຈັດສັນ ພາຍໃນ ແລະ ການຕິດຕາມກວດກາ ແລະ ການປະເມີນ ການຍົກຍ້າຍຈັດສັນ ພາຍນອກ. ສຳລັບ ແຜນການປະຕິບັດ RAP/ARAP, ມີພຽງແຕ່ການຕິດຕາມ ກວດກາ ພາຍໃນ ຈະມີຄວາມຕ້ອງການ.

48. ການຕິດຕາມກວດກາ ພາຍໃນ: ຈຸດປະສົງ ຂອງການຕິດຕາມກວດກາ ພາຍໃນ ແມ່ນເພື່ອຮັບປະກັນ ອົງການຈັດຕັ້ງການຍົກຍ້າຍຈັດສັນ ໃນລະດັບຕ່າງໆ ສາມາດປະຕິບັດນ້າທີ່ ໃນລະຫວ່າງ ການຈັດຕັ້ງປະຕິບັດ ແຜນການປະຕິບັດ RAP/ARAP ແລະ ຮັບປະກັນ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ທີ່ໄດ້ຮັບຜົນກະທົບ ຈະບໍ່ຖືກລະເມີດ ແລະ ວຽກງານອີສະອະກອນ ສາມາດດຳເນີນໄປຢ່າງມີຄວາມຄືບໜ້າ. ການຕິດຕາມກວດກາ ພາຍໃນ ຂອງວຽກງານການເວນຄືນທີ່ດິນ ໂຄງການ, ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນ ຕ້ອງໄດ້ຮັບການສ້າງຕັ້ງ ຫ້ອງການ

ຍົກຍ້າຍຈັດສັນ ໂຄງການ ໂດຍພາຍໃຕ້ການແນະນຳ ຈາກພະແນກວິຊາການ ຂອງກົມຂົວທາງ ແລະ /ຫຼື ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ ສຳລັບໂຄງການຍ່ອຍ ຂົວທາງ. ເຈົ້າຂອງໂຄງການ ຈະວ່າຈ້າງ ທີ່ປຶກສາ ລວມທັງຊ່ຽວຊານ ສິ່ງແວດລ້ອມ ແລະ ສັງຄົມ ເພື່ອຊ່ວຍເຫລືອ ພະແນກວິຊາການ ຂອງກົມຂົວທາງ ແລະ /ຫຼື ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ ຂອງ ກຍທຂ ແລະ ຫ້ອງການ ຍົກຍ້າຍຈັດສັນ ໂຄງການ ກ່ຽວກັບ ວຽກງານ ທີ່ຕິດພັນ ກັບການຍົກຍ້າຍຈັດສັນ ແລະ ການເວນຄືນທີ່ດິນ. ເພື່ອຕິດຕາມກວດກາ ວຽກງານພາຍໃນ ຢ່າງມີປະສິດທິພາບ, ພະນັກງານ ທີ່ຮັບຜິດຊອບ ວຽກງານ ໃນອົງການຈັດຕັ້ງ ຮັບຜິດຊອບ ການຍົກຍ້າຍຈັດສັນ ຈະເຂົ້າຮ່ວມ ໃນການສ້າງ ແລະ ຈັດຕັ້ງປະຕິບັດ RAP/ARAP. ພວກເຂົາ ຈະເຂົ້າຮ່ວມ ໃນການຕິດຕາມກວດກາ ພາຍໃນ ໃນລະຫວ່າງ ການຈັດຕັ້ງປະຕິບັດ RAP/ARAP "ແຜນຈັດຕັ້ງປະຕິບັດການຍົກຍ້າຍຈັດສັນ/ແຜນການປະຕິບັດການຍົກຍ້າຍຈັດສັນແບບຫຍໍ້ ". ເນື້ອໃນ ຂອງການຕິດຕາມກວດກາ ພາຍໃນ ປະກອບມີ:

- ການຈ່າຍເງິນ ແລະ ການນຳໃຊ້ ງົບປະມານ ສຳລັບການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ ແລະ ການຟື້ນຟູ;
- ສະໜັບສະໜູນ ການແກ້ໄຂຄືນ ແລະ ການຈັດສັນ;
- ຟື້ນຟູທີ່ດິນ ໃຫ້ມີຄຸນນະພາບ ແລະ ປະລິມານ ໃໝ່;
- ແຜນການເວລາ ຂອງກິດຈະກຳ ຂ້າງເທິງ;
- ການຈັດຕັ້ງປະຕິບັດ ນະໂຍບາຍ ແລະ ຫຼັກການ ໃນແຜນການຍົກຍ້າຍຈັດສັນ;
- ການມີສ່ວນຮ່ວມ ແລະ ການປຶກສາຫາລື ຂອງຜູ້ທີ່ໄດ້ຮັບຜົນກະທົບ ໃນລະຫວ່າງ ການຈັດຕັ້ງປະຕິບັດ ແຜນການປະຕິບັດການຍົກຍ້າຍຈັດສັນ/ແຜນການປະຕິບັດການຍົກຍ້າຍຈັດສັນແບບສັງລວມຫຍໍ້;
- ຈັດພະນັກງານ, ຝຶກອົບຮົມ, ແຜນເວລາ ແລະ ການດຳເນີນ ການຍົກຍ້າຍຈັດສັນ ໃນລະດັບຕ່າງໆ.

49. ການຕິດຕາມກວດກາ ພາຍນອກ ແລະ ການປະເມີນ: ການຕິດຕາມກວດກາ ພາຍນອກ ແລະ ການປະເມີນ ມີເປົ້າໝາຍ ເພື່ອຕອບສະໜອງ ການຕິດຕາມກວດກາ ແລະ ການປະເມີນ ການຈັດຕັ້ງປະຕິບັດ ການຍົກຍ້າຍຈັດສັນ ໂຄງການ ແບບປົກກະຕິ, ເພື່ອຈະສາມາດ ປະເມີນຈຸດປະສົງ ຂອງການຍົກຍ້າຍຈັດສັນ ໄດ້ບັນລຸຜົນສຳເລັດ ຫຼື ບໍ່. ຜ່ານການສຳຫຼວດ ຢ່າງເປັນທາງການ, ການສຳພາດ ຜູ້ທີ່ໄດ້ຮັບຜົນກະທົບ, ກຸ່ມຈຸດສຸມ ແລະ ວິທີການ ສຳຫຼວດ ອື່ນໆ, ການຕິດຕາມກວດກາ ພາຍນອກ ແລະ ການປະເມີນ ຈະເບິ່ງ ຂະບວນການທັງໝົດ ຂອງການຍົກຍ້າຍຈັດສັນ ແລະ ການຟື້ນຟູ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ. ການຕິດຕາມກວດກາ ພາຍນອກ ຍັງຈະຕອບສະໜອງ ລະບົບການເຕືອນ ໃນເບື້ອງຕົ້ນ ສຳລັບພະແນກການ ທີ່ຄຸ້ມຄອງໂຄງການ ແລະ ລະບົບການ ຮ້ອງທຸກ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ. ໂຕວັດແທກ ການຕິດຕາມກວດກາ ພາຍນອກ ຈະປະກອບມີ:

- ຄວາມຄືບໜ້າ: ລວມທັງ ການກະກຽມ ການຍົກຍ້າຍຈັດສັນ ແລະ ການຈັດຕັ້ງປະຕິບັດ ການທົດແທນຄ່າເສຍຫາຍ, ການຍັບຍ້າຍ ແລະ ການຟື້ນຟູ;
- ຄຸນນະພາບ: ລວມທັງ ຂອບເຂດ ຜູ້ທີ່ໄດ້ຮັບຜົນກະທົບ ມີຄວາມພໍໃຈ ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູ;
- ງົບປະມານ ການທົດແທນຄ່າເສຍຫາຍ: ລວມທັງ ການຈ່າຍເງິນ ແລະ ການນຳໃຊ້ ງົບປະມານ ເພື່ອການທົດແທນຄ່າເສຍຫາຍ ການເວນຄືນທີ່ດິນ ແລະ ການຍົກຍ້າຍຈັດສັນ;
- ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ: ລວມທັງ ສະພາບເສດຖະກິດ ຄົວເຮືອນ ກ່ອນ ແລະ ຫຼັງ ໂຄງການ ແລະ ການຟື້ນຟູ ເສດຖະກິດ ຂອງ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ.

50. ອົງການຈັດຕັ້ງ ຕິດຕາມກວດກາ ພາຍນອກ ທີ່ມີຄຸນວຸດທິ ຈາກ ອົງການຈັດຕັ້ງເອກະລາດ, ເຊັ່ນ ສະຖາບັນຄົ້ນຄວ້າດ້ານວິຊາການ ຫຼື ທີ່ປຶກສາ ໃນ ລາວ. ແຕ່ວ່າ ພວກເຂົາ ຖືກຄັດເລືອກ ໂດຍພະແນກສິ່ງແວດລ້ອມ ແລະ ສັງຄົມ ຂອງ

ສະຖາບັນໂຍທາທິການ ແລະ ຂົນສົ່ງ ເພື່ອດຳເນີນການຕິດຕາມກວດກາ ແລະ ປະເມີນ ການຍົກຍ້າຍຈັດສັນ ຂອງ ໂຄງການ. ຄວາມຮັບຜິດຊອບຫຼັກ ປະກອບມີ:

- ການກວດກາ ແຜນການຍົກຍ້າຍຈັດສັນ ທຸກດ້ານ ແລະ ການຈັດຕັ້ງປະຕິບັດ ການຍົກຍ້າຍ ຈັດສັນ; ຕອບສະໜອງ ບົດລາຍງານ ການຕິດຕາມກວດກາ ແລະ ການປະເມີນ ການຍົກຍ່າຍຈັດສັນ ໃຫ້ ທະນາຄານໂລກ ຜ່ານ ຫ້ອງການຍົກຍ້າຍຈັດສັນ ໂຄງການ. ຄວາມຮັບຜິດຊອບນີ້ ມີລາຍລະອຽດ ຢູ່ໃນພາກ ການຕິດຕາມກວດກາ ພາຍນອກ ແລະ ການປະເມີນ;
- ສ້າງແຜນການ ປະຕິບັດ ການຍົກຍ້າຍຈັດສັນ ແລະ ດຳເນີນ ການວາງແຜນ ການຍົກຍ້າຍຈັດສັນ;
- ໃຫ້ການບໍລິການ ປຶກສາດ້ານວິຊາການ ໃຫ້ ຫ້ອງການ ຍົກຍ້າຍຈັດສັນ ໂຄງການ ທາງດ້ານຂໍ້ມູນ ການກວດກາ ແລະ ຂະບວນການ.

## 6.4 ກົນໄກການແກ້ໄຂ ຄຳຮ້ອງທຸກ

51. ແຜນການປະຕິບັດການຍົກຍ້າຍຈັດສັນ/ແຜນການປະຕິບັດການຍົກຍ້າຍຈັດສັນ ແບບສັງລວມຫຍໍ້ ກຳນົດ ຮູບແບບ ສຳລັບຜູ້ທີ່ຖືກຍົກຍ້າຍ ນຳເອົາຄຳຮ້ອງທຸກ ສະເໜີເຖິງ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ. ກົນໄກ ການແກ້ໄຂຄຳຮ້ອງທຸກ ຖືກສ້າງບົນພື້ນຖານ ລະບົບທີ່ມີຢູ່ແລ້ວຂອງປະເທດ ໂດຍມີໜ່ວຍງານ / ຄະນະຮັບຜິດຊອບ ການໄກ່ເກ່ຍຂັ້ນບ້ານ ຢູ່ ທຸກໆບ້ານ ແລະ ມີໂຄງສ້າງທີ່ໜ້າເຊື່ອຖື ຈາກຂັ້ນເມືອງ ເຖິງຂັ້ນສູນກາງ. ຂັ້ນຕອນ ການຮ້ອງທຸກ ຕ້ອງປະກອບມີ ການປະຕິບັດ ມາດຕະຖານ ທີ່ສົມເຫດສົມຜົນ, ຕົວຢ່າງ: ເວລາ ທີ່ຕ້ອງການ ເພື່ອຕອບຄຳຮ້ອງທຸກ, ແລະ ຕ້ອງ ບໍ່ມີຄ່າ ໃຊ້ຈ່າຍ ສຳລັບຜູ້ທີຖືກຍົກຍ້າຍ. ແຜນການປະຕິບັດການຍົກຍ້າຍຈັດສັນ/ແຜນການປະຕິບັດການຍົກຍ້າຍຈັດສັນ ແບບ ສັງລວມຫຍໍ້ ຍັງຕ້ອງລະບຸ ສະຖານທີ່ອື່ນໆ ເພື່ອຜູ້ຮ້ອງທຸກ ໃນກໍລະນີ ຂັ້ນຕອນການແກ້ໄຂ ການຮ້ອງທຸກ ທີ່ກ່ຽວຂ້ອງ ກັບໂຄງການ ບໍ່ບັນລຸຜົນສຳເລັດ. ມາດຕະ 23, 24, 25 ຂອງດຳລັດ 84 /ນຍ ໄດ້ກຳນົດ ໂຄງການສ້າງຕັ້ງກົນໄກ ການ ແກ້ໄຂ ຄຳຮ້ອງທຸກ ທີ່ມີປະສິດທິຜົນ. ດຳລັດ ດັ່ງກ່າວ ລະບຸວ່າ ຜູ້ສະເໜີ ໂຄງການ ມີຄວາມຮັບຜິດຊອບ ໃນການ ສ້າງຕັ້ງ ກົນໄກ ການແກ້ໄຂ ຄຳຮ້ອງທຸກ ແລະ ດຳເນີນການ ແກ້ໄຂບັນຫາ.

52. ການຮ້ອງທຸກ ທີ່ກ່ຽວຂ້ອງກັບບັນຫາ ສິ່ງແວດລ້ອມ ແລະ ສັງຄົມ ຈາກກຸ່ມຊົນເຜົ່າ ທີ່ເປັນຜົນມາຈາກກິດຈະກຳ ໂຄງການ ຈະຖືກແກ້ໄຂ ໂດຍຄະນະກຳມະການແກ້ໄຂ ການຮ້ອງທຸກ ຜ່ານທາງຄະນະກຳມະການຄະນະກຳມະການແກ້ ໄຂ ການຮ້ອງທຸກ ໂຄງການ ທີ່ສະແດງຢູ່ໃນ ແຜນວາດ 6.1. ແຕ່ວ່າ, ຜູ້ຮ້ອງທຸກ ຍັງຄົງມີສິດ ໂດຍຜ່ານຂັ້ນຕອນນີ້ ແລະ ສາມາດຮ້ອງທຸກ ຫາ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ ຂອງສະຖາບັນໂຍທາທິການ ແລະ ຂົນສົ່ງ ໂດຍກົງ ຫຼື ສະພາປະຊາຊົນ ຂັ້ນແຂວງ ຕາມທີ່ລະບຸໄວ້ ໃນກົດໝາຍ ສປປ ລາວ. ແຕ່ລະ ລະດັບການຮ້ອງທຸກ ລະອຽດ, ການປຶກສາຫາລື, ແລະ ຜົນຮັບ ຈະຖືກບັນທຶກໄວ້ ຢູ່ໃນປຶ້ມບັນທຶກການຮ້ອງທຸກ ເຊິ່ງມີຮູບແບບເອກະສານ ຢູ່ໃນເອກະສານຊ້ອນທ້າຍ 7. ສະພາບການຮ້ອງທຸກທີ່ນຳສະເໜີ ແລະ ຄະນະກຳມະການ ແກ້ໄຂຄຳຮ້ອງທຸກ ຈະຖືກ ລາຍງານ ໃຫ້ ພຍທຂ ຜ່ານບົດລາຍງານ ປະຈຳເດືອນ. ຂະບວນການຂອງກົນໄກ ການແກ້ໄຂຄຳຮ້ອງທຸກ ລຸ່ມນີ້ ຈະ ຖືກນຳໃຊ້:

- ຂັ້ນຕອນທີ 1: ໃນກໍລະນີ ຜູ້ທີ່ໄດ້ຮັບຜົນກະທົບ ບໍ່ພໍໃຈ ກັບແຜນການຍົກຍ້າຍຈັດສັນ ຫຼື ການຈັດຕັ້ງປະຕິບັດ ແຜນການຍົກຍ້າຍຈັດສັນ, ບຸກຄົນນັ້ນ ສາມາດສະເໜີບັນຫາ ປາກເປົ່າ ຫຼື ເປັນລາຍລັກອັກສອນ ຫາ ຄະນະກຳມະ ການ ການຍົກຍ້າຍຈັດສັນ ຂັ້ນບ້ານ ຫຼື ຂັ້ນເມືອງ. ໃນກໍລະນີ ຜູ້ຮ້ອງທຸກ ດ້ວຍປາກເປົ່າ, ບ້ານຕ້ອງແກ້ໄຂ ຄຳ ຮ້ອງທຸກນີ້ ແລະ ບັນທຶກເປັນລາຍລັກອັກສອນ. ຄະນະກຳມະການ ຂັ້ນບ້ານ ຫຼື ຂັ້ນເມືອງ ຕ້ອງແກ້ໄຂ ຄຳຮ້ອງທຸກ ພາຍໃນ 2 ອາທິດ.

- ຂັ້ນຕອນທີ 2: ກໍລະນີ ຜູ້ທີ່ໄດ້ຮັບຜົນກະທົບ ບໍ່ພໍໃຈ ກັບຜົນ ຂອງຂັ້ນຕອນທີ 1, ຜູ້ກ່ຽວ ສາມາດສະເໜີ ການອຸທອນ ຫາ ຫ້ອງການ ຍົກຍ້າຍຈັດສັນ ໂຄງການ ພາຍຫຼັງທີ່ໄດ້ຮັບການພິຈາລະນາ ໃນຂັ້ນຕອນທີ 1. ຫ້ອງການຍົກຍ້າຍຈັດສັນ ໂຄງການ ຕ້ອງດຳເນີນການພິຈາລະນາ ພາຍໃນ 2 ອາທິດ.
- ຂັ້ນຕອນທີ 3: ກໍລະນີຜູ້ທີ່ໄດ້ຮັບຜົນກະທົບ ບໍ່ພໍໃຈ ກັບຜົນ ຂອງຂັ້ນຕອນທີ 2, ຜູ້ກ່ຽວ ສາມາດສະເໜີ ການອຸທອນ ຫາ ຄະນະກຳມະການ ຍົກຍ້າຍຈັດສັນ ຂັ້ນແຂວງ ເພື່ອແກ້ໄຂທາງບໍລິຫານ ພາຍຫຼັງທີ່ໄດ້ຮັບການພິຈາລະນາ ໂດຍຫ້ອງການ ຍົກຍ້າຍຈັດສັນ ໂຄງການ. ອົງການຈັດຕັ້ງແກ້ໄຂທາງບໍລິຫານ ຕ້ອງດຳເນີນການພິຈາລະນາ ພາຍໃນ 10 ວັນ.
- ຂັ້ນຕອນທີ 4: ກໍລະນີຜູ້ທີ່ໄດ້ຮັບຜົນກະທົບ ຍັງບໍ່ພໍໃຈ ກັບຜົນ ຂອງການຕັດສິນ ຂອງອົງການຈັດຕັ້ງ ແກ້ໄຂທາງບໍລິຫານ, ພາຍຫລັງໄດ້ຮັບຄຳຕັດສິນ, ຜູ້ກ່ຽວ ສາມາດສະເໜີແກ້ໄຂ ຫາ ຕາມຂະບວນການລະບຽບກົດໝາຍ ເຖິງສານປະຊາຊົນ ອີງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ແຜນວາດ 6.1 ຂະບວນການຂອງ GRM




ຖ້າຫາກວ່າຍັງບໍ່ໄດ້ຮັບການແກ້ໄຂ, ຜູ້ໄດ້ຮັບຜົນກະທົບອາດເລືອກທີ່ຈະໃຊ້ສິດໃຕ້ພາຍໃຕ້ກົດໝາຍ ຂອງ ສປປ ລາວ ເພື່ອອ້າງອີງບັນຫາ ເຖິງສານຍຸຕິທຳໃນຂັ້ນຕໍ່ໄປ.

53. ຜູ້ທີ່ໄດ້ຮັບຜົນກະທົບ ສາມາດຮ້ອງທຸກ ຫຼື ຮ້ອງຟ້ອງ ກ່ຽວກັບ ການອອກແບບໂຄງການ ແລະ ການຈັດຕັ້ງປະຕິບັດໂຄງການ ລວມທັງບັນຫາ ທີ່ກ່ຽວຂ້ອງກັບ ການຍົກຍ້າຍຈັດສັນ. ແບບຟອມການຮັບຄຳຄິດເຫັນ ຖືກສ້າງຂຶ້ນ ພາຍໃຕ້ໂຄງການນີ້ ແລະ ມີພ້ອມຢູ່ບ້ານ ໃນພື້ນທີໂຄງການ ລວມທັງບ່ອນຢູ່ອາໄສ ຂອງຜູ້ທີ່ໄດ້ຮັບຜົນກະທົບ ເພື່ອນຳໃຊ້ ສະເໜີຄຳຮ້ອງທຸກ ຫຼື ຄຳສະເໜີ. ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ຮັບແຈ້ງ ກ່ຽວກັບການຮ້ອງທຸກ ແລະ ການອຸທອນ ທີ່ລະບຸໄວ້ຂ້າງເທິງ ຜ່ານກອງປະຊຸມບ້ານ ແລະ ດ້ວຍວິທີການ ອື່ນໆ. ເຄື່ອງມື ສື່ມວນຊົນ ຕ້ອງຖືກນຳໃຊ້ ເພື່ອສື່ສານ ຂໍ້ມູນຂ່າວສານ. ຄວາມຄິດເຫັນ ແລະ ຄຳແນະນຳ ກ່ຽວກັບ ການຍົກຍ້າຍຈັດສັນ ທີ່ສະໜອງໃຫ້ ໂດຍປະຊາຊົນ ແລະ ອົງ

ການຈັດຕັ້ງ ຕ່າງໆ ຕ້ອງຖືກບັນທຶກ ແລະ ອົງການຈັດຕັ້ງ ຮັບຜິດຊອບການຍົກຍ້າຍຈັດສັນ ຂັ້ນຕ່າງໆ ຕ້ອງໄດ້ຄົ້ນຄວ້າ ແລະ ແກ້ໄຂ ບັນຫາເຫຼົ່ານີ້ ເປັນແຕ່ໄລຍະ.

54. ອົງການຈັດຕັ້ງ ທີ່ແກ້ໄຂຄຳຮ້ອງທຸກ ແລະ ການອຸທອນ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງບໍ່ເກັບຄ່າທຳນຽມໃດໜຶ່ງ. ຄ່າໃຊ້ຈ່າຍໃດໜຶ່ງ ທີ່ເກີດຂຶ້ນ ຈາກການຮ້ອງທຸກ ແລະ ການອຸທອນ ຕ້ອງໄດ້ຈ່າຍ ໂດຍຖືເປັນຄ່າໃຊ້ຈ່າຍ ທີ່ບໍ່ໄດ້ຄາດຄະເນໄວ້ ຂອງອົງການຈັດຕັ້ງ ທີ່ຈັດຕັ້ງປະຕິບັດໂຄງການກ່ຽວຂ້ອງ. ເພື່ອເຮັດໃຫ້ ກົນໄກ ການແກ້ໄຂຄຳຮ້ອງທຸກ ມີປະສິດພິພາບຫຼາຍຂື້ນ ແລະ ໄດ້ຮັບການຕອບສະໜອງທັນເວລາ, ລາຍລະອຽດຕິດຕໍ່ ລວມມີ ເບີໂທລະສັບຂອງນັກວິສະວະກອນທີ່ຮັບຜິດຊອບພື້ນທີ່ ແລະ ຈຸດປະສານງານ ຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ຈະມີຢູ່ໃນໃບປິວຂໍ້ມູນຫຍໍ້ຂອງໂຄງການ ທີ່ຈະຖືກກະກຽມ ແລະ ແຈກຢາຍ ໃຫ້ແກ່ ທຸກໆຄົວເຮືອນທີ່ໄດ້ຮັບຜົນກະທົບ ແລະ ບ້ານທີ່ໄດ້ຮັບຜົນກະທົບ. ປະສົບການຈາກໂຄງການຂົວທາງໃນປະເທດອື່ນໆ ແນະນຳວ່າ ການໂທລະສັບ ແມ່ນຖືກນຳໃຊ້ເລື້ອຍໆ ໂດຍປະຊາຊົນ ທີ່ໄດ້ຮັບຜົນກະທົບ ເພາະວ່າ ຄຳຕິຊົມສ່ວນຫຼາຍ ທີ່ຖືກນຳສະເໜີ ມັກຈະກ່ຽວຂ້ອງກັບບັນຫາ / ຜົນກະທົບ ໃນແຕ່ລະວັນ ຈາກວຽກກໍ່ສ້າງ (ເຊັ່ນ: ຂີ້ຝຸ່ນ, ສຽງ, ອຸບັດເຫດ ແລະ ຄວາມປອດໄພຕາມເສັ້ນທາງ, ວັດສະດຸກໍ່ສ້າງ ແລະ ອຸປະກອນກໍ່ສ້າງ ທີ່ຕັດທາງເຂົ້າຄົວເຮືອນ ທີ່ໄດ້ຮັບຜົນກະທົບ, ວຽກຊັກຊ້າ, ແລະ ອື່ນໆ).

55. ຊຸມຊົນ ແລະ ບຸກຄົນ ຜູ້ທີ່ເຊື່ອວ່າ ພວກເຂົາໄດ້ຮັບຜົນກະທົບດ້ານລົບ ໂດຍໂຄງການ ທີ່ໄດ້ຮັບການສະໜັບສະໜູນຈາກ ທະນາຄານໂລກ ອາດສະເໜີ ຄຳຮ້ອງທຸກ ເຖິງຂັ້ນ ກົນໄກການແກ້ໄຂ ຄຳຮ້ອງທຸກໆໂຄງການ ຫຼື ການບໍລິການການແກ້ໄຂຄຳຮ້ອງທຸກ ຂອງທະນາຄານໂລກ. ກົນໄກການແກ້ໄຂ ຄຳຮ້ອງທຸກ ຮັບປະກັນວ່າ ຄຳຮ້ອງທຸກທີ່ໄດ້ຮັບ ໄດ້ຮັບການຄົ້ນຄວ້າ ຢ່າງເໝາະສົມ ເພື່ອສາມາດແກ້ໄຂ ຂໍ້ຂ້ອງໃຈ ທີ່ຕິດພັນກັບໂຄງການ. ຊຸມຊົນ ແລະ ບຸກຄົນ ທີ່ໄດ້ຮັບຜົນກະທົບ ອາດສະເໜີ ການຮ້ອງທຸກຂອງເຂົາ ຫາຄະນະກຳມະການ ກວດກາເອກະລາດ ຂອງທະນາຄານໂລກ ເຊິ່ງພິຈາລະນາ ຄວາມຄວາມເສຍຫາຍທີ່ເກີດຂຶ້ນ, ຫຼື ອາດເກີດຂຶ້ນ ທີ່ເປັນຜົນມາຈາກການບໍ່ປະຕິບັດຕາມ ນະໂຍບາຍ ແລະ ຂະບວນການ ຂອງທະນາຄານໂລກ. ຄຳຮ້ອງທຸກ ອາດຖືກສະເໜີ ໄດ້ທຸກເວລາ ພາຍຫຼັງທີ່ບັນຫາຂ້ອງໃຈ ເປັນຜົນໂດຍກົງ ຕໍ່ຄວາມເອົາໃຈໃສ່ ຂອງທະນາຄານໂລກ, ແລະ ການຄຸ້ມຄອງ ທະນາຄານ ຕ້ອງໄດ້ຮັບໂອກາດ ເພື່ອຕອບຄືນ. ຂໍ້ມູນຂ່າວສານ ກ່ຽວກັບ ການສະເໜີ ຄຳຮ້ອງທຸກ ຫາ ການບໍລິການ ແກ້ໄຂຄຳຮ້ອງທຸກ ຂອງທະນາຄານໂລກ, ສາມາດຢ້ຽມຊົມ ທາງເວັບໄຊສ www.worldbank.org/grs. ສຳລັບຂໍ້ມູນ ກ່ຽວກັບ ການສະເໜີ ຄຳຮ້ອງທຸກ ຫາ ຄະນະກຳມະການ ກວດກາ, ສາມາດເບິ່ງໄດ້www.inspectionpanel.org.

## 6.5 ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ ກ່ຽວກັບ ກອບນະໂຍບາຍ ການຍົກຍ້າຍຈັດສັນ

56. ກອບນະໂຍບາຍການຍົກຍ້າຍຈັດສັນ ໄດ້ຖືກສ້າງຂຶ້ນ ເປັນເອກະສານ ທີ່ແຍກຕ່າງຫາກ ເພື່ອເຮັດໃຫ້ສາມາດນຳໃຊ້ໄດ້ໂດຍຜູ້ໃຫ້ທຶນ ແລະ ຖືກເຊື່ອມໂຍງຢ່າງໃກ້ຊິດກັບ ກອບຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ. EDPD/PTRI ແລະ ກົມຂົວທາງ ໂດຍການຮ່ວມມືກັບ ພະແນກ ຍທຂ ແຂວງ ໃນແຂວງ ທີ່ມີໂຄງການ ໄດ້ດຳເນີນການປຶກສາຫາລືກັບອົງການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ທີ່ຕັ້ງຢູ່ລຽບຕາມເສັ້ນທາງເລກທີ 13 ໃຕ້ ໃນເດືອນ ສິງຫາ 2019 ເພື່ອໃຫ້ຂໍ້ມູນກ່ຽວກັບ ໂຄງການຍ່ອຍ ຕາມເສັ້ນທາງເລກທີ 13 ໃຕ້. ການປຶກສາຫາລືໄດ້ຈັດຂຶ້ນຢູ່ໃນແຂວງ ບໍລິຄຳໄຊ ໃນລະຫວ່າງວັນທີ 15-19 ສິງຫາ 2019 ແລະ ແຂວງຄຳມ່ວນ ໃນລະຫວ່າງວັນທີ 20-21 ສິງຫາ 2019. ຢູ່ໃນແຂວງ ບໍລິຄຳໄຊ, ມີຜູ້ເຂົ້າຮ່ວມທັງໝົດ 224 ທ່ານ ເຊິ່ງລວມມີແມ່ຍິງ 58 ທ່ານ ຈາກ 3 ເມືອງດັ່ງນີ້: ເມືອງ ທ່າພະບາດ, ເມືອງ ປາກຊັນ ແລະ ເມືອງ ປາກກະດິງ, 10 ກຸ່ມບ້ານ ແລະ 54 ບ້ານ ແມ່ນໄດ້ຖືກເຊີນເຂົ້າຮ່ວມກອງປະຊຸມປຶກສາຫາລື. ຢູ່ໃນແຂວງ ຄຳມ່ວນ, ມີຜູ້ເຂົ້າຮ່ວມ ກອງປະຊຸມ ທັງໝົດ 118 ທ່ານ ເປັນຍິງ 30 ທ່ານ ຈາກ 2 ເມືອງຄື: ເມືອງ ທ່າແຂກ ແລະ ເມືອງ ຫີນບູນ, 8 ກຸ່ມບ້ານ ແລະ 37 ບ້ານ ແມ່ນໄດ້ຖືກເຊີນເຂົ້າຮ່ວມກອງປະຊຸມປຶກສາຫາລື. ເປົ້າໝາຍຂອງຜູ້ເຂົ້າຮ່ວມ ແຕ່ລະບ້ານ (ນາຍບ້ານ, ຮອງນາຍບ້ານ, ແນວໂຮມ, ແມ່ຍິງ ແລະ ຊາວໜຸ່ມ) ລວມບ້ານລະ 5 ທ່ານ. ບົດ

ສະຫຼຸບຫຍໍ້ ຂອງບົດບັນທຶກກອງປະຊຸມປຶກສາຫາລື ແມ່ນມີຢູ່ໃນຟາຍເອກະສານ. ໃນໄລຍະການຈັດຕັ້ງປະຕິບັດໂຄງການ ທີ່ກຳລັງດຳເນີນຢູ່ (LRSP2), ການປຶກສາຫາລືກັບແຂວງ ແລະ ຊຸມຊົນທ້ອງຖິ່ນ ແມ່ນໄດ້ດຳເນີນໃນໄລຍະກະກຽມເອກະສານປົກປ້ອງ ສຳລັບໂຄງການຍ່ອຍ.

57. ໃນໄລຍະການປຶກສາຫາລື, ທຸກຄົນທີ່ເຂົ້າຮ່ວມລ້ວນແຕ່ເຫັນດີເປັນເອກະພາບວ່າ ການຍົກລະດັບ ແລະ ການຂະຫຍາຍເສັ້ນທາງ ແມ່ນເປັນຄວາມຝັນຂອງພວກເຂົາ. ທຸກຄົນລ້ວນແລ້ວແຕ່ໃຫ້ການ ສະໜັບ ສະໜູນໂຄງການນີ້ ໂດຍມີເຫດຜົນດ້ານບວກຫຼາຍປະການ ເຊັ່ນວ່າ: ເສັ້ນທາງປັບປຸງໃໝ່ທີ່ໄດ້ ມາດຕະຖານ ຈະເປັນສັນຍາລັກຂອງຄວາມຈະເລີນຮຸ່ງເຮືອງ, ເຊິ່ງສະແດງໃຫ້ເຫັນເຖິງພາບພົດທີ່ດີ ຂອງຊຸມຊົນ ລວມທັງປະເທດຊາດ, ການມີເສັ້ນທາງທີ່ກວ້າງກວ່າເກົ່າເທົ່າກັບວ່າ ມີການຂົນສົ່ງທີ່ດີຂື້ນ, ເຊິ່ງອາດຊ່ວຍຫຼຸດຜ່ອນບັນຫາຕ່າງໆ ຈາກອຸບັດເຫດຕາມທ້ອງຖະໜົນ ແລະ ທັງເປັນການປັບປຸງ ສະພາບຄວາມປອດໄພຕາມເສັ້ນທາງ.

58. ຜົນກະທົບດ້ານລົບ ໂດຍທົ່ວໄປ ແມ່ນໄດ້ສົນທະນາ ໃນໄລຍະກອງປະຊຸມປຶກສາຫາລື ເຊິ່ງລວມມີ: ຂີ້ຝຸ່ນ, ຂີ້ເຫຍື້ອ, ອຸບັດເຫດຕາມທ້ອງຖະໜົນ ແລະ ບັນຫາການທົດແທນຄ່າເສຍຫາຍ / ການຫຍັບຍ້າຍ ເນື່ອງຈາກການກໍ່ສ້າງເສັ້ນທາງ. ກ່ຽວກັບຜົນກະທົບຈາກຂີ້ຝຸ່ນ, ຜູ້ເຂົ້າຮ່ວມແມ່ນໄດ້ຮັບຮູ້ວ່າ ມັນເປັນ ບັນຫາທົ່ວໄປ ໃນໄລຍະກໍ່ສ້າງເສັ້ນທາງ ແລະໂຄງການກໍ່ສ້າງເສັ້ນທາງຫຼາຍໆໂຄງການ ກໍ່ຍັງ ບໍ່ມີວິທີ ການທີ່ມີປະສິດທິຜົນ ໃນການແກ້ໄຂບັນຫານີ້ ໂດຍອີງຕາມປະສົບການຂອງພວກເຂົາ. ຊຸມຊົນທ້ອງຖິ່ນ ກໍ່ຍັງປະເຊີນຕໍ່ບັນຫາຂີ້ເຫຍື້ອ ທີ່ຕິດພັນກັບກິດຈະການກໍ່ສ້າງເສັ້ນທາງ. ພວກເຂົາໄດ້ອະທິບາຍວ່າ ໂຄງການກໍ່ສ້າງເສັ້ນທາງຫຼາຍແຫ່ງ ປະຖິ້ມວັດຖຸສິ່ງຂອງ ທີ່ເຫຼືອໃຊ້ ໃນເຂດຊຸມຊົນ ໃນໄລຍະ ແລະ/ຫຼື ພາຍຫຼັງສຳເລັດວຽກກໍ່ສ້າງແລ້ວ ແລະ ວັດຖຸສິ່ງຂອງເຫຼົ່ານີ້ ກາຍເປັນຂີ້ເຫຍື້ອ ທີ່ຕົກຄ້າງໃນຊຸມຊົນ. ນອກຈາກນີ້, ບັນດາແມ່ຍິງທີ່ເຂົ້າຮ່ວມກອງປະຊຸມ ຍັງໄດ້ອ້າງວ່າ ນອກຈາກວັດຖຸສິ່ງຂອງ ທີ່ຖືກປະຖິ້ມ ແລ້ວ ສິ່ງເສດເຫຼືອອື່ນໆທີ່ມາຈາກຄົນງານ ໃນໄລຍະກໍ່ສ້າງ.

59. ບັນຫາການທົດແທນຄ່າເສຍຫາຍ ຍັງເປັນບັນຫາພົ້ນເດັ່ນ. ຄວາມກັງວົນສ່ວນໃຫຍ່ ແມ່ນກ່ຽວຂ້ອງກັບ ຄຳຖາມທີ່ວ່າປະຊາຊົນທີ່ມີເຮືອນ/ຮ້ານອາຫານ ແລະ/ຫຼື ກິດຈະການດ້ານທຸລະກິດຕ່າງໆ ທີ່ຢູ່ໃກ້ກັບ ເສັ້ນທາງເລກທີ 13 ໃຕ້ ຈະໄດ້ຮັບການທົດແທນຄ່າເສຍຫາຍຫຼືບໍ່ ເມື່ອມີໂຄງການເກີດຂຶ້ນ ແລະ ການ ທົດແທນຄ່າເສຍຫາຍດັ່ງກ່າວ ຈະຖືກຈັດຕັ້ງປະຕິບັດຄືແນວໃດ? ຕົວຢ່າງ, ປະຊາຊົນ ຈຳນວນໜຶ່ງ ໄດ້ກ່າວວ່າ ການທົດແທນສຳລັບທີ່ດິນ, ປະຊາຊົນ ຈະໄດ້ຮັບການທົດແທນຄ່າເສຍຫາຍ ຕາມລາຄາທີ່ ພວກເຂົາຊື້ ຫຼືບໍ່, ຫຼືວ່າລາຄາສູງກວ່າ ຫຼື ຕໍ່າກວ່າເກົ່າ? ປະຊາຊົນຈຳນວນໜຶ່ງ. ນອກຈາກນີ້ ຜູ້ເຂົ້າຮ່ວມຄົນອື່ນໆ ຍັງໄດ້ຍົກບັນຫາ ກ່ຽວກັບຄວາມເສຍຫາຍຕໍ່ເຮືອນ ໃນໄລຍະກໍ່ສ້າງ ເພາະວ່າເຄື່ອງກົນຈັກໜັກ ແລະ/ຫຼື ການອັດແໜ້ນດິນໜ້າທາງ ດ້ວຍເຄື່ອງກົນຈັກໜັກ. ສິ່ງດັ່ງກ່າວ ອາດເປັນບັນຫາ ໜຶ່ງ ທີ່ຕ້ອງໄດ້ມີການທົດແທນຄ່າເສຍຫາຍ ແລະ ມັນຈະຖືກຈັດຕັ້ງປະຕິບັດຄືແນວໃດ.

60. ບັນຫາທັງໝົດທີ່ຍົກຂຶ້ນມາໃນລະຫວ່າງການປຶກສາຫາລື ແມ່ນຖືກພິຈາລະນາ ໃນໄລຍະກະກຽມ *ESMF, RPF* ແລະ *EGEF* ແລະ ຈະຖືກລວມເຂົ້າໃນໄລຍະອອກແບບໂຄງການຍ່ອຍ, *ESMP/ECoP/CoC* ກ່ຽວກັບຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງຕໍ່ເດັກນ້ອຍ ຕາມຄວາມເໝາະສົມ. ການປຶກສາຫາລືກັບຕົວແທນຕ່າງໆຂອງຊົນເຜົ່າ ແລະ ກຸ່ມແມ່ຍິງ ຍັງໄດ້ຢືນຢັນໃນການໃຫ້ການສະໜັບສະໜູນເຊັ່ນກັນ. ປັນອັນຕົກລົງເປັນເອກະພາບວ່າໃນຊ່ວງໄລຍະການກະກຽມໂຄງການຍ່ອຍສະເພາະ ທີ່ຈະໄດ້ຮັບການສະເໜີຈາກແຂວງ ແລະ ການກະກຽມ ຜຄຕສ ຫຼື ແຜນອື່ນໆຕາມເງື່ອນໄຂຂອງກອບໜ້າວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ, ແມ່ນຈະຕ້ອງໄດ້ມີການປຶກສາຫາລືເພີ່ມຕື່ມ ເຊິ່ງຈັດໂດຍແຂວງຕ່າງໆ (ເຊິ່ງເປັນອົງການ ຫຼື ພະແນກ ຍທຂ ແຂວງ ທີ່ຈັດຕັ້ງປະຕິບັດໂຄງການຍ່ອຍ) ໂດຍການປຶກສາຫາລືຢ່າງໃກ້ຊິດກັບອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນ ທີ່ໄດ້ຮັບຜົນປະໂຫຍດ ແລະ / ຫຼື ໄດ້ຮັບຜົນກະທົບຈາກໂຄງການຍ່ອຍ. ສັງລວມບົດບັນທຶກກອງປະຊຸມປຶກສາຫາໄດ້ເກັບສຳເນົາເອກະສານໄວ້.

61. ທັດສະນະດ້ານບົດບາດຍິງ-ຊາຍ ຕໍ່ບັນຫາການທົດແທນຄ່າເສຍຫາຍ: ກ່ຽວກັບ ທັດສະນະຄະຕິດ້ານບົດບາດຍິງ-ຊາຍ ແມ່ນໄດ້ມີຄວາມຄິດເຫັນທີ່ແຕກຕ່າງກັນ ຕໍ່ກັບພາລະບົດບາດ ແລະ ການມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍ. ຜູ້ຖືກສຳພາດ ທີ່ເປັນແມ່ຍິງ ແລະ ຜູ້ຊາຍ ຈຳນວນໜຶ່ງ ອ້າງວ່າ ແມ່ຍິງມີສິດອຳນາດຫຼາຍກວ່າ ເມື່ອເວົ້າເຖິງ ການຄຸ້ມຄອງເງິນ ແລະ ເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ. ຜູ້ຊາຍຫຼາຍຄົນກ່າວວ່າ ເຖິງແມ່ນວ່າ ແມ່ຍິງ ແລະ ຜູ້ຊາຍມີສິດເທົ່າທຽມກັນ ແຕ່ຕົວຈິງແລ້ວ ແມ່ຍິງ ແມ່ນມີສິດອຳນາດຫຼາຍກວ່າ ກ່ຽວກັບການບໍລິຫານຈັດການເງິນ. ແມ່ຍິງຄົນໜຶ່ງ ທີ່ເຂົ້າຮ່ວມໃນກອງປະຊຸມໄດ້ກ່າວວ່າ "ຂ້ອຍເຫັນດີວ່າແມ່ຍິງມີສິດອຳນາດຫຼາຍກວ່າ ກໍ່ຍ້ອນວ່າ ຜູ້ຊາຍບໍລິຫານການເງິນບໍ່ດີ. ຜູ້ຊາຍຄົນໜຶ່ງຍັງກ່າວເພີ່ມຕື່ມວ່າ ເມື່ອມີການທົດແທນຄ່າເສຍຫາຍ, ແມ່ຍິງ ມັກຈະເປັນຜູ້ຮັບຜິດຊອບ ໃນການຮຽກຮ້ອງເອົາຄ່າທົດແທນທີ່ເປັນເງິນ. ແຕ່ເຖິງຢ່າງໃດກໍ່ຕາມ, ຜູ້ເຂົ້າຮ່ວມຄົນອື່ນໆ ຮູ້ສຶກວ່າ ການຕັດສິນຂັ້ນສຸດທ້າຍ ແມ່ນມາຈາກທັງຜົວ ແລະ ເມຍ. ພວກເຂົາມີພາລະບົດບາດທີ່ເທົ່າທຽມກັນ ແລະ ພວກເຂົາກໍ່ໄດ້ແບ່ງປັນຄວາມຮັບຜິດຊອບຕ່າງໆ ໃນຄອບຄົວ. ປະຊາຊົນຄົນອື່ນໆ ຍັງໄດ້ກ່າວຕື່ມວ່າ ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພວກເຂົາ ແມ່ນສາມາດປ່ຽນແທນກັນໄດ້ ໃນທາງປະຕິບັດ ຂຶ້ນກັບຄວາມສາມາດ ແລະ ເວລາຂອງພວກເຂົາ.

62. ເຖິງແມ່ນວ່າ ທຸກໆຄົນທີ່ເຂົ້າຮ່ວມກອງປະຊຸມ ຮັບຮູ້ວ່າ ໄລຍະ 25 ແມັດຂອງທັງສອງຂ້າງທາງເລກທີ 13 ໃຕ້ແມ່ນລັດຖະບານໄດ້ອອກລະບຽບໃຫ້ເປັນເຂດສະຫງວນ ນັບຕັ້ງແຕ່ປີ 1996, ແຕ່ປະຊາຊົນ ຈຳນວນໜຶ່ງ ຍັງອ້າງວ່າ ປະຊາຊົນໄດ້ສ້າງຕັ້ງເຮືອນ ກ່ອນປີ 1996. ສະນັ້ນ ພວກເຂົາຄວນໄດ້ຮັບ ການທົດແທນຄ່າເສຍຫາຍ ດ້ວຍເງື່ອນໄຂທີ່ຍອມຮັບໄດ້. ປະຊາຊົນ ຍັງໄດ້ອ້າງວ່າ ຜູ້ທີ່ຂະຫຍາຍ ຮ້ານອາຫານ ຫຼື ເຮືອນ ໃຫ້ກັບເສັ້ນທາງ ຫຼັງຈາກປີ 1996, ພວກເຂົາຈະບໍ່ໄດ້ຮັບການທົດແທນ ຄ່າເສຍຫາຍ. ທັດສະນະດັ່ງກ່າວນີ້ ແມ່ນໄດ້ຮັບການສະໜັບສະໜູນ ຈາກຜູ້ເຂົ້າຮ່ວມຫຼາຍໆຄົນ.

63. ໂດຍລວມແລ້ວ, ທັງແມ່ຍິງ ແລະ ຜູ້ຊາຍ ແມ່ນໄດ້ສະເໜີແລກປ່ຽນມາດຕະການຫຼຸດຜ່ອນຜົນກະທົບ ທີ່ຄ້າຍຄືກັນ. ກ່ຽວກັບບັນຫາຂີ້ຝຸ່ນ ແລະ ສຽງ, ແນະນຳໃຫ້ມີການຫົດນ້ຳເລື້ອຍໆ ໃນໄລຍະກໍ່ສ້າງ ເພື່ອຫຼຸດຜ່ອນບັນຫາຂີ້ຝຸ່ນ. ກ່ຽວກັບບັນຫາເລື່ອງການທົດແທນຄ່າເສຍຫາຍ, ຜູ້ເຂົ້າຮ່ວມກອງປະຊຸມ ປຶກສາຫາລື ໄດ້ແນະນຳວ່າ ຄະນະຄຸ້ມຄອງໂຄງການ ຄວນລົງມາປຶກສາຫາລືກັບອົງການ ປົກຄອງ ທ້ອງຖິ່ນ ແລະ ຄົວເຮືອນທີ່ໄດ້ຮັບຜົນກະທົບ ຢ່າງເປັນປະຈຳ ແລະ ປະຊາຊົນ ຍັງອ້າງເຫດຜົນວ່າ ຂໍ້ຕົກລົງຕ່າງໆ ລະຫວ່າງພາກສ່ວນ ທີ່ກ່ຽວຂ້ອງ ຄວນເຮັດຢູ່ໃນຂັ້ນບ້ານ. ນອກຈາກນີ້ ຜູ້ເຂົ້າຮ່ວມຍັງໄດ້ ເນັ້ນວ່າ ທັງໂຄງການ ແລະ ຊຸມຊົນທ້ອງຖິ່ນ ຄວນມີຂໍ້ຕົກລົງ ເພື່ອເປັນເອກະພາບກັນວ່າ ທັງສອງຝ່າຍ ຈະສາມາດປະກອບສ່ວນຫຍັງແດ່ຕໍ່ໂຄງການ ແລະ ປະກອບສ່ວນຄືແນວໃດ. ພາຍຫຼັງທີ່ໄດ້ມີການຕົກລົງກັນເປັນທີ່ຮຽບຮ້ອຍແລ້ວ, ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຍຶດໝັ້ນຕໍ່ຂໍ້ຕົກລົງດັ່ງກ່າວ ຢ່າງເຄັ່ງຄັດ. ປະຊາຊົນ ທີ່ໄດ້ສຳພາດຈຳນວນໜຶ່ງ ໄດ້ອ້າງວ່າ ການຟື້ນຟູຊີວິດການເປັນຢູ່ ຍັງເປັນສິ່ງສຳຄັນ ໂດຍສະເພາະຕໍ່ຄົວເຮືອນ ທີ່ໄດ້ຮັບຜົນກະທົບ.

64. **ທັດສະນະຄະຕິ ກ່ຽວກັບບັນຫາ ໄພພິບັດ ແລະ ມາດຕະການຫຼຸດຜ່ອນ**: ບັນຫາໄພພິບັດ ແມ່ນກ່ຽວຂ້ອງກັບໄພນ້ຳຖ້ວມ ແລະ ຫຼາຍຊຸມຊົນ ກໍ່ກຳລັງປະເຊີນຢູ່ໃນປະຈຸບັນ. ໄພນ້ຳຖ້ວມ ຖືວ່າມີ 2 ສາຍເຫດສຳຄັນດັ່ງນີ້: ສາຍເຫດອັນທີ່ໜຶ່ງແມ່ນຍ້ອນລະດັບຂອງແມ່ນ້ຳຂອງເພີ່ມສູງຂຶ້ນ ແລະ ແມ່ນ້ຳນ້ອຍອື່ນໆ ໃນເຂດຊຸມຊົນກໍ່ສູງຂຶ້ນເຊັ່ນກັນ, ໂດຍສະເພາະໃນຊ່ວງໄລຍະລະດູຝົນ. ມາດຕະການຫຼຸດຜ່ອນຜົນກະທົບ ທີ່ໄດ້ແນະນຳ ເພື່ອແກ້ໄຂບັນຫານີ້ ແມ່ນ ການສ້າງສູນຕອບໂຕ້ຕໍ່ໄພນ້ຳຖ້ວມ. ສູນອົບພະຍົກ ທີ່ມີສິ່ງອຳນວຍຄວາມສະດວກ ແລະ ມີອຸປະກອນຊ່ວຍເຫຼືອທີ່ຈຳເປັນ ຄວນໄດ້ຮັບການກໍ່ສ້າງ ແລະ ຕອບສະໜອງ (ເຊັ່ນ: ເຮືອ, ລົດບັນທຸກ ແລະ ເຄື່ອງມືສື່ສານ, ຫ້ອງນ້ຳ ແລະ ເຮືອນຄົວ ຢູ່ແຕ່ລະແຫ່ງ, ໜ່ວຍງານກູ້ໄພຕາມແມ່ນ້ຳ ແລະ ລົດຮັບສົ່ງສຸກເສີນ) ເພື່ອຮັບປະກັນວ່າ ປະຊາຊົນ ສາມາດເຂົ້າເຖິງ ສິ່ງອຳນວຍຄວາມສະດວກເຫຼົ່ານີ້. ເມື່ອເຫັນວ່າ ການມີສູນຕອບໂຕ້ໄພສຸກເສີນ ແມ່ນມີຄວາມສຳຄັນຫຼາຍ, ຜູ້ເຂົ້າຮ່ວມກອງປະຊຸມຄົນອື່ນໆ ໃນກຸ່ມສົນທະນາ ໄດ້ແນະນຳ ໃຫ້ມີການຟື້ນຟູ ສິ່ງອຳນວຍຄວາມສະດວກ ທີ່ມີຢູ່ໃນປະຈຸບັນ ໃນອາຄານ

ສາທາລະນະຂອງຊຸມຊົນ ເຊັ່ນ: ໂຮງຮຽນ, ຫ້ອງການບ້ານ ຫຼື ວັດ ເພື່ອໃຫ້ສະຖານທີ່ເຫຼົ່ານີ້ ສາມາດນຳໃຊ້ໄດ້ ໃນເວລາທີ່ມີໄພນ້ຳຖ້ວມເກີດຂຶ້ນ. ບາງບ້ານ ໄດ້ແນະນຳ ໃຫ້ມີການສ້າງປະຕູນ້ຳ ທີ່ສາມາດປິດ ແລະ ເປີດໄດ້ ໃນແຕ່ລະຊ່ວງລະດູ ເຊິ່ງສາມາດແກ້ໄຂບັນຫາໄພນ້ຳຖ້ວມໄກ້ ໃນລະດັບໃດໜຶ່ງ. ສາຍເຫດອັນທີ່ສອງ ມີຜູ້ເຂົ້າຮ່ວມກອງປະຊຸມຄົນອື່ນໆ ໄດ້ອ້າງວ່າ ໄພນ້ຳຖ້ວມ ແມ່ນເປັນຍ້ອນ ມີຮ່ອງ / ທໍ່ລະບາຍນ້ຳນ້ອຍເກີນໄປ. ການມີທໍ່ລະບາຍນ້ຳ ຫຼື ມີຂົວ ທີ່ໃຫຍ່ກວ່າເກົ່າ ສຳລັບໃນບາງກໍລະນີ ມັນອາດຊ່ວຍເຮັດໃຫ້ນ້ຳຝົນລະບາຍໄດ້ໄວຂຶ້ນ.

65. ກຸ່ມປຶກສາຫາລື ຍັງໄດ້ແນະນຳໃຫ້ມີການຮ່ວມມືຢ່າງມີປະສິດທິຜົນ ລະຫວ່າງຜູ້ມີສ່ວນຮ່ວມຈາກ ຫຼາຍໆ ພາກສ່ວນ (ປະຊາຊົນ / ຄົວເຮືອນທີ່ໄດ້ຮັບຜົນກະທົບ, ອົງການປົກຄອງທ້ອງຖິ່ນ ແລະ ລັດຖະບານ, ເຈົ້າຂອງໂຄງການ ແລະ ຜູ້ໃຫ້ທຶນ). ຜູ້ເຂົ້າຮ່ວມ ເຊື່ອວ່າຜູ້ປະສານງານໂຄງການ ແມ່ນບຸກຄົນທີ່ມີ ສິດອຳນາດ ໃນການຄວບຄຸມແຜນງົບປະມານ ແລະ ແຜນວຽກຕ່າງໆຂອງໂຄງການ. ສະນັ້ນ, ຜູ້ປະສານງານໂຄງການ ຖືວ່າເປັນບຸກຄົນສຳຄັນ ໃນການເຮັດວຽກຮ່ວມກັບ ບັນດາຜູ້ໄດ້ຮັບຜົນປະໂຫຍດ ຕ່າງໆ ທີ່ແຕກຕ່າງກັນ.

66. ຂໍ້ສະເໜີ ແລະ ຄຳແນະນຳຈາກຜູ້ເຂົ້າຮ່ວມກອງປະຊຸມປຶກສາຫາລືໄດ້ສັງລວມດັ່ງລຸ່ມນີ້:

- ບັນຫາ ການທົດແທນຄ່າເສຍຫາຍ: ຄຳແນະນຳ ສຳລັບບັນຫານີ້ ແມ່ນມີດັ່ງນີ້ (i) ການສ້າງຄັ້ງຄະນະກຳມະການຈັດສັນຍົກຍ້າຍ ແລະ ທົດແທນຄ່າເສຍຫາຍ ທີ່ມີງົບປະມານພຽງພໍ ເພື່ອຈັດຕັ້ງປະຕິບັດວຽກງານຕ່າງໆຂອງພວກເຂົາ, (ii) ການທົດແທນຄ່າເສຍຫາຍ ຄວນເປັນທີ່ຍອມຮັບໄດ້ ແລະ ມີຄວາມໂປ່ງໃສ, (iii) ການທົດແທນຄ່າເສຍຫາຍ ຄວນເຮັດສຳເລັດ ກ່ອນເລີ່ມຕົ້ນໂຄງການ ແລະ ປະຊາຊົນ ຄວນຮັບຮູ້ກ່ອນຢ່າງໜ້ອຍ 2-3 ເດືອນ ກ່ອນເລີ່ມຕົ້ນກໍ່ສ້າງ;
- ການເປີດເຜີຍຂໍ້ມູນ: ມັນຄວນມີລາຍລະອຽດ ແລະ ຄວາມເພິ່ງພໍໃຈ ແລະ ຄຳຄິດເຫັນຂອງປະຊາຊົນ ຄວນຖືກພິຈາລະນາ ແລະ ຖືກປະເມີນເຂົ້າໃນບົດລາຍງານ;
- ຊົນເຜົ່າ ທີ່ອາໄສຢູ່ລຽບຕາມເສັ້ນທາງ ທີ່ມີໂຄງການ ຄວນເຂົ້າໃຈຢ່າງຈະແຈ້ງ ກ່ຽວກັບໂຄງການ ກ່ອນການຈັດຕັ້ງປະຕິບັດ;
- ກົນໄກການແກ້ໄຂຂໍ້ຂັດແຍ່ງ ຄວນຖືກສ້າງຕັ້ງຂຶ້ນ ໃນຂັ້ນບ້ານ;
- ເສັ້ນທາງສາຍຫຼັກ ຄວນສູງກວ່າທາງຮ່ອມໃນບ້ານ. ແຕ່ຍັງມັກບັນຫາ ຍ້ອນວ່າ ເສັ້ນທາງຮ່ອມ ແມ່ນບໍ່ໄດ້ຮັບການພັດທະນາ ໂດຍໂຄງການ ເຊິ່ງເຮັດໃຫ້ມີຄວາມຫຍຸ້ງຍາກ ຕໍ່ການຄົມມະນາຄົມ-ຂົນສົ່ງຂອງຊາວບ້ານ ແລະ ສ່ວນໃຫຍ່ແມ່ນເຂົາເຈົ້າຈະເປັນຜູ້ກໍ່ສ້າງ ແລະ ສ້ອມແປງເອງ. ດັ່ງນັ້ນ, ມັນອາດເປັນສິ່ງທີ່ດີ ຖ້າຫາກວ່າໂຄງການ ສາມາດພັດທະນາທາງຮ້ອມ (ທາງເຂົ້າບ້ານ), ເຊິ່ງມີປະມານ 5-10 ແມັດ ຈາກທາງໃຫຍ່;
- ມັນຍັງອາດເປັນການດີ ຖ້າຫາກວ່າ ໂຄງການ ຈະສ້າງຈຸດພັກລົດເມ / ບ່ອນຖ້າລົດເມ;
- ຊາວບ້ານ ຍັງໄດ້ແນະນຳວ່າ ຄວນມີການບຳລຸງຮັກສາເປັນປະຈຳ ແລະ ການສ້ອມແປງທັນເວລາ ຕາມເສັ້ນທາງພາຍຫຼັງການກໍ່ສ້າງສຳເລັດ ຫຼື ໃນໄລຍະ ນຳໃຊ້ເສັ້ນທາງ ໂດຍອີງໃສ່ປະສົບການຜ່ານມາຂອງພວກເຂົາ ເພາະເຫັນວ່າເສັ້ນທາງທີ່ໄດ້ຮັບການກໍ່ສ້າງໃໝ່ ມັກຈະເປ່ພາຍໃນ 2 ປີ ຫຼັງຈາກກໍ່ສ້າງສຳເລັດແລ້ວ;
- ຄວນມີທາງເວັ້ນ ຫຼື ເຮັດວຽກກໍ່ສ້າງເຄິ່ງໜຶ່ງຂອງເສັ້ນທາງ ເພື່ອເຮັດໃຫ້ ພາຫະນະ ສາທາດຈັບຈອນໄດ້;
- ຄວນມີການຕິດຕັ້ງປ້າຍເຕືອນດ ໄຟເຕືອນ, ຮົ້ວຂັ້ນ, ແລະ ອື່ນໆ ໃນເຂດກໍ່ສ້າງ ຢ່າງເໝາະສົມ ໃນເຂດທີ່ອາດຈະມີຄວາມສ່ຽງອຸບັດເຫດຕາມທ້ອງຖະໜົນ;
- ປັບປຸງເສັ້ນທາງເຂົ້າຫາບ້ານ ໃນບ່ອນທີ່ມີນ້ຳຖ້ວມ.

67. ຮ່າງກອບໜ້າວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສະບັບປັບປຸງ (*ESMF)* ລວມທັງ *RPF* ແລະ *EGEF* ແມ່ນໄດ້ເຜີຍແຜ່ເປັນພາສາ ອັງກິດ ໃນເວັບໄຊທ໌ຂອງກະຊວງ ຍທຂ ແລະ ໃນເວັບໄຊທ໌ຂອງ ທະນາຄານໂລກ ໃນວັນທີ 12 ສິງຫາ *2019.* ຮ່າງບົດລາຍງານດັ່ງກ່າວນີ້ ຈະຖືກແປເປັນພາສາລາວ, ເຮັດເປັນໃບປິວມ ປື້ນ ແລະ ແຈກຍາຍໃຫ້ ຄອບຄົວ ແລະ ຜູ້ທີ່ໄດ້ຮັບຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນດໍາເນີນການປຶກສາຫາລືຢູ່ລະຫວ່າງ ວັນທີ 19-22 ສິງຫາ 2019. ໃນເອກະສານໃບປິວທີ່ແຈກຍາຍໃຫ້ຜູ້ເຂົ້າຮ່ວມແມ່ນປະກອບມີຂໍ້ມູນ ກ່ຽວກັບໂຄງການ, ຜົນກະທົບທາງບວກ ແລະ ທາງລົບທີ່ຄາດວ່າຈະເກີດຂຶ້ນ, ມາດຕະການຫລຸດຜ່ອນຜົນກະທົບ, ກອບນະໂຍບາຍປ້ອງກັນ, ການຈັດຕັ້ງປະຕິບັດ ແລະ ກົນໄກການຮ້ອງທຸກ. ຫລັງຈາກການປຶກສາຫາລື, ຮ່າງສະບັບສຸດທ້າຍຂອງ ກອບໜ້າວຽກ ການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ *ESMF*, *RPF,* ແລະ *EGEF* ສະບັບສຸດທ້າຍ ໄດ້ຖືກເຜີຍແຜ່ອີກຄັ້ງ ຢູ່ພາຍໃນປະເທດ *(*ໃນຮູບແບບພາສາລາວ ແລະ ພາສາອັງກິດ) ແລະ ໃນ ໃນເວັບໄຊທ໌ຂອງ ທະນາຄານໂລກ ໃນວັນທີ 2 ກັນຍາ 2019 ແລະ ຈະໄດ້ຖືກເຜີຍແຜ່ອີກຄັ້ງຫລັງຈາກອະນຸມັດຈາກ ທະນາຄານໂລກ ແລະ ກ່ອນການມາກອດກາໂຄງການ.

# 7 ເອກະສານຊ້ອນທ້າຍ 1: ຕາຕະລາງສິດທິ ທີ່ໄດ້ຮັບ

| ຮູບແບບການສູນເສຍ | ກຳມະສິດບຸກຄົນ | ສິດທິ ທີ່ໄດ້ຮັບ | ການຈັດຕັ້ງປະຕິບັດ |
|---|---|---|---|
| ສະມັດຕະພາບ ດິນ (ດິນນາ, ສວນ ແລະ ສວນປູກໄມ້ສັກ) | ເຈົ້າຂອງ ທີ່ຖືກຕ້ອງຕາມກົດໝາຍ ຫຼື ຜູ້ຄອບຄອງ ທີ່ຖືກກຳນົດ ລະຫວ່າງການສຳຫຼວດພົນລະເມືອງ ແລະ ການຈັດປະເພດ | • ສຳລັບການສູນເສຍ 10% ຂອງທີ່ດິນ, ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽແທນ ເຊິ່ງເທົ່າກັບ ມູນຄ່າຂອງດິນ ໃນທ້ອງຕະຫລາດ ປະຈຸບັນ ພາຍໃນບ້ານ ທີ່ມີຊະນິດ, ປະເພດ ແລະ ສະມັດຕະພາບ ຄືກັນ, ບໍ່ມີຄ່າໃຊ້ຈ່າຍການມອບໂອນ(ພາສີ, ຄ່າທຳນຽມ), ຫຼື<br>• ທີ່ດິນປ່ຽນແທນ ທີ່ມີປະເພດ, ຊະນິດ ແລະ ສະມັດຕະພາບ  ຄືກັນ ຂອງທີດິນ ພາຍໃນ ຫຼື ໄກ້ຄຽງ ບ້ານ, ພ້ອມກັບໃບຕາດິນ<br>• ກໍລະນີ ຜົນກະທົບ ຕໍ່ສະມັດຕະພາບດິນ 10 % ຫຼື ຫຼາຍກວ່າ ແມ່ນຖືເປັນບູລິມະສິດໜຶ່ງ , ທີ່ດິນປ່ຽນແທນ ທີ່ມີປະເພດ, ຊະນິດ ແລະ ສະມັດຕະພາບ ຄືກັນ ພາຍໃນ ຫຼື ໄກ້ຄຽງ ບ້ານ ພ້ອມກັບມີໃບຕາດິນ, ໃນກໍລະນີກຳມະສິດທີ່ດິນ ຢູ່ໃນພື້ນທີ່ໂຄງການ, ຖ້າບໍ່ມີ ໃບຢັ້ງຢືນ ການນຳໃຊ້ ທີອອກໃຫ້. ຫລືຕາມການຮ້ອງຂໍ ໂດຍຜູ້ທີ່ໄດ້ຮັບຜົນກະທົບ, ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນ ບວກກັບການຊ່ວຍເຫລືອ ເພື່ອໃຊ້ຈ່າຍ ແລະ ຈົດທະບຽນທີ່ດິນ | • ເຈົ້າຂອງ ດ້ານກົດໝາຍ ແມ່ນຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ທີ່ດິນ ຫຼື ໃບຕາດິນ ຈາກໂຄງການອອກໃບຕາດິນ.<br>• ການບໍລິຈາກແບບສະໝັກໃຈ ຈະບໍ່ຖືກນຳໃຊ້ສຳລັບ ຊັບສິນໃດກໍຕາມ ຍົກເວັ້ນສຳລັບ ການສູນເສຍ ຫນ້ອຍທີ່ສຸດຂອງການຄອບຄອງທີ່ດິນທີ່ກຳນົດໄວ້ພາຍໃຕ້ RPF ນີ້ |
| ທີ່ດິນປຸກສ້າງ | ເຈົ້າຂອງທີ່ຖືກຕ້ອງຕາມກົດໝາຍ ຫຼື ຜູ້ຄອບຄອງ ທີຖືກກຳນົດ ລະຫວ່າງການສຳລວດພົນລະ ເມືອງ ແລະ ການຢັ້ງຢືນ | • ດິນທີ່ຍັງເຫຼືອມີພຽງພໍ ເພື່ອສ້າງເຮືອນຄືນໃໝ່/ສິ່ງປຸກສ້າງ(1) ການທົດແທນຄ່າເສຍຫາຍ ເປັນເງິນສົດ ເຊິ່ງມີມູນຄ່າເທົ່າທຽມກັບລາຄາໃນທ້ອງຕະຫລາດ ຂອງທີ່ດິນ ປະເພດ, ຊະນິດ ແລະ ສະມັດຕະພາບ ຄືກັນ ແລະ ບໍ່ມີຄ່າໃຊ້ຈ່າຍ ການໂອນ(ພາສີ, ຄາທຳນຽມ) ແລະ (2) ອີງການປົກຄອງເມືອງ ປັບປຸງ ດິນທີ່ຢູ່ອາໄສ ໂດຍບໍ່ມີຄ່າໃຊ້ຈ່າຍ ສຳລັບຜູ້ທີ່ໄດ້ຮັບຜົນກະທົບ(ຕົວຢ່າງ: ການຖົມດິນ ແລະ ການຈັດລະດັບ) ສະນັ້ນ ຜູ້ທີ່ໄດ້ຮັບຜົນກະທົບ ສາມາດຍ້າຍກັບ ສູ່ຕອນດິນທີ່ຍັງເຫຼືອຢູ່<br>• ບໍ່ມີທີ່ດິນ ເຫຼືອຢູ່ ຢ່າງພຽງພໍ ເພື່ອເພື່ອສ້າງເຮືອນຄືນໃໝ່/ສິ່ງປຸກສ້າງ(1) ການປ່ຽນແທນດິນ ທີ່ເທົ່າທຽມ ໃນພື້ນທີ່, ມີປະເພດ ແລະ ສະມັດຕະພາບ ຄືກັນ, ໂດຍບໍ່ມີຄ່າ | • ເຈົ້າຂອງດ້ານກົດໝາຍ ແມ່ນຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ທີ່ດິນ ຫຼື ໃບຕາດິນ ຈາກໂຄງການອອກໃບຕາດິນ.<br>• ການບໍລິຈາກແບບສະໝັກໃຈ ຂອງພາກສ່ວນໜ້ອຍໜຶ່ງຂອງດິນ ທີ່ຢູ່ອາໄສ ຈະໄດ້ຮັບອະນຸຍາດໂດຍໂຄງການ ຕາມມາດຖານ ແລະ ການປະຕິບັດຕາມຢ່າງເຄັ່ງຂັດທີ່ ປະກອບດ້ວຍ: (i) ດິນທີ່ຢູ່ອາໄສຂອງຜູ້ທີ່ໄດ້ຮັບຜົນກະທົບ ແມ່ນບໍ່ໜ້ອຍກວ່າ 300 ມ2; (ii) ຖ້າວ່າທີ່ດິນທີ່ຢູ່ອາໄສຂອງຜູ້ທີ່ໄດ້ຮັບຜົນກະທົບແມ່ນຫຼາຍກວ່າ 300 m2, ດິນທີ່ຈະປະກອບສ່ວນແມ່ນຈະບໍ່ສາມາດໃຫ້ໄດ້ເກີນ 5%ຂອງເນື້ອທີ່ |

| ຮູບແບບການສູນເສຍ | ກຳມະສິດບຸກຄົນ | ສິດທິ ທີ່ໄດ້ຮັບ | ການຈັດຕັ້ງປະຕິບັດ |
|---|---|---|---|
| | | ພາສີ, ຄ່າຈົດທະບຽນ ແລະ ການໂອນທີ່ດິນ ພ້ອມກັບມີໃບຕາດິນ, ໃນກໍລະນີ ກຳມະສິດ ທີ່ດິນ ຢູ່ໃນພື້ນທີ່ໂຄງການ, ຖ້າບໍ່ມີ ໃບຢັ້ງຢືນ ການສຳຫຼວດ ຫຼື(2) ການທົດ ແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າ ປ່ຽນແທນ ເຊິ່ງມີມູນຄ່າເທົ່າທຽມກັບລາຄາ ໃນທ້ອງຕະຫຼາດ ຂອງທີດິນທີ່ມີປະເພດ ແລະ ຊະນິດ ຄືກັນ, ບໍ່ມີມູນຄ່າໃຊ້ຈ່າຍ (ພາສີ, ຄ່າທຳນຽມ) ບວກກັບ ການ ຊ່ວຍເຫຼືອ ຄ່າໃຊ້ຈ່າຍ ແລະ ການຈົດ ທະບຽນດິນ. | ດິນທັງໝົດ; ແລະ (iii) ຕ້ອງບໍ່ມີ ບ້ານ ແລະ ສິ່ງປຸກສ້າງ ຫຼື ຊັບສິນ ຄົງທີ່ ທີ່ນອນຢູ່ໃນພາກສ່ວນຕອນ ດິນດັ່ງກ່າວ<br>• ການບໍລິຈາກແບບສະໝັກໃຈ ຕາມມາດຖານເຫຼົ່ານີ້ ຈະປະຕິບັດ ຕາມ ຂະບວນການ ທີ່ສອດຄອງ ກັບ ນະໂຍບາຍການດຳເນີນງານ ຂອງ ທະນາຄານໂລກ, ທີ່ຄ້າຍຄື ກັນກັບດຳລັດ 192/ນຍ/2005 ຂອງລັດຖະບານ |
| ໜອງປາ(ເນື້ອທີ່ຍັງ ເຫຼືອ ຍັງສາມາດນຳໃຊ້ ໄດ້ ຫຼື ສາມາດນຳໃຊ້ ຕາມຈຸດປະສົງ ຫຼື ຜົນ ຜະລິດທາງການຄ້າ ) | ເຈົ້າຂອງ ໜອງປາ ທີ່ຖືກຜົນກະທົບ | • ການທົດແທນຄ່າເສຍຫາຍ ເປັນເງິນສົດ ສຳລັບໜອງປາ ທີ່ຖືກຜົນກະທົບ ສ່ວນໃດ ໜຶ່ງ ຕາມມູນຄ່າປ່ຽນແທນ ເຊິ່ງເທົ່າກັບ ລາຄາ ໃນທ້ອງຕະຫລາດປະຈຸບັນ, ແຮງງານ ແລະ ການເຊົ່າ ອຸປະກອນ ເພື່ອຂຸດໜອງປາ, ບໍ່ມີຄ່າໃຊ້ຈ່າຍ(ພາສີ, ຄ່າທຳນຽມ)<br>• ໃນກໍລະນີ ໜອງປາທີ່ມີປາປັດຈຸບັນ ເຊິ່ງບໍ່ ທັນໄດ້ຈັບປາຂຶ້ນມາ ກ່ອນທີ່ໂຄງການເຂົ້າ ຄອບຄອງ ໜອງປາ, ການທົດແທນຄ່າເສຍ ຫາຍ ເປັນເງິນສົດ ຕາມມູນຄ່າປາໃນທ້ອງ ຕະຫລາດ ໃນເວລາການທົດແທນຄ່າເສຍ ຫາຍ<br>• ອົງການປົກຄອງເມືອງ ພື້ນຟູ ສ້ອມແປງ /ໜ ອງປາ ທີ່ຍັງເຫຼືອ. ໃນກໍລະນີ ຜູ້ຮັບເໝົາບໍ່ ສາມາດຕອບສະໜອງຢ່າງຖືກພຽງພໍ, ຜູ້ທີ່ ໄດ້ຮັບຜົນກະທົບຈະມີສິດໄດ້ຮັບການ ຊ່ວຍເຫຼືອເປັນເງິນສົດ ລວມເອົາ ການໃຊ້ ຈ່າຍ ແຮງງານ ແລະ ເຊົ່າອຸປະກອນ ເພື່ອຟື້ນ ຟູ ສ້ອມແປງ /ໜອງປາ | • ມີເວລາທີ່ພຽງພໍ ໃນການສະໜອງ ໃຫ້ກັບຜູ້ໄດ້ຮັບຜົນກະທົບໃນການ ເກັບກ່ຽວຜົນຜະລິດປາ<br>• ການບໍລິຈາກແບບສະໝັກໃຈຂອງ ທີ່ດິນໜອງປາ ຈະບໍ່ໄດ້ຮັບ ອະນຸຍາດຈາກໂຄງການ. |
| ເຮືອນ/ຮ້ານຄ້າ ທັງ ໝົດ ທີ່ໄດ້ຮັບຜົນ ກະທົບ ແລະ ສິ່ງປຸກ ສ້າງເສີມ(ເຮືອນຄົວ, ເລົ້າເຂົ້າ)<br>ເຮືອນ/ຮ້ານຄ້າ ສ່ວນ ໃດໜຶ່ງ ທີ່ໄດ້ຮັບຜົນ ກະທົບ ແຕ່ວ່າບໍ່ ສາມາດນຳໃຊ້ໄດ້ (ຈຳ ເປັນຕ້ອງຍັບຍ້າຍ) | ເຈົ້າຂອງ ເຮືອນທີ່ ໄດ້ຮັບຜົນກະທົບ ບໍ່ວ່າຈະເປັນເຈົ້າ ຂອງດິນ ຫຼືບໍ່ | • ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມ ມູນຄ່າປ່ຽນແທນສຳລັບສິ່ງປຸກສ້າງທັງໝົດ ເທົ່າທຽມກັບ ລາຄາໃນທ້ອງຕະຫຼາດ ປັດຈຸບັນ ຂອງ(1) ວັດສະດຸ ໂດຍບໍ່ຄິດໄລ່ຄ່າ ຫຼຸ່ຍຫ້ຽນ ຂອງສິ່ງປຸກສ້າງ ຫຼື ວັດສະດຸ ທີ່ເອົາ ມານຳໃຊ້ຄືນໃໝ່;(2) ການຂົນສິ່ງວັດສະດຸ; ແລະ (3) ຄ່າແຮງງານ ທີ່ກວມເອົາມູນຄ່າ ການຮື້ຖອນ, ການໂອນ ແລະ ການສ້າງຄືນ ໃໝ່;<br>• ການຕອບສະໜອງ ລົດບັນທຸກ ເພື່ອຂົນສິ່ງ | • ມີເວລາພຽງພໍ ທີ່ສະໜອງໃຫ້ກັບຜູ້ ທີ່ໄດ້ຮັບຜົນກະທົບໃນການກໍ່ສ້າງ ຄືນ/ສ້ອມແປງສິ່ງປຸກສ້າງຂອງພວກ ເຂົາ<br>• ເຮືອນ ແລະ ຮ້ານຄ້າທີ່ໄດ້ຮັບຜົນ ກະທົບທີ່ບໍ່ສາມາດນຳໃຊ້ໄດ້ ແມ່ນ ບັນດາຜູ້ທີ່ໄດ້ຮັບຜົນກະທົບສ່ວນທີ່ ເຫຼືອຈະບໍ່ສາມາດໃຊ້ງານໄດ້/ອາໄສຢູ່ ໄດ້ |

| ຮູບແບບການສູນເສຍ | ກຳມະສິດບຸກຄົນ | ສິດທິ ທີ່ໄດ້ຮັບ | ການຈັດຕັ້ງປະຕິບັດ |
|---|---|---|---|
| | | ສິ່ງຂອງ ທີ່ເປັນຂອງບຸກຄົນ ຕາມກຳນົດເວລາ ໂດຍບໍ່ມີຄ່າໃຊ້ຈ່າຍ ສຳລັບຜູ້ທີ່ໄດ້ຮັບຜົນກະທົບ | |
| ການນຳໃຊ້ດິນ ແບບຖາວອນ | ເຈົ້າຂອງດິນ ຫຼື ຜູ້ຄອບຄອງ ທີ່ຖືກຕ້ອງຕາມກົດໝາຍ | • ສຳລັບທີ່ດິນ ກະສິກຳ ແລະ ດິນທີ່ຢູ່ອາໄສ ທີ່ຖືກນຳໃຊ້ ໂດຍຜູ້ຮັບເໝົາກໍ່ສ້າງ ເປັນເສັ້ນທາງຜ່ານ ຫຼື ພື້ນທີ່ເຮັດວຽກຂອງຜູ້ຮັບເໝົາ, (1) ການເຊົ່າ ທີ່ໄດ້ຮັບການເຫັນດີ ລະຫວ່າງເຈົ້າຂອງດິນ ແລະ ຜູ້ຮັບເໝົາກໍ່ສ້າງ ແຕ່ຕ້ອງບໍ່ໜ້ອຍກວ່າ ລາຍຮັບ ແລະ ກຳໄລ ທີ່ບໍ່ເກີນກວ່າຄວາມເປັນຈິງ ທີ່ສາມາດສ້າງຂຶ້ນ ໂດຍຊັບສິນ ໃນລະຫວ່າງເວລາ ການນຳໃຊ້ທີ່ດິນຊົ່ວຄາວ(2)ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນ ຂອງຊັບສິນຄົງທີ່ ຖືກຜົນກະທົບ(ສິ່ງປຸກສ້າງ, ຕົ້ນໄມ້ ແລະ ພືນລະປູກ); ແລະ (3) ການຟື້ນຟູ ທີ່ດິນນຳໃຊ້ຊົ່ວຄາວ ພາຍໃນ 1 ເດືອນ ພາຍຫຼັງປິດເສັ້ນທາງຜ່ານ ຫຼື ເຄື່ອນຍ້າຍ ວັດຖຸອຸປະກອນ ແລະ ວັດສະດຸ ຈາກສະຖານທີ່ເຮັດວຽກ ຂອງຜູ້ຮັບເໝົາ ໃຫ້ຢູ່ໃນສະພາບທີ່ຕົກລົງເຫັນດີ ລະຫວ່າງຜູ້ຮັບເໝົາກໍ່ສ້າງ ແລະ ເຈົ້າຂອງດິນ | • ການປຶກສາຫາລື ການຄວບຄຸມການກໍ່ສ້າງຈະຮັບປະກັນວ່າ (i) ສະຖານທີ່ແລະການຈັດວາງຂອງເສັ້ນທາງໂດຍຜ່ານການສະເໜີໂດຍການກໍ່ສ້າງຈະມີຜົນກະທົບທາງສັງຄົມທາງລົບໜ້ອຍ; (ii) ເຈົ້າຂອງທີ່ດິນໄດ້ຖືກແຈ້ງໃຫ້ຊາບຢ່າງພຽງພໍກ່ຽວກັບສິດ ແລະ ສິດທິຂອງເຂົາເຈົ້າ ຕາມນະໂຍບາຍໂຄງການຍົກຍ້າຍຈັດສັນ; ແລະ (iii) ການຕົກລົງເຫັນດີລະຫວ່າງເຈົ້າຂອງທີ່ດິນແລະ ຜູ້ຮັບເໝົາການກໍ່ສ້າງ ແມ່ນໄດ້ຖືກດຳເນີນການ. |
| ເຮືອນ ແລະ ຮ້ານຄ້າ ຫຼື ສິ່ງປຸກສ້າງເສີມ ສ່ວນໃດໜຶ່ງ ທີ່ໄດ້ຮັບຜົນກະທົບ (ບໍ່ຈຳເປັນຕ້ອງຍົບຍ້າຍ) | ເຈົ້າຂອງ ເຮືອນທີ່ໄດ້ຮັບຜົນກະທົບ ບໍ່ວ່າຈະເປັນເຈົ້າຂອງດິນ ຫຼືບໍ່ | • ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນ ສຳລັບສ່ວນທີ່ໄດ້ຮັບຜົນກະທົບ ຂອງສິ່ງປຸກສ້າງ ເທົ່າທຽມກັບລາຄາໃນທ້ອງຕະຫຼາດ ຂອງ(1) ວັດສະດຸ ແລະ ແຮງງານ ໂດຍບໍ່ຄິດໄລ່ຄ່າຫຼູ້ຍຫ່ຽນ ຂອງສິ່ງປຸກສ້າງ ຫຼື ສຳລັບວັດສະດຸ ທີ່ສາມາດນຳໃຊ້ຄືນໄດ້(2) ການຂົນສົ່ງ ວັດສະດຸ ແລະ (3) ມູນຄ່າ ການສ້ອມແປງ ຂອງສ່ວນທີ່ບໍ່ໄດ້ຮັບຜົນກະທົບ | |
| ການສູນເສຍ ລາຍຮັບທຸລະກິດ ໃນລະຫວ່າງ ການຍົບຍ້າຍ ຫຼື ລະຫວ່າງການຮື້ຖອນ/ສ້ອມແປງ ສ່ວນທີ່ຖືກຜົນກະທົບ(ໂດຍບໍ່ມີການຍົບຍ້າຍ) | ເຈົ້າຂອງຮ້ານຄ້າ | • ສຳລັບທຸລະກິດ(ຮ້ານຄ້າ) ການທົດແທນຄ່າເສຍຫາຍ ເປັນເງິນສົດ ເທົ່າທຽມກັບ ອັດຕາລາຍໄດ້ ປະຈຳວັນ(ຕົວຢ່າງ. 10,000 ກີບ/ວັນ) ຄູນໃຫ້ຈຳນວນວັນ ຂອງທຸລະກິດ ທີ່ຖືກລົບກວນ | ຈະໃຊ້ເວລາພຽງແຕ່ ໜຶ່ງວັນໃນການຍົກຍ້າຍຮ້ານຄ້າທີ່ເຮັດດ້ວຍວັດສະດຸທ້ອງຖິ່ນ (ໄມ້ໄຜ)/ທີ່ສາມາດເຄື່ອນຍ້າຍໄດ້ (ສາມາດເຄື່ອນຍ້າຍໄດ້ໂດຍປາດສະຈາກການມ້າງໂຄງສ້າງ). ໃຊ້ເວລາຢູ່ປະມານສອງມື້ ໃນການເຄື່ອນຍ້າຍ ແລະ ສ້ອມແປງ ຮ້ານຄ້າທີ່ໃຊ້ວັດສະດຸແບບຖາວອນ (ເຊັ່ນ ນຳໃຊ້ໄມ້ດີ ແລະ ເບຕົງ).<br>ອັດຕາ ໄດ້ຮັບການກຳໜົດໂດຍການສຳ |

| ຮູບແບບການສູນເສຍ | ກຳມະສິດບຸກຄົນ | ສິດທິ ທີ່ໄດ້ຮັບ | ການຈັດຕັ້ງປະຕິບັດ |
|---|---|---|---|
| | | | ພາດ ກັບເຈົ້າຂອງຮ້ານແບບບໍ່ເປັນທາງການ ເພື່ອໃຫ້ໄດ້ການປະມານລາຄາຜົນກຳໄລສຸດທິຂອງແຕ່ລະວັນ |
| ຜົນລະປູກ ແລະ ຕົ້ນໄມ້ | ເຈົ້າຂອງ ຜົນລະປູກ ແລະ ຕົ້ນໄມ້ ບໍ່ວ່າຈະເປັນເຈົ້າຂອງດິນ ຫຼືບໍ່ | • ໃນກໍລະນີ ຜົນລະປູກ ທີ່ມີຜົນຜະລິດ ປະຈຳປີ ຂອງພືດຍືນຕົ້ນ ພອມເຖິງຍາມເກັບກູ້ ແລະ ບໍ່ສາມາດເກັບກູ້ໄດ້, ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນເທົ່າທຽມກັບ ຜົນຜະລິດສູງສຸດ ຂອງຜົນລະປູກ ໃນສາມປີຜ່ານມາ ຄູນໃຫ້ລາຄາຜົນລະປູກ ໃນທ້ອງຕະຫລາດ ປະຈຸບັນ<br>• ສຳລັບ ຜົນລະປູກ ແລະ ຕົ້ນໄມ້ ທີ່ມີຜົນຜະລິດຕະຫຼອດປີ, ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນເທົ່າທຽມກັບ ລາຄາໃນທ້ອງຕະຫຼາດ ປັດຈຸບັນ ໂດຍອີງຕາມຊະນິດ, ອາຍຸ ແລະ ສະມັດຕະພາບ ຜົນຜະລິດ<br>• ສຳລັບຕົ້ນໄມ້ທ່ອນ, ການທົດແທນຄ່າເສຍຫາຍ ເປັນເງິນສົດ ຕາມມູນຄ່າປ່ຽນແທນເທົ່າທຽມກັບ ລາຄາໃນທ້ອງຕະຫຼາດ ປະຈຸບັນ ໂດຍອີງຕາມຊະນິດ, ອາຍຸ ແລະ ເສັ້ນຜ່າສູນກາງ ຈາກໜ້າຕັດຄວາມສູງ ຂອງຕົ້ນໄມ້ | |
| ການສູນເສຍ ຊັບພະຍາກອນ ວັດທະນະທຳ/ສິ່ງປຸກສ້າງ ສາທາລະນະ/ກຳມະສິດ ບ້ານ ຫຼື ລວມໝູ່ ແບບຖາວອນ | ປະຊາຊົນ ຫຼື ຄົວເຮືອນ ພາຍໃນບ້ານ | • ການທົດແທນຄ່າເສຍຫາຍ ຕາມມູນຄ່າປ່ຽນແທນ ສຳລັບ ສິ່ງປຸກສ້າງ ປັດຈຸບັນ ໂດຍອີງຕາມມູນຄ່າ ສິ່ງປຸກສ້າງ ໃນປັດຈຸບັນ | |
| ຂຸມຝັງສົບ ທີ່ຕັ້ງຢູ່ໃນພື້ນທີ່ໄດ້ຮັບຜົນກະທົບ | ເຈົ້າຂອງຂຸມຝັງສົບ | • ການທົດແທນຄ່າເສຍຫາຍ ສຳລັບການເຄື່ອນຍ້າຍ, ການຂຸດ, ການຍັບຍ້າຍ, ການຝັງສົບຄືນ ແລະ ມູນຄ່າອື່ນໆ ທີ່ກ່ຽວຂ້ອງ ຈະໄດ້ຈ່າຍ ເປັນເງິນສົດ ໃຫ້ແຕ່ລະຄອບຄົວ ທີ່ຖືກຜົນກະທົບ | |
| ເສົາໄຟຟ້າ | ບໍລິສັດໄຟຟ້າ | • ການທົດແທນຄ່າເສຍຫາຍ ເປັນເງິນສົດ ສຳລັບການຮື້ຖອນ, ການຍ້າຍ ແລະ ການສ້າງຄືນ | |
| ຄ່າໃຊ້ຈ່າຍລ້ຽງດູໃນໄລຍະຂ້າມຜ່ານ | ການຍັບຍ້າຍ ຄົວເຮືອນ-ການຍັບຍ້າຍ ໃນຕອນດິນທີ່ຍັງເຫຼືອ ຫຼື ສະຖານທີ່ ອື່ນໆ | • ການຍັບຍ້າຍ ຜູ້ທີ່ໄດ້ຮັບຜົນກະທົບ ໂດຍບໍ່ມີຜົນກະທົບ ຕໍ່ທຸລະກິດ ຫຼື ແຫຼ່ງລາຍຮັບ ຈະໄດ້ຮັບການຕອບສະໜອງ ເປັນເງິນສົດ ຫຼື ຮູບແບບ ການຊ່ວຍເຫຼືອ ເທົ່າກັບ ເຂົ້າ 16 ກິໂລ ຕາມມູນຄ່າໃນຕະຫຼາດ ສຳລັບ 3 | |

| ຮູບແບບການສູນເສຍ | ກຳມະສິດບຸກຄົນ | ສິດທິ ທີ່ໄດ້ຮັບ | ການຈັດຕັ້ງປະຕິບັດ |
|---|---|---|---|
| | ຂອງຜູ້ໄດ້ຮັບຜົນກະທົບຮ້າຍແຮງສູນເສຍ10 % ຫຼືຫຼາຍກວ່າ ຂອງສະມັດຕະພາບດິນ | ເດືອນ ຕໍ່ສະມາຊິກຄອບຄົວ<br>• ການຍົບຍ້າຍ ຜູ້ທີ່ໄດ້ຮັບຜົນກະທົບ ທີ່ແຫຼ່ງລາຍຮັບ ຖືກຜົນກະທົບ(ຕົວຢ່າງ: ລາຍຮັບຈາກທຸລະກິດ)ຫຼື ຜູ້ທີ່ໄດ້ຮັບຜົນກະທົບສູນເສຍຫຼາຍກວ່າ 10% ຂອງສະມັດຕະພາບດິນ ເຂົາເຈົ້າ ຈະໄດ້ຮັບການຕອບສະໜອງ ເປັນເງິນສົດ ຫຼື ຮູບແບບການຊ່ວຍເຫຼືອ ເທົ່າກັບ ເຂົ້າ 16 ກິໂລ ຕາມມູນຄ່າໃນຕະຫຼາດ ສໍາລັບ 6 ເດືອນ ຕໍ່ສະມາຊິກຄອບຄົວ | |
| ຄ່າໃຊ້ຈ່າຍ ສໍາລັບການຂົນສົ່ງ | ການຍົບຍ້າຍ ຄົວເຮືອນໄປສະຖານທີ່ ອື່ນໆ | ການຕອບສະໜອງ ລົດບັນທຸກ ເພື່ອຂົນ ວັດສະດຸ ກໍ່ສ້າງ ທັງເກົ່າ ແລະ ໃໝ່ ແລະ ສິ່ງຂອງຕ່າງໆ ຂອງບຸກຄົນ | ຜູ້ທີ່ໄດ້ຮັບຜົນກະທົບອາດຈະເລືອກທີ່ຈະຮັບເອົາການຊ່ວຍເຫຼືອແບບເປັນເງິນສົດ. ຈໍານວນ (ຄ່າແຮງງານ ແລະ ໄລຍະໃນການຍົບຍ້າຍຈາກສະຖານທີ່ຕັ້ງ) ເພື່ອກໍາໜົດໃນການຈັດຕັ້ງປະຕິບັດ |
| ຜົນກະທົບຮ້າຍແຮງຕໍ່ກັບຜູ້ທີ່ໄດ້ຮັບຜົນກະທົບ ທີ່ເປັນຜູ້ດ້ອຍໂອກາດ (ການຍົບຍ້າຍ ຜູ້ທີ່ໄດ້ຜົນກະທົບ ແລະ ການສູນເສຍເຫຼົ່ານັ້ນ 10% ຫຼື ຫຼາຍກວ່າ ຂອງສະມັດຕະພາບຊັບສິນຂອງເຂົາເຈົ້າ) | ຜູ້ທີ່ໄດ້ຮັບຜົນກະທົບ ທີ່ເປັນຜູ້ດ້ອຍໂອກາດ ເຊັ່ນ: ຄົນທຸກຍາກ , ຫຼື ຫົວໜ້າຄອບຄົວ ທີ່ເປັນຜູ້ຍິງ, ຜູ້ເຖົ້າ ຫຼື ຜູ້ພິການ ແລະ ຊົນເຜົ່າ | • ຄ່າໃຊ້ຈ່າຍເພີ່ມເຕີມ ເພື່ອຕອບສະໜອງເຂົ້າ 1 ເດືອນ ຕໍ່ ຄົນ ໃນຄອບຄົວ<br>• ມີສິດເຂົ້າຮ່ວມ ແຜນການຟື້ນຟູລາຍຮັບ<br>• ຜູ້ຮັບເໝົາ ຈະໃຊ້ຄວາມພະຍາຍາມ ຢ່າງເໝາະສົມ ເພື່ອຄັດເລືອກ ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນຜູ້ດ້ອຍໂອກາດ ເຂົ້າເປັນແຮງງານກໍ່ສ້າງເສັ້ນທາງ ແລະ ການບໍາລຸງຮັກສາ ຂົວທາງ | ຜູ້ທີ່ທຸກຍາກທີ່ສຸດ ຈະເປັນ ຜູ້ທີ່ຕໍ່າກວ່າເສັ້ນຄວາມທຸກຍາກແຫ່ງຊາດທີ່ກໍານົດໄວ້ໃນຂໍ້ຕົກລົງຮ່ວມກ່ຽວກັບຄວາມທຸກຍາກຮ່ວມກັບທະນາຄານໂລກ |

## 8 ເອກະສານຄັດຕິດ 2: ຕົວຢ່າງ ແບບຟອມສະເໜີແນະ ແລະ ແບບຟອມເຫັນດີ

**ຕົວຢ່າງແບບຟອມຄໍາສະເໜີ/ຄໍາຄິດເຫັນ**

ວັນທີ: ___________

ຄໍາຄິດຄໍາເຫັນຕ່າງໆ ຈະຖືກສົ່ງໃຫ້ກັບຄະນະກໍາມະການ ເກັບກໍາຄໍາສະເໜີແນະ ແລະ ໄກ່ເກຍ (FMC) ທີ່:

____ ຂັ້ນແຂວງ _____ ຂັ້ນເມືອງ ____ຂັ້ນຄຸ້ມບ້ານ _____ ຂັ້ນບ້ານ

ເມືອງ: __________________ ຄຸ້ມບ້ານ: __________________ ບ້ານ: _____________

ອະທິບາຍຄໍາຕອບໂດຍທັນທີ. ເພື່ອຮັບປະກັນວ່າເປັນຄວາມລັບ, ພວກເຮົາຈະບໍ່ຖາມສະເພາະເຈາະຈົງຜູ້ໃດຜູ້ໜຶ່ງ ເວັ້ນແຕ່ຜູ້ໃດທີ່ຈະສະມັກໃຈຕອບ. ບັນຫາຂອງຄໍາສະເໜີແນະ ແມ່ນຄືດັ່ງຕໍ່ໄປນີ້:

ວັນທີ່ຂອງເຫດການທີ່ທ່ານຕ້ອງການ ສະເໜີແນະ: ______________________

ສະຖານທີ: ___________________

ຜູ້ທີ່ມີສ່ວນກ່ຽວຂ້ອງ: _____________________________________________________

ລັກສະນະຂອງການສະເໜີແນະ (ກະລຸນາອະທິບາຍ ຂໍ້ມູນທີ່ທ່ານຕ້ອງການຢາກ ສື່ສານອອກໄປ) :

_______________________________________________________________

_______________________________________________________________

_______________________________________________________________

_______________________________________________________________

ແມ່ນຫຍັງເປັນສິ່ງທີ່ທ່ານສະເໜີຂໍ: ________________________________________________________

_______________________________________________________________

_______________________________________________________________

ພວກເຮົາຂໍສະເໜີບັນຫານີ້ສໍາລັບການພິຈາລະນາຂອງທ່ານແລະການຊ່ວຍເຫຼືອແກ້ໄຂບັນຫາແລະຄວາມກັງວົນ

---------------------

**ຕົວຢ່າງແບບຟອມຕົກລົງເຫັນດີ**

ວັນທີ: ___________

ຄໍາຄິດຄໍາເຫັນ ແມ່ນ ເຮັດຂຶ້ນໂດຍ ຄະນະກໍາມະການ ເກັບກໍາຄໍາສະເໜີແນະ ແລະ ໄກ່ເກ່ຍ (FMC):

____ ຂັ້ນແຂວງ _____ ຂັ້ນເມືອງ ____ຂັ້ນຄຸ້ມບ້ານ _____ ຂັ້ນບ້ານ

FMC ດໍາເນີນການ ສອບສວນ ຄໍາສະເໜີແນະ ເລກທີ. _____________ ຢູ່at:

____ ຂັ້ນແຂວງ _____ ຂັ້ນເມືອງ ____ຂັ້ນຄຸ້ມບ້ານ _____ ຂັ້ນບ້ານ

ໃນກອງປະຊຸມ, ໄດ້ຕົກລົງເຫັນດີ ແລະ ມີການແກ້ໄຂບັນຫາດັ່ງນີ້: ________________________________

________________________________________________________________

________________________________________________________________

ຄໍາຕົກລົງເຫັນດີນີ້ ແມ່ນໄດ້ເຊັນຮັບຮູ້ໂດຍ ທຸກພາກສ່ວນ ເຊິ່ງກໍລະນີຄໍາສະເໜີແນະ ແມ່ນໄດ້ປິດລົງ ແລະ ບໍ່ມີບັນຫາ ແລະ ປະເດັນອື່ນໆ ທີ່ຍັງຄົງຄ້າງ.

**<u>ຜູ້ເຂົ້າຮ່ວມ ແລະ ພະຍານ</u>**

ຜູ້ທີ່ກ່ຽວຂ້ອງ ໃນຄໍາສະເໜີແນະ (ຊື່ຂອງຜູ້ທີ່ ກ່ຽວຂ້ອງໃນກໍລະນີໃນທາງໃດທາງໜຶ່ງ. ໝາຍເຫດ ນີ້ບໍ່ແມນໄປນໍາໃຊ້ກັບ- ຊື່ຂອງໂຈດ, ໂຈດຍັງຄົງເປັນຮັກສາເປັນຄວາມລັບ ເວັ້ນເສຍແຕ່ໂຈດຢາກໃຫ້ເປີດເຜີຍ)

| ຊື່ | ຕໍາແໜ່ງ | ລາຍເຊັນ |
|---|---|---|
| 1. | | |
| 2. | | |
| 3. | | |
| 4. | | |

**ຄະນະກໍາມະການ ເກັບກໍາຄໍາສະເໜີແນະ ແລະ ໄກ່ເກ່ຍ**:

| ຊື່ | ຕໍາແໜ່ງ | ລາຍເຊັນ |
|---|---|---|
| 1. | | |
| 2. | | |
| 3. | | |
| 4. | | |

ທີ່: ________________ ວັນທີ: __________

(ລາຍເຊັນ ແລະ ປະທັບກາ ຂອງຕ່າງໜ້າເຈົ້າແຂວງ/ເຈົ້າເມືອງ)

ລາຍງານຈາກ ຄະນະກໍາມະການ ເກັບກໍາຄໍາສະເໜີແນະ ແລະ ໄກ່ເກ່ຍ ທີ່:

| | |
|---|---|
| ບ້ານ | |
| ຄຸ້ມບ້ານ | |
| ເມືອງ | |
| Co;’ | |

**2/ ໄລຍະຂອງການລາຍງານ**

ຈາກ ......... / ……… / …….. ເຖິງ ......... / ……… / ……..

**3/ ສະຫຼຸບສັງລວມ**

| | |
|---|---|
| ຈຳນວນຄຳສະເໜີແນະທີ່ໄດ້ຮັບ | |
| ຈຳນວນຄຳສະເໜີແນະທີ່ໄດ້ຮັບການແກ້ໄຂ | |
| ຈຳນວນຄຳສະເໜີແນະທີ່ຍັງບໍ່ທັນໄດ້ແກ້ໄຂ | |

**4/** ລາຍລະອຽດຂອງຄຳສະເໜີແນະທີ່ໄດ້ຮັບ

ອີງໃສ່ຕາຕະລາງຂ້າງລຸ່ມນີ້:

ວັນທີ:…..……/…………/………

ລາຍເຊັນ ແລະ ກຳຈາຈາກ FMC

# 9 ເອກະສານຄັດຕິດ 3: ຕາຕະລາງສັງລວມຂໍ້ມູນກ່ຽວກັບ ໂຄງລ່າງພື້ນຖານ ແລະ ທີ່ດິນທີ່ໄດ້ຮັບຜົນກະທົບ

ແຂວງ: _______________ ເມືອງ: _______________________ ບ້ານ/ຄຸ້ມບ້ານ: ______________________________

| | | | | | | ຊັບສິນທີ່ສູນເສຍ | | | ຜົນລະປູກທີ່ສູນເສຍ | | | ຊັບສິນອື່ນໆ ທີ່ສູນເສຍ | ການສູນເສຍອື່ນໆ | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| ລ/ດ ຄຄ. | ຊື່ຫົວໜ້າ ຄົວເຮືອນ | ຈຳນວນ ສະມາຊິກ ໃນຄົວ ເຮືອນ | ຈຳນວນຜູ້ທີ່ ຄອບຄອງທີ່ ດິນ ທັງໝົດ ໃນຄົວເຮືອນ (m2) | ດິນທີ່ ຕ້ອງການ (m2) | % ທີ່ ສູນ ເສຍ ທັງ ໝົດ | ສິ່ງປຸກສ້າງ ຖ້າວອນ (m2) | ສິ່ງປຸກສ້າງ ຊົ່ວຄາວ (m2) | ດິນທີ່ຢູ່ ອາໄສທີ່ສູນ ເສຍ (m2) | ຕົ້ນໄມ້ ກິນໝາກ ທີ່ສູນ ເສຍ (ປະເພດ ແລະ ຈຳ ນວນ) | ເນື້ອທີ່ປູກ ໄມ້/ປູກຝັງ ທີ່ສູນເສຍ (m2) | ອື່ນໆ (ລະບຸ) | ຕົວຢາງ: ປ່າຊ້າ, ນ້ຳ ສ້າງ, ອື່ນໆ. (ປະເພດ ແລະ ຈຳ ນວນ) | ທີ່ຢູ່ອາໄສ (ທີ່ເຊົ່າ) | ທຸລະກິດ ທີ່ສູນ ເສຍ | ລາຍ ຮັບທີ່ ສູນເສຍ |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |
| | | | | | | | | | | | | | | | |

# 10 ເອກະສານຄັດຕິດ 4: ເນື້ອໃນຂອງບົດລາຍງານການໄດ້ຮັບສິດທິໃນການນໍາໃຊ້ ແລະ ການ ຊົດເຊີຍທີ່ດິນ; ແລະ ແຜນຈັດຕັ້ງປະຕິບັດການຕັ້ງຖິ່ນຖານໃໝ່

### A4.1 ເນື້ອໃນຂອງບົດລາຍງານການໄດ້ຮັບສິດທິໃນການນໍາໃຊ້ ແລະ ກໍາົດເຊີຍທີ່ດິນ (ແຜນຈັດຕັ້ງປະຕິບັດການຕັ້ງຖິ່ນຖານໃໝ່ໂດຍ ຫຍໍ້)

- ທີ່ຕັ້ງ ແລະ ຂໍ້ມູນກ່ຽວກັບໂຄງການ
- ການຍົກຍ້າຍທີ່ອາດເກີດຂຶ້ນໄດ້ອັນເນື່ອງມາຈາກໂຄງການຍ່ອຍທີ່ໄດ້ມີການນໍາສະເໜີໃຫ້ມີການຈັດຕັ້ງປະຕິບັດ
- ຂອບເຂດດ້ານກົດໝາຍ
- ການສໍາຫຼວດພົນລະເມືອງ ແລະ ສະພາບເສດຖະກິດສັງຄົມຂອງບັນດາຄອບຄົວທີ່ໄດ້ຮັບຜົນກະທົບ, ການສໍາຫຼວດຊັບສິນ ແລະ ກິດຈະການທີ່ໄດ້ຮັບຜົນກະທົບ
- ຜົນກະທົບທີ່ເນື່ອງມາຈາກການຍົກຍ້າຍຖິ່ນຖານ
- ເງື່ອນໄຂໃນການໄດ້ຮັບສິດທິຕ່າງໆ
- ວິທີການຄິດໄລ່ມູນຄ່າໃນການຊົດເຊີຍຄວາມເສຍຫາຍຕ່າງໆ
- ແຫຼ່ງທຶນຕ່າງໆ ແລະ ການປະເມີນມູນຄ່າຕ່າງໆ
- ຕາຕະລາງຕ່າງໆ
- ການຕິດຕາມ, ກວດກາ ແລະ ປະເມີນ

### ເອກະສານຊ້ອນທ້າຍ 4.2 ໂຄງຮ່າງຂອງແຜນຈັດຕັ້ງປະຕິບັດການຍົກຍ້າຍຖິ່ນຖານ (RAP)[2]

I. ບົດນໍາສະເໜີ
- ຂໍ້ມູນລາຍລະອຽດກ່ຽວກັບອົງປະກອບຕ່າງໆຂອງໂຄງການ
- ບົດສະຫຼຸບຂອງຜົນກະທົບທີ່ຮ້າຍແຮງ ແລະ ການໄດ້ມາຂອງຊັບສິນຕ່າງໆ
- ການກໍານົດຜູ້ມີສ່ວນຮ່ວມຫຼັກໆ ຊຶ່ງລວມມີກຸ່ມຄົນໃນສັງຄົມທີ່ສ່ຽງຕໍ່ການເຮັດໃຫ້ເກີດມີຄວາມທຸກຍາກ ແລະ ອ່ອນໄຫວຕໍ່ ປະກົດການຕ່າງໆໃນສັງຄົມ
- ສະແດງໃຫ້ເຫັນເຖິງວິທີການຕ່າງໆທີ່ໄດ້ນໍາໃຊ້ເພື່ອຫຼຸດຜ່ອນຜົນກະທົບທີ່ຮ້າຍແຮງ

II. ຜົນຈາກການສໍາຫຼວດພົນລະເມືອງ ແລະ ສະພາບເສດຖະກິດສັງຄົມ
- ທົບທວນຄືນລັກສະນະດ້ານເສດຖະກິດ-ສັງຄົມຂອງບຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການ (PAPs),ຊຶ່ງລວມມີ: ການແຈກ ຢາຍທາງດ້ານພື້ນທີ່, ຂະໜາດ ແລະ ການປະກອບເປັນຄອບຄົວຂອງແຕ່ລະຄົວເຮືອນ; ໂຄງສ້າງດ້ານອາຍຸ-ເພດ; ລະດັບລາຍຮັບ ຊຶ່ງລວມມີ ການປະກອບອາຊີບອັນເປັນພື້ນຖານ, ແຫຼ່ງລາຍຮັບເສີມ, ກິດຈະກໍາໃນການດໍາລົງຊີວິດຕ່າງໆ; ສະຖານະພາບໃນ ການຄອບຄອງ ແລະ ການເປັນເຈົ້າຂອງທີ່ດິນ (ທີ່ດິນ ແລະ ໂຄງສ້າງຕ່າງໆ); ລັກສະນະໃນການຖືສິດນໍາໃຊ້ທີ່ດິນລວມໝູ່ ຊຶ່ງ ລວມມີ ລັກສະນະດ້ານພື້ນທີ່ ແລະ ຄຸນນະພາບ; ລັກສະນະຕ່າງໆດ້ານໂຄງສ້າງ ຊຶ່ງລວມມີປະເພດໃນການກໍ່ສ້າງ.
- ຂໍ້ມູນຄວນຈະໄດ້ຮັບການສະໜອງ ຊຶ່ງແຍກເປັນແຕ່ລະເຜົ່າຊົນ, ຖ້າມີ ແລະ ແຍກຕາມເພດນໍາອີກ
- ປະເພດ ແລະ ຈໍານວນຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໂດຍແຍກເປັນແຕ່ລະປະເພດ ແລະ ລະດັບຂອງຜົນກະທົບ ເປັນຕົ້ນແມ່ນ:

---

[2]Annex 3 of the Technical Guidelines on Compensation and Resettlement. These Resettlement Technical Guidelines, Nov. 2005. These Guidelines were prepared in accordance with the provisions of the Prime Minister's Decree No 192/PM on Compensation and Resettlement, issued on 7 July 2005, and the Implementing Regulations on Compensation and Resettlement issued by the STEA.

- ຄົວເຮືອນທີ່ໄດ້ຮັບຜົນກະທົບທີ່ຮ້າຍແຮງ ເນື່ອງມາຈາກການສູນເສຍຊັບສິນໃນການທຳມາຫາກິນ ແລະ ຕ້ອງໄດ້ຍົກຍ້າຍຖິ່ນຖານ
- ຄົວເຮືອນທີ່ໄດ້ຮັບຜົນກະທົບທີ່ຮ້າຍແຮງ ເນື່ອງມາຈາກການສູນເສຍທີ່ຢູ່ອາໄສ, ຂອບເຂດໃນການດຳເນີນທຸລະກິດ
- ຄົວເຮືອນທີ່ໄດ້ຮັບຜົນກະທົບສ່ວນໃດໜຶ່ງ ເປັນຕົ້ນແມ່ນ ອາດເສຍໂອກາດໃນການດຳເນີນກິດຈະການ ອັນເນື່ອງມາຈາກການສູນເສຍທີ່ດິນ, ເຮືອນ ຫຼື ຂອບໃນການດຳເນີນທຸລະກິດ ແຕ່ບໍ່ໄດ້ຖືກຍົກຍ້າຍຖິ່ນຖານ
- ບັນດາຄົວເຮືອນທີ່ໄດ້ຮັບຜົນກະທົບເລັກໜ້ອຍ ກໍຈະໄດ້ຮັບຄ່າຊົດເຊີຍເພື່ອບັນເທົາຄວາມລຳບາກ ຫຼື "ການຊ່ວຍເຫຼືອໃຫ້ສາມາດກັບຄືນສູ່ສະພາບເດີມ" ເທົ່ານັ້ນ
- ບັນດາຜູ້ເຊົ່າ, ຜູ້ໃຊ້ແຮງງານ, ຜູ້ໃຊ້ແຮງງານ ຫຼື ບຸກຄົນທີ່ບໍ່ມີຖິ່ນຖານ ທີ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກໂຄງການ

III. ເງື່ອນໄຂໃນການໄດ້ຮັບສິດທິທີ່ຈະໄດ້ຄ່າຊົດເຊີຍ

- ລາຍລະອຽດກ່ຽວກັບຈຸດປະສົງຂອງນະໂຍບາຍການຊົດເຊີຍຄ່າເສຍຫາຍ.
- ເງື່ອນໄຂທີ່ຈະໄດ້ຮັບການຊົດເຊີຍຂອງບັນດາຜູ້ໄດ້ຮັບຜົນກະທົບຈາກໂຄງການ, ຊຶ່ງລວມມີ "ວັນທີ່ຖືກຕັດສິດທິຕ່າງໆ",ຖ້າຈຳເປັນ.
- ລາຍລະອຽດຂອງການໄດ້ຮັບສິດທິໃນການຊົດເຊີຍ ແລະ ຮູບແບບອື່ນໆໃນການຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກໂຄງການໃນແຕ່ລະປະເພດ.
- ລາຍລະອຽດຂອງວິທີການສະເພາະໃນການຫຼຸດຜ່ອນຜົນກະທົບທີ່ຮ້າຍແຮງຕໍ່ກຸ່ມຄົນທີ່ສ່ຽງຕໍ່ການໄດ້ຮັບຜົນກະທົບ (ຖ້າສອດຄ່ອງ).
- ເງື່ອນໄຂໃນການໄດ້ຮັບສິດທິຕ່າງໆ.

IV. ແຜນການຍົກຍ້າຍຖິ່ນຖານ (ຖ້າຈຳເປັນ)

- ບົດທົບທວນຄືນກ່ຽວກັບຄວາມເໝາະສົມຂອງທາງເລືອກຂອງຖິ່ນຖານທີ່ຈະຍົກຍ້າຍໄປ
- ເງື່ອນໄຂໃນການຄັດເລືອກທີ່ຕັ້ງຂອງຖິ່ນຖານທີ່ຈະຍົກຍ້າຍໄປ
- ບົດທົບທວນຄືນກ່ຽວກັບການປ້ອງກັນ ແລະ ຄຸ້ມຄອງສິ່ງແວດລ້ອມຢູ່ທີ່ຖິ່ນຖານທີ່ຈະຍົກຍ້າຍໄປ
- ທາງເລືອກໃນການຍົກຍ້າຍຈັດສັນເບື້ອງຕົ້ນຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ
- ການທົບທວນຄືນກ່ຽວກັບທາງເລືອກສຳລັບການສະໜອງທີ່ພັກອາໄສ, ພື້ນຖານໂຄງລ່າງ ແລະ ການບໍລິການດ້ານສັງຄົມ
- ບົດທົບທວນຄືນກ່ຽວກັບຂັ້ນຕອນການປຶກສາຫາລືກັບກຳຜູ້ໄດ້ຮັບຜົນກະທົບຈາກໂຄງການ ໃນການຄັດເລືອກທາງເລືອກໃນການຍົກຍ້າຍຖິ່ນຖານໃນໄລຍະການຈັດຕັ້ງປະຕິບັດ
- ຈຳນວນປະຊາກອນທີ່ເປັນເຈົ້າພາບໃນການເກັບກຳຂໍ້ມູນດ້ານເສດຖະກິດ-ສັງຄົມ, ຖ້າມີ

V. ວິທີການໃນການຟື້ນຟູລາຍຮັບ(ເພາະຈຳເປັນ)

- ລາຍລະອຽດກ່ຽວກັບເງື່ອນໄຂທີ່ສົມເຫດສົມຜົນສຳລັບວິທີການຟື້ນຟູລາຍຮັບ
- ບົດວິເຄາະຄວາມເປັນໄປໄດ້ຂອງແຜນການຟື້ນຟູລາຍຮັບທີ່ເປັນທາງເລືອກ ຊຶ່ງລວມມີການນຳໃຊ້ການຊົດເຊີຍທີ່ດິນທຳກິນແບບລວມໝູ່, ຄວາມຕ້ອງການໃນການຝຶກອົບຮົມສຳລັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການໃນສະພາບການສະໜອງໂອກາດໃນການໄດ້ວຽກເຮັດງານທຳ ແລະ ຄວາມຕ້ອງການຂອງຕະຫຼາດ, ວິທີການທີ່ຈະໄດ້ຮັບການສະໜັບສະໜູນດ້ານສິນເຊື່ອ ແລະ ວິສາຫະກິດຂະໜາດນ້ອຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການທີ່ສົນໃຈໃນການພັດທະນາທຸລະກິດຂະໜາດນ້ອຍ

- ການຈັດກຽມການດ້ານສະຖາບັນໃນການຊ່ວຍເຫຼືອດ້ານການເງິນ ແລະ ບໍລິຫານຈັດການແຜນການຟື້ນຟູລາຍຮັບ

VI. ການມີສ່ວນຮ່ວມຂອງມວນຊົນ, ການປຶກສາຫາລື, ກົນໄກການເປີດເຜີຍ ແລະ ການເຮັດໃຫ້ການຮ້ອງທຸກໄດ້ຮັບຄວາມຍຸດຕິທຳ

- ການປຶກສາຫາລືຂອງມວນຊົນທີ່ຈັດໃຫ້ມີຂຶ້ນໃນລະຫວ່າງການກະກຽມແຜນການຍົກຍ້າຍຖິ່ນຖານ (ສະໜອງລາຍລະອຽດຕ່າງໆ), ຊຶ່ງລວມມີ ການປຶກສາຫາລືສະເພາະໂດຍອີງໃສ່ເພດ ແລະ ການເປີດເຜີຍຂໍ້ມູນ. ສິ່ງນີ້ລວມເອົາຄວາມຕັ້ງໃຈອັນພິເສດທີ່ຈະຮັບປະກັນຊັບສິນ, ຊັບສົມບັດ ແລະ ສິດທິໃນການນຳໃຊ້ທີ່ດິນຂອງເພດຍິງ ແລະ ຮັບປະກັນການຟື້ນຟູມາດຕະຖານໃນການດຳລົງຊີວິດ ແລະ ລາຍຮັບຂອງພວກເຂົານຳອີກ

- ລາຍລະອຽດກ່ຽວກັບໂອກາດສໍາລັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການທີ່ຈະມີສ່ວນຮ່ວມໃນການວາງແຜນ ແລະ ຈັດຕັ້ງປະຕິບັດການວາງແຜນໃນການຍົກຍ້າຍຖິ່ນຖານ
- ຂັ້ນຕອນຕ່າງໆທີ່ໄດ້ຮັບມາໃນການເກັບກໍາບັນຫາໃນການຮ້ອງທຸກ, ບົດທວນຄືນ ແລະ ການຕັດສິນໃຈ
- ຂັ້ນຕອນຕ່າງໆໃນການເປີດເຜີຍ ແຜນຍົກຍ້າຍຈັດສັນ ແລະ ຂໍ້ມູນກ່ຽວກັບການຍົກຍ້າຍຈັດສັນ ກ່ຽວກັບການຊົດເຊີຍ ແລະ ທາງເລືອກໃນການຍົກຍ້າຍຈັດສັນ ໃຫ້ກັບຜູ້ທີ່ໄດ້ຮັບຜົນກະທົບ ແລະ ການນໍາໃຊ້ພາສາທີ່ສາມາດເຂົ້າໃຈໄດ້

VII. ການຈັດຕັ້ງອົງການຈັດຕັ້ງ

- ການສ້າງວຽກງານການບໍລິຫານ ແລະ ແຜນສໍາລັບການຝຶກອົບຮົມ ແລະ ການສ້າງຄວາມອາດສາມາດ ຕາມທີ່ຕ້ອງການ

VIII. ການຕິດຕາມກວດກາ ແລະ ການໃຫ້ທິດນໍາ

- ການຂຽນບັນຊີຕົວຊີ້ວັດໃນການຕິດຕາມກວດກາພຶດຕິກໍາຕ່າງໆ
- ຄວາມຮັບຜິດຊອບຂອງສະຖາບັນ ແລະ ບັນດາຂັ້ນຕອນຕ່າງໆສໍາລັບການຕິດຕາມກວດກາບັນດາໂຄງການພາຍໃນ
- ການປຶກສາຫາລືກ່ຽວກັບບົດບາດ, ຖ້າມີ, ຂອງອົງການຈັດຕັ້ງທີ່ຊຸມຊົນມີສ່ວນຮ່ວມ ແລະ ບັນດາອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ
- ເນື້ອໃນ ແລະ ຄວາມຖີ່ໃນການສົ່ງບົດລາຍງານການຕິດຕາມກວດກາ

IX. ການຄາດຄະເນຄ່າໃຊ້ຈ່າຍ ແລະ ງົບປະມານ

- ການຄາດຄະເນຄ່າໃຊ້ຈ່າຍລວມສໍາລັບການສູນເສຍດ້ານຊັບສິນແຕ່ລະປະເພດ
- ຄ່າໃຊ້ຈ່າຍທີ່ໄດ້ຮັບການຄາດຄະເນສໍາລັບແຜນການຟື້ນຟູລາຍຮັບ, ວຽກງານບໍລິຫານ, ການຊີ້ທິດເບື້ອງທາງ ແລະ ການຕິດຕາມກວດກາ
- ບົດຖະແຫລງການກ່ຽວກັບຄວາມຮັບຜິດຊອບດ້ານການເງິນກ່ຽວກັບຄ່າໃຊ້ຈ່າຍຕ່າງໆທີ່ພົວພັນເຖິງການຍົກຍ້າຍຖິ່ນຖານ
- ພາລະຜູກພັນພາຍນອກ ແລະ ລາຄາ

X. ການກະກຽມການຈັດຕັ້ງປະຕິບັດ

- ຕາຕະລາງໃນການຈັດຕັ້ງປະຕິບັດກິດຈະກໍາການຍົກຍ້າຍຖິ່ນຖານທັງໝົດ, ແລະ ໃຫ້ຕິດພັນກັບຕາຕະລາງເວລາໂດຍລວມຂອງບັນດາໂຄງການຍ່ອຍ
- ຂັ້ນຕອນຕ່າງໆໃນການຈັດຕັ້ງປະຕິບັດ ຫຼື ການຈັດສົ່ງບັນດາອົງປະກອບຫຼັກໆທີ່ກ່ຽວຂ້ອງ:
  - ບົດທົບທວນຄືນໃນການກະກຽມການຍ້າຍຖິ່ນຖານຈາກບ່ອນໜຶ່ງໄປອີກບ່ອນໜຶ່ງ, ຊຶ່ງລວມມີຕາຕະລາງເວລາ ແລະ ການໃຫ້ເງິນທຶນສໍາລັບການພັດທະນາຖິ່ນຖານທີ່ຈະຍົກຍ້າຍໄປ ແລະ ບັນດາບໍລິການຕ່າງໆທີ່ຈໍາເປັນ ແລະ ສິ່ງຈໍາເປັນອື່ນໆ
  - ບົດທົບທວນຄືນກ່ຽວກັບຂັ້ນຕອນຕ່າງໆໃນການຈ່າຍຄ່າຊົດເຊີຍຕ່າງໆ
  - ຂັ້ນຕອນຕ່າງໆໃນການປະເມີນຄວາມເໝາະສົມໃນການຊົດເຊີຍຄວາມເສຍຫາຍ
  - ຂັ້ນຕອນການດໍາເນີນການຈັດສັນອາຊີບ ຫຼື ແຜນການຟື້ນຟູລາຍຮັບອື່ນໆ

# 11 ເອກະສານຄັດຕິດ 5 ໂຄງຮ່າງການຈັດຕັ້ງ ສໍາລັບ ຄະນະກໍາມະການ ຍົກຍ້າຍຈັດສັນ ແລະ ທົດແທນ ສໍາລັບວຽກງານຂົວທາງ




ຄະນະກໍາມະການຍົກຍ້າຍຈັດສັນ ຂັ້ນແຂວງ (PRC): ປະທານແມ່ນເປັນຜູ້ຮັບຜິດຊອບໃນການອະນຸມັດ ຫືວໜ່ວຍລາຄາ ທີ່ໄດ້ຮັບການສະເໜີຈາກຄະນະກໍາມະການຍົກຍ້າຍຈັດສັນຂັ້ນເມືອງ. ທຸກພະແນກ ແມ່ນມີຄວາມຮັບຜິດຊອບທີ່ກ່ຽວຂ້ອງ ໃນຂະບວນການຂອງໂຄງການ ແລະ ກິດຈະກໍາການຍົກຍ້າຍຈັດສັນ ລວມທັງການແກ້ໄຂຂໍ້ຂັດແຍງ ໃນຂະນະທີ່ ບັນຫາບໍສາມາດແກ້ໄຂໄດ້ຢູ່ໃນຂັ້ນເມືອງ.

DOR: ມີຄວາມຮັບຜິດຊອບສໍາລັບ ການຕິດຕາມກວດກາ ໂຄງການຍ່ອຍ ແລະ ບົດລາຍງານ.

ESD/PTRI: ການຕິດຕາມພາກສະໜາມ ແລະ ກະກຽມບົດລາຍງານ ໄຕມາດ ແລະ ປະຈໍາປີ.

DPWT: ຮັບຜິດຊອບປະສານງານລະຫວ່າງ ພະແນກຕ່າງໆຢູ່ແຂວງ ແລະ ໂຄງການຍ່ອຍຕ່າງໆ

ຄະນະກໍາມະການຍົກຍ້າຍຈັດສັນຂັ້ນເມືອງ (DRC): ຈະຖືກສ້າງຕັ້ງຂຶ້ນພາຍໃຕ້ ຫ້ອງວ່າການເມືອງ. ຮອງເຈົ້າເມືອງຈະເປັນປະທານ ຄະນະກໍາມະການຍົກຍ້າຍຈັດສັນ ແລະ ສະມາຊິກ ຈະປະກອບດ້ວຍ ຫ້ອງການເມືອງທີ່ເປັນຫຼັກຕ່າງໆ (OPWT, ONRE, WUN, ອົງການຈັດຕັ້ງຊາວໜຸມ, ແລະ ຫ້ອງການ ຂອງແນວລາວສ້າງຊາດ). ຈະຮັບຜິດຊອບໃນການປະສານງານ ລະຫວ່າງ ບ້ານທີ່ໄດ້ຮັບຜົນກະທົບ ແລະ ໂຄງການຍ່ອຍ ລວມທັງ ການເກັບກໍາຂໍ້ມູນກ່ຽວກັບຜູ້ໄດ້ຮັບຜົນກະທົບ, ຊັບສິນທີ່ໄດ້ຮັບຜົນກະທົບທີ່ ເປັນທີ່ຍອມຮັບ ຈາກການສໍາຫຼວດສະໜາມ, ການຮັບຮອງການປະເມີນລາຄາຫວືໜ່ວຍ, ຕິດຕາມ ການຊໍາລະຄ່າທົດແທນ, ການໄກ່ເກ່ຍຂໍ້ຂັດແຍ່ງ ພາຍໃຕ້ຂັ້ນເມືອງ).

ຄະນະກໍາມະການຍົກຍ້າຍຈັດສັນຂັ້ນບ້ານ (VRC): ປະກອບມີຜູ້ສູງອາຍຸ, ຮອງນາຍບ້ານ, ນາຍບ້ານ, ສະຫະພັນແມ່ຍິງ,ອົງການຈັດຕັ້ງຊາວໜຸມ. VRC ຢູ່ຂັ້ນບ້ານ ຈະເປັນຜູ້ຕິດຕາມ ການຍັກຍ້າຈັດສັນ ແລະ ການຊໍາລະຄ່າທົດແທນ, ການແກ້ໄຂຄໍາຮອງທຸກ ພາຍໃນຂັ້ນບ້ານ.

## 12 ເອກະສານຄັດຕິດ 6: ວິທີການ ແລະ ຂັ້ນຕອນການປະກອບສ່ວນທີ່ດິນ ດ້ວຍຄວາມສະໝັກໃຈ

ໃນລະຫວ່າງ ການຈັດຕັ້ງປະຕິບັດໂຄງການ, ພະແນກໂຍທາທິການ ແລະ ຂົນສົ່ງ(ພຍທຂ) ຈະນໍາໃຊ້ວິທີການດັ່ງຕໍ່ໄປນີ້:

1. ***ການປະເມີນເບື້ອງຕົ້ນ.*** ການພິຈາລະນາ ທີ່ເໝາະສົມ ສໍາລັບການປະກອບສ່ວນທີ່ດິນ ດ້ວຍຄວາມສະໝັກໃຈ ຢູ່ໃນສະພາບຂອງໂຄງການ. ພະແນກໂຍທາທິການ ແລະ ຂົນສົ່ງຈະພິຈາລະນາ ນໍາໃຊ້ວິທີການ ປະກອບສ່ວນທີ່ດິນ ດ້ວຍຄວາມສະມກໃຈ ເປັນວິທີການແກ້ໄຂ ການເວນຄືນທີ່ດິນສ່ວນຕົວ ຫຼື ການສູນເສຍຊັບສິນສ່ວນຕົວ ແບບຖາວອນ, ພະແນກໂຍທາທິການ ແລະ ຂົນສົ່ງ ຈະພິຈາລະນາ ແລະ ບັນທຶກລາຍລະອຽດ ໄວ້ດັ່ງຕໍ່ໄປນີ້:
   - ການນໍາໃຊ້ທີ່ດິນ ແມ່ນເພື່ອຈຸດປະສົງ ຫຍັງ;
   - ມູນຄ່າຂອງທີ່ດິນ ທີ່ໂຄງການ ມີຄວາມຕ້ອງການ ທັງແບບຖາວອນ ແລະ ຊົ່ວຄາວ;
   - ມູນຄ່າຂອງທີ່ດິນ ທີ່ຈະປະກອບສ່ວນ;
   - ບັນດາທາງເລືອກ ໃນການປະກອບສ່ວນ (ຕົວຢ່າງ: ສິດນໍາໃຊ້, ເຂດສະຫງວນທາງ);
   - ໄລຍະເວລາ ຂອງການມອບດິນ;
   - ຂໍ້ມູນລະອຽດ ຂອງບຸກຄົນ ຜູ້ທີ່ຈະປະກອບສ່ວນດິນ;
   - ຜົນປະໂຫຍດ ຂອງການປະກອບສ່ວນດິນ; ແລະ
   - ລາຍລະອຽດ ທີ່ກ່ຽວຂ້ອງກັບ ເຫດຜົນຂອງການປະກອບສ່ວນດິນ ທີ່ເໝາະສົມ.

2. **ຂະບວນການຢັ້ງຢືນ(ສໍາຫຼວດ) ເພື່ອກໍານົດ ເຈົ້າຂອງດິນ ແລະ ການນໍາໃຊ້.** ພະແນກໂຍທາທິການ ແລະ ຂົນສົ່ງ ຈະດໍາເນີນການສໍາລວດ ຢ່າງລະອຽດ ເພື່ອຮັບຮູ້ ກ່ຽວກັບ ປະເພດສິດນໍາໃຊ້ທີ່ດິນ ຢູ່ໃນເຂດໂຄງການ ແລະ ກໍານົດ ບັນຫາສະເພາະ ທີ່ຕິດພັນກັບເຈົ້າຂອງດິນ ແລະ ການນໍາໃຊ້ດິນ. ລາຍລະອຽດລຸ່ມນີ້ ຈະໄດ້ມີການຢັ້ງຢືນ:
   - ເຈົ້າຂອງທີ່ດິນ;
   - ຜູ້ນໍາໃຊ້ທີ່ດິນ ຫຼື ບຸກຄົນໃດໜຶ່ງ ທີ່ເຂົ້າຄອບຄອງທີ່ດິນ(ທັງ ເນື້ອທີ່ດິນ ຫຼື ກໍາມະສິດຕໍ່ຊັບສິນ ທີ່ຕັ້ງຢູ່ດິນ ຫຼື ອາໄສທີ່ດິນເພື່ອທໍາມາຫາກິນ ຫຼື ດໍາເນີນທຸລະກິດ);
   - ການອ້າງສິດ ເປັນເຈົ້າຂອງທີ່ດິນ ຫຼື ນໍາໃຊ້ທີ່ດິນ;
   - ສິ່ງປຸກສ້າງ ແລະ ຊັບສິນອື່ນໆ ຢູ່ໃນທີ່ດິນ;
   - ສິ່ງກີດຂວາງໃດໜຶ່ງ ຢູ່ໃນດິນ.

   ສິ່ງສໍາຄັນ ເພື່ອ: (i) ກໍານົດສິດ ທີ່ຖືກມອບໂອນ ( ກໍາມະສິດ ເຈົ້າຂອງດິນ, ສິດນໍາໃຊ້, ເຂດສະຫງວນທາງ, ອື່ນໆ); ແລະ (ii) ກວດຄືນວ່າ ຜູ້ໂອນ ແມ່ນມີກໍາມະສິດ ຕໍ່ທີ່ດິນ ຫຼືບໍ່. ມີຫລາຍກໍລະນີ ທີ່ບໍ່ໄດ້ມີການກວດກາຢ່າງລະອຽດ ຈຶ່ງພາໃຫ້ເກີດມີຂໍ້ຂັດແຍ່ງຂຶ້ນ ໃນເວລາທີ່ມີບຸກຄົນອື່ນມາສະເໜີ ກ່ຽວກັບ ກໍາມະສິດຄອບຄອງທີ່ດິນ ຕອນດັ່ງກ່າວ. ໃນບາງກໍລະນີ ຜູ້ໂອນຈໍານວນໜຶ່ງ ຈະບໍ່ມີເອກະສານຫຼັກຖານ ກ່ຽວກັບ ກໍາມະສິດດັ່ງກ່າວ. ໃນກໍລະນີ ທີ່ບໍ່ມີຫຼັກຖານຢັ້ງຢືນ, ການກວດກາຢ່າງລະອຽດ ສາມາດລະບຸກໍາມະສິດ ໂດຍການສອບຖາມ ອົງການປົກຄອງບ້ານ ແລະ ເຈົ້າຂອງດິນໃກ້ຄຽງ.

3. ***ການປຶກສາຫາລືກັບມວນຊົນ ແລະ ການເຜີຍແຜ່ຂໍ້ມູນ.*** ການຕັດສິນໃຈ ເພື່ອປະກອບສ່ວນດິນ ຕ້ອງຢູ່ບົນພື້ນຖານຄວາມເຂົ້າໃຈກ່ຽວກັບ ໂຄງການຢ່າງເຕັມສ່ວນ ແລະ ໄດ້ມີຄວາມເຫັນດີໃນການປະກອບສ່ວນທີ່ດິນ. ສະນັ້ນ, ບຸກຄົນ ທີ່ຈະໄດ້ຮັບຜົນກະທົບ ຈາກການປະກອບສ່ວນດິນ (ເຈົ້າຂອງດິນ ແລະ ຜູ້ນໍາໃຊ້ດິນ) ຕ້ອງໄດ້ຮັບຂໍ້ມູນຂ່າວສານຢ່າງຖືກຕ້ອງ ແລະ ສາມາດເຂົ້າເຖິງຂໍ້ມູນ ກ່ຽວກັບ ຈຸດປະສົງການນໍາໃຊ້ທີ່ດິນ, ໄລຍະເວລາ ແລະ ຜົນກະທົບ ທີ່ຈະເກີດຕໍ່ກັບພວກເຂົາ ແລະ ຄອບຄົວເຂົາເຈົ້າຍ້ອນການປະກອບສ່ວນດິນ. ສິ່ງສໍາຄັນ ໂຄງການຕ້ອງໄດ້ແຈ້ງການຢ່າງເປັນລາຍລັກອັກສອນ ທີ່ສະແດງໃຫ້ເຫັນທີ່ຕັ້ງ ແລະ ຈໍານວນດິນ ທີ່ຕ້ອງການ ແລະ ເປົ້າໝາຍການນໍາໃຊ້ທີ່ດິນ ຂອງໂຄງການ.

ໃນກໍລະນີ ບຸກຄົນທີ່ໄດ້ຮັບຜົນກະທົບ ຈາກການປະກອບສ່ວນທີ່ດິນ ແບບຖາວອນ ຫຼື ເປັນໄລຍະເວລາຍາວນານ ຕ້ອງໄດ້ດຳເນີນການ ຢ່າງຈະແຈ້ງ. ຕ້ອງໄດ້ຮັບຮູ້ວ່າ ຢູ່ໃນຫຼາຍຊຸມຊົນ ແນວຄວາມຄິດ ກ່ຽວກັບ ການມອບໂອນທີ່ດິນ ແມ່ນເປັນປະກົດການທີ່ບໍ່ເກີດຂຶ້ນເລື້ອຍໆ ແລະ ເປັນສິ່ງ ຫຍຸ້ງຍາກ ທີ່ຈະເຂົ້າໃຈ. ສະນັ້ນ, ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອຮັບປະກັນວ່າ ບັນຫາ ດັ່ງກ່າວ ໄດ້ມີຄວາມເຂົ້າໃຈ ຢ່າງຖືກຕ້ອງ ແລະ ມັນຍັງຖືເປັນປັດໃຈສຳຄັນ ເພື່ອຕັດສິນໃຈ ກ່ຽວກັບ ການປະກອບສ່ວນດິນ ລວມທັງການປຶກສາຫາລື ກັບບຸກຄົນອື່ນ ຕົວຢ່າງ: ປຶກສາຫາລືກັບຜົວ ຫຼືເມຍ ແລະ ລູກ.

ຕ້ອງມີການຕົກລົງເຫັນດີ ຢ່າງຈະແຈ້ງວ່າ ຝ່າຍໃດ ຈະຮັບຜິດຊອບ ຄ່າໃຊ້ຈ່າຍ ສຳລັບຂະບວນການມອບໂອນດິນ ເຊິ່ງຄ່າໃຊ້ຈ່າຍນີ້ ອາດລວມເອົາ ຄ່າໃຊ້ຈ່າຍສຳລັບ ການແທກດິນ, ເອກະສານ, ຄ່າຈົດທະບຽນ, ອາກອນ ການມອບໂອນທີ່ດິນ ແລະ ຄ່າໃຊ້ຈ່າຍອື່ນໆ ລວມທັງຄ່າໃຊ້ຈ່າຍ ການແທກດິນຄືນ/ອອກໃບຕາດິນໃໝ່ ສຳລັບດິນສ່ວນທີ່ຍັງເຫຼືອ ຂອງຜູ້ມອບໂອນ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ.

4. ***ການເຫັນດີເຫັນພ້ອມ ໂດຍມີການແຈ້ງຂໍ້ມູນລ່ວງໜ້າ***
ທີມງານໂຄງການ ມີຄວາມໝັ້ນໃຈວ່າ ການຕັດສິນໃຈ ເພື່ອປະກອບສ່ວນດິນ ແມ່ນປະຕິບັດສອດຄ່ອງກັບຂະບວນການເຫັນດີເຫັນພ້ອມ ໂດຍມີການແຈ້ງຂໍ້ມູນໃຫ້ຊາບລ່ວງໜ້າ ຫຼື ມີສິດ ໃນການເລືອກ ແລະ ເຈົ້າຂອງດິນ ຫຼື ຜູ້ນຳໃຊ້ດິນ ແມ່ນມີຄວາມເຂົ້າໃຈວ່າ:

- ທີ່ດິນຈະຖືກນຳໃຊ້ ເພື່ອຈຸດປະສົງໃດ, ຖືກນຳໃຊ້ ໂດຍໃຜ ແລະ ດົນປານໃດ;
- ພວກເຂົາຈະອັບປະໂຫຍດ ຈາກກຳມະສິດທີ່ດິນ ຫຼື ສິດໃນການນຳໃຊ້ດິນ;
- ໄດ້ມີທາງເລືອກ ເພື່ອນຳໃຊ້ທີ່ດິນດັ່ງກ່າວນີ້ ຫຼືບໍ່;
- ມີຫຍັງແດ່ ທີ່ພວກເຂົາຕ້ອງໄດ້ປະຕິບັດ ໃນການປະກອບສ່ວນດິນ(ຕົວຢ່າງ: ແລ່ນເອກະສານ, ໄດ້ຮັບການເຫັນດີ ຈາກຜົວ ຫຼື ເມຍ, ຄ່າອາກອນ);
- ຜົນກະທົບ ຕໍ່ຄອບຄົວເຂົາເຈົ້າ ຍ້ອນການປະກອບສ່ວນທີ່ດິນ, ແລະ ມີຫຍັງແດ່ ທີ່ພວກເຂົາຕ້ອງປະຕິບັດ ໃນກໍລະນີ ທີ່ພວກເຂົາ(ຫຼື ຄອບຄົວເຂົາເຈົ້າ ຫຼື ຜູ້ສືບທອດມໍລະດົກ)ຕ້ອງການເອົາດິນຄືນ.

ສິດໃນການປະຕິເສດ ຕ້ອງເປັນສິດທີ່ຖືກຕ້ອງຕາມກົດໝາຍ, ແລະ ຜູ້ມອບໂອນ ຕ້ອງມີຄວາມສາມາດເຕັມສ່ວນ ແລະ ຖ້າເປັນໄປໄດ້ ເປັນຜູ້ທີ່ໄດ້ປະກອບສ່ວນວຽກງານຢູ່ໃນຊຸມຊົນ ແລະ ວຽກງານໃນຂົງເຂດອື່ນໆ ເຊິ່ງຖືເປັນເຫດຜົນສຳຄັນ ເພື່ອຮັບປະກັນວ່າ ການຕັດສິນໃຈ ປະກອບສ່ວນດິນ ແມ່ນປະກອບສ່ວນດ້ວຍຄວາມສະໝັກໃຈ ໂດຍບໍ່ໄດ້ຖືກບັງຄັບນາບຂູ່, ຫຼອກລວງ ຫຼື ດ້ວຍການກົດດັນ ຈາກເຈົ້າໜ້າທີ່ລັດ. ສຳລັບດິນລັດ ຫຼື ລວມໝູ່, ການປະກອບສ່ວນດິນ ຕ້ອງບົນພື້ນຖານການເຫັນດີຈາກ ຜູ້ນຳໃຊ້ ຫຼື ຜູ້ຄຸ້ມຄອງ ທີ່ດິນ ທັງໝົດ.

5. ***ເອກະສານທີ່ຖືກຕ້ອງ.*** ໃນການດຳເນີນຂະບວນການ ປະກອບສ່ວນດິນ ດ້ວຍຄວາມສະໝັກໃຈ, ສິ່ງສຳຄັນຕ້ອງໄດ້ມີການຈຳແນກ ລະຫວ່າງ: (ກ) ສັນຍາ ການມອບດິນ; ແລະ (ຂ) ເອກະສານທີ່ໃຊ້ດຳເນີນການ ແລະ ເປັນຫຼັກຖານ ການມອບໂອນດິນຖືກຕ້ອງຕາມກົດໝາຍ. ໃຫ້ມີເອກະສານຫຼັກຖານ ກ່ຽວກັບ ຈຸດປະສົງ ແລະ ສັນຍາ ການມອບດິນ ພ້ອມທັງຮັບປະກັນການມອບໂອນດິນ ມີຄວາມຖືກຕ້ອງຕາມກົດໝາຍ. ເນື່ອງຈາກວ່າ ການມອບໂອນດິນ ຢ່າງຖືກຕ້ອງຕາມກົດໝາຍ ຂ້ອນຂ້າງມີຄວາມຫຍຸ້ງຍາກສັບສົນ ແລະ ໃຊ້ເວລາ. ສະນັ້ນ, ບັນຫາດັ່ງກ່າວ ຕ້ອງໄດ້ມີການແກ້ໄຂ.

ທີມງານໂຄງການ ຕ້ອງ:

- ກຳນົດເອກະສານ ຢ່າງຖືກຕ້ອງ ລວມທັງສັນຍາ ການມອບໂອນ ແລະ ເອກະສານທີ່ຖືກຕ້ອງຕາມກົດໝາຍ ທີ່ມີຄວາມຈຳເປັນ;
- ຮັບປະກັນວ່າ ສັນຍາໄດ້:
    - ອ້າງອີງເຖິງ ການປຶກສາຫາລື ຜ່ານມາ;
    - ຢັ້ງຢືນວ່າ ການຕັດສິນໃຈ ມອບໂອນ ແມ່ນເປັນຄວາມສະໝັກໃຈ ແລະ ບໍ່ໄດ້ຖືກບັງຄັບນາບຂູ່, ຫຼອກລວງ ຫຼື ກົດດັນໃດໆ;
    - ຂັດຕິດແຜນທີ່ດິນ ຖືກມອບໂອນ ໃນຂະໜາດທີ່ເໝາະສົມ(ເຂດແດນ, ຈຸດພິກັດ);

- ລະບຸຜູ້ທີ່ຈະຮັບຜິດຊອບ ຄ່າໃຊ້ຈ່າຍ ສໍາລັບການມອບໂອນ(ຕົວຢ່າງ: ຄ່າຈົດທະບຽນ, ອາກອນ ແລະ ອອກໃບຕາດິນ) ແລະ ແລະເອກະສານ ກໍາມະສິດ ທີ່ດິນສ່ວນທີ່ຍັງເຫຼືອ.

- ຮັບປະກັນວ່າ ບຸກຄົນທີ່ກ່ຽວຂ້ອງ ທັງໝົດ ໄດ້ລົງລາຍເຊັນ ໃສ່ເອກະສານ ພ້ອມທັງໄດ້ຮັບການເຫັນດີຈາກ ຜົວ ຫຼື ເມຍ ແລະ ລູກຜູ້ທີ່ຢູ່ໃນເກນອາຍຸ ຕາມກົດໝາຍ ໄດ້ກໍານົດ;
- ຮັບປະກັນວ່າ ການມອບໂອນ ແລະ ໃບຕາດິນ ໄດ້ຖືກຈົດທະບຽນ ຫຼື ບັນທຶກໄວ້; ແລະ
- ຮັບປະກັນວ່າ ທີ່ດິນສ່ວນທີ່ຍັງເຫຼືອ ຈາກການປະກອບສ່ວນນັ້ນ ມີໃບຕາດິນ ທີ່ຖືກຕ້ອງ, ໄດ້ຖືກຈົດທະບຽນ ຫຼື ບັນທຶກໄວ້.

ສິ່ງສໍາຄັນ ຕ້ອງເກັບຮັກສາເອກະສານ ຂອງຂະບວນການ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ເຊິ່ງເອກະສານ ດັ່ງກ່າວ ອາດລວມມີ:

- ແຈ້ງການ ທີ່ສະແດງໃຫ້ເຫັນທີ່ຕັ້ງ ແລະ ຈໍານວນທີ່ດິນ ທີ່ຕ້ອງການ ແລະ ເປົ້າໝາຍການນໍາໃຊ້ທີ່ດິນ ຂອງໂຄງການ ພ້ອມທັງບັນທຶກ ເວລາ ແລະ ສະຖານທີ່ ໄດ້ເຜີຍແຜ່ສູ່ສາທາລະນະ;
- ບົດບັນທຶກ ການປຶກສາຫາລື ທີ່ໄດ້ຈັດຂຶ້ນ ແລະ ບັນຫາ ທີ່ໄດ້ປຶກສາຫາລື;
- ສໍາເນົາ ຜົນການກວດກາລະອຽດ ທີ່ດໍາເນີນຜ່ານມາ;
- ສໍາເນົາແຕ່ລະ ແຈ້ງການເປັນທາງການ ກ່ຽວກັບ ການປະກອບສ່ວນດິນ, ການເຫັນດີເຫັນພ້ອມ ໂດຍມີການແຈ້ງຂໍ້ມູນລ່ວງໜ້າ ດັ່ງລະບຸໄວ້ຂ້າງເທິງ ແລະ ລາຍເຊັນ ຂອງເຈົ້າຂອງ ແລະ ຜູ້ນໍາໃຊ້ ດິນ;
- ສໍາເນົາເອກະສານທັງໝົດ, ການຈົດທະບຽນ ຫຼື ການບັນທຶກ ຫຼັກຖານການມອບໂອນທີ່ດິນ ທີ່ຖືກຕ້ອງຕາມກົດໝາຍ;
- ແຜນທີ່ ສະແດງທີ່ຕັ້ງຂອງແຕ່ລະຕອນດິນ.

ອົງການຈັດຕັ້ງ ທີ່ຈັດຕັ້ງປະຕິບັດໂຄງການ ຕ້ອງເກັບຮັກສາເອກະສານ ຂອງແຕ່ລະຕອນດິນທີ່ໄດ້ປະກອບສ່ວນນັ້ນໄວ້. ເອກະສານ ດັ່ງກ່າວ ຕ້ອງມີໄວ້ ເພື່ອໃຫ້ທະນາຄານໂລກ ທົບທວນ ແລະ ໃຊ້ສໍາລັບຄົ້ນຄ້າ ພິຈາລະນາ ການຮ້ອງທຸກ ທີ່ອາດເກີດຂຶ້ນ.

# 13 ເອກະສານຄັດຕິດ 7: ແບບຟອມຕົວຢ່າງ ຂອງການຕິດຕາມ ກົນໄກ ການແກ້ໄຂຄຳຮ້ອງທຸກ

ແບບຟອມຕົວຢ່າງ ຂອງການຕິດຕາມ ກົນໄກ ການແກ້ໄຂຄຳຮ້ອງທຸກ ທີ່ຈະຖືກນຳໃຊ້ໂດຍຄະນະຮັບຜິດຊອບການແກ້ໄຂຄຳຮ້ອງທຸກຂັ້ນບ້ານ

ບ້ານ:……………………………; ເມືອງ:………………………………………; ແຂວງ:…………………………………………………

| ລ/ດ | ຈຸດທີ່ຕັ້ງ (ແຂວງບໍລິຄຳໄຊ/ແຂວງ ຄຳມ່ວນ) ຫຼື ບ້ານ | ອະທິບາຍໂດຍຫຍໍ້ / ສະພາບຂອງຄຳຮ້ອງທຸກ | ຄຳຮ້ອງທຸກ ຖືກນຳໃຊ້ ແລະ ລາຍລະອຽດຕິດຕໍ່ ຫຼື ລະຫັດ (ບໍ່ບັງຄັບ) | ຊົນເຜົ່າ | ວັນທີ່ໄດ້ຮັບຄຳຮ້ອງທຸກ | ຄຳຮ້ອງທຸກ ໄດ້ຮັບໂດຍ | ສະຖານະພາບການແກ້ໄຂ | | ແກ້ໄຂໂດຍ | ໝາຍເຫດ / ຄຳອະທິບາຍ |
|---|---|---|---|---|---|---|---|---|---|---|
| | | | | | | | ຖືກແກ້ໄຂ ຫຼື ໄດ້ດຳເນີນຫຍັງແດ່ | ວັນທີ່ສຳເລັດ ຫຼື ດຳເນີນການແກ້ໄຂ | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |
| | | | | | | | | | | |

## ແບບຟອມຕົວຢ່າງ ຂອງການຕິດຕາມ ກົນໄກ ການແກ້ໄຂຄຳຮ້ອງທຸກ ທີ່ຈະຖືກນຳໃຊ້ໂດຍຄະນະຮັບຜິດຊອບການແກ້ໄຂຄຳຮ້ອງທຸກຂັ້ນເມືອງ ແລະ ຂັ້ນແຂວງ

**ເມືອງ:……………………………………; ແຂວງ:………………………………….., ເດືອນ/…………………………………………**

| ລ/ດ | ທີ່ຕັ້ງ (PK/Km) | ບ້ານ | ອະທິບາຍໂດຍຫຍໍ້ / ສະພາບຂອງຄຳຮ້ອງທຸກ | ຄຳຮ້ອງທຸກ ຖືກນຳໃຊ້ ແລະ ລາຍລະອຽດ ຕິດຕໍ່ ຫຼື ລະຫັດ (ບໍ່ບັງຄັບ) | ຊົນເຜົ່າ | ວັນທີ່ໄດ້ ຮັບຄຳ ຮ້ອງທຸກ | ຄຳຮ້ອງທຸກໄດ້ ຮັບໂດຍ | ສະຖານະພາບການແກ້ໄຂ | | ແກ້ໄຂໂດຍ | ໝາຍເຫດ / ຄຳ ອະທິບາຍ |
|---|---|---|---|---|---|---|---|---|---|---|---|
| | | | | | | | | ຖືກແກ້ໄຂ ຫຼື ໄດ້ດຳເນີນຫຍັງ ແດ່ | ວັນທີ່ສຳເລັດ ຫຼື ດຳເນີນ ການແກ້ໄຂ | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |